

# ບົດແນະນຳ ນະໂຍບາຍ ກ່ຽວກັບ ການຂ້າມຜ່ານໄປສູ່ ການຜະລິດແບບນິເວດກະສິກຳໃນອາຊຽນ

ບົດແນະນຳ ນະໂຍບາຍ ກ່ຽວກັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ຢູ່ ອາຊຽນ ແມ່ນໄດ້ຮັບການສ້າງຂຶ້ນ ຜ່ານ ຂະບວນການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງຕ່າງໆ ຢ່າງກວ້າງຂວາງ ໂດຍມີການນຳພາ ຂອງ ສູນຄົ້ນຄວ້າວິໄຈກະສິກຳ ເພື່ອ ການພັດທະນາສາກົນ ຂອງ ປະເທດຝຣັ່ງ (CIRAD), ຄະນະກຳມາທິການ ເສດຖະກິດ-ສັງຄົມ ສປຊ ປະຈຳພາກພື້ນ ອາຊີ-ປາຊີຟິກ (ESCAP) ແລະ ອົງການ ອາຫານ ແລະ ການກະເສດ ແຫ່ງ ສປຊ (FAO) ພາຍໃຕ້ ໂຄງການປັບປຸງລະບົບນິເວດກະສິກຳ ແລະ ຄວາມປອດໄພ ຂອງ ອາຫານ (ASSET), ແລະ ຍັງໄດ້ຮັບການສະໜັບສະໜູນຈາກ ແຜນງານລາວດ້ານນິເວດກະສິກຳເພື່ອອາຊຽນ(LICA) ແລະ ກອງເລຂາ ອາຊຽນ.

ກອງປະຊຸມພິເສດ ຂອງ ເຈົ້າໜ້າທີ່ອາວຸໂສ ກະສິກຳ ແລະ ປ່າໄມ້ ອາຊຽນ (SOM-AMAF) ຄັ້ງທີ 45 ທີ່ຈັດຂຶ້ນ ຢູ່ ຈໍຮໍບາຣູ ປະເທດມະເລເຊຍ ເມື່ອ ວັນທີ 6-8 ສິງຫາ 2024 ແລະ ກອງປະຊຸມ ລັດຖະມົນຕີ ກະສິກຳ ແລະ ປ່າໄມ້ ອາຊຽນ (AMAF) ຄັ້ງທີ 46 ທີ່ປະຊຸມອອນລາຍ ໃນວັນທີ 24 ຕຸລາ 2024 ໄດ້ຮັບຮອງເອົາ ບົດແນະນຳ ນະໂຍບາຍ ສະບັບນີ້.

ສົນໃຈຂໍ້ມູນຂ່າວສານເພີ່ມເຕີມ ແລະ ສູນກາງຄາມຮູ້ດິຈິຕ໋ອນກ່ຽວຂ້ອງ, ສາມາດເຂົ້າເບິ່ງໄດ້ທີ່: t https://www.aseanaetguidelines.org

**ໄດ້ຮັບທຶນຊ່ວຍເຫຼືອ ຈາກ**

Creative Commons Attribution 4.0 IGO license (CC BY 4.0 IGO)

ລິຂະສິດ © CIRAD 2024

ສະຫງວນ ບາງສິດ.

ISBN ສະບັບພິມ: XXX

PDF ISBN: 978-2-87614-872-7

DOI: https://doi.org/10.19182/agritrop/00239

ບັນດາທັດສະນະຕ່າງໆ ທີ່ສະແດງໃນເອກະສານສະບັບນີ້ ແມ່ນເປັນທັດສະນະຂອງ ຜູ້ຂຽນ ແລະ ບໍ່ໄດ້ສ່ອງແສງ ທັດສະນະ ແລະ ນະໂຍບາຍ ຂອງ ອົງການຈັດຕັ້ງ ທີ່ຜູ້ຂຽນສັງກັດຢູ່. ການກ່າວເຖິງ ບໍລິສັດ, ຜະລິດຕະພັນ, ບໍລິການໃດໜຶ່ງ ຫຼື ຂະບວນການພາຍໃຕ້ລິຂະສິດ ບໍ່ໄດ້ໝາຍຄວາມວ່າ: ຜູ້ຂຽນ ໃຫ້ການຮັບຮອງ ຫຼື ແນະນຳ ເປັນການສະເພາະ ເມື່ອສົມທຽບໃສ່ ພາກສ່ວນອື່ນ ທີ່ບໍ່ໄດ້ກ່າວເຖິງ ໃນເອກະສານສະບັບນີ້. ສ່ວນການອ້າງອີງ ເຂດທີ່ຕັ້ງພູມສາດ ຫຼື ເຂດແຄ້ວນສະເພາະ ທີ່ພົບໃນ ເອກະສານສະບັບນີ້, ຜູ້ຂຽນ ບໍ່ມີເຈດຕະນາ ສະແດງທັດສະນະຕັດສິນ ທາງດ້ານກົດໝາຍ ຫຼື ສະຖານະພາບໃດໆ ຂອງ ເຂດທີ່ຕັ້ງພູມສຸດ ຫຼື ເຂດແຄ້ວນ ກ່ຽວຂ້ອງ.

ເອກະສານສະບັບນີ້ ມີສະໜອງໃຫ້ ພາຍໃຕ້ Creative Commons Attribution 4.0 IGO license (CC BY 4.0 IGO) https://creativecommons.org/licenses/by/4.0/igo/. ດ້ວຍການນຳໃຊ້ ເນື້ອໃນ ຂອງ ເອກະສານສະບັບນີ້, ທ່ານຕົກລົງເຫັນດີ ພາຍໃຕ້ຂໍ້ຜູກມັດເງື່ອນໄຂ ຂອງ ການອະນຸຍາດໃຫ້ນຳໃຊ້ລິຂະສິດ. ສາມາດຜະລິດ ເອກະສານສະບັບນີ້ ເປັນສະບັບສົມບູນ ຫຼື ເປັນບາງສ່ວນບາງຕອນ ເພື່ອຮັບໃຊ້ຈຸດປະສົງການສຶກສາ ຫຼື ບໍ່ຫວັງຜົນກຳໄລ ໄດ້ໂດຍບໍ່ຕ້ອງຂໍອະນຸຍາດເປັນການພິເສດ ຈາກ ຜູ້ຖືລິຂະສິດ ແຕ່ຕ້ອງ ສະແດງຄວາມຮັບຮູ້ ແຫຼ່ງທີ່ມາ ຂອງ ເອກະສານ. ຫ້າມບໍ່ໃຫ້ ນຳໃຊ້ ເອກະສານສະບັບນີ້ ເພື່ອຂາຍຕໍ່ ຫຼື ເພື່ອຈຸດປະສົງອື່ນໆທາງການຄ້າ ໂດຍປະສາຈາກ ການໄດ້ຮັບອະນຸຍາດ ຈາກ ຜູ້ຖືລິຂະສິດ.

**ເວລາອ້າງອີງເຖິງ ເອກະສານສະບັບນີ້ ສະເໜີໃຫ້ອ້າງອີງ ຄືດັ່ງຕໍ່ໄປນີ້:** Biénabe E., Rankine H., Ferrand P., Chen Y.A., Bartlett A., Basilio C., De Boisset C. and T. Saphangthong, 2024. Policy Guidelines on Agroecological Transitions in ASEAN. CIRAD, ESCAP, FAO, DALaM, ASEAN. Montpellier, Bangkok, Roma, Vientiane, Jakarta. 50 pages. DOI: https://doi.org/10.19182/agritrop/00239

# ກ່ຽວກັບ ບົດແນະນຳ ສະບັບນີ້

ການຜະລິດແບບນິເວດກະສິກຳ ເປັນເສັ້ນທາງ ສຳລັບ ການພັດທະນາລະບົບຜະລິດສະບຽງອາຫານ ບົນພື້ນຖານການສ້າງຄວາມຫຼາກຫຼາຍ ຂອງພືດທີ່ປູກ, ຂອງສວນກະສິກຳ, ຂອງພູມີທັດການຜະລິດກະສິກຳ ແລະ ຂອງລະບົບພູມປັນຍາ ເພື່ອສ້າງລະບົບການຜະລິດແບບນິເວດກະສິກຳ ທີ່ມີຄວາມອຸດົມສົມບູນ ໃນໄລຍະຍາວ, ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ແຂງແຮງດີ, ຄ້ຳປະກັນຊີວິດການເປັນຢູ່ ແລະ ໃນທ້າຍທີ່ສຸດແລ້ວ ກໍແມ່ນເພື່ອປະກອບສ່ວນເຂົ້າໃນ ການຫັນປ່ຽນລະບົບຜະລິດສະບຽງອາຫານແບບຍືນຍົງ ແລະ ມີຄວາມເທົ່າທຽມກັນໃນສັງຄົມ.

ໄດ້ມີການກຳນົດໃຫ້ເຫັນແຈ້ງເຖິງ ເຫດຜົນທີ່ໄປທີ່ມາ ຂອງ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ. ເຖິງແມ່ນວ່າ ການເພີ່ມການຜະລິດກະສິກຳໃຫ້ເຂັ້ມຂຸ້ນໃນຮູບແບບປົກກະຕິ ໄດ້ເຮັດໃຫ້ຜະລິດຕະພາບ ເພີ່ມສູງຂຶ້ນ ແຕ່ ກໍສ້າງຄວາມເສຍຫາຍ ຕໍ່ ສິ່ງແວດລ້ອມ, ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ຊີວິດການເປັນຢູ່ ແລະ ສາຍໃຍວັດທະນະທຳ-ສັງຄົມ ຂອງ ລະບົບການຜະລິດກະສິກຳເປັນສະບຽງອາຫານ. ບົດແນະນຳ ອາຊຽນ ສຳລັບ ການຜະລິດກະສິກຳແບບຍືນຍົງນີ້ ກຳນົດຫ້າຫຼັກການ ເພື່ອຊີ້ນຳ ການຂ້າມຜ່ານ "ໄປສູ່ການຜະລິດກະສິກຳທີ່ມີຜະລິດຕະພາບສູງ, ມີຄວາມເປັນໄປໄດ້ທາງເສດຖະກິດ, ຖືກຕາມຫຼັກການດ້ານສິ່ງແວດລ້ອມ ແລະ ຢູ່ບົນພື້ນຖານຫຼັກການ ແຫ່ງ ຄວາມສະເໝີພາບ ແລະ ຄວາມຍຸຕິທຳທາງສັງຄົມ" – ຊຶ່ງລວມເອົາ (1) ການປັບປຸງປະສິດທິພາບການນຳໃຊ້ຊັບພະຍາກອນທີ່ມີຢູ່ ຂອງ ພວກເຮົາ; (2) ການອະນຸລັກ, ການປົກປັກຮັກສາ, ການເສີມຂະຫຍາຍລະບົບນິເວດທາງທຳມະຊາດ, ການສົ່ງເສີມ ແລະ ການເສີມຂະຫຍາຍ ຊັບພະຍາກອນທຳມະຊາດ ແລະ ຊຸມຊົນ; (3) ການປົກປ້ອງ ແລະ ປັບປຸງ ຄວາມຢູ່ດີມີສຸກທາງສັງຄົມ ແລະ ຊີວິດການເປັນຢູ່ໃນເຂດຊົນນະບົດ; (4) ການເສີມຂະຫຍາຍ ຄວາມທົນທານ ຂອງ ຜູ້ຄົນ, ຊຸມຊົນ ແລະ ລະບົບນິເວດ; ແລະ (5) ການສົ່ງເສີມການຄຸ້ມຄອງບໍລິຫານທີ່ດີ ຕໍ່ ລະບົບທາງທຳມະຊາດ ແລະ ລະບົບທີ່ມະນຸດສ້າງຂຶ້ນ. ບົດແນະນຳ ການຜະລິດກະສິກຳແບບຍືນຍົງ ຊີ້ໃຫ້ເຫັນວ່າ: ການຜະລິດແບບນິເວດກະສິກຳ ເປັນ "ວິທີການຫັນປ່ຽນທີ່ເປັນໄປໄດ້ ໃນສະພາບເງື່ອນໄຂການປ່ຽນແປງທາງດ້ານແນວຄວາມຄິດ".

ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ສາມາດເລັ່ງລັດ ແລະ ລົງເລິກ ການບັນລຸ ແຜນການ ແລະ ວິໄສທັດ ທີ່ເປັນເອກະພາບໃນລະດັບພາກພື້ນ ຊຶ່ງລວມເອົາ ວິໄສທັດ ແລະ ແຜນຍຸດທະສາດຮ່ວມມືອາຊຽນ ໃນຂະແໜງ ສະບຽງອາຫານ, ກະສິກຳ ແລະ ປ່າໄມ້ 2016–2025, ຍຸດທະສາດການສ້າງປະຊາຄົມເສດຖະກິດອາຊຽນ 2025, ຍຸດທະສາດການສ້າງປະຊາຄົມວັດທະນະທຳ-ສັງຄົມອາຊຽນ 2025, ແລະ ແຜນແມ່ບົດ ການພັດທະນາຊົນນະບົດ ອາຊຽນ 2022 ເຖິງ 2026, ແລະ ອື່ນໆ.

ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ຍັງສາມາດເລັ່ງໃຫ້ບັນລຸ 17 ເປົ້າໝາຍການພັດທະນາແບບຍືນຍົງ, ສົນທິສັນຍາ ຣີໂອ (Rio) ວ່າດ້ວຍ ດິນຟ້າອາກາດ, ຊີວະນາໆພັນ ແລະ ການເຊື່ອມໂຊມຂອງດິນ, ສັນຍາ ປາຣີ (Paris) ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ຂອບຊີວະນາໆພັນສາກົນ ຄຸນມິງ-ມອນທຣີອໍອນ (Kunming-Montreal), ພາຍໃຕ້ບັນດາພັນທະສາກົນອື່ນໆ.

ມີຫຼາຍຕົວຢ່າງທີ່ດີ ກ່ຽວກັບ ການຜະລິດແບບນິເວດກະສິກຳ ຈາກບັນດາປະເທດສະມາຊິກອາຊຽນ ແຕ່ຍັງມີ ຫຼາຍສິ່ງທ້າທາຍ ກີດຂວາງການເພີ່ມຂະໜາດ ແລະ ການຂະຫຍາຍ ແບບແຜນການຜະລິດໃນລັກສະນະດັ່ງກ່າວ. ບັນດາພາກສ່ວນກ່ຽວຂ້ອງ ໄດ້ລະບຸຫຼາກຫຼາຍບັນຫາ ທີ່ເປັນສິ່ງທ້າທາຍ ໃນນັ້ນລວມມີ ຄວາມເຊື່ອທີ່ໜັກແໜ້ນວ່າ: ການເພີ່ມການຜະລິດກະສິກຳໃຫ້ເຂັ້ມຂຸ້ນ ແບບປົກກະຕິ ເປັນວິທີດຽວ ທີ່ຈະຮັບປະກັນ ການຄ້ຳປະກັນສະບຽງອາຫານ, ຄວາມເຊື່ອທີ່ວ່າ ຄວາມຕ້ອງການຂອງຕະຫຼາດຍັງອ່ອນນ້ອຍ ສຳລັບ ຜະລິດຕະພັນທີ່ໄດ້ຮັບການຜະລິດແບບຍືນຍົງ, ປະເດັນການເຮັດວຽກພໍໃຜພໍລາວ, ຄວາມບໍ່ກົມກຽວລະຫວ່າງປັດໄຈທາງສັງຄົມ ແລະ ປັດໄຈຕັກນິກ, ແລະ ບັນຫາ ການສະໜັບສະໜູນຊ່ວຍເຫຼືອຊາວກະສິກອນ ແລະ ອົງການຈັດຕັ້ງ ຂອງ ຊາວກະສິກອນ ທີ່ມີບໍ່ພຽງພໍ. ຄວາມຈຳເປັນ ຂອງຜູ້ຕັດສິນບັນຫາ ທີ່ຕ້ອງຕອບສະໜອງໃຫ້ໄດ້ຕາມການຜະລິດ ແລະ ຄາດໝາຍສິ່ງອອກ ຢ່າງໜ້າເຊື່ອຖື ອາດຈະມີນ້ຳໜັກລື່ນ ຄວາມຕ້ອງການ ທີ່ພົວພັນກັບ ໂພຊະນາການ, ຜົນໄດ້ຮັບດ້ານຊີວິດການເປັນຢູ່ ຫຼື ຄວາມຍືນຍົງ ຂອງ ຊາວກະສິກອນ. ນອກຈາກນັ້ນ, ຍັງພົບວ່າ: ບັນດາຕົວຊີ້ບອກ ກ່ຽວກັບ ຄວາມຄືບໜ້າ ຂອງ ການຜະລິດກະສິກຳແບບຍືນຍົງ ຍັງບໍ່ທັນໄດ້ຮັບການກຳນົດຢ່າງຈະແຈ້ງ.

ບົດແນະນຳ ສະບັບນີ້ ມີເປົ້າໝາຍແນໃສ່ການໃຫ້ການສະໜັບສະໜູນ ການເຄື່ອນໄຫວແບບສະມັກໃຈ ຂອງຊາດສະມາຊິກອາຊຽນ (AMS) ແລະ ກົນໄກຕ່າງໆ ຂອງ ອາຊຽນ, ເວົ້າສະເພາະ ໜ່ວຍງານວິຊາການຂະແໜງປູກຝັງອາຊຽນ (ASWGC) ແລະ ແຜນງານລາວດ້ານນິເວດກະສິກຳເພື່ອອາຊຽນ (LICA) ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອສະໜັບສະໜູນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ຢູ່ອາຊຽນ ເພື່ອຍົກລະດັບ ແລະ ຂະຫຍາຍຜົນ ການຜະລິດແບບນິເວດກະສິກຳ. ບົດແນະນຳ ສະບັບນີ້ເນັ້ນໜັກໃຫ້ເຫັນ ເຈັດຈຸດຫັນປ່ຽນສຳຄັນ ໃນການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ຄື: (1) ການວາງແຜນ; (2) ການເຮັດວຽກກັບຊາວກະສິກອນ; (3) ກິດຈະກຳຊ່ວຍເຫຼືອພາຍໃນຕ່ອງໂສ້ມູນຄ່າ; (4) ການມີສ່ວນຮ່ວມຂອງຫຼາກຫຼາຍພາກສ່ວນກ່ຽວຂ້ອງ; (5) ການອຳນວຍຄວາມສະດວກໃຫ້ ການແລກປ່ຽນພູມປັນຍາ-ຄວາມຮູ້; (6) ວາລະການຄົ້ນຄວ້າວິໄຈ ເພື່ອການປ່ຽນແປງ; ແລະ (7) ການສະໜອງທຶນ. ແຕ່ລະຈຸດຫັນປ່ຽນ ກຳນົດ ບັນດາກິດຈະກຳ ແບບສະມັກໃຈ ທີ່ແຕ່ລະປະເທດ ອາດຈະພິຈາລະນາໝູນໃຊ້ ໃຫ້ເຂົ້າກັບ ສະພາບເງື່ອນໄຂ ແລະ ບູລິມະສິດ ພາຍໃນປະເທດ ຂອງ ຕົນ ຕາມທີ່ເຫັນວ່າເໝາະສົມ.

ບົດແນະນຳ ສະບັບນີ້ ຍັງສະໜັບສະໜູນ ການສ້າງຄວາມເຂັ້ມແຂງ ໃຫ້ການແລກປ່ຽນ ລະຫວ່າງ ຂະແໜງການ ພາຍໃນໂຄງສ້າງທີ່ກ່ຽວຂ້ອງຂອງ ອາຊຸນ ແລະ ເປັນເອກະສານອ້າງອີງສຳຄັນ ທີ່ ຜູ້ສ້າງນະໂຍບາຍສາມາດນຳໃຊ້ ເພື່ອຈັດຕັ້ງປະຕິບັດການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ.

# ສາລະບານ


ນິເວດກະສິກຳ: ອະທິບາຍຄຳສັບ ແລະ ຂອບເຂດ........................................ 7

ບົດແນະນຳ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ......................... 8

**1. ການວາງແຜນ ການຂ້າມຜ່ານ ໄປສູ່ ການຜະລິດ ແບບນິເວດກະສິກຳ .......9**

ບົດແນະນຳ 1.1 ສ້າງນະໂຍບາຍ ທີ່ກົມກຽວ ແລະ ກຳນົດ ຄາດໝາຍ ໃຫ້ຖືກຕ້ອງເໝາະສົມຂຶ້ນກວ່າເດີມ ສໍາລັບ ການວາງແຜນດ້ານກະສິກຳ ຜ່ານ ນິເວດກະສິກຳ........9

ບົດແນະນຳ 1.2 ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ໃນຂະບວນການວາງແຜນ........................................................................ 10

ບົດແນະນຳ 1.3 ນຳໃຊ້ວິທີການວາງແຜນ ທົ່ວພູມີທັດ ຫຼື ທົ່ວເຂດ.................. 10

ບົດແນະນຳ 1.4 ການມີສ່ວນຮ່ວມ ຂອງ ພາກເອກະຊົນ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ລະບຽບ ການວາງແຜນ ສໍາລັບ ທຸລະກິດກະສິກຳ..................... 11

**2. ການເຮັດວຽກ ກັບ ຊາວກະສິກອນ .............................................13**

ບົດແນະນຳ 2.1 ສ້າງຄວາມເຂັ້ມແຂງ ໃຫ້ ອົງການຈັດຕັ້ງ ຂອງ ຊາວກະສິກອນ, ແມ່ຍິງ ແລະ ຊາວໜຸ່ມ ແລະ ການມີສ່ວນຮ່ວມຢ່າງຕັ້ງໜ້າ ຂອງ ເຂົາເຈົ້າ ໃນຂະບວນການສ້າງນະໂຍບາຍນິເວດກະສິກຳ ................................................... 13

ບົດແນະນຳ 2.2 ສ້າງເງື່ອນໄຂ ທີ່ເອື້ອອຳນວຍ ເພື່ອສະໜັບສະໜູນຊ່ວຍເຫຼືອ ຊາວກະສິກອນ ໃນການຂ້າມຜ່ານ ......................................................... 14

ບົດແນະນຳ 2.3 ສົ່ງເສີມແວດລ້ອມທາງດ້ານການຈັດຕັ້ງ ແລະ ກົດໝາຍ ທີ່ປອດໄພ .............................................................................. 14

ບົດແນະນຳ 2.4 ນຳໃຊ້ ທ່າແຮງ ເຕັກໂນໂລຊີດິຈິຕ້ອນ ແລະ ລະບົບຄຸ້ມຄອງຄວາມຮູ້/ຂໍ້ມູນ .............................................................................. 15

**3. ການສົ່ງເສີມ ການຂ້າມຜ່ານ ທົ່ວ ຕ່ອງໂສ້ມູນຄ່າການຜະລິດກະສິກຳເປັນອາຫານ .........................................................................................17**

ບົດແນະນຳ 3.1 ສະໜັບສະໜູນ ການພັດທະນາຕະຫຼາດພາຍໃນ ແລະ ຕ່ອງໂສ້ມູນຄ່າສັ້ນ ສໍາລັບ ຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກຳ............... 17

ບົດແນະນຳ 3.2 ສ້າງແວດລ້ອມທີ່ເອື້ອອຳນວຍ ສໍາລັບ ການຫັນປ່ຽນ ຕ້ອງໂສ້ມູນຄ່າພາຍໃນ ໃຫ້ກວມລວມທົ່ວເຖິງທຸກຄົນ ................................................ 18

ບົດແນະນຳ 3.3 ດັດປັບ ລະບຽບການຕ່າງໆ ຂອງ ລັດ ທີ່ມີກ່ຽວກັບ ຄວາມປອດໄພ ຂອງ ອາຫານ, ມາດຕະຖານຄຸນນະພາບ, ແລະ ການອອກໃບຢັ້ງຢືນ ເພື່ອສະໜັບສະໜູນ ເຮັດໃຫ້ ຜະລິດຕະພັນທີ່ຜ່ານການຜະລິດແບບນິເວດກະສິກຳ ມີຄວາມແຕກຕ່າງ ແລະ ສະໜອງທາງເລືອກ ໃຫ້ ຜູ້ບໍລິໂພກ .......................................... 19

ບົດແນະນຳ 3.4 ນະໂຍບາຍເອົາຜູ້ບໍລິໂພກເປັນໃຈກາງ: ມາດຕະການໃສ່ໃຈດ້ານສຸຂະພາບ ແລະ ໂພຊະນາການ. ...................................................... 19

ບົດແນະນຳ 3.5 ສະໜັບສະໜູນ ການພັດທະນາຕ່ອງໂສ້ມູນຄ່າທ້ອງຖິ່ນ ສໍາລັບ ປັດໄຈການຜະລິດ (ເມັດພັນ, ຝຸ່ນອິນຊີ, ຢາຂ້າສັດຕູພືດຊີວະພາບ, ອາຫານສັດປອດສານພິດ), ອຸປະກອນ ແລະ ເຄື່ອງກົນຈັກ............................................ 20

ບົດແນະນຳ 3.6 ປະຕິຮູບ ເຄື່ອງມື ທາງດ້ານ ການຄ້າ, ນະໂຍບາຍການອຸດໜູນລາຄາ ແລະ ແຫຼ່ງການຈັດຊື້.................................................................. 21

**4. ການສ້າງຄວາມສາມາດ ແລະ ແລກປ່ຽນ ຄວາມຮູ້ ...........................23**

ບົດແນະນຳ 4.1 ສ້າງຄວາມສາມາດ ໃຫ້ ຊາວກະສິກອນ ແລະ ຊຸມຊົນເຂດຊົນນະບົດ ແລະ ອຳນວຍຄວາມສະດວກ ໃຫ້ ການຮຽນຮູ້ແລະແລກປ່ຽນ ຈາກຊາວກະສິກອນສູ່ຊາວກະສິກອນ ເພື່ອການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ................................ 23

ບົດແນະນຳ 4.2 ປັບປຸງຮູບແບບການສົ່ງເສີມກະສິກຳ ແລະ ການສະໜອງຄຳແນະນຳ ........................................................................................ 24
ບົດແນະນຳ 4.3 ເຊື່ອມສານ ການຜະລິດແບບນິເວດກະສິກຳ ເຂົ້າໃນ ການຝຶກອົບຮົມວິຊາຊີບ, ການສຶກສາຊັ້ນສູງ ແລະ ຫຼັກສູດວິຊາການ ........................................... 25
ບົດແນະນຳ 4.4 ເພີ່ມທະວີຄວາມຮັບຮູ້ທົ່ວສັງຄົມ ກ່ຽວກັບ ການຜະລິດແບບນິເວດກະສິກຳ ............................................................................................ 26

**5. ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ...........................27**

ບົດແນະນຳ 5.1 ລະບຸ ແລະ ຮ່ວມສ້າງ ຈຸດປະສົງ ທີ່ຈະແຈ້ງ ສຳລັບ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ........................................................ 27
ບົດແນະນຳ 5.2 ຈັດຕັ້ງ ການລະບຸ ພາກສ່ວນກ່ຽວຂ້ອງ, ແລະ ສ້າງຄວາມເຂົ້າໃຈກ່ຽວກັບ ທັດສະນະ ແລະ ຜົນປະໂຫຍດ ຂອງ ເຂົາເຈົ້າ............................. 28
ບົດແນະນຳ 5.3 ເຊື່ອມສານກົນໄກການມີສ່ວນຮ່ວມ ເຂົ້າໃນການຈັດຕັ້ງ.......... 28
ບົດແນະນຳ 5.4 ເລັງເປົ້າໝາຍສ້າງການມີສ່ວນຮ່ວມທັນປ່ຽນ ບໍ່ແມ່ນເປັນພຽງແຕ່ການທາບທາມຂໍຄຳປຶກສາ............................................................. 29

**6. ການສ້າງ ວາລະຄົ້ນຄວ້າວິໄຈ ສຳລັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ.........................................................................31**

ບົດແນະນຳ 6.1 ປັບປ່ຽນ ທິດທາງການຄົ້ນຄວ້າວິໄຈ ຄືນໃໝ່ ເພື່ອສະໜັບສະໜູນການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ................................ 31
ບົດແນະນຳ 6.2 ເສີມຂະຫຍາຍ ວິທີການທີ່ເປັນນະວັດຕະກຳ ໃນການຈັດຕັ້ງປະຕິບັດ ການຄົ້ນຄວ້າວໄຈ ແລະ ການຮ່ວມສ້າງຄວາມຮູ້ ດ້ວຍການມີສ່ວນຮ່ວມຂອງ ຜູ້ມີບົດບາດຕ່າງໆ........................................................................ 32
ບົດແນະນຳ 6.3 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກຳ ໃນລະດັບ ຟາມ ຫຼື ແຫຼ່ງການຜະລິດກະສິກຳ................................ 33
ບົດແນະນຳ 6.4 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກຳ ໃນລະດັບ ພູມມີທັດ ........................................................ 34
ບົດແນະນຳ 6.5 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກຳ ໃນລະດັບ ລະບົບການຜະລິດສະບຽງອາຫານ ຢູ່ຂັ້ນຕ່າງໆ ............... 34

**7. ການສະໜອງທຶນ ໃຫ້ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ..................................................................................36**

ບົດແນະນຳ 7.1 ສ້າງຂອບນິຕິກຳ ທີ່ເອື້ອອຳນວຍ ເພື່ອກຳນົດຈຸດປະສົງການສະໜອງທຶນ ຂອງ ພາກລັດ ແລະ ເອກະຊົນ ຄືນໃໝ່ ໃນການຮັບໃຊ້ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.......................................................... 36
ບົດແນະນຳ 7.2 ສ້າງ ຂອບຮັບຜິດຊອບ ແລະ ຍຸດທະສາດ ນິເວດກະສິກຳແຫ່ງຊາດທີ່ມີຄວາມສອດຄ່ອງ ເພື່ອຊີ້ນຳການສະໜອງທຶນໃນລະດັບສາກົນ ເຂົ້າໃສ່ ວຽກງານການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.................................. 37
ບົດແນະນຳ 7.3 ສ້າງຕົວແບບການເງິນນະວັດຕະກຳໃໝ່ ທີ່ແກ້ໄຂຄວາມຕ້ອງການຂອງ ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ເພື່ອຂ້າມຜ່ານ (ພາຍໃນຫຼາກຫຼາຍສະພາບເງື່ອນໄຂ) ໃນຂະ ນະທີ່ນຳໃຊ້ປະໂຫຍດ ຈາກ ການເງິນເພື່ອຄວາມຍືນຍົງສາກົນ ..................................................................................... 39

**ການຈັດຕັ້ງປະຕິບັດ: ສ້າງຄວາມເຂັ້ມແຂງ ໃຫ້ຂະບວນການສ້າງນະໂຍບາຍ ໃນລະດັບຊາດ ແລະ ອາຊຽນ ......................................................................... 41**

**ເອກະສານຊ້ອນທ້າຍ: ເອກະສານອ້າງອີງສຳຄັນ ........................................ 42**

**ເອກະສານຊ້ອນທ້າຍ A. ທິດສະດີການປ່ຽນແປງ....................................... 42**

**ເອກະສານຊ້ອນທ້າຍ B. ການຕິດຕາມ ແລະ ການປະເມີນຜົນ (M&E) ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ............................................42**

ເອກະສານຊ້ອນທ້າຍ C. ຊັບພະຍາກອນ ຂອງ ອົງການ ທີ່ໃຫ້ການຊ່ວຍເຫຼືອ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ....................................45

ເອກະສານຊ້ອນທ້າຍ D. ຖາມ-ຕອບ ກ່ຽວກັບ ນິເວດກະສິກຳ ..................47

ເອກະສານຊ້ອນທ້າຍ E. ການປະກອບສ່ວນ ຂອງ ນິເວດກະສິກຳ ໃສ່ ປພຍ...48

ເອກະສານຊ້ອນທ້າຍ F. ຫຼັກຖານ ແລະ ຕົວຢ່າງການຜະລິດແບບນິເວດກະສິກຳຈາກ ບັນດາປະເທດອາຊຽນ .....................................................51

ເອກະສານຊ້ອນທ້າຍ G. ບົດບາດຂອງ LICA ໃນການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ.................................................................57

ເອກະສານຊ້ອນທ້າຍ H. ຄວາມສອດຄ່ອງດ້ານນະໂຍບາຍ ແລະ ການຄຸ້ມຄອງບໍລິຫານໃນລະດັບຕ່າງໆ ສຳລັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ...........................................................................58

ເອກະສານຊ້ອນທ້າຍ I. ການວາງແຜນ ການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມ....59

ເອກະສານຊ້ອນທ້າຍ J. ບາງເຂດສຳຄັນ ສຳລັບການຈັດບູລິມະສິດ ການຂ້າມຜ່ານໄປສູ່ ການຜະລິດແບບນິເວດກະສິກຳ.............................................60

ເອກະສານຊ້ອນທ້າຍ K. ສິດທິ ຂອງ ຊາວກະສິກອນ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາສາກົນ ວ່າດ້ວຍ ຊັບພະຍາກອນກຳມະພັນພືດ........................61

ເອກະສານຊ້ອນທ້າຍ L. ການຜະລິດກະສິກຳ ໂດຍມີການສະໜັບສະໜູນຂອງຊຸມຊົນ (CSA)...................................................................62

ເອກະສານຊ້ອນທ້າຍ M. ລະບົບການຄ້ຳປະກັນ ແບບມີສ່ວນຮ່ວມ (PGS)...62

ເອກະສານຊ້ອນທ້າຍ N. ໂຮງຮຽນຊາວກະສິກອນ (FFS) ......................62

ເອກະສານຊ້ອນທ້າຍ O. ຕົວແບບການສະໜອງທຶນ ເພື່ອຄວາມຍືນຍົງ ທີ່ມີທ່າແຮງສະໜັບສະໜູນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ...........63

ເອກະສານອ້າງອີງ ...................................................................... 65

## ອັກສອນຫຍໍ້

| | |
|---|---|
| ASEAN | ອາຊຽນ - ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ |
| ASWGC | ໜ່ວຍງານວິຊາການຂະແໜງປູກຝັງ ອາຊຽນ |
| AMAF | ລັດຖະມົນຕີ ກະສິກຳ ແລະ ປ່າໄມ້ ອາຊຽນ |
| AMS | ຊາດສະມາຊິກ ອາຊຽນ |
| CFS | ຄະນະກຳມະການຄໍ້າປະກັນສະບຽງອາຫານໂລກ |
| CSA | ການຜະລິດກະສິກຳ ທີ່ໄດ້ຮັບການສະໜັບສະໜູນ ຈາກ ຊຸກຊິນ |
| CSO | ອົງການຈັດຕັ້ງທາງສັງຄົມ |
| ESCAP | ຄະນະກຳມາທິການເສດຖະກິດ-ສັງຄົມ ສປຊ ປະຈຳ ພາກພື້ນອາຊີ-ປາຊີຟິກ |
| FAO | ອົງການອາຫານ ແລະ ການກະເສດ ແຫ່ງ ສປຊ |
| FFS | ໂຮງຮຽນຊາວນາ |
| GAP | ການຜະລິດກະສິກຳສະອາດ |
| GHG | ທາດອາຍພິດເຮືອນແກ້ວ |
| HLPE | ຄະນະຊ່ຽວຊານຂັ້ນສູງ |
| ICT | ເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ ການສື່ສານ |
| IPM | ການຄຸ້ມຄອງສັດຕູພືດແບບປະສົມປະສານ |
| LICA | ແຜນງານລາວດ້ານນິເວດກະສິກາເພື່ອອາຊຽນ |
| M&E | ການຕິດຕາມ ແລະ ປະເມີນຜົນ |
| MSME | ຈນກ - ຈຸລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ |
| NDC | ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ |
| NGO | ອົງການຈັດຕັ້ງ ທີ່ບໍ່ສັງກັດລັດ |
| PGS | ລະບົບການຄໍ້າປະກັນ ແບບມີສ່ວນຮ່ວມ |
| SDG | ປພຍ - ເປົ້າໝາຍການພັດທະນາແບບຍືນຍົງ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| SOM-AMAF | ກອງປະຊຸມ ເຈົ້າໜ້າທີ່ອາວຸໂສ ກະສິກຳ ແລະ ປ່າໄມ້ ອາຊຽນ |
| SWG | ໜ່ວຍງານວິຊາການ |
| ToC | ທິດສະດີການປ່ຽນແປງ |
| VGGT | ຄຳແນະນຳຕາມຄວາມສະໝັກໃຈ ໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຢ່າງມີຄວາມຮັບ ຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ |

# ນິເວດກະສິກໍາ: ອະທິບາຍຄໍາສັບ ແລະ ຂອບເຂດ

## ອົງປະກອບ ແລະ ຫຼັກການ ນິເວດກະສິກໍາ

ນິເວດກະສິກໍາ ຊ່ວຍການຫັນປ່ຽນ ລະບົບສະບຽງອາຫານ ໂດຍມີເປົ້າໝາຍ ເພື່ອບັນລຸຄວາມຍືນຍົງທາງດ້ານ ນິເວດ, ເສດຖະກິດ ແລະ ສັງຄົມ. ນິເວດກະສິກໍາ ເນັ້ນໜັກ:

- ✓ **ເຮັດໃຫ້ການປະສານສົມທົບ ສ້າງຜົນປະໂຫຍດ ສູງສຸດ:** ເຮັດໃຫ້ ການປະສານສົມທົບ ລະຫວ່າງ ພືດ, ສັດ, ດິນ ແລະ ສິ່ງແວດລ້ອມ ສ້າງຜົນປະໂຫຍດສູງສຸດ ໃນການວາງແຜນການຜະລິດກະສິກໍາ, ແບບແຜນການຜະລິດກະສິກໍາ, ແລະ ລະບົບຄວາມຮູ້;
- ✓ **ຄວາມສະເໝີພາບທາງສັງຄົມ:** ສົ່ງເສີມຄວາມສະເໝີພາບທາງສັງຄົມ ບົນພື້ນຖານ ທັດສະນະ ຂອງ ຜູ້ຜະລິດ, ຜູ້ບໍລິໂພກ ແລະ ຜູ້ມີບົດບາດອື່ນໆ ໃນຕ່ອງໂສ້ມູນຄ່າ; ແລະ
- ✓ **ວິທີການດໍາເນີນງານຮອບດ້ານ:** ການຈັດຕັ້ງປະຕິບັດ ຈາກ ໄຮ່/ນາ ແລະ ຟາມ ສູ່ ພູມີທັດ, ຊຸມຊົນ ທີ່ເຮັດການຜະລິດກະສິກໍາ ໂດຍເຊື່ອມຈອດບັນດາຊຸມຊົນຊົນນະບົດ ແລະ ຕົວເມືອງ ແລະ ບັນດາ ຂະແໜງການຕ່າງໆ ດ້ວຍວິທີການດໍາເນີນງານຮອບດ້ານ ຕໍ່ນິເວດ, ສັງຄົມ-ວັດທະນະທໍາ, ເຕັກນິກ, ເສດຖະກິດ ແລະ ການເມືອງ ຂອງລະບົບ (Tittonell, 2023).

ປີ 2019, 197 ປະເທດສະມາຊິກ ຂອງ ອົງການອາຫານ ແລະ ການກະເສດສະຫະປະຊາຊາດ (FAO) ໄດ້ ພາກັນຮັບຮອງເອົາ 10 ອົງປະກອບ ຂອງ ນິເວດກະສິກໍາ ເປັນທິດນໍາໄປສູ່ການບັນລຸວິໄສທັດນິເວດກະສິກໍາ. ອົງປະກອບເຫຼົ່ານັ້ນ ລວມມີຄື: ຄວາມຫຼາກຫຼາຍ, ການປະສານກົມກຽວ, ຄວາມທົນທານ, ໝູນໃຊ້ (recycle), ການຮ່ວມສ້າງ ແລະ ການແລກປ່ຽນພູມປັນຍາ-ຄວາມຮູ້, ຄຸນຄ່າທາງສັງຄົມ ແລະ ຄຸນຄ່າຄວາມເປັນມະນຸດ, ວັດທະນະທໍາ ແລະ ປະເພນີ ກ່ຽວກັບ ອາຫານ, ການຄຸ້ມຄອງ ທີ່ມີຄວາມຮັບຜິດຊອບ, ເສດຖະກິດຮອບວຽນ ແລະ ສ້າງຜົນປະໂຫຍດທາງສັງຄົມ.

ສົມທົບໃສ່ 10 ອົງປະກອບເຫຼົ່ານັ້ນ ຍັງມີ 13 ຫຼັກການ ຂອງ ນິເວດກະສິກໍາ ຄື: ຫຼັກການ ການນໍາເອົາມາໃຊ້; ການຫຼຸດຜ່ອນປັດໃຈການຜະລິດ; ສຸຂະພາບ ຂອງ ດິນ; ສຸຂະພາບ ຂອງ ສັດ; ຊີວະນາໆພັນ; ການປະສົມ ກົມກຽວ; ການກະຈາຍເສດຖະກິດໃຫ້ມີຄວາມຫຼາກຫຼາຍ; ການຮ່ວມສ້າງພູມປັນຍາ-ຄວາມຮູ້; ຄຸນຄ່າທາງ ສັງຄົມ ແລະ ອາຫານການກິນ; ຄວາມເປັນທໍາ; ການເຊື່ອມຈອດ; ການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທໍາ ມະຊາດ; ແລະ ຫຼັກການ ການມີສ່ວນຮ່ວມ. ຄະນະຊ່ຽວຊານຂັ້ນສູງ ຂອງ ຄະນະກໍາມະການຄໍ້າປະກັນສະບຽງ ອາຫານໂລກ (CFS-HLPE) ຄື ພາກສ່ວນ ທີ່ສະເໜີ 13 ຫຼັກການ ທີ່ກ່າວມານັ້ນ ເພື່ອເນັ້ນໃຫ້ເຫັນ ຄວາມ ສໍາຄັນ ຂອງ ສຸຂະພາບ ຂອງ ດິນ, ສຸຂະພາບ ຂອງ ສັດ ແລະ ຄວາມເປັນທໍາ ພາຍໃນ ລະບົບສະບຽງອາຫານ ໂດຍສະເພາະ ສໍາລັບ ຜູ້ຜະລິດສະບຽງອາຫານຂະໜາດນ້ອຍ (HLPE, 2019).

## ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກໍາ

ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກໍາ ແມ່ນຢູ່ບົນພື້ນຖານ ການນໍາໃຊ້ ແລະ ການເຊື່ອມໂຍງ 10 ອົງປະກອບ ແລະ 13 ຫຼັກການ ຂອງ ນິເວດກະສິກໍາ ໃຫ້ກວ້າງຂວາງ ສົມທົບກັບ ການເຊື່ອມຕໍ່ ຄວາມຮູ້, ເຕັກ ໂນໂລຊີ, ຕະຫຼາດ, ນະວັດຕະກໍາທາງດ້ານນະໂຍບາຍ ແລະ ການຈັດຕັ້ງ ເພື່ອຂັບເຄື່ອນ ການຫັນປ່ຽນ ຂອງ ລະບົບສະບຽງອາຫານ.

ສາມາດປະເມີນ ຄວາມຄືບໜ້າ ຂອງ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກໍາ ຈາກ ການເພີ່ມຂຶ້ນ ຂອງ ການນໍາໃຊ້ບັນດາຫຼັກການ ແລະ ອົງປະກອບເຫຼົ່ານັ້ນ ທັງໃນລວງເລິກ ແລະ ລວງກວ້າງ ຕາມຕ່ອງໂສ້ມູນ ຄ່າອາຫານ ທີ່ນໍາໄປສູ່ການຜະລິດສະບຽງອາຫານເພີ່ມຂຶ້ນ ແລະ ມີຄວາມຍືນຍົງເຊິ່ງ:

- ສົ່ງເສີມ ຄວາມອຸດົມພູນສຸກ ຂອງ ກະສິກອນ
- ປອດໄພ, ຫຼາກຫຼາຍ, ມີໂພຊະນາການ ແລະ ລາຄາບໍ່ແພງ
- ເປັນທີ່ຕ້ອງການຂອງຜູ້ບໍລິໂພກ
- ດີຕໍ່ລະບົບນິເວດກະສິກໍາ ແລະ ດິນຟ້າອາກາດ.

ສາມາດສົ່ງເສີມ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ໄດ້ຈາກຫຼາຍຫາຍຈຸດເລີ່ມຕົ້ນ. ລະບົບການຜະລິດກະສິກຳ ແລະ ສະພາບເງື່ອນໄຂທາງດ້ານສັງຄົມ-ວັດທະນຳ ທີ່ແຕກຕ່າງກັນ ຮຽກຮ້ອງໃຫ້ຕ້ອງມີເຄື່ອງມື ແລະ ເສັ້ນທາງການຂ້າມຜ່ານ ທີ່ແຕກຕ່າງກັນ. ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳທີ່ເນັ້ນການຜະລິດກະສິກຳແບບກຸ້ມຢູ່ກຸ້ມກິນ ເປັນການເຊື່ອມຕໍ່ໃສ່ຕະຫຼາດ, ໝູນໃຊ້ ແລະ ສ້າງພູມປັນຍາຄວາມຮູ້ຂອງຊາວກະສິກອນ, ການຈັດຕັ້ງ ແລະ ຄວາມສາມາດ ແລະ ການນຳໃຊ້ກົນຈັກແບບຍືນຍົງ ຕົວຢ່າງ: ເສັ້ນທາງການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຈາກ ການຜະລິດກະສິກຳ ແບບອຸດສາຫະກຳອາດຈະກຳນົດເງື່ອນໄຂ ໃຫ້ຫຼຸດປັດໄຈເຄມີ ທີ່ນຳໃຊ້ເຂົ້າໃນການຜະລິດ, ເພີ່ມຄວາມຫຼາກຫຼາຍຂອງພືດປູກຝັງ ແລະ "ການຫັນເປັນທ້ອງຖິ່ນ" ຂອງ ລະບົບການຜະລິດກະສິກຳ.

CFS-HLPE ສະເໜີ ຊຸດຄຳແນະນຳທາງດ້ານນະໂບາຍ ທີ່ພົວພັນກັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ແລະ ວິທີການເຮັດວຽກແບບໃໝ່ ເພື່ອໃຫ້ບັນລຸການຜະລິດກະສິກຳ ແລະ ລະບົບສະບຽງອາຫານແບບຍືນຍົງ ຊຶ່ງຄຳແນະນຳເຫຼົ່ານັ້ນ ຖືເປັນບ່ອນອີງທີ່ມີຄຸນຄ່າ ສຳລັບ ການສ້າງນະໂຍບາຍ (HLPE, 2019).

ພາຍໃຕ້ສະພາບເງື່ອນໄຂຂອງ ອາຊຽນ, ຕາຕະລາງ 1 ຂ້າງລຸ່ມ ປະກອບມີລາຍລະອຽດ ກ່ຽວກັບ ວິທີການທີ່ເຮັດໃຫ້ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ສາມາດປະກອບສ່ວນເຂົ້າໃນການບັນລຸວິໄສທັດ ແລະ ແຜນຍຸທະສາດການຮ່ວມມືຂອງ ອາຊຽນ ໃນຂົງເຂດສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (2016-2025). ເຖິງແມ່ນວ່າຈະມີ ບົດແະນຳ ແລະ ແຜນໄລຍະຍາວ ເພື່ອຊີ້ນຳການສ້າງຄວາມຄືບໜ້າ ໃນການກ້າວໄປສູ່ ການບັນລຸເປົ້າໝາຍແຕ່ລະອັນທີ່ໄດ້ລະບຸໄວ້ກໍຕາມ, ແຕ່ການນຳໃຊ້ ບັນດາອົງປະກອບ ແລະ ຫຼັກການນິເວດກະສິກຳໃຫ້ກວ້າງຂວາງ ສາມາດ ໃຫ້ການຊ່ວຍເຫຼືອເພີ່ມເຕີມໃນ ທຸກຂົງເຂດ ແລະ ສິ່ງສຳຄັນ ຄື: ເຮັດໃຫ້ເກີດມີການປະສານທີ່ກົມກຽວກັນ ລະຫວ່າງ ຂົງເຂດເຫຼົ່ານັ້ນ.

**ຕາຕະລາງ 1. ການປະກອບສ່ວນ ຂອງ ນິເວດກະສິດ ເພື່ອບັນລຸວິໄສທັດ ແລະ ແຜນຍຸດທະສາດການຮ່ວມມືຂອງ ອາຊຽນ ໃນຂົງເຂດສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (2016-2025)**

| ວິໄສທັດ ແລະ ແຜນຍຸດທະສາດການຮ່ວມມືຂອງ ອາຊຽນ ໃນຂົງເຂດສະບຽງອາຫານ, ກະສິກຳ ແລະ ປ່າໄມ້, 2016–2025 | | |
|---|---|---|
| *ວິໄສທັດ: ຂະແໜງສະບຽງອາຫານ, ກະສິກຳ ແລະ ປ່າມໄມ້ ທີ່ມີຄວາມສາມາດແຂ່ງຂັນ, ທຸກຄົນມີສ່ວນຮ່ວມ ແລະ ທົນທານ ຕໍ່ ການປ່ຽນແປງດິນຟ້າອາກາດ ຖືກເຊື່ອມສານ ເຂົ້າໃນເສດຖະກິດໂລກ ບົນພື້ນຖານຫຼັກການຂອງຕະຫຼາດ ແລະ ຖານການຜະລິດໜຶ່ງດຽວ ທີ່ປະກອບສ່ວນເຂົ້າໃນ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ແລະ ສ້າງຄວາມອຸດົມພູນສຸກ ໃຫ້ ປະຊາຄົມອາຊຽນ.* | | |
| ເປົ້າໝາຍ | **ການປະກອບສ່ວນ ຂອງ ນິເວດກະສິກຳ** | **ເອກະສານ ທີ່ໃຫ້ທິດນຳ** |
| ຮັບປະກັນການຂະຫຍາຍຕົວທາງເສດຖະກິດ ທີ່ສະເໝີພາບ , ຍືນຍົງ ແລະ ທຸກຄົນໄດ້ຮັບຜົນປະໂຫຍດ | ສົ່ງເສີມຜົນປະໂຫຍດ ຂອງ ຜູ້ຜະລິດຂະໜາດນ້ອຍ ໂດຍສະເພາະ ບົດບາດຂອງແມ່ຍິງໃນລະບົບອາຫານ; ສະໜັບສະໜູນ ການພັດທະນາ ຕ່ອງໂສ້ມູນຄ່າ ສຳລັບ ຜະລິດຕະພັນອາຫານທີ່ປອດໄພ ແລະ ດີຕໍ່ສຸຂະພາບ | ຂອບການຮ່ວມມືອາຊຽນ ເພື່ອຊ່ວຍສະໜັບສະໜູນ ຜູ້ຜະລິດຂະໜາດນ້ອຍ, ສະຫະກອນ ແລະ ຈນກ (MSMEs) ທີ່ເຄື່ອນໄຫວ ໃນຂົງເຂດສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ເພື່ອປັບປຸງ ຄຸນນະພາບຜະລິດຕະພັນອາຫານ (2021) |
| ຫຼຸດຜ່ອນຄວາມທຸກຍາກ ແລະ ລຶບລ້າງຄວາມອຶດຫິວ | ຫຼຸດຜ່ອນຕົ້ນທຶນປັດໄຈການຜະລິດ; ຕ້ານ-ສະກັດກັ້ນການສູນເສຍທີ່ເປັນສາເຫດຈາກສັດຕູພືດ ແລະ ພະຍາດຕ່າງໆ; ປັບປຸງສະຖຽນລະພາບລາຍໄດ້ ສຳລັບ ຜູ້ຜະລິດ ແລະ ການຈັດສັນສະບຽງອາຫານໃຫ້ຜູ້ບໍລິໂພກ | ຂອບການຮ່ວມມືອາຊຽນ ວ່າດ້ວຍ ການຄໍ້າປະກັນສະບຽງອາຫານແບບເຊື່ອມສານ (2020) |
| ຮັບປະກັນ ການຄໍ້າປະກັນສະບຽງອາຫານ, ຄວາມປອດໄພອາຫານ ແລະ ໂພຊະນາການ ທີ່ດີຍິ່ງຂຶ້ນ | ຈຳກັດ ການນຳໃຊ້ເຄມີ ທາດເບື່ອ; ສົ່ງເສີມ ຄວາມຫຼາກຫຼາຍດ້ານອາຫານການກິນ; ປົກປ້ອງແນວພັນພື້ນເມືອງ; ສະໜັບສະໜູນ ການພັດທະນາ ຕະຫຼາດປອດສານພິດ; ເຊື່ອມສານ ການຜະລິດກະສິກຳ ແລະ ການຝຶກອົບຮົມດ້ານໂພຊະນາການ | ບົດແນະນຳພາກພື້ນອາຊຽນ ສຳລັບ ກະສິກຳຍືນຍົງ (2022); ມາດຕະຖານປອດສານພິດອາຊຽນ (2014); ບົດສອນ GAP ອາຊຽນ (2006 ເປັນຕົ້ນມາ) |
| ຮັດແໜ້ນການເຊື່ອມໂຍງພາກພື້ນເຂົ້າສູ່ລວງເລິກ | ແລກປ່ຽນຄວາມຮູ້ທາງວິທະຍາສາດ ແລະ ປະສົບການພາກປະຕິບັດຕົວຈິງ ຜ່ານ ຄະນະວິຊາການໃນລະດັບພາກພື້ນ, ເຄືອຂ່າຍຄົ້ນຄວ້າວິໄຈ, ສະຖາບັນການສຶກສາ ແລະ ອົງການຈັດຕັ້ງຂອງຜູ້ຜະລິດ | ແຜນດຳເນີນງານຂອງ ຄະນະວິຊາການອາຊຽນ ຊຶ່ງປະກອບດ້ວຍ ໜ່ວຍງານວິຊາການຂະແໜງປູກຝັງອາຊຽນ (ASWGC), ຄະນະວິຊາການຄົ້ນຄວ້າວິໄຈ ແລະ ພັດທະນາດ້ານກະສິກຳອາຊຽນ (ATWGARD), SWG ຝຶກອົບຮົມດ້ານກະສິກຳ ແລະ ການສົ່ງເສີມກະສິກຳອາຊຽນ (AWGATE), SWG ສະຫະກອນກະສິກຳອາຊຽນ (ASWGAC), ຄະນະວິຊາການປ່າໄມ້-ສັງຄົມ ອາຊຽນ (AWG SF) ແລະ ASEAN SWG ການລ້ຽງສັດ (ASWGL) |

| | | |
|---|---|---|
| ເສີມຂະຫຍາຍ ການເຂົ້າເຖິງຕະຫຼາດໂລກ ແລະ ແຫຼ່ງທຶນ | ສະໜັບສະໜູນການນຳໃຊ້ລະບົບການຍັ້ງຢືນ ແລະ ພິສູດໃນລະດັບສາກົນ ທີ່ໃຫ້ລາຄາສູງ ຫຼື ນະໂຍບາຍການເງິນໃນຮູບແບບອື່ນໆ ສຳລັບ ການຜະລິດທີ່ມີຄຸນນະພາບ ແລະ ທຸລະກິດກະສິກຳທີ່ມີຄວາມຮັບຜິດຊອບ. | ບົດແນະນຳການສົ່ງເສີມການລົງທຶນທີ່ມີຄວາມຮັບຜິດຊອບ ໃນຂົງເຂດສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ຂອງອາຊຽນ (2018) |
| ເພີ່ມຄວາມທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ, ແລະ ປະກອບສ່ວນເຂົ້າໃນການຫຼຸດຜ່ອນຜົນກະທົບ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຂອງຟ້າອາກາດ, ໄພພິບັດທຳມະຊາດ ແລະ ການກະທົບອື່ນໆ | ປົກປັກຮັກສາ ດິນ, ນ້ຳ ແລະ ຊີວະນາໆພັນ ທີ່ຈຳເປັນ ຕໍ່ລະບົບການຜະລິດຊຶ່ງທົນທານ ຕໍ່ການປ່ຽນແປງຂອງດິນຟ້າອາກາດ; ການເກັບກັກກາກບອນ ໄວ້ໃນດິນ ແລະ ຫຼຸດຜ່ອນ ການປ່ອຍທາດອາຍເມຕານ; ສະໜັບສະໜູນຄວາມຫຼາກຫຼາຍໃນລະບົບການຜະລິດກະສິກຳ ເພື່ອຫຼຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ | ບົດແນະນຳ ການສົ່ງເສີມ ການຜະລິດກະສິກຳທັນສະໄໝ ພາຍໃນຊຸມຊົນ (CSA) ຂອງອາຊຽນ, ເຫຼັ້ມທີ I, II, III (2015, 2017, 2023) |
| ບັນລຸ ການຄຸ້ມຄອງປ່າໄມ້ ແບບຍືນຍົງ | ສົ່ງເສີມ ກະສິກຳປ່າໄມ້ ໃນຖານະເປັນ ທາງເລືອກທຸກຝ່າຍໄດ້ຮັບຜົນປະໂຫຍດ ສຳລັບມະນຸດ ແລະ ດາວພະເຄາະໂລກ ຂອງ ພວກເຮົາ; ຈັດຕັ້ງປະຕິບັດ ການຄຸ້ມຄອງປ່າໄມ້ ແບບທົ່ວພູມີທັດປະສົມປະສານ | ບົດແນະນຳ ການພັດທະນາ ກະສິກຳປ່າໄມ້ ຂອງ ອາຊຽນ (2018) |

# ບົດແນະນຳ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

ບົດແນະນຳສະບັບນີ້ ລະບຸ 7 ຈຸດຫັນປ່ຽນສຳຄັນ ເພື່ອຍົກລະດັບ ແລະ ຂະຫຍາຍຜົນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ. ບັນດາກິດຈະກຳເຫຼົ່ານີ້ຈະຂຶ້ນກັບຈຸດເລີ່ມຕົ້ນຂອງການຂ້າມຜ່ານ ແລະ ສະພາບເງື່ອນໄຂພາຍໃນຂອງປະເທດ ແລະ ຄວນປັບໃຊ້ຕາມຄວາມສະໝັກໃຈ ບົນພື້ນຖານສະພາບເງື່ອນໄຂສະເພາະ.

ເອກະສານຊ້ອນທ້າຍຂອງ ບົດແນະນຳສະບັບນີ້ ປະກອບມີເອກະສານອ້າງອີງສຳຄັນ ເພື່ອຊ່ວຍສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກຳເຫຼົ່ານັ້ນ:

- ເອກະສານຊ້ອນທ້າຍ A. ທິດສະດີ ການປ່ຽນແປງ
- ເອກະສານຊ້ອນທ້າຍ B. ການຕິດຕາມ ແລະ ປະເມີນຜົນ (M&E) ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ເອກະສານຊ້ອນທ້າຍ C. ຊັບພະຍາກອນຂອງການຈັດຕັ້ງ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ເອກະສານຊ້ອນທ້າຍ D. ຖາມ-ຕອບ ກ່ຽວກັບ ນິເວດກະສິກຳ
- ເອກະສານຊ້ອນທ້າຍ E. ການປະກອບສ່ວນຂອງນິເວດກະສິກຳເຂົ້າໃນການບັນລຸ SDGs
- ເອກະສານຊ້ອນທ້າຍ F. ຕົວຢ່າງນິເວດກະສິກຳ ແລະ ຂໍ້ມູນຫຼັກຖານ ຈາກປະເທດສະມາຊິກອາຊຽນ
- ເອກະສານຊ້ອນທ້າຍ G. ບົດບາດຂອງ LICA ໃນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ເອກະສານຊ້ອນທ້າຍ H. ຄວາມກົມກຽວ ລະຫວ່າງ ນະໂຍບາຍ ແລະ ການຄຸ້ມຄອງໃນຂັ້ນຕ່າງໆ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ເອກະສານຊ້ອນທ້າຍ I. ການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ
- ເອກະສານຊ້ອນທ້າຍ J. ບາງຂົງເຂດ ສຳລັບ ການຈັດບູລິມະສິດການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ເອກະສານຊ້ອນທ້າຍ K. ສິດທິຕ່າງໆຂອງຊາວກະສິກອນຕາມທີ່ໄດ້ກຳນົດໄວ້ໃນ ສົນທິສັນຍາສາກົນ ວ່າດ້ວຍ ຊັບພະຍາກອນກຳມະພັນຂອງພືດ
- ເອກະສານຊ້ອນທ້າຍ L. ການຜະລິດກະສິກຳທັນສະໄໝພາຍໃນຊຸມຊົນ (CSA)
- ເອກະສານຊ້ອນທ້າຍ M. ລະບົບຄ້ຳປະກັນການມີສ່ວນຮ່ວມ (PGS)
- ເອກະສານຊ້ອນທ້າຍ N. ໂຮງຮຽນຊາວນາ (FFS)
- ເອກະສານຊ້ອນທ້າຍ O. ຕົວແບບການເງິນຍືນຍົງ ທີ່ມີທ່າແຮງສະໜັບສະໜູນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

1. ການວາງແຜນ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

2. ການເຮັດວຽກ ກັບ ຊາວກະສິກອນ

3. ການສົ່ງເສີມ ການຂ້າມຜ່ານທົ່ວຕ່ອງໂສ້ມູນຄ່າສະບຽງອາຫານ

4. ການສ້າງຄວາມສາມາດ ແລະ ແລກປ່ຽນພູມປັນຍາ-ຄວາມຮູ້

5. ການມີສ່ວນຮ່ວມຂອງຫຼາກຫຼາຍພາກສ່ວນກ່ຽວຂ້ອງ

6. ການສ້າງ ວາລະການຄົ້ນຄວ້າວິໄຈ

7. ການສະໜອງແຫຼ່ງທຶນ ໃຫ້ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

# 1. ການວາງແຜນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

*“ນະໂຍບາຍການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ແມ່ນນະໂຍບາຍ ກ່ຽວກັບ ການຂະຫຍາຍກິດຈະກຳນິເວດກະສິກຳ. ນະໂຍບາຍກ່ຽວຂ້ອງຈະຖືວ່າປະສົບຜົນສຳເລັດໄດ້ກໍ່ຕໍ່ເມື່ອສາມາດຂະການຂະຫຍາຍມີໄປວົງກວ້າງ - ບໍ່ແມ່ນນະໂຍບາຍຄຳພີຕາຍຕົວດຽວ ທີ່ໃຊ້ໄດ້ທຸກ. ບ່ອນ ແຕ່ວ່າ ເປັນນະໂຍບາຍທີ່ຕ້ອງເອົາໄປປັບໃຊ້ໃຫ້ປະສົບຜົນສຳເລັດ.”*

*“ແຫຼ່ງຂໍ້ມູນດີສຸດສຳລັບທ່ານ ເພື່ອໃຊ້ເປັນບ່ອນອີງ ໃນການສ້າງນະໂຍບາຍທີ່ດີ ແລະ ສອດຄ່ອງ ແມ່ນຂໍ້ມູນຈາກບັນດາພາກສ່ວນກ່ຽວຂ້ອງທີ່ຈະຖືກກະທົບຈາກນະໂຍບາຍດັ່ງກ່າວເອງ. ຕ້ອງເຮັດການປະເມີນຄວາມຕ້ອງການຂອງເຂົາເຈົ້າ.”*

– *ຄັດຈາກ ບົດສຳພາດ ຜູ້ສ້າງນະໂຍບາຍ*

ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຮຽກຮ້ອງໃຫ້ຕ້ອງມີການສະໜັບສະໜູນຈາກການວາງແຜນດ້ານກະສິກຳ, ເສັ້ນທາງຫັນປ່ຽນລະບົບສະບຽງອາຫານ ແລະ ເຄື່ອງມືວາງແຜນອື່ນໆ ທີ່ມີບົດບາດຕໍ່ລະບົບສະບຽງອາຫານ.

ການວາງແຜນ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ລວມເອົາການຕັ້ງຄາດໝາຍທີ່ຖືກຕ້ອງເໝາະສົມ, ການສົ່ງເສີມການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ໃນພູມມີທັດສະເພາະແນ່ນອນ, ການສ້າງນະໂຍບາຍ ແລະ ຍຸດທະສາດທີ່ກົມກຽວກັນ, ຕະຫຼອດເຖິງການຮັບປະກັນວ່າ ຜົນໄດ້ຮັບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໄດ້ຮັບການເຊື່ອມສານເຂົ້າກັນເປັນຢ່າງດີ. ຂະບວນການວາງແຜນ ຕ້ອງລວມເອົາການມີສ່ວນຮ່ວມ ຂອງບັນດາຂະແໜງການ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອສ້າງຄວາມກົມກຽວ ແລະ ຜົນປະໂຫຍດຮ່ວມໃນທົ່ວລະບົບສະບຽງອາຫານ ແລະ ໃນຂະນະດຽວກັນ ການຜະລິດກະສິກຳເອາກໍ່ມີການຄາດຄະເນ ແລະ ຈຳກັດ ບັນຫາການຊັ່ງຊາສ່ວນໄດ້-ສ່ວນເສຍ. ຖ້າຈະໃຫ້ດີສຸດ, ແຜນການຂ້າມຜ່ານທາງດ້ານນິເວດກະສິກຳ ແມ່ນໃຫ້ວາງແຜນໃນລະດັບພູມີທັດ ຫຼື ທົ່ວເຂດໃດໜຶ່ງ.

ມີ ສີ່ **ບົດແນະນຳ** ເພື່ອຊ່ວຍສະໜັບສະໜູນ ການວາງແຜນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳລະອຽດມີຄືດັ່ງນີ້:

- ບົດແນະນຳ 1.1 ສ້າງນະໂຍບາຍ ທີ່ກົມກຽວ ແລະ ກຳນົດຄາດໝາຍໃຫ້ຖືກຕ້ອງເໝາະສົມຫຼາຍກວ່າເກົ່າ ສຳລັບ ການວາງແຜນດ້ານກະສິກຳ ຜ່ານເຕັກນິກນິເວດກະສິກຳ
- ບົດແນະນຳ 1.2 ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງໃນຂະບວນການວາງແຜນ
- ບົດແນະນຳ 1.3 ນຳໃຊ້ວິທີການວາງແຜນຂັ້ນທົ່ວພູມີທັດ ຫຼື ທົ່ວເຂດ
- ບົດແນະນຳ 1.4 ການມີສ່ວນຮ່ວມຂອງພາກເອກະຊົນ ແລະ ການສ້າງຄວາມເຂັ້ມແຂງໃຫ້ລະບຽບການສ້າງແຜນ ສຳລັບ ທຸລະກິດກະສິກຳ

## ບົດແນະນຳ 1.1 ສ້າງນະໂຍບາຍ ທີ່ກົມກຽວ ແລະ ກຳນົດຄາດໝາຍໃຫ້ຖືກຕ້ອງເໝາະສົມຫຼາຍກວ່າເກົ່າ ສຳລັບ ການວາງແຜນດ້ານກະສິກຳຜ່ານເຕັກນິກນິເວດກະສິກຳ

- ✓ ຮັບປະກັນວ່າ: ເຄື່ອງມືນະໂຍບາຍໃນລະດັບປະເທດທີ່ມີ ກ່ຽວກັບ ລະບົບສະບຽງອາຫານ ເຊື່ອມສານເອົາບັນດາຄາດໝາຍຕ່າງໆ ທີ່ສະໜັບສະໜູນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.
- ✓ ເລັ່ງລັດ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ໂດຍການສົ່ງເສີມລະບົບສະບຽງອາຫານ ແລະ ການຜະລິດກະສິກຳແບບຍືນຍົງ ຕາມຫຼັກການ ນິເວດກະສິກຳ *ພາຍໃນ* ຂອບແນະນຳການສ້າງແຜນທີ່ມີຢູ່ ພ້ອມນັ້ນ ຍັງອາດຈະຈຳເປັນຕ້ອງມີແຜນການເພີ່ມເຕີມປະກອບສົມທົບອີກ.
- ✓ ສ້າງຄວາມເຂັ້ມແຂງໃຫ້ການປະສານສົມທົບ ລະຫວ່າງຂະແໜງການ ແລະ ທົ່ວທຸກຂັ້ນ ເພື່ອຄຸ້ມຄອງການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ຊາດສະມາຊິກອາຊຽນ (AMS) ອາດຈະພິຈາລະນາ:

- ກຳນົດ ຄາດໝາຍ ກ່ຽວກັບ ຄວາມຍືນຍົງຂອງການຫັນປ່ຽນຊົນນະບົດ, ທຸລະກິດກະສິກຳ ແລະ ຕະຫຼາດ ທີ່ພົວພັນກັບ:
  - ການຟື້ນຟູ ສຸຂະພາບລະບົບນິເວດກະສິກຳ, ສຸຂະພາບຂອງດິນ ແລະ ຊັບພະຍາກອນທີ່ດິນ.
  - ການຜະລິດທີ່ດີຂຶ້ນ – ການກະຈາຍໃຫ້ມີຄວາມຫຼາກຫຼາຍ, ມີຄຸນນະພາບ, ມີຄວາມປອດໄພ ໃນຜະລິດຕະພັນສະບຽງອາຫານ ທັງສຳລັບຕະຫຼາດພາຍໃນ ແລະ ສົ່ງອອກ.
  - ການສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນ – ການກະຈາຍແຫຼ່ງລາຍໄດ້ ຂອງ ຊາວກະສິກອນໃຫ້ຫຼາກຫຼາຍ, ເພີ່ມລາຍໄດ້ຂອງຊາວກະສິກອນ, ການເຂົ້າເຖິງຊັບພະຍາກອນ, ການນຳໃຊ້ແບບແຜນການເຮັດວຽກ ແລະ ເຕັກໂນໂລຊີນິເວດກະສິກຳ, ມີນະໂຍບາຍສົ່ງເສີມຊາວກະສິກອນໄວໜຸ່ມ.

  - ຜູ້ບໍລິໂພກມີສຸຂະພາບແຂງແຮງດີ – ອາຫານການກິນມີຄວາມຫຼາກຫຼາຍ, ຄວາມຮັບຮູ້ດ້ານໂພຊະນາການ, ຜົນຜະລິດກະສິກຳເພື່ອສຸຂະພາບທີ່ມີລາຄາບໍ່ແພງ.
- ສະໜັບສະໜູນແຕ່ລະຄາດໝາຍ ດ້ວຍ ນະໂຍບາຍສະເພາະ ເພື່ອສົ່ງເສີມນະວັດຕະກຳດ້ານເຕັກໂນໂລຊີ ແລະ ການເຊື່ອມຈອດ ຕະຫຼອດເຖິງການຮຽນຮູ້ຈາກກັນ ແລະ ກັນ.
- ຮັດແໜ້ນຄວາມກົມກຽວຂອງນະໂຍບາຍຕາມສາຍຂວາງ ລະຫວ່າງ ຂະແໜງການຕ່າງໆ, ແລະ ຕາມສາຍຕັ້ງ ລະຫວ່າງ ຂັ້ນຕ່າງໆຂອງການຄຸ້ມຄອງບໍລິຫານ (ລະອຽດໃຫ້ເບິ່ງ ເອກະສານຊ້ອນທ້າຍ H) ກໍຄື ຄວາມກົມກຽວຂອງນະໂຍບາຍໃນໄລແຕ່ລະໄລຍະ ທີ່ແກ້ໄຂການຈັດສັນຊັບພະຍາກອນ ແລະ ການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ຊຶ່ງລວມທັງຜ່ານບັນດາເວທີ ຫຼື ກົນໄກການມີສ່ວນຮ່ວມຂອງຫຼາກຫຼາຍພາກສ່ວນກ່ຽວຂ້ອງ.

## ບົດແນະນຳ 1.2 ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ໃນຂະບວນການວາງແຜນ

✓ ສ້າງຄວາມເປັນເຈົ້າການ ຂອງ ພາກສ່ວນກ່ຽວຂ້ອງ ສຳລັບ ການຂ້າມຜ່ານ ແລະ ລະດົມຊັບພະຍາກອນຕ່າງໆ, ກຳນົດບັນດາຄາດໝາຍທີ່ແທດເໝາະກັບສະພາບຄວາມເປັນຈິງ ແຕ່ມີລັກສະນະສູ້ຊົນ ຮ່ວມກັບເຂົາເຈົ້າ ເຊິ່ງລວມເອົາການນຳໃຊ້ ວິທີການທີ່ເໝາະສົມ ໃນການເອົາພາກສ່ວນກ່ຽວຂ້ອງ ເຂົ້າມີສ່ວນຮ່ວມ ຄື: ຄັດເລືອກພາກສ່ວນກ່ຽວຂ້ອງຈາກການສຳຫຼວດ, ຈັດການສົນທະນາຄົ້ນຄວ້າເປັນກຸ່ມຈຸດສຸມ, ມີຄະນະໃຫ້ຄຳປຶກສາ, ກອງປະຊຸມສຳມະນາ ຫຼື ກອງປະຊຸມປຶກສາຫາລື ແລະ ວິທີການອື່ນໆ.

✓ ເສີມສ້າງການປະສານສົມທົບ ແລະ ການແລກປ່ຽນ, ການເປັນຄູ່ຮ່ວມງານໄລຍະຍາວ ແລະ ການຮ່ວມພັນທະມິດ ໂດຍມີຈຸດສຸມໃສ່ ນິເວດກະສິກຳ (ຕ.ຢ: ຂໍ້ລິເລີ່ມລະດັບພາກພື້ນເຊັ່ນ LICA ທີ່ມີບົດບາດສຳຄັນ ໃນການເສີມສ້າງ ແລະ ອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນພູມປັນຍາ-ຄວາມຮູ້ ແລະ ປະສົບການໃນຂອບເຂດທົ່ວປະເທດ).

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:

- ສ້າງແຜນຜັງກຳນົດບັນພາກສ່ວນກ່ຽວຂ້ອງເປົ້າໝາຍທີ່ສອດຄ່ອງຫຼາຍສຸດກັບບັນດາຄາດໝາຍຕົ້ນຕໍ.
- ເລີ່ມຕົ້ນດ້ວຍການປະເມີນສະພາບປະຈຸບັນຢ່າງຖ້ວນຖີ່ ຊຶ່ງລວມທັງ ຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ໄພຂົ່ມຂູ່ ຫຼື ສິ່ງທ້າທາຍ (ການວິເຄາະ SWOT) ໃນບັນດາຂົງເຂດເປົ້າໝາຍ (ຕຢ: ສຸຂະພາບຂອງ ດິນ, ສຸຂະພາບຂອງ ດິນ, ຜົນກະທົບຕໍ່ສິ່ງແວດລ້ອມ, ຄວາມທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ) ໃນລະດັບພູມີທັດ/ທ້ອງຖິ່ນ, ສູນກາງ ແລະ ແມ່ນແຕ່ລະດັບພາກພື້ນ.

## ບົດແນະນຳ 1.3 ນຳໃຊ້ວິທີການວາງແຜນແບບທົ່ວພູມີທັດ ຫຼື ທົ່ວເຂດ

✓ ເສີມສ້າງຂະບວນການວາງແຜນ ທີ່ຮັບປະກັນກິດຈະກຳການຊ່ວຍເຫຼືອທີ່ມີຄວາມກົມກຽວ ໃນລະດັບພູມີທັດຕ່າງໆ ໂດຍຮັບຮູ້ວ່າເປັນລະດັບທີ່ສຳຄັນຢ່າງຍິ່ງ ເພື່ອບັນລຸຜົນປະໂຫຍດຈາກນິເວດກະສິກຳ.

✓ ຮັບປະກັນຄວາມຫຼາກຫຼາຍຂອງພູມີທັດ ຊຶ່ງຈຳເປັນຕໍ່ການບຳລຸງຮັກສາບໍລິການລະບົບນິເວດທີ່ເກີດຂຶ້ນເອງຕາມທຳມະຊາດ - ເຊັ່ນ: ການປະສົມເກສອນ, ການຄວບຄຸມການເຊາະເຈື່ອນ ແລະ ການໝູນໃຊ້ສານອາຫານ ຊຶ່ງບໍລິການລະບົບນິເວດເຫຼົ່ານີ້ ປະກອບສ່ວນເຂົ້າໃນຜະລິດຕະພາບ ແລະ ຄວາມຍືນຍົງ.

✓ ນຳໃຊ້ທ່າແຮງ ຂອງ ວິທີການຄຸ້ມຄອງແບບທົ່ວພູມີທັດ ເພື່ອປັບສົມດຸນ ບັນດາຄວາມຕ້ອງການທີ່ຍາດແຍ່ງແຂ່ງຂັນກັນ ແລະ ເຊື່ອມສານບັນດານະໂຍບາຍ ສຳລັບ ການນຳໃຊ້ທີ່ດິນ ເພື່ອຈຸດປະສົງທີ່ຫຼາກຫຼາຍ ຊຶ່ງຈະເປັນການສະໜັບສະໜູນການມີສ່ວນຮ່ວມຢ່າງທົ່ວເຖິງ ຂອງ ບັນດາພາກສ່ວນກ່ຽວຂ້ອງຕ່າງໆ (ລະອຽດໃຫ້ເບິ່ງ ບົດແນະນຳ 5).

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:

- ກຳນົດຫຼາກຫຼາຍວິທີການຄຸ້ມຄອງແບບທົ່ວພູມີທັດ ແລະ ທົ່ວເຂດ ທີ່ສະໜັບສະໜູນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ແລະ ເອົາພາກສ່ວນກ່ຽວຂ້ອງເຂົ້າມີສ່ວນຮ່ວມໃນການສ້າງວິທີການດຳເນີນງານເຫຼົ່ານັ້ນ. ບາງຕົວຢ່າງຂອງວິທີການດຳເນີນງານທີ່ກ່າວເຖິງນີ້ ລວມເອົາການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (ລະອຽດໃຫ້ເບິ່ງ ເອກະສານຊ້ອນທ້າຍ I), ວິທີການດຳເນີນງານຕາມເຂດຮັບຜິດຊອບ, ວິທີການຄຸ້ມຄອງພູມີທັດແບບປະສົມປະສານ, ການວາງແຜນການຄຸ້ມ

ຄອງອ່າງໂຕ່ງ, ການວາງແຜນການຟື້ນຟູປ່າໄມ້, ການວາງແຜນຄຸ້ມຄອງເຂດ ໂດຍມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ການວາງແຜນລະບົບສະບຽງອາຫານໃນເຂດຕົວເມືອງ.

- ກໍານົດເຂດແດນຂອງພູມີທັດ ຫຼື ເຂດ ບົນພື້ນຖານຄຸນລັກສະນະທາງທໍາມະຊາດ, ເຂດແດນການການປົກຄອງ ຫຼື ເງື່ອນໄຂສະເພາະແນ່ນອນທາງດ້ານນິເວດວິທະຍາ ຫຼື ການເມືອງ-ສັງຄົມ.
- ຈັດຕັ້ງປະຕິບັດການປະເມີນພູມີທັດແບບປະສົມປະສານ (ຕາມຄວາມເໝາະສົມ), ສ້າງຄວາມເຂົ້າໃຈ ກ່ຽວກັບ ຄຸນລັກສະນະສໍາຄັນ ຂອງ ເຂດດັ່ງກ່າວ (ຊຶ່ງລວມທັງ ການນໍາໃຊ້ທີ່ດິນ, ຊີວະນາງພັນ, ລະບົບນິເວດ, ແລະ ຊຸມຊົນຢູ່ອາໄສຂອງປະຊາຊົນ), ແລະ ລະບຸສິ່ງທ້າທາຍຕົ້ນຕໍ (ເຊັ່ນ: ການກະຈັດກະຈາຍຂອງຖິ່ນທີ່ຢູ່ອາໄສຂອງສັດ, ການສູນເສຍຊີວະນາງພັນ, ການບົກແຫ້ງຂອງນໍ້າ, ການເຊື່ອມໂຊມຂອງດິນ ຫຼື ຄວາມບໍ່ສະເໝີພາບທາງດ້ານເສດຖະກິດ-ສັງຄົມ); ຊຶ່ງລວມເອົາການແບ່ງເຂດປະເພດການຜະລິດ (ຕ.ຢ: ເຂດປອດສານພິດ, ແຫຼ່ງຊື້ຜະລິດຕະພັນແບບຍືນຍົງ, ພືດອາຍຸຫຼາຍປີ, ເຂດລຽງສັດ), ປ່າໄມ້, ແລະ ເຂດສ່ຽງສູນເສຍຊີວະນາງພັນ (ລະອຽດໃຫ້ເບິ່ງ ວິທີການຄຸ້ມຄອງແບບທົ່ວພູມມີທັດທີ່ສ້າງຂຶ້ນໂດຍ ADB, FAO, GIZ ຫຼື ພາກສ່ວນອື່ນໆ).
- ສະໜັບສະໜູນວິທີການເຮັດວຽກແບບມີສ່ວນຮ່ວມ ເພື່ອລະບຸເສັ້ນທາງ ແລະ ຈຸດຫັນປ່ຽນສໍາຄັນທາງດ້ານການຈັດຕັ້ງ ແລະ ເຕັກນິກ, ແລະ ເພື່ອຈັດບູລິມະສິດກິດຈະກໍາຊ່ວຍເຫຼືອ ຊຶ່ງລວມເອົາບັນດາມາດຕະການທີ່ຊ່ວຍປົກປ້ອງ ແລະ ຟື້ນຟູເຂດເຊື່ອມໂຊມ ແລະ ເຂດທີ່ມີຄວາມບອບບາງ (ລາຍລະອຽດມີໃນ ເອກະສານຊ້ອນທ້າຍ J ສໍາລັບເຂດຕ່າງໆ ເພື່ອຈັດບູລິມະສິດການລົງທຶນທາງດ້ານນິເວດກະສິກໍາ).

► **ເອກະສານອ້າງອີງເພີ່ມເຕີມ:**

- ອະນາຄົດ ພູມີທັດ – ວິທີການຄຸ້ມຄອງ ແບບທົ່ວພູມີທັດ ແມ່ນຫຍັງ
- FAO. 2017. ພູມີທັດ ສໍາລັບ ຊີວິດ: ວິທີການຄຸ້ມຄອງພູມີທັດ ເພື່ອການຜະລິດກະສິກໍາ ແລະ ອາຫານແບບຍືນຍົງ
- ADB. 2017. ການຄຸ້ມຄອງທີ່ດິນແບບຍືນຍົງຢູ່ອາຊີ: ນໍາສະເໜີ ກ່ຽວກັບ ວິທີການຄຸ້ມຄອງແບບທົ່ວພູມີທັດ
- GIZ. 2023. ນິເວດກະສິກໍາ: ເຮັດໃຫ້ການປັບຕົວບົນພື້ນຖານລະບົບນິເວດໄດ້ຜົນໃນພູມີທັດກະສິກໍາ
- FAO, ພັນທະມິດນິເວດກະສິກໍາ. 2023. ການເຊື່ອມໂຍງ ລະຫວ່າງ ນິເວດກະສິກໍາ ແລະ ວິທີການຄຸ້ມຄອງແບບທົ່ວເຂດ ສໍາລັບ ການຫັນປ່ຽນທາງດ້ານລະບົບສະບຽງອາຫານ (ຊຸດສົນທະນາແລກປ່ຽນ ກ່ຽວກັບ ນິເວດກະສິກໍາ, ເອກະສານຫຍໍ້ ເຫຼັ້ມທີ 1)

## ບົດແນະນໍາ 1.4 ການມີສ່ວນຮ່ວມຂອງພາກເອກະຊົນ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ລະບຽບການວາງແຜນ ສໍາລັບ ທຸລະກິດກະສິກໍາ

✓ ສ້າງຄວາມເຂັ້ມແຂງໃຫ້ການປະສານງານກັບທຸລະກິດກະສິກໍາຂະໜາດໃຫຍ່ ໂດຍນໍາໃຊ້ເວທີການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແລະ ກົນໄກການເປັນຄູ່ຮ່ວມງານລະຫວ່າງພາກລັດ-ພາກເອກະຊົນ ເພື່ອ ແນະນໍາພາກເອກະຊົນໃຫ້ຮູ້ ກ່ຽວກັບ ບັນຄໍາໝາຍໝັ້ນ ແລະ ການລົງທຶນຕ່າງໆ ໃນການກ້າວໄປສູ່ການຜະລິດກະສິກໍາ ແລະ ການມີລະບົບສະບຽງອາຫານແບບຍືນຍົງ.

✓ ສ້າງຄວາມສອດຄ່ອງ ລະຫວ່າງ ແຜນງານເພື່ອຄວາມຍືນຍົງຂອງວິສາຫະກິດຕ່າງໆ, ແຫຼ່ງທຶນ ແລະ ເຄື່ອງມືການລົງທຶນທີ່ມີຄວາມຮັບຜິດຊອບ ກັບ ເສັ້ນທາງຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກໍາ ບົນພື້ນຖານຄວາມຕ້ອງການຂອງປະເທດ ແລະ ຊຸມຊົນທ້ອງຖິ່ນ. ອາດຈະຈັດຕັ້ງປະຕິບັດພາຍໃນເວທີແລກປ່ຽນຂັ້ນສູນກາງ ແຕ່ສ່ວນຂັ້ນທ້ອງຖິ່ນ ແມ່ນອາດຈະຈັດຕັ້ງປະຕິບັດ ພາຍໃນວິທີການຄຸ້ມຄອງແບບທົ່ວພູມີທັດ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ປະສົມປະສານຄວາມພະຍາຍາມຂອງພາກລັດ ແລະ ພາກເອກະຊົນ ໃນການສ້າງຄວາມເຂັ້ມແຂງດ້ານທັກສະຄວາມຮູ້ ແລະ ຄວາມສາມາດໃນການບໍລິຫານຄວາມສ່ຽງ ໃຫ້ຊາວກະສິກອນ ເພື່ອຂັບເຄື່ອນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກໍາ (ຕ.ຢ: ຜ່ານມາດຕະຖານການປັບຕົວທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ສໍາລັບ ຜະລິດຕະພັນສະບຽງອາຫານ; (ລະອຽດໃຫ້ເບິ່ງ ບົດແນະນໍາ 3), ວຽກສົ່ງເສີມກະສິກໍາ (ລະອຽດໃຫ້ເບິ່ງ ບົດແນະນໍາ 4), ອອກແບບນະໂຍບາຍທາງດ້ານການເງິນແບບສະເພາະ ເພື່ອສົ່ງເສີມຊາວກະສິກອນ (ລະອຽດໃຫ້ເບິ່ງ ບົດແນະນໍາ 7).

- ສ້າງຄວາມເຂັ້ມແຂງ ໃຫ້ລະບຽບການວາງແຜນທີ່ຄຸ້ມຄອງການໃຫ້ສໍາປະທານທີ່ດິນ ແລະ ການລົງທຶນໃສ່ການຜະລິດກະສິກໍາເປັນສະບຽງອາຫານ (ຕ.ຢ: ການລົງທຶນໃສ່ໂຮງງານປຸງແຕ່ງທີ່ອາດຈະເປັນສາເຫດເລັ່ງການບຸກລຸກປ່າໄມ້, ການເຊາະເຈື່ອນຂອງ ດິນ ຫຼື ການປົນເປື້ອນຂອງນໍ້າ).
- ຮ່ວມລົງທຶນໃສ່ໂຄງລ່າງພື້ນຖານ ທີ່ສະໜັບສະໜູນການຜະລິດກະສິກໍາແບບຍືນຍົງ ຊຶ່ງລວມທັງລະບົບການຄຸ້ມຄອງນໍ້າ, ແຫຼ່ງພະລັງງານທົດແທນ, ໂລຊິດສະຕິກ (ພະລາທິການ) ແລະ ການຂົນສົ່ງແບບຍືນຍົງ (ລະອຽດໃຫ້ເບິ່ງ ບົດແນະນໍາ 2 ກ່ຽວກັບ ຄວາມຕ້ອງການດ້ານການເຊື່ອມຈອດ).



ຮູບຖ່າຍ: ການຄັດເລືອກເອົາເມັດກາເຟຄຸນນະພາບສູງ ທີ່ມີການປັບຕົວ ຕາມກະສິກໍາປ່າໄມ້ ແລະ ເງື່ອນໄຂທ້ອງຖິ່ນ, ໂຄງການ ASSET, 2021

# 2. ການເຮັດວຽກ ກັບ ຊາວກະສິກອນ

*"ພວກເຮົາບໍ່ສາມາດຄາດຫວັງໃຫ້ຊາວກະສິກອນປ່ຽນໄປສູ່ ການຜະລິດກະສິກຳປອດສານພິດ ໄດ້ທັງໝົດ ແລະ ປະຖິ້ມວິທີການຜະລິດດັ້ງເດີມໄດ້ຢ່າງທັນທີທັນໃດ. ການຂ້າມຜ່ານດັ່ງກ່າວ ມີຮອບວຽນຂອງການດັດປັບ...ພວກເຮົາຄວນພ້ອມຈ່າຍ 'ຄ່າຮຽນ'... ໃຫ້ຊາວກະສິກອນໃນການຂ້າມຜ່ານດັ່ງກ່າວ."*

*– ຄັດຈາກ ບົດສຳພາດ ຂອງ ຜູ້ສ້າງນະໂຍບາຍ*

ໃນທຸກການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ, ຊາວກະສິກອນ ຄືນະວັດຕະກອນ, ຜູ້ມີພູມປັນຍາຄວາມຮູ້ ແລະ ເຈົ້າການນຳພາໃຫ້ເກີດການປ່ຽນແປງ ກໍຄືເປັນຜູ້ກ້າສ່ຽງ. ຂໍ້ນີ້ໃຫ້ຂໍ້ມູນທິດນຳກ່ຽວກັບການສ້າງຄວາມສາມາດໃຫ້ຊາວກະສິກອນ (ແລະ ອົງການຈັດຕັ້ງຂອງເຂົາເຈົ້າ) ຕະຫຼອດເຖິງ ການສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ແລະ ທີ່ເຮັດໃຫ້ເຂົາເຈົ້າເປັນຜູ້ມີບົດບາດໃຈກາງ ໃນຖານະຜູ້ຄຸ້ມຄອງ ແລະ ຜູ້ບໍລິຫານລະບົບນິເວດກະສິກຳ.

ມີ ສີ່ **ບົດແນະນຳ** ເພື່ອສະໜັບສະໜູນການເຮັດວຽກກັບຊາວກະສິກອນ:

- ບົດແນະນຳ 2.1 ສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງຂອງຊາວກະສິກອນ, ແມ່ຍິງ ແລະ ຊາວໜຸ່ມ ແລະ ການມີສ່ວນຮ່ວມຢ່າງຕັ້ງໜ້າຂອງເຂົາເຈົ້າ ໃນຂະບວນການສ້າງນະໂຍບາຍນິເວດກະສິກຳ
- ບົດແນະນຳ 2.2 ສ້າງເງື່ອນໄຂທີ່ເອື້ອອຳນວຍ ເພື່ອສະໜັບສະໜູນຊ່ວຍເຫຼືອຊາວກະສິກອນໃນການຂ້າມຜ່ານ
- ບົດແນະນຳ 2.3 ນຳໃຊ້ວິທີການດຳເນີນງານບົນພື້ນຖານສິດທິ ເພື່ອສ້າງແວດລ້ອມທາງດ້ານການຈັດຕັ້ງ ແລະ ກົດໝາຍທີ່ປອດໄພ ໃນການສະໜັບສະໜູນຊ່ວຍເຫຼືອຊາວກະສິກອນໃນການຂ້າມຜ່ານ
- ບົດແນະນຳ 2.4 ນຳໃຊ້ ທ່າແຮງ ເຕັກໂນໂລຊີ ດິຈິຕ້ອນ ແລະ ລະບົບຄຸ້ມຄອງຄວາມຮູ້/ຂໍ້ມູນ ເພື່ອສະໜັບສະໜູນຊ່ວຍເຫຼືອຊາວກະສິກອນ ໃນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

## ບົດແນະນຳ 2.1 ສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງຂອງຊາວກະສິກອນ, ແມ່ຍິງ ແລະ ຊາວໜຸ່ມ ແລະ ການມີສ່ວນຮ່ວມຢ່າງຕັ້ງໜ້າຂອງເຂົາເຈົ້າໃນຂະບວນການສ້າງນະໂຍບາຍນິເວດກະສິກຳ

✓ ສະໜັບສະໜູນການຕາງໜ້າ ແລະ ການມີສ່ວນຮ່ວມຢ່າງຫ້າວຫັນ ຂອງອົງການຈັດຕັ້ງຊາວກະສິກອນ ໃນຂະບວນການຕ່າງໆ ທີ່ພົວພັນກັບນະໂຍບາຍ (ການສ້າງ, ການຈັດຕັ້ງະຕິບັດ ແລະ ການຕິດຕາມ) ແລະ ເວທີການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ (ລະອຽດໃຫ້ເບິ່ງ ບົດແນະນຳ 1 ແລະ ບົດແນະນຳ 5.4).

✓ ສະໜັບສະໜູນຊ່ວຍເຫຼືອ ອົງການຈັດຕັ້ງຂອງແມ່ຍິງ ແລະ ຊາວໜຸ່ມ ແລະ ການມີສ່ວນຮ່ວມທີ່ມີປະສິດທິຜົນຂອງແມ່ຍິງ ແລະ ຊາວໜຸ່ມ ໃນອົງການຈັດຕັ້ງຂອງຊາວກະສິກອນ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:

- ສ້າງຄວາມເຂັ້ມແຂງໃຫ້ເຄືອຂ່າຍຊາວກະສິກອນໃນລະດັບປະເທດ ແລະ ພາກພື້ນ ເຊັ່ນ: **ສະມາຄົມຊາວກະສິກອນອາຊີເພື່ອການພັດທະນາຊົນນະບົດແບບຍືນຍົງ (AFA)** ແລະ ອົງການຈັດຕັ້ງສະມາຊິກໃນລະດັບປະເທດ.
- ລະບຸຊາວກະສິກອນ, ແມ່ຍິງ ແລະ ຊາວໜຸ່ມແບບຢ່າງ ພ້ອມທັງຍົກລະດັບຄວາມສາມາດ ຂອງເຂົາເຈົ້າ ສຳລັບ ການເຄື່ອນໄຫວເປັນໝູ່ຄະນະ (ລະອຽດໃຫ້ເບິ່ງ ແຜນດຳເນີນງານສາກົນ ຂອງ ທົດສະວັດການຜະລິດກະສິກຳແບບຄອບຄົວ, ອົງການ ສປຊ).

### ►ເອກະສານອ້າງອີງ ເພີ່ມເຕີມ:


- FAO ແລະ IFAD. 2019. ທົດສະວັດການຜະລິດກະສິກຳແບບຄອບຄົວ, ອົງການ ສປຊ 2019-2028. ແຜນດຳເນີນງານສາກົນ. ນະຄອນໂຣມ.

## ບົດແນະນຳ 2.2 ສ້າງເງື່ອນໄຂທີ່ເອື້ອອຳນວຍ ເພື່ອສະໜັບສະໜູນຊ່ວຍເຫຼືອຊາວກະສິກອນ ໃນການຂ້າມຜ່ານ

- ✓ ຮັບຮູ້ດີຍິ່ງຂຶ້ນ ແລະ ນຳໃຊ້ ທ່າແຮງຂອງການປູກພືດປະສົມ ແລະ ການກະຈາຍການຜະລິດກະ ສິກຳ ໃຫ້ຫຼາກຫຼາຍ ກໍຄື ການກະຈາຍເສດຖະກິດ ແລະ ການຫາລ້ຽງຊີບ ຢູ່ເຂດຊົນນະບົດ ໃຫ້ມີຄວາມຫຼາກຫຼາຍ (ລະອຽດໃຫ້ເບິ່ງ ບົດແນະນຳ 3 ກ່ຽວກັບ ການເພີ່ມມູນຄ່າທ້ອງຖິ່ນ)
- ✓ ປະກອບສ່ວນ ສ້າງແວດລ້ອມທາງດ້ານຕະຫຼາດ ທີ່ເອື້ອອຳນວຍ ສຳລັບ ຊາວກະສິກອນ:
  - ○ ປັບປຸງຄວາມສາມາດໃນການເຂົ້າເຖິງ ຂອງຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ຊຶ່ງລວມທັງແມ່ຍິງ ແລະ ຊາວໜຸ່ມ ເພື່ອໃຫ້ສາມາດເຂົ້າເຖິງລະບົບຂໍ້ມູນຂ່າວສານຕະຫຼາດ ບວກກັບຂໍ້ມູນຂ່າວສານຍຸດທະສາດ ກ່ຽວກັບ ເງິນອຸດໜູນ ແລະ ນິຕິກຳທີ່ມີຢູ່.
  - ○ ສະໜັບສະໜູນໂດຍກົງຕໍ່ຄວາມຕ້ອງການຜະລິດຕະພັນກະສິກຳແບບຍືນຍົງຂອງຕະຫຼາດພາຍໃນ ໂດຍການປັບປຸງ ຫຼື ປະຕິຮູບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ (ລະອຽດໃຫ້ເບິ່ງ ບົດແນະນຳ 3).
- ✓ ຈັດສັນຕາໜ່າງຄວາມປອດໄພ ຫຼື ການປົກປ້ອງແບບສະເພາະ ພາຍໃນລະບົບປົກປ້ອງສັງຄົມ ແລະ ປະກັນໄພ ສຳລັບ ຊາວກະສິກອນ ທີ່ທົດລອງຈັດຕັ້ງປະຕິບັດ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:

- ການເປັນຄູ່ຮ່ວມງານ ກັບ ບໍລິສັດເອກະຊົນ ໂດຍນຳໃຊ້ປະໂຫຍດຈາກທ່າແຮງຂອງວິທີການດຳເນີນງານ ທີ່ມີຄ່າໃຊ້ຈ່າຍຕ່ຳ ແລະ ເຕັກໂນໂລຊີບໍ່ສູງ ແຕ່ມີລະດັບການເຂົ້າເຖິງສູງ (ຕ.ຢ: ຂໍ້ຄວາມສັ້ນ ຫຼື SMS) ເພື່ອແຈ້ງເຕືອນ ກ່ຽວກັບ ສະພາບອາກາດ, ພະຍາດພືດ ແລະ ຄວາມສ່ຽງຊຶມເຊື້ອ ຕະຫຼອດເຖິງນິຕິກຳຕ່າງໆ ທາງດ້ານກະສິກຳ.
- ສະໜັບສະໜູນ ບັນດາກົນໄກທີ່ມີຄ່າໃຊ້ຈ່າຍບໍ່ແພງ ເພື່ອຊ່ວຍໃຫ້ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ສາມາດເຂົ້າເຖິງຂໍ້ມູນຂ່າວສານຕະຫຼາດ ແລະ ຂໍ້ມູນລາຄາ ໄດ້ຢ່າງທ່ວງທັນເວລາ ແລະ ໂປ່ງໃສ ຜ່ານ ICT, ແລະ ລະບົບຂໍ້ມູນຂ່າວສານຕະຫຼາດທີ່ດັດປັບໃຫ້ເໝາະສົມ ສຳລັບ ຊາວກະສິກອນ ເພື່ອຊ່ວຍໃຫ້ເຂົາເຈົ້າ ມີຂໍ້ມູນຂ່າວສານຄົບຖ້ວນ ຊ່ວຍໃນການຕັດສິນໃຈວ່າ ຕ້ອງຜະລິດ ແລະ ຂາຍຫຍັງ, ເວລາໃດ ແລະ ຢູ່ໃສ.
- ທົບທວນ ລະບົບປະກັນໄພ ແລະ ມາດຕະການຈຳກັດຄວາມສ່ຽງທາງດ້ານສັງຄົມ ບົນພື້ນຖານການປະເມີນສະພາບຄວາມສ່ຽງຕົວຈິງ ຂອງ ຊາວກະສິກອນໃນໄລຍະການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.

## ບົດແນະນຳ 2.3 ສົ່ງເສີມແວດລ້ອມທາງດ້ານການຈັດຕັ້ງ ແລະ ກົດໝາຍ ທີ່ປອດໄພ

- ✓ ຈັດສັນມາດຕະການຕ່າງໆ ເພື່ອເຄົາລົບບັນດາບົດບັນຍັດຕ່າງໆ ພາຍໃນ **ຖະແຫຼງການ ສປຊ ວ່າດ້ວຍສິດທິຂອງຊາວກະສິກອນ ແລະ ຜູ້ອື່ນໆທີ່ເຮັດວຽກໃນຂົງເຂດຊົນນະບົດ (UNDROP),** ຕາມທີ່ເຫັນວ່າເໝາະສົມ.
- ✓ ຈັດສັນນະໂຍບາຍລັດ ແລະ ລະບຽບກົດໝາຍ ເພື່ອສະໜັບສະໜູນຊ່ວຍເຫຼືອຊາວກະສິກອນ ໃນການອະນຸລັກ, ນຳໃຊ້ແບບຍືນຍົງ, ແລກປ່ຽນ ແລະ ຄຸ້ມຄອງ ຊີວະນາໆພັນກະສິກຳ ຢ່າງຫ້າວຫັນ.
- ✓ ສົ່ງເສີມ ແລະ ພິຈາລະນານຳໃຊ້ຄູ່ມື **ວິທີການດຳເນີນງານບົນພື້ນຖານສິດທິມະນຸດ ໃນດ້ານທີ່ພົວພັນກັບຂໍ້ມູນ** ຂອງ ສຳນັກງານ ຄະນະກຳມາທິການສິດທິມະນຸດ ສປຊ (UNHCR) ກ່ຽວແກ່ກັບ ການຄຸ້ມຄອງຂໍ້ມູນຂອງຊາວກະສິກອນ ຕາມທີ່ເຫັນວ່າເໝາະສົມ

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:

- ສະໜັບສະໜູນການປູກຈິດສຳນຶກໃຫ້ອົງການຈັດຕັ້ງລັດ ແລະ ຜູ້ຖືສິດໃຫ້ຮັບຮູ້ ກ່ຽວກັບ ຫຼັກການ ແລະ ການນຳໃຊ້ **UNDROP** ເພື່ອຮັບປະກັນວ່າ ໄດ້ຮັບຮູ້ ແລະ ເຄົາລົບສິດທິຕໍ່ຊັບພະ ຍາກອນທຳມະຊາດ ແລະ ວິທີການຜະລິດ.

- ຮັບຮູ້ບົດບາດ ແລະ ສິດທິຂອງຊາວກະສິກອນໃນການອະນຸລັກ ແລະ ການພັດທະນາ ຊັບພະຍາກອນກຳມະພັນພືດ (ເມັດພັນພື້ນປະຈຳຖິ່ນ, ແນວພັນພື້ນເມືອງ, ຊະນິດພັນຕ່າງໆ ທີ່ຖືກປ່ອຍປະລະເລີຍ ແລະ ທີ່ບໍ່ຖືກນຳໃຊ້ກວ້າງຂວາງ).
- ສ້າງຄວາມເຂັ້ມແຂງໃຫ້ບັນດານິຕິກຳທີ່ມີ ກ່ຽວກັບ ການຄວບຄຸມຂໍ້ມູນຂອງຊາວກະສິກອນ ໂດຍຊາວກະສິກອນເອງ ຊຶ່ງລວມເອົາ ວິທີນຳໃຊ້, ປຸງແຕ່ງ, ແລະ ຮັກສາຄວາມປອດໄພໃຫ້ຂໍ້ມູນຜ່ານຈຸດຫັນປ່ຽນສຳຄັນຕ່າງໆເຊັ່ນ: ການສຶກສາໃຫ້ຄວາມຮູ້ ແລະ ການສ້າງນິຕິກຳຄຸ້ມຄອງຕາມທີ່ເຫັນວ່າ ເໝາະສົມ. ຮັບປະກັນຄວາມຮັບຜິດຊອບຕໍ່ຄວາມເປັນສ່ວນຕົວຂອງຂໍ້ມູນ ໂດຍການກຳນົດມາດຕະການລົງໂທດທີ່ເໝາະສົມ.
- ໃຫ້ອ້າງອີງໃສ່ເອກະສານ ຄຳແນະນຳຕາມຄວາມສະໝັກໃຈ ໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຢ່າງມີຄວາມຮັບ ຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ພາຍໃຕ້ສະພາບເງື່ອນໄຂການຄ້ຳປະກັນສະບຽງ ອາຫານໃນລະດັບຊາດ (VGGT).

►ເອກະສານອ້າງອີງ ເພີ່ມເຕີມ:

- ຖະແຫຼງການ ສປຊ ວ່າດ້ວຍ ສິດທິຂອງຊາວກະສິກອນ ແລະ ຜູ້ອື່ນໆທີ່ເຮັດວຽກໃນຂົງເຂດຊົນນະບົດ: ຍັດຕິ/ 2018
- ສິດທິຂອງຊາວກະສິກອນພາຍໃຕ້ ສົນທິສັນຍາສາກົນ ວ່າດ້ວຍ ຊັບພະຍາກອນກຳມະພັນພືດ ສຳລັບ ອາຫານ ແລະ ການກະເສດ
- FAO. 2022. ຄຳແນະນຳຕາມຄວາມສະໝັກໃຈ ໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຢ່າງມີຄວາມຮັບຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ພາຍໃຕ້ ສະພາບເງື່ອນໄຂການຄ້ຳປະກັນສະບຽງອາຫານ ໃນລະດັບຊາດ

## ບົດແນະນຳ 2.4 ນຳໃຊ້ ທ່າແຮງ ເຕັກໂນໂລຊີດິຈິຕ້ອນ ແລະ ລະບົບຄຸ້ມຄອງຄວາມຮູ້/ຂໍ້ມູນ

✓ ນຳໃຊ້ປະໂຫຍດຈາກທ່າແຮງ ເຕັກໂນໂລຊີດິຈິຕ້ອນ ເພື່ອຫຼຸດຜ່ອນຊ່ອງຫວ່າງດ້ານຂໍ້ມູນຂ່າວສານ ກ່ຽວກັບ ຕະຫຼາດ ແລະ ລາຄາ, ຊ່ວຍເຊື່ອມຈອດຊາວກະສິກອນ ກັບ ຜູ້ບໍລິໂພກ, ສະໜອງຂໍ້ມູນກ່ຽວກັບແບບແຜນການຜະລິດທີ່ເປັນນະວັດຕະກຳ ຈາກຊາວກະສິກອນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ຢູ່ຂັ້ນຮາກຖານ, ເສີມຂະຫຍາຍ ການປະສົມປະສານແບບແຜນການຜະລິດ ແລະ ການແລກປ່ຽນພູມປັນຍາ-ຄວາມຮູ້ຕາມສາຍຂວາງ.

✓ ເສີມສ້າງຄວາມເຂັ້ມແຂງໃຫ້ເອທີສິ່ງເສີມນະວັດຕະກຳ, ພ້ອມທັງສິ່ງເສີມເຕັກໂນໂລຊີດິຈິຕ້ອນ ແລະ ໂປຣແກມຕ່າງໆ ທີ່ອຳນວຍຄວາມສະດວກ ໃຫ້ການສ້າງເຄືອຂ່າຍກວ້າງຂວາງ ໃນກຸ່ມຊາວກະສິກອນ ແລະ ການເຂົ້າມີສ່ວນຮ່ວມຫຼາຍຂຶ້ນຂອງເຂົາເຈົ້າ ໃນສາຍພົວພັນການເຮັດວຽກ ຮ່ວມກັບ ບັນດາພາກສ່ວນກ່ຽວຂ້ອງຕ່າງໆ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:

- ສ້າງຄວາມເຂັ້ມແຂງໃຫ້ວຽກງານການຫັນເປັນດິຈິຕ້ອນ ແລະ ການສ້າງເວັບສູນລວມຂໍ້ມູນອອນລາຍທີ່ເປັນລະບົບບໍ່ເສຍຄ່າຊື້ພາສາຂຽນໂປຣແກມ (open-source online platform) ເພື່ອສະໜັບສະໜູນການບັນທຶກ, ທ້ອນໂຮມ ແລະ ແລກປ່ຽນແບ່ງປັນນະວັດຕະກຳ ແລະ ພູມປັນຍາຄວາມຮູ້ທ້ອງຖິ່ນ.
- ນຳໃຊ້ປະໂຫຍດຈາກເຕັກໂນໂລຊີດິຈິຕ້ອນ ເພື່ອເກັບກຳ, ບັນທຶກຮັກສາ ແລະ ແລກປ່ຽນແບ່ງປັນພູມປັນຍາຄວາມຮູ້ດັ້ງເດີມທີ່ສືບທອດກັນມາແຕ່ບັນພະບູຣຸດ ພາຍໃນວົງສາຄະນະຍາດຊາວກະສິກອນ (ປະສົມປະສານຄວາມຮູ້ທ້ອງຖິ່ນ ແລະ ຄວາມຮູ້ພື້ນເມືອງ ເຂົ້າກັບເຕັກໂນໂລຊີດິຈິຕ້ອນ ຂອງ ຄົນຮຸ່ນເກີດໃໝ່ໄຫຍ່ລຸນ ທີ່ເກັ່ງເລື່ອງເຕັກໂນໂລຊີ).
- ສະໜັບສະໜູນ ເວັບໄຊ໋ຂໍ້ມູນສະຫະກອນ ທີ່ປະຕິບັດຕາມ ສິດທິຂອງຊາວກະສິກອນ ທີ່ມີຕໍ່ຂໍ້ມູນຂອງເຂົາເຈົ້າ ແລະ ອຳນວຍຄວາມສະດວກ ໃຫ້ການຄຸ້ມຄອງຂໍ້ມູນການຜະລິດກະສິກຳ ລະຫວ່າງ ຜູ້ສະໜອງເຕັກໂນໂລຊີ, ນັກຄົ້ນຄວ້າວິໄຈ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ໃນລັກສະນະປະສານສົມທົບກັນ ກັບຊາວກະສິກອນ (ລະອຽດໃຫ້ເບິ່ງ ບົດແນະນຳ 4).

►ເອກະສານອ້າງອີງເພີ່ມເຕີມ:

- ເຮັດໃຫ້ຜັງຂໍ້ມູນດິຈິຕ້ອນໃນອາຊີ ເຕີບໃຫຍ່ຂະຫຍາຍຕົວ: ເຕັກໂນໂລຊີດິຈິຕ້ອນ ສໍາລັບ ຕ່ອງໂສ້ມູນຄ່າ ຂອງ ຊາວກະສິກອນຜູ້ຜະລິດຂະໜາດນ້ອຍໃນອາຊຽນ



# 3. ການສົ່ງເສີມ ການຂ້າມຜ່ານທົ່ວຕ່ອງໂສ້ມູນຄ່າການຜະລິດກະສິກຳເປັນສະບຽງອາຫານ

*"ການເສີມສ້າງຄວາມເຂັ້ມແຂງ ໃຫ້ຊາວກະສິກອນ ມີຄວາມໝາຍວ່າ ເຂົາເຈົ້າ ມີຄວາມເຂັ້ມແຂງໃນຕະຫຼາດຊື້-ຂາຍສິນຄ້າ."*

*"ພວກເຮົາຕ້ອງສາມາດສ້າງການເຄື່ອນໄຫວ ທີ່ບໍ່ເປັນພຽງແຕ່ເປັນ ການສ້າງຄວາມສາມັກຄີ, ແຕ່ລວມເຖິງການສ້າງຄວາມເຂົ້າໃຈ ກ່ຽວກັບ ຄວາມຕ້ອງການ ຂອງກຸ່ມຜູ້ບໍລິໂພກຕ່າງໆ ເຊິ່ງລວມທັງ ກຸ່ມຄົນຈາກເຂດຊົນນະບົດດ້ອຍໂອກາດ."*

– *ຄັດຈາກ ບົດສຳພາດ ຜູ້ສ້າງນະໂຍບາຍ*

ການສະໜັບສະໜູນການພັດທະນາຕະຫຼາດພາຍໃນ ແລະ ຕ້ອງໂສ້ມູນຄ່າທີ່ສັ້ນ ສໍາລັບ ຜະລິດຕະພັນ ແລະ ປັດໄຈການຜະລິດແບບນິເວດກະສິກໍາ, ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ສໍາລັບ ຕະຫຼາດທີ່ກວມລວມທົ່ວເຖິງທຸກຄົນ, ແລະ ການດັດປັບລະບຽບການຕ່າງໆຂອງລັດທີ່ມີ ກ່ຽວກັບ ຄວາມປອດໄພ ແລະ ມາດຕະຖານຄຸນນະພາບ ຂອງ ສະບຽງອາຫານ ແມ່ນສິ່ງຈໍາເປັນ ເພື່ອໄຈ້ແຍກໃຫ້ເຫັນ ຄວາມແຕກຕ່າງ ລະຫວ່າງ ຜະລິດຕະພັນທີ່ຜ່ານການຜະລິດແບບນິເວດກະສິກາ ແລະ ຜະລິດຕະພັນອື່ນໆ ແລະ ສ້າງຄວາມເຂັ້ມແຂງທາງເສດຖະກິດ ໃຫ້ກັບຜູ້ບໍລິໂພກ ແລະ ຊາວກະສິກອນ. ບົດນີ້ ໃຫ້ທິດນໍາເພີ່ມເຕີມ ກ່ຽວກັບ ນະໂຍບາຍທີ່ເອົາຜູ້ບໍລິໂພກເປັນໃຈກາງ ແລະ ເຄື່ອງມືຕ່າງໆທາງດ້ານການຄ້າ.

ມີ ຫົກ **ບົດແນະນໍາ** ເພື່ອຊ່ວຍສະໜັບສະໜູນ ການຂ້າມຜ່ານ ທົ່ວຕ່ອງໂສ້ມູນຄ່າການຜະລິດກະສິກໍາເປັນສະບຽງອາຫານ, ລະອຽດມີຄືດັ່ງນີ້:

- ບົດແນະນໍາ 3.1 ສະໜັບສະໜູນ ການພັດທະນາຕະຫຼາດພາຍໃນ ແລະ ຕ່ອງໂສ້ມູນຄ່າທີ່ສັ້ນ ສໍາລັບ ຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກໍາ
- ບົດແນະນໍາ 3.2 ສ້າງແວດລ້ອມທີ່ເອື້ອອໍານວຍ ສໍາລັບ ການຫັນປ່ຽນ ຕ່ອງໂສ້ມູນຄ່າພາຍໃນໃຫ້ກວມລວມທົ່ວເຖິງທຸກຄົນ
- ບົດແນະນໍາ 3.3 ດັດປັບລະບຽບການຕ່າງໆຂອງລັດທີ່ມີ ກ່ຽວກັບ ຄວາມປອດໄພຂອງອາຫານ, ມາດຕະຖານຄຸນນະພາບ ແລະ ການອອກໃບຢັ້ງຢືນ ເພື່ອສະໜັບສະໜູນການເຮັດໃຫ້ຜະລິດຕະພັນທີ່ຜ່ານການຜະລິດແບບນິເວດກະສິກໍາ ມີຄວາມແຕກຕ່າງ ແລະ ໃຫ້ທາງເລືອກແກ່ຜູ້ບໍລິໂພກ
- ບົດແນະນໍາ 3.4 ນະໂຍບາຍເອົາຜູ້ບໍລິໂພກເປັນໃຈກາງ: ມາດຕະການໃສ່ໃຈດ້ານສຸຂະພາບ, ແລະ ໂພຊະນາການ
- ບົດແນະນໍາ 3.5 ສະໜັບສະໜູນ ການພັດທະນາຕ່ອງໂສ້ມູນຄ່າທ້ອງຖິ່ນ ສໍາລັບ ປັດໄຈການຜະລິດ (ເມັດພັນ, ສານອາຫານປອດສານພິດ), ວັດຖຸອຸປະກອນ ແລະ ເຄື່ອງກົນຈັກ
- ບົດແນະນໍາ 3.6 ປະຕິຮູບ ເຄື່ອງມືທາງດ້ານການຄ້າ, ນະໂຍບາຍດ້ານການອຸດໜູນລາຄາ ແລະ ແຫຼ່ງການຈັດຊື້

## ບົດແນະນໍາ 3.1 ສະໜັບສະໜູນ ການພັດທະນາຕະຫຼາດພາຍໃນ ແລະ ຕ່ອງໂສ້ມູນຄ່າທີ່ສັ້ນ ສໍາລັບ ຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກໍາ

- ✓ ສະໜັບສະໜູນ ການພັດທະນາຕະຫຼາດ ໃຫ້ມີຄວາມຫຼາກຫຼາຍ ເພື່ອເສີມຂະຫຍາຍ ການເຂົ້າເຖິງ ຊ່ອງທາງຈໍາໜ່າຍທີ່ຫຼາກຫຼາກ ສໍາລັບ ຊາວກະສິກອນ ທີ່ເຮັດການຜະລິດແບບນິເວດກະສິກໍາ ແລະ ເພີ່ມການເຂົ້າເຖິງ ທາງເລືອກສະບຽງອາຫານທີ່ຫຼາກຫຼາຍ ສໍາລັບ ຜູ້ບໍລິໂພກ.
- ✓ ສະໜັບສະໜູນ ລະບົບການຈັດຊື້ດ້ວຍທຶນຂອງລັດ ໃຫ້ຈັດຊື້ ຈາກ ແຫຼ່ງການຜະລິດແບບນິເວດກະສິກໍາຢູ່ຂັ້ນທ້ອງຖິ່ນ.
- ✓ ສະໜັບສະໜູນ ລະບົບການຕະຫຼາດທີ່ນໍາພາໂດຍຜູ້ບໍລິໂພກ ເຊັ່ນ: **ການຜະລິດກະສິກໍາ ທີ່ໄດ້ຮັບການສະໜັບສະໜູນຈາກຊຸມຊົນ (CSA)** (ເບິ່ງ ເອກະສານຊ້ອນທ້າຍ L).

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ຊາດສະມາຊິກອາຊຽນ (AMS) ອາດຈະພິຈາລະນາ:

- ສະໜອງສະຖານທີ່ ເຮັດເປັນຕະຫຼາດຊາວກະສິກອນ, ຈັດຕະຫຼາດນັດ ແລະ ງານເທດສະການຕ່າງໆ ເພື່ອໃຫ້ຊາວກະສິກອນທ້ອງຖິ່ນ ທີ່ເຮັດການຜະລິດກະສິກໍາແບບຍືນຍົງ ໃນຮູບການຕ່າງໆ ເຂົ້າຮ່ວມວາງຈໍາໜ່າຍຜະລິດຕະພັນ ຂອງເຂົາເຈົ້າ.
- ໃຫ້ນະໂຍບາຍສົ່ງເສີມ ຂະແໜງການທ້ອງຖິ່ນ (ເຊັ່ນ: ສະຖານທີ່ບໍລິການສາທາລະນະສຸກ, ໂຮງຮຽນ) ໃຫ້ພາກັນຊື້ ສະບຽງອາຫານທີ່ຜ່ານການຜະລິດແບບນິເສດກະສິກໍາ ພາຍໃນທ້ອງຖິ່ນ (ລະອຽດໃຫ້ເບິ່ງ ເອກະສານກ່ຽວຂ້ອງ ຂອງ ອົງການ FAO ແລະ ບົດຄົ້ນຄວ້າ ກ່ຽວກັບ ການຈັດຊື້ສະບຽງອາຫານດ້ວຍທຶນຂອງລັດ ເພື່ອລະບົບການຜະລິດສະບຽງອາຫານ ແບບຍືນຍົງ ແລະ ການມີອາຫານການກິນ ທີ່ດີຕໍ່ສຸຂະພາບ)
- ບົນພື້ນຖານຫຼາກຫຼາຍປະສົບການ ທີ່ໜັກແໜ້ນ, ການປັບປຸງ ບົດບັນຍັດ ແລະ ລະບຽບການຕ່າງໆ ກ່ຽວກັບ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສາມາດຊຸກຍູ້ການຂະຫຍາຍການຜະລິດແບບນິເວດກະສິກໍາໄດ້.

- ສ້າງພື້ນທີ່ສະເພາະ ເພື່ອຈໍາໜ່າຍຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກໍາ ຢູ່ຕາມຕະຫຼາດຕ່າງໆ.

**►ເອກະສານອ້າງອີງເພີ່ມເຕີມ:**

- ການກໍ່ສ້າງຕະຫຼາດ ສໍາລັບ ການຜະລິດແບບນິເວດກະສິກໍາ - ການວິເຄາະ ບັນດາທາງເລືອກທີ່ຫຼາກຫຼາຍ ເພື່ອເຮັດການຕະຫຼາດ ຈໍາໜ່າຍ ຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກໍາ ຫຼື (Constructing markets for agroecology – An analysis of diverse options for marketing products from agroecology)
- ການຈັດຊື້ສະບຽງອາຫານ ດ້ວຍທຶນ ຂອງ ລັດ ເພື່ອ ລະບົບການຜະລິດສະບຽງອາຫານແບບຍືນຍົງ ແລະ ການມີ ອາຫານທີ່ດີຕໍ່ສຸຂະພາບ - ເຫຼັ້ມທີ.1 ຫຼື (Public food procurement for sustainable food systems and healthy diets – Vol. 1)
- ການຈັດຊື້ສະບຽງອາຫານ ດ້ວຍທຶນ ຂອງ ລັດ ເພື່ອລະບົບການຜະລິດສະບຽງອາຫານແບບຍືນຍົງ ແລະ ການມີ ອາຫານທີ່ດີຕໍ່ສຸຂະພາບ - ເຫຼັ້ມທີ .2 ຫຼື (Public food procurement for sustainable food systems and healthy diets – Vol. 2)
- ປື້ມແນະນໍາ CSA ຊາວກະສິກອນ ສູ່ ຊາວກະສິກອນ ຫຼື (The CSA Farmer to Farmer Booklet (Urgenci))

## ບົດແນະນໍາ 3.2 ສ້າງແວດລ້ອມທີ່ເອື້ອອໍານວຍ ສໍາລັບ ການຫັນປ່ຽນ ຕ້ອງໂສ້ມູນຄ່າພາຍໃນ ໃຫ້ກວມລວມທົ່ວເຖິງທຸກຄົນ

✓ ລົງທຶນໃສ່ເຕັກໂນໂລຊີ ດີຈິຕອນ ແລະ ສະໜັບສະໜູນ ຕົວແບບທຸລະກິດ ການຄ້າເອເລັກໂຕຣນິກທີ່ຫຼາກຫຼາຍ ສໍາລັບເຮັດການຕະຫຼາດ ເພື່ອຈໍາໜ່າຍຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກໍາ ພາຍໃນປະເທດ.

✓ ລົງທຶນ ໃສ່ ຂະແໜງຂົນສົ່ງ (ທາງບົກ, ທາງລົດໄຟ, ທາງອາກາດ, ແລະ ທາງນໍ້າ) ເພື່ອປັບປຸງ ການເຊື່ອມຈອດ ໃຫ້ຊາວກະສິກອນ ຜູ້ຜະລິດແບບນິເວດກະສິກໍາ ຂະໜາດນ້ອຍ (ລະອຽດໃຫ້ເບິ່ງ ບົດແນະນໍາ 1).

✓ ສ້າງຄວາມເຂັ້ມແຂງ ໃຫ້ ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ແລະ ອົງການຈັດຕັ້ງ ຂອງເຂົາເຈົ້າ ພາຍໃນ ຕ່ອງໂສ້ມູນຄ່າ (ລະອຽດໃຫ້ເບິ່ງ ບົດແນະນໍາ 4).

✓ ສ້າງຄວາມເຂັ້ມແຂງ ໃຫ້ການສະໜັບສະໜູນຊ່ວຍເຫຼືອ ສະຫະກອນການຕະຫຼາດ ໂດຍຜ່ານການພັດທະນາຂີດຄວາມສາມາດ, ການລົງທຶນຊື້ອຸປະກອນລວມໝູ່, ແລະ ສະໜັບສະໜູນບັນດາອົງການຈັດຕັ້ງຂອງ ຊາວກະສິກອນ ເພື່ອໃຫ້ສາມາດເສີມຂະຫຍາຍ ອໍານາດຕໍ່ລອງ ຂອງ ຊາວກະສິກອນ ຢູ່ຕະຫຼາດຈໍາໜ່າຍສະບຽງອາຫານໄດ້.

✓ ໃຫ້ນະໂຍບາຍສົ່ງເສີມ ຜູ້ຂາຍຍ່ອຍ ຂະໜາດໃຫຍ່ ເພື່ອຈັດຊື້ ຜະລິດຕະພັນອາຫານທີ່ຫຼາກຫຼາຍ ຈາກຊາວກະສິກອນ ທີ່ເຮັດການຜະລິດແບບນິເວດກະສິກໍາ ພາຍໃນ ທ້ອງຖິ່ນ.

✓ ຊ່ວຍເຫຼືອ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂະບວນການປຸງແຕ່ງ ແລະ ຊ່ວຍເຫຼືອ ຜູ້ປະກອບການທຸລະກິດທ່ອງທ່ຽວ ໃນການເພີ່ມມູນຄ່າ ໃຫ້ຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກໍາ, ແລະ ສົ່ງເສີມ ການທ່ອງທ່ຽວກະສິກໍາ ແລະ ການທ່ອງທ່ຽວວັດທະນະທໍາອາຫານທ້ອງຖິ່ນ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ນໍາໃຊ້ ICT ແລະ ສື່ສັງຄົມອອນລາຍ ເພື່ອ ສ້າງຄວາມເຂັ້ມແຂງໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs), ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ, ແລະ ອົງການຈັດຕັ້ງ ຂອງ ເຂົາເຈົ້າ ເພື່ອໃຫ້ສາມາດເຮັດໜ້າທີ່ເປັນ ຜູ້ເຊື່ອມຈອດ ແລະ ຕົວກາງດ້ານຂໍ້ມູນຂ່າວສານ ໃນການພັດທະນາຕະຫຼາດທ້ອງຖິ່ນ ຮອງຮັບຜະລິດຕະພັນ ທີ່ຜ່ານການຜະລິດແບບນິເວດກະສິກໍາ.
- ສະໜັບສະໜູນ ການສ້າງ ແອັບພລິເຄຊັນ ແລະ ເວັບໄຊ ເພື່ອຂາຍຜະລິດຕະພັນໂດຍກົງ ແລະ ພັດທະນາ ການຜະລິດກະສິກໍາ ທີ່ໄດ້ຮັບການສະໜັບສະໜູນ ຈາກ ຊຸມຊົນ ໃຫ້ມີປະສິດທິພາບຍິ່ງຂຶ້ນ (ເບິ່ງຕົວຢ່າງ ເຄືອຂ່າຍອາຫານແບບເປີດກວ້າງ (Open Food Network)).
- ສະໜັບສະໜູນ ວິສາຫະກິດຂາຍສົ່ງ ແລະ ເວັບໄຊຂາຍທາງເອເລັກໂຕຣນິກ ທີ່ສັງລວມເອົາຜົນຜະລິດ ຂອງ ຊາວກະສິກອນ ທີ່ເຮັດການຜະລິດແບບນິເວດກະສິກໍາ ເພື່ອສະໜອງ ຕະຫຼາດໃນຕົວເມືອງ ໂດຍມີກິດຈະກໍາເພີ່ມມູນຄ່າ ແລະ ຍຸດທະສາດການຕະຫຼາດ.

►ເອກະສານອ້າງອີງເພີ່ມເຕີມ:

- ປຶ້ມຄູ່ມື ນະວັດຕະກອນ: ລະບົບການຜະລິດສະບຽງອາຫານ ແບບຍືນຍົງ ທີ່ເອື້ອອຳນວຍ (Innovator's Handbook: Enabling Sustainable Food Systems)
- ເຄືອຂ່າຍອາຫານແບບເປີດກວ້າງ (Open Food Network)

## ບົດແນະນຳ 3.3 ດັດປັບ ລະບຽບການຕ່າງໆ ຂອງ ລັດ ທີ່ມີກ່ຽວກັບ ຄວາມປອດໄພ ຂອງ ອາຫານ, ມາດຕະຖານຄຸນນະພາບ, ແລະ ການອອກໃບຢັ້ງຢືນ ເພື່ອສະໜັບສະໜູນ ເຮັດໃຫ້ ຜະລິດຕະພັນທີ່ຜ່ານການຜະລິດແບບນິເວດກະສິກຳ ມີຄວາມແຕກຕ່າງ ແລະ ໃຫ້ທາງ ເລືອກ ໃຫ້ ຜູ້ບໍລິໂພກ

✓ ເຮັດໃຫ້ ລະບຽບການ ກ່ຽວກັບ ຄວາມປອດໄພ ຂອງ ອາຫານ ແລະ ການຄ້າ ສອດຄ່ອງຕາມ ສະພາບ ເງື່ອນໄຂ ແລະ ຜົນຜະລິດ ຂອງ ຜູ້ປະກອບການຜະລິດແບບນິເວດກະສິກຳ ເຊິ່ງລວມທັງ ຊາວ ກະສິກອນ.

✓ ສ້າງມາດຕະຖານຄຸນນະພາບ, ແລະ ລະບົບການອອກໃບຢັ້ງຢືນ ໂດຍຮັບປະກັນວ່າ ສອດຄ່ອງກັບ ລະບົບການຜະລິດແບບນິເວດກະສິກຳ ແລະ ຕ່ອງໂສ້ມູນຄ່າກ່ຽວຂ້ອງ.

✓ ປັບປຸງເຄື່ອງມືຮັບປະກັນຄຸນນະພາບ (ມາດຕະຖານ, ການອອກໃບຢັ້ງຢືນ, ການຄວບຄຸມພາຍໃນ, ຄວາມສາມາດຕິດຕາມໄດ້) ແລະ ສະຫຼາກ ເພື່ອເຂົ້າເຖິງ ຕະຫຼາດເປົ້າໝາຍ (ພາຍໃນ ກັບ ຕ່າງປະເທດ) ແລະ ຕອບສະໜອງໃຫ້ໄດ້ຕາມ ຄວາມຕ້ອງການ ແລະ ຄວາມສາມາດ ຂອງຜູ້ມີສ່ວນຮ່ວມ.

✓ ສົ່ງເສີມ ກົນໄກຄວາມໂປ່ງໃສ ແລະ ລະບົບຕິດຕາມຕະຫຼອດ ຕ່ອງໂສ້ມູນຄ່າ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ປັບປຸງ ຫຼື ສ້າງມາດຕະຖານຄຸນນະພາບ, ການຕິດສະຫຼາກ, ແລະ ນິຕິກຳ ກ່ຽວກັບ ອາຫານ (ລະອຽດໃຫ້ເບິ່ງ ບົດແນະນຳ 6) ຜ່ານຂະບວນການ ແບບມີສ່ວນຮ່ວມ, ກວມລວມທີ່ວເຖິງທຸກ ຄົນ ແລະ ໜັກແໜ້ນທາງດ້ານວິທະຍາສາດ ໂດຍສຸມໃສ່ສ່ວນປະກອບ, ແຫຼ່ງການຈັດຊື້, ແລະ ຮູບການຜະລິດກະສິກຳ ແລະ ຮັບປະກັນຄວາມສອດຄ່ອງ ກັບ ມາດຕະຖານ ທາງດ້ານສິ່ງແວດລ້ອມ, ໂພຊະນາການ, ສຸຂະພາບ ແລະ ຄວາມສະເໝີພາບທາງສັງຄົມ ທີ່ວຕ່ອງໂສ້ມູນຄ່າ.
- ການປະສານງານ ຂອງ ຊາວກະສິກອນ ທີ່ເຮັດການຜະລິດແບບນິເວດກະສິກຳ ກັບ ອີງການການຄ້າ ແລະ ອີງການຄວາມປອດໄພ ຂອງອາຫານ ທີ່ເໝາະສົມກັບຂະໜາດ, ຄວາມສາມາດໃນການຜະລິດ ແລະ ຄຸນລັກສະນະພິເສດ ຂອງ ຊາວກະສິກອນເຫຼົ່ານັ້ນ.
- ການຮັບຮູ້ ແລະ ການສະໜັບສະໜູນ **ລະບົບຄ້ຳປະກັນແບບມີສ່ວນຮ່ວມ** ໃນຖານະເປັນວິທີການ ທີ່ຖືກຕ້ອງ ເພື່ອຢັ້ງຢືນ ຜະລິດຕະພັນປອດສານພິດ ແລະ ຜະລິດຕະພັນອື່ນໆ ທີ່ຜ່ານການຜະລິດ ແບບນິເວດກະສິກຳ ສຳລັບ ການສະໜອງ ຕະຫຼາດທ້ອງຖິ່ນ ແລະ ຕະຫຼາດພາຍໃນປະເທດ (ເບິ່ງ ເອກະສານຊ້ອນທ້າຍ M)
- ທັນການທົດສອບມາດຕະຖານ ໃຫ້ເປັນເອກະພາບກັນ ລະຫວ່າງປະເທດຕ່າງໆ ເຊັ່ນ: ນຳໃຊ້ການ ທົດສອບລະດັບພາກພື້ນແທນການທົດສອບໃນລະດັບປະເທດ ເພື່ອຮັບປະກັນຄວາມປອດໄພ ແລະ ກະຈາຍ ເຕັກໂນໂລຊີໃໝ່ໆ ໃຫ້ວ່ອງໄວ.

## ບົດແນະນຳ 3.4 ນະໂຍບາຍເອົາຜູ້ບໍລິໂພກເປັນໃຈກາງ: ມາດຕະການໃສ່ໃຈດ້ານສຸຂະພາບ ແລະ ໂພຊະນາການ.

✓ ປະສານນະໂຍບາຍສົ່ງເສີມ ຜູ້ບໍລິໂພກລາຍບຸກຄົນ ໂດຍກົງ ເພື່ອສົ່ງເສີມ ພຶດຕິກຳທີ່ດີຕໍ່ສຸຂະພາບ ຂອງ ຜູ້ບໍລິໂພກ ແລະ ການຮັບປະທານອາຫານທີ່ຫຼາກຫຼາຍ ໃສ່ກັບ ການຫັນປ່ຽນຕ່ອງໂສ້ມູນຄ່າບົນພື້ນຖານ ການສະໜອງ (ລະອຽດໃຫ້ເບິ່ງ ບົດແນະນຳ 3.1 ແລະ ບົດແນະນຳ 3.2) ເພື່ອ ສ້າງແວດລ້ອມ ທີ່ສາມາດ ປັບປ່ຽນ ຄ່ານິຍົມລວມໝູ່ໃນສັງຄົມ ທີ່ມີກ່ຽວກັບ ການບໍລິໂພກອາຫານ.

✓ ສະໜັບສະໜູນຊ່ວຍເຫຼືອ ຜູ້ບໍລິໂພກ ໃນການເຂົ້າເຖິງຂໍ້ມູນຂ່າວສານ ທີ່ໜ້າເຊື່ອຖື, ຊັດເຈນຈະແຈ້ງ, ໄດ້ ຢ່າງທ່ວງທັນເວລາ ກ່ຽວກັບ ໂພຊະນາການ ແລະ ຄວາມສ່ຽງເກີດພະຍາດ ທີ່ພົວພັນກັບ ທາງເລືອກດ້ານ ອາຫານການກິນ ຂອງເຂົາເຈົ້າ (ລະອຽດໃຫ້ເບິ່ງ ບົດແນະນຳ 3.3).

✓ ສ້າງຄວາມເຂັ້ມແຂງ ໃຫ້ອົງການຈັດຕັ້ງ ຂອງຜູ້ບໍລິໂພກ ແລະ ກຸ່ມໂຄສະນາສົ່ງເສີມສິດທິ ຂອງຜູ້ບໍລິໂພກ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ສົ່ງເສີມກົດໝາຍ ວ່າດ້ວຍ ການຕິດສະຫຼາກ ແລະ ການໂຄສະນາອາຫານ ທີ່ສະໜອງຂໍ້ມູນ ໃຫ້ຜູ້ບໍລິໂພກ ຮັບຮູ້ ກ່ຽວກັບ ສ່ວນປະກອບທາງດ້ານໂພຊະນາການ ຂອງ ຜະລິດຕະພັນອາຫານ.
- ເສີມຂະຫຍາຍ ບັ້ນໂຄສະນາປູກຈິດສຳນຶກ (ລະອຽດໃຫ້ເບິ່ງ ບົດແນະນຳ 4.4).
- ໝູນໃຊ້ ເຄື່ອງມືສື່ສານ ທັງແບບເກົ່າ ແລະ ໃໝ່ ເພື່ອເສີມຂະຫຍາຍ ການໃຫ້ຄວາມຮູ້ ກ່ຽວກັບ ຄວາມປອດໄພ ຂອງ ອາຫານ ຜ່ານ ກິນໄກການຮ່ວມມື ແລະ ສົນທະນາແລກປ່ຽນ ໃນລັກສະນະ ໂປ່ງໃສ ແລະ ມີປະສິດທິຜົນຍິ່ງຂຶ້ນ.
- ສ້າງຄວາມຮູ້ ແລະ ຫຼັກຖານ ທາງວິທະຍາສາດ (ຊຶ່ງກວມເອົາ ຄວາມຮູ້ ແລະ ຫຼັກຖານ ກ່ຽວກັບ ການເນັ້ນໜັກ ສາຍເຊື່ອມໂຍງ ລະຫວ່າງ ຜະລິດຕະພັນອາຫານທີ່ຫຼາກຫຼາຍ ຂອງ ທ້ອງຖິ່ນ, ຊີວະນາໆພັນກະສິກຳ ແລະ ຄວາມຫຼາກຫຼາຍຂອງອາຫານການກິນເພື່ອສຸຂະພາບ).
- ລວມເອົາບັນດາກິດຈະກຳທີ່ເອົາໃຈໃສ່ໂພຊະນາການ (ຕົວຢ່າງ ການຝຶກອົບຮົມ ກ່ຽວກັບ ການກິນອາຫານຢ່າງສົມດຸນ) ເຂົ້າໃນ ແຜນງານປົກປ້ອງທາງສັງຄົມ.

## ບົດແນະນຳ 3.5 ສະໜັບສະໜູນ ການພັດທະນາຕ່ອງໂສ້ມູນຄ່າທ້ອງຖິ່ນ ສຳລັບ ປັດໄຈການຜະລິດ (ເມັດພັນ, ຝຸ່ນອິນຊີ, ຢາຂ້າສັດຕູພືດຊີວະພາບ, ອາຫານສັດປອດສານພິດ), ວັດຖຸອຸປະກອນ ແລະ ເຄື່ອງກົນຈັກ

- ✓ ອຳນວຍຄວາມສະດວກ ໃຫ້ ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ສາມາດເຂົ້າເຖິງ ປັດໄຈການຜະລິດແບບນິເວດກະສິກຳ ຊຶ່ງລວມທັງ ການປະຕິຮູບ ນະໂຍບາຍອຸດໜູນປັດໄຈການຜະລິດ (ລະອຽດໃຫ້ເບິ່ງ ບົດແນະນຳ 3.6)
- ✓ ສະໜັບສະໜູນການສ້າງ ຕ່ອງໂສ້ມູນຄ່າປັດໄຈການຜະລິດແບບປອດສານພິດ ຂຶ້ນພາຍໃນທ້ອງຖິ່ນ ຫຼື ການສ້າງຄວາມເຂັ້ມແຂງໃຫ້ກັບ ຕ່ອງໂສ້ມູນຄ່າປັດໄຈການຜະລິດແບບປອດສານພິດ ພາຍໃນທ້ອງຖິ່ນ (ຝຸ່ນອິນຊີ, ຢາຂ້າສັດຕູພືດຊີວະພາບ, ອາຫານສັດປອດສານພິດ) ທີ່ເພີ່ມມູນຄ່າ ໃຫ້ກັບ ຜະລິດຕະພັນຂັ້ນສອງ ຂອງ ການຜະລິດກະສິກຳ ເຊິ່ງຈະຊ່ວຍຫຼຸດຜ່ອນສິ່ງເສດເຫຼືອທີ່ເປັນອາຫານ ແລະ ປັບປຸງການປະຢັດ ການນຳໃຊ້ຊັບພະຍາກອນ, ລວມທັງ ການສະໜັບສະໜູນ ການປະສົມປະສານ ການປູກ ແລະ ການລ້ຽງ ໃນລະດັບເຂດແຄ້ວນ.
- ✓ ສະໜັບສະໜູນ ການຮັບຮູ້, ການອະນຸລັກ ແລະ ການຜະລິດ ເມັດພັນທ້ອງຖິ່ນ ເພື່ອ ສ້າງຄວາມເຂັ້ມແຂງໃຫ້ການສະໜອງ ແລະ ຕະຫຼາດ ຈຳໜ່າຍເມັດພັນ ທີ່ປັບຕົວເຂົ້າກັບສະພາບເງື່ອນໄຂຂອງ ທ້ອງຖິ່ນ (ລະອຽດໃຫ້ເບິ່ງ ບົດແນະນຳ 2.2).
- ✓ ສົ່ງເສີມກົນໄກ ເສີມຂະຫຍາຍ ໃຫ້ຊາວກະສິກອນ ສາມາດເຂົ້າເຖິງ ອຸປະກອນ ແລະ ເຄື່ອງກົນຈັກ ການຜະລິດກະສິກຳ ທີ່ປອດໄພ ຕໍ່ ສິ່ງແວດລ້ອມ ແລະ ລາຄາບໍ່ແພງ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ປັບປຸງຂີດຄວາມສາມາດ ໃນການເກັບ, ປຸງແຕ່ງ, ແລະ ຂົນສົ່ງ ຜະລິດຕະພັນຂັ້ນສອງ ຂອງ ການຜະລິດ ກະສິກຳ ເຊິ່ງຈະເປັນການເສີມຂະຫຍາຍ ລະບົບການຜະລິດຕ່າງໆ ເຊັ່ນ: ການປະສົມປະສານ ການປູກ ແລະ ການລ້ຽງ ແລະ ການສະໜັບສະໜູນ ການສະໜອງ ປັດໄຈການຜະລິດປອດສານພິດ ພາຍໃນທ້ອງຖິ່ນ (ເຊັ່ນ: ຝຸ່ນຄອກ, ຝຸ່ນໝັກ, ຫຍ້າໝັກ, ອາຫານສັດ) (ລະອຽດໃຫ້ເບິ່ງ ບົດແນະນຳ 6).
- ການສະໜັບສະໜູນທ້ອງຖິ່ນ ໃຫ້ສາມາດເຂົ້າເຖິງ ເຕັກໂນໂລຊີການຜະລິດ ແລະ ປັດໄຈການຜະລິດ (ເມັດພັນພືດອາຫານສັດ, ຈຸລິນຊີທີ່ມີປະສິດທິພາບ) ແລະ ອຸປະກອນຂະໜາດນ້ອຍ (ຖົງ, ເຄື່ອງບົດ, ໄມ້ອັດເມັດ) ທີ່ປັບປຸງ ຄວາມສາມາດດ້ານການຮັກສາຄຸນນະພາບຜົນຜະລິດ ແລະ ການຂົນສົ່ງ , ແລະ ປັບປຸງ ຄຸນນະພາບ ອາຫານສັດ ແລະ ຝຸ່ນອິນຊີ ຕະຫຼອດເຖິງ ເສີມຂະຫຍາຍ ການປະສົມປະສານ ການປູກຝັງ-ການລ້ຽງ ສຳລັບ ການຜະລິດຂະໜາດໃຫຍ່.
- ໃຫ້ເງິນອຸດໜູນ ການສະໜອງ ປັດໄຈການຜະລິດປອດສານພິດ ເພື່ອສະໜັບສະໜູນ ການພັດທະນາ ຕ່ອງໂສ້ມູນຄ່າ ທັງໃນລະດັບທ້ອງຖິ່ນ ແລະ ລະດັບປະເທດ.

- ຮັບປະກັນ ຄ່ານ້ຳ ແລະ ຄ່າພະລັງງານ ໃນລາຄາທີ່ເປັນທຳ ສຳລັບ ທຸກພາກສ່ວນກ່ຽວຂ້ອງ ພາຍໃນຕ່ອງໂສ້ມູນຄ່າ ເຊິ່ງລວມທັງ ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ.
- ການສະໜັບສະໜູນ ອົງການຈັດຕັ້ງ ຂອງ ຊາວກະສິກອນ ໃນການນຳໃຊ້ປະໂຫຍດ ຈາກ ປັດໄຈການຜະລິດທີ່ຈຳເປັນ ເພື່ອຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ເຊິ່ງງລວມເອົາ ປັດໄຈການຜະລິດທາງເລືອກ ເຊັ່ນ: ແນວພັນພືດປັກຄຸມໜ້າດິນ.

## ບົດແນະນຳ 3.6 ປະຕິຮູບ ເຄື່ອງມື ທາງດ້ານ ການຄ້າ, ນະໂຍບາຍການອຸດໜູນລາຄາ ແລະ ແຫຼ່ງການຈັດຊື້

✓ ນຳໃຊ້ວິທີການຕ່າງໆ ເຊັ່ນ: ການລົງບັນຊີຕົ້ນທຶນທີ່ແທ້ຈິງ (ລະອຽດໃຫ້ເບິ່ງ ບົດແນະນຳ 6.1) ເພື່ອໃຫ້ສາມາດປະເມີນ ຜົນກະທົບທາງລົບ ແລະ ທາງບວກ ຈາກລະບົບການຜະລິດກະສິກຳໃນຮູບແບບຕ່າງໆ ແລະ ຕ່ອງໂສ້ມູນຄ່າກ່ຽວຂ້ອງ (ລວມເຖິງ ຕ່ອງໂສ້ມູນຄ່າ ຂອງ ການຜະລິດແບບນິເວດກະສິກຳ) ໄດ້ດີຍິ່ງຂຶ້ນ ແລະ ໃຫ້ສາມາດແຍກໃຫ້ເຫັນຄວາມແຕກຕ່າງ ຂອງຜົນຜະລິດ ແລະ ປັດໄຈການຜະລິດ ຂອງຮູບການຜະລິດກະສິກຳເປັນອາຫານ ແບບນິເວດກະສິກຳ ບົນພື້ນຖານການປະເມີນເຫຼົ່ານັ້ນ.

✓ ປະຕິຮູບລະບົບເກັບສ່ວຍສາອາກອນ ນຳເຂົ້າ-ສົ່ງອອກ, ອຸປະສັກກີດຂວາງ ທີ່ບໍ່ແມ່ນພາສີ ແລະ ນະໂຍບາຍດ້ານລາຄາ ເພື່ອສ່ອງແສງໃຫ້ເຫັນຕົ້ນທຶນ ແລະ ມູນຄ່າທີ່ແທ້ຈິງ ໃນການຄ້າ ແລະ ໃນຕະຫຼາດພາຍໃນປະເທດ ສຳລັບ ປັດໄຈການຜະລິດ ແລະ ຜົນຜະລິດ ແລະ ເພື່ອເສີມຂະຫຍາຍ ຄວາມສາມາດດ້ານການແຂ່ງຂັນທາງການຄ້າ ຂອງ ການຜະລິດກະສິກຳແບບຍືນຍົງ ແລະ ຕ່ອງໂສ້ມູນຄ່າກ່ຽວຂ້ອງ.

✓ ເສີມຂະຫຍາຍ ການປະສານສົມທົບ ລະຫວ່າງ ປະເທດສະມາຊິກອາຊຽນ ເພື່ອຮັບປະກັນຄວາມສອດຄ່ອງ ລະຫວ່າງກັນ ແລະ ກັນ ໃນດ້ານການປະຕິຮູບ ນະໂຍບາຍການຄ້າ ບົນພື້ນຖານ ການປະເມີນຕົ້ນທຶນຕົວຈິງ ກ້າວໄປສູ່ ການສ້າງຄວາມເຂັ້ມແຂງ ໃຫ້ຕະຫຼາດອາຊຽນໜຶ່ງດຽວ.

✓ ຖອດຖອນບົດຮຽນ ຈາກຜູ້ມີບົດບາດຊື້ຂາຍໃນລະດັບສາກົນ ແລະ ຊ່ວຍແນະນຳ ຄຳໝາຍໝັ້ນຂອງວິສາຫະກິດ ຕໍ່ຄວາມຍືນຍົງ ທີ່ຈັດຕັ້ງປະຕິບັດໂດຍ ຜູ້ມີບົດບາດຊື້ຂາຍສິນຄ້າໃນລະດັບສາກົນ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ກັບເງື່ອນໄຂທາງດ້ານການຄ້າ ບົນພື້ນຖານຄວາມຍືນຍົງ.

✓ ດັບປັບລະບຽບການຄຸ້ມຄອງ ການຮ່ວມສັນຍາເຮັດການຜະລິດກະສິກຳ ແລະ ການຈັດຊື້ຈາກແຫຼ່ງການຜະລິດແບບຍືນຍົງ ເພື່ອເສີມຂະຫຍາຍ ການຮັບຮູ້ ຕ່ອງໂສ້ມູນຄ່າ ຂອງ ບັນດາຮູບແບບທີ່ຫຼາກຫຼາຍ ໃນການຜະລິດ ຂອງ ຊາວກະສິກອນ ເພື່ອຄວາມຍືນຍົງ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ຫຼຸດພາສີນຳເຂົ້າ ສຳລັບປັດໄຈການຜະລິດ ແລະ ຜະລິດຕະພັນອາຫານ ທີ່ປະເທດຕົນ ຕ້ອງການທີ່ຈະຊຸກຍູ້ ໃຫ້ຊາວກະສິກອນ ແລະ ພົນລະເມືອງ ນຳໃຊ້ (ຕົວຢ່າງ: ອາຫານທີ່ມີໂພຊະນາການ, ປັດໄຈການຜະລິດທີ່ປອດໄພຂຶ້ນກວ່າເດີມ ເພື່ອການບໍລິໂພກອາຫານຂອງມະນຸດ ແລະ ອື່ນໆ).
- ຫຼຸດຜ່ອນ ຫຼື ລົບລ້າງ ການອຸດໜູນລາຄາ ຕໍ່ການຜະລິດກະສິກຳແບບເຂັ້ມຂຸ້ນສູງ ທີ່ບໍ່ມີຫຼັກຖານຢັ້ງຢືນຜົນປະໂຫຍດທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຫຼື ທີ່ມີຫຼັກຖານພິສູດໃຫ້ເຫັນວ່າ: ເປັນຮູບແບບການຜະລິດ ທີ່ເຮັດໃຫ້ສິ່ງແວດລ້ອມເສື່ອມໂຊມ; ກົງກັນຂ້າມ, ໃຫ້ຍູ້ດັນ ການຫຼຸດອັດຕາພາສີໃຫ້ຕ່ຳລົງໄປຕື່ມອີກ ແລະ ຍູ້ດັນ ການກຳນົດລາຄາສູງ ສຳລັບ ຜະລິດຕະພັນອາຫານ ທີ່ປະຕິບັດຕາມ ມາດຕະຖານການຜະລິດກະສິກຳແບບຍືນຍົງ (ລະອຽດໃຫ້ເບິ່ງ ບົດແນະນຳ 3.4)



# 4. ການສ້າງຄວາມສາມາດ ແລະ ແລກປ່ຽນ ຄວາມຮູ້

*"ໃນເວລາທີ່ ທຸກຄົນ ມີຄວາມຮັບຮູ້, ແມ່ນສາມາດຂະຫຍາຍຂະບວນການໝູນໃຊ້ໄດ້."*

*"ການຜະລິດແບບນິເວດກະສິກໍາ ຄວນຖືກບັນຈຸເຂົ້າໃນຫຼັກສູດການຮຽນການສອນ ເພາະເປັນສິ່ງສຳຄັນ ທີ່ຈະຕ້ອງມີຄວາມຮູ້ພື້ນຖານ ກ່ຽວກັບວິທີການເບິ່ງແຍງຮັກສາທີ່ດິນ ຂອງພວກເຮົາ"*

– *ຄັດຈາກບົດສຳພາດ ຜູ້ສ້າງນະໂຍບາຍ*

ການຂ້າມຜ່ານໄປສູ່ ການຜະລິດແບບນິເວດກະສິກໍາ ຮຽກຮ້ອງໃຫ້ມີການສືບຕໍ່ ແລະ ສ້າງຄວາມເຂັ້ມແຂງໃຫ້ຄວາມຮູ້ຄວາມເຂົ້າໃຈ ກ່ຽວກັບການຜະລິດແບບນິເວດກະສິກໍາ (ທັກສະ, ຄວາມຮູ້ ແລະ ຄຸນຄ່າຈຳເປັນ) ພາຍໃນໝູ່ຜູ້ມີບົດບາດຕ່າງໆ ໃນຂະແໜງກະສິກໍາ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ. ການຫັນປ່ຽນດັ່ງກ່າວ ຮຽກຮ້ອງໃຫ້ມີ ຄວາມຮູ້ສະຫະວິຊາຊີບ ແລະ ການປະສານສົມທົບ ລະຫວ່າງຂະແໜງການ ໂດຍຖອດຖອນບົດຮຽນ ຈາກລະບົບຄວາມຮູ້ດ້ານເຕັກນິກວິຊາການ, ສັງຄົມ ແລະ ຄວາມຍືນຍົງ ທັງເປັນການຫັນປ່ຽນ ທີ່ກວມເອົາ ມິຕິຕ່າງໆຂອງລະບົບການຜະລິດສະບຽງອາຫານ ແລະ ປະກອບດ້ວຍ ກິດຈະກຳລວມໝູ່, ຄວາມເປັນເອກະລາດຂອງເຂດ, ເສດຖະກິດໝູນວຽນ, ການຄຸ້ມຄອງສິ່ງແວດລ້ອມ, ອະທິປະໄຕດ້ານສະບຽງອາຫານ, ໄລຍະທາງການຂົນສົ່ງອາຫານ ຈາກ ຜູ້ຜະລິດ ເຖິງ ຜູ້ບໍລິໂພກ, ຄວາມຍຸຕິທຳທາງດ້ານດິນຟ້າອາກາດ ແລະ ຫົວຂໍ້ອື່ນໆ.

ລະບົບ ແລະ ການຜະລິດແບບນິເວດກະສິກໍາ ມີລັກສະເພາະພື້ນທີ່ ແລະ ຕ້ອງອາໄສຄວາມຮູ້ ແລະ ແຮງງານເຂັ້ມຂຸ້ນ. ການໝູນໃຊ້ລະບົບ ແລະ ການຜະລິດໃນຮູບແບບເຫຼົ່ານີ້ ຮຽກຮ້ອງໃຫ້ມີການເຂົ້າເຖິງທັກສະ ແລະ ຂໍ້ມູນຂ່າວສານຕ່າງໆທີ່ສຳຄັນ, ການຄ່ອຍໆສະສົມບົດຮຽນ ແລະ ການແບ່ງປັນຄວາມຮູ້ ແລະ ຈຳເປັນຕ້ອງປັບຄວາມສາມາດ ຂອງຜູ້ສະໜອງບໍລິການກະສິກໍາ ເພື່ອກ້າວໄປສູ່ການສ້າງ ວິທີແກ້ໄຂສະເພາະສະພາບເງື່ອນໄຂ ແລະ ສອດຄ່ອງກັບທ້ອງຖິ່ນ. ຂະບວນການດັ່ງກ່າວ ຮຽກຮ້ອງໃຫ້ມີການປັບປຸງທັກສະທາງດ້ານການຄຸ້ມຄອງບໍລິຫານ ແລະ ດ້ານວິຊາການຂອງ ຊາວກະສິກອນ ຜ່ານຂະບວນການຮຽນຮູ້ ແບບປະສານສົມທົບ, ກວມລວມທົ່ວເຖິງທຸກຄົນ ແລະ ຈາກປະສົບການຕົວຈິງ ເຊິ່ງເປັນຂະບວນການຮຽນຮູ້ ທີ່ລວມເອົາຮູບການຕ່າງໆ ຂອງການພົວພັນແລກປ່ຽນ, ການຈັດຕັ້ງ ແລະ ການຕົກລົງເຫັນດີ ລະຫວ່າງ ຜູ້ມີບົດບາດຕ່າງໆໃນຂອບເຂດກວ້າງຂວາງ ບົນພື້ນຖານ ການຮ່ວມສ້າງຄວາມຮູ້ ທີ່ປະສົມປະສານຄວາມຮູ້ພື້ນເມືອງທ້ອງຖິ່ນ ເຂົ້າກັບຄວາມຮູ້ທາງສະຖາບັນ ລະຫວ່າງ ບັນດາພາກສ່ວນກ່ຽວຂ້ອງຕ່າງໆ.

**ມີ 4 ບົດແນະນຳ** ເພື່ອຊ່ວຍສະໜັບສະໜູນ ການສ້າງຄວາມສາມາດ ແລະ ການແບ່ງປັນແລກປ່ຽນຄວາມຮູ້ ລະອຽດມີດັ່ງນີ້:

- <u>ບົດແນະນຳ 4.1 ສ້າງຄວາມສາມາດ ໃຫ້ຊາວກະສິກອນ ແລະ ຊຸມຊົນເຂດຊົນນະບົດ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຮຽນຮູ້ ແລະ ແລກປ່ຽນ ຈາກຊາວກະສິກອນສູ່ຊາວກະສິກອນ ເພື່ອການຂ້າມຜ່ານ ໄປສູ່ການຜະລິດແບບນິເວດກະສິກໍາ</u>
- <u>ບົດແນະນຳ 4.2 ປັບປຸງຮູບແບບການສົ່ງເສີມກະສິກໍາ ແລະ ການໃຫ້ຄຳແນະນຳ</u>
- <u>ບົດແນະນຳ 4.3 ເຊື່ອມສານການຜະລິດແບບນິເວດກະສິກໍາ ເຂົ້າໃນການຝຶກອົບຮົມວິຊາຊີບ, ການສຶກສາຊັ້ນສູງ ແລະ ຫຼັກສູດວິຊາການ</u>
- <u>ບົດແນະນຳ 4.4 ເພີ່ມທະວີຄວາມຮັບຮູ້ທົ່ວສັງຄົມ ກ່ຽວກັບ ການຜະລິດແບບນິເວດກະສິກໍາ</u>

## ບົດແນະນຳ 4.1 ສ້າງຄວາມສາມາດ ໃຫ້ຊາວກະສິກອນ ແລະ ຊຸມຊົນເຂດຊົນນະບົດ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຮຽນຮູ້ ແລະ ແລກປ່ຽນ ຈາກຊາວກະສິກອນ ສູ່ ຊາວກະສິກອນ ເພື່ອການຂ້າມຜ່ານ ໄປສູ່ການຜະລິດແບບນິເວດກະສິກໍາ

✓ ສ້າງຄວາມເຂັ້ມແຂງ ໃຫ້ຊາວກະສິກອນ ໃນການແລກປ່ຽນປະສົບການ ແລະ ບົດຮຽນຕ່າງໆ ກັບໝູ່ເພື່ອນຊາວກະສິກອນນຳກັນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ເຊິ່ງລວມທັງ ການພັດທະນາຂີດຄວາມສາມາດ ແລະ ການຢ້ຽມຢາມແລກປ່ຽນຕ່າງໆ ທີ່ອອກແບບມາສະເພາະ.

✓ ເສີມຂະຫຍາຍ **ໂຮງຮຽນຊາວນາ** (FFS) (ລະອຽດໃຫ້ເບິ່ງ <u>ເອກະສານຊ້ອນທ້າຍ N</u>) ແລະ ສູນການຮຽນຮູ້ ຂອງ ຊາວກະສິກອນ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:

- ເພີ່ມ ວທີການສ້າງຄວາມສາມາດ ແບບໂຮງຮຽນຊາວນາ (FFS) ເຂົ້າໃນ ລະບົບສົ່ງເສີມກະສິກໍາຂອງປະເທດ ແລະ ຮັບປະກັນຄວາມສອດຄ່ອງ ກັບ ບັນດາຂໍ້ລິເລີ່ມການພັດທະນາຊຸມຊົນໄລຍະຍາວ.
- ຊຸກຍູ້ການສ້າງເຄືອຂ່າຍແລກປ່ຽນ ຮຸ່ນ ຕໍ່ ຮຸ່ນ ລະຫວ່າງ ຜູ້ຜະລິດແບບນິເວດກະສິກໍາ ເພື່ອເຊື່ອມຕໍ່ຊາວກະສິກອນ ທີ່ຫາກໍ່ເລີ່ມການຜະລິດແບບນິເວດກະສິກໍາ ໃຫ້ໄດ້ມີໂອກາດແລກປ່ຽນ ກັບ ຜູ້ທີ່ມີປະສົບການແລ້ວ.
- ສ້າງຂີດຄວາມສາມາດ ດ້ານຄວາມເປັນຜູ້ນຳ ແລະ/ຫຼື ທັກສະການສອນ ໃຫ້ຊາວກະສິກອນ, ແລະ ສະໜັບສະໜູນຊ່ວຍເຫຼືອ ຊຸມຊົນຊາວກະສິກອນ ແລະ ຊຸມຊົນຄົນພື້ນເມືອງດັ້ງເດີມ ໃນການຈົດບັນທຶກ ແລະ ແບ່ງປັນພູມປັນຍາຄວາມຮູ້ພື້ນເມືອງ ຂອງເຂົາເຈົ້າ.
- ອຳນວຍຄວາມສະດວກ ໃນການໄປທັດສະນະສຶກສາ ແລະ ການໄປຢ້ຽມຢາມແລກປ່ຽນຕ່າງໆ.

- ນໍາໃຊ້ສື່ຕ່າງໆ (ສິ່ງພິມ, ສື່ສັງຄົມອອນລາຍ, ໂທລະພາບ, ວິທະຍຸ, ໂທລະສັບມືຖື ແລະ ແອັບ ຫຼື ໂປແກຣມຕ່າງໆ) ເພື່ອປັບປຸງ ການເຂົ້າເຖິງຂໍ້ມູນຂ່າວສານ, ບໍລິການ ແລະ ຕະຫຼາດ ໃຫ້ກັບຊາວກະສິກອນ.

► **ເອກະສານອ້າງອີງເພີ່ມເຕີມ:**

- ຊາວກະສິກອນ ເປັນ ຜູ້ຊີ້ນໍາ-ນໍາພາ - 30 ປີ ແຫ່ງການຈັດຕັ້ງປະຕິບັດ ໂຮງຮຽນຊາວນາ ຫຼື Farmers taking the lead - Thirty years of farmer field schools
- ຊຸດເຄື່ອງມື: ໂຮງຮຽນສອນການຜະລິດແບບນິເວດກະສິກໍາ ຂອງ ຊາວກະສິກອນ ແລະ ວິທີການຮຽນຮູ້ແບບສາຍຂວາງ ຈາກ ຊາວກະສິກອນ ສູ່ ຊາວກະສິກອນ ຫຼື TOOLKIT: Peasant Agroecology Schools and the Peasant-to -Peasant Method of Horizontal Learning
- ເວັບໄຊ: ເວັບໄຊ ໂຮງຮຽນຊາວກະສິກອນໂລກ ຫຼື Platform: Global Farmer Field School Platform

## ບົດແນະນໍາ 4.2 ປັບປຸງຮູບແບບການສົ່ງເສີມກະສິກໍາ ແລະ ການໃຫ້ຄໍາແນະນໍາ

✓ ຈັດຕັ້ງປະຕິບັດວິທີການດໍາເນີນງານ ໂດຍເອົາຊຸມຊົນເປັນໃຈກາງ ເພື່ອປັບປຸງ ການເຂົ້າເຖິງວຽກສົ່ງເສີມກະສິກໍາ ໃຫ້ແກ່ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ເວົ້າສະເພາະຊາວກະສິກອນ ທີ່ເປັນແມ່ຍິງ, ຊາວໜຸ່ມ, ຄົນພື້ນເມືອງດັ້ງເດີມ ແລະ ກຸ່ມຄົນດ້ອຍໂອກາດອື່ນໆ.

✓ ເສີມຂະຫຍາຍຂະບວນການສົ່ງເສີມກະສິກໍາ ທີ່ສານຕໍ່ ຈາກ ການວາງແຜນ ຂອງ ຊຸມຊົນ, ການຄົ້ນຄວ້າວິໄຈ (ລະອຽດໃຫ້ເບິ່ງ ບົດແນະນໍາ 6.2) ແລະ ການພັດທະນາການຈັດຕັ້ງ ເຊັ່ນ: ເຄືອຂ່າຍບໍ່ເປັນທາງການຂອງ ກຸ່ມຊາວກະສິກອນຕ່າງໆ ເພື່ອຂະຫຍາຍນະວັດຕະກໍາ (ເຊັ່ນ ການສົ່ງເສີມກະສິກໍາສີຂຽວ).

✓ ໃຫ້ບູລິມະສິດສິນຄ້າ ຫຼື ບໍລິການສາທາລະນະ ທີ່ພົວພັນກັບການຜະລິດກະສິກໍາ ເຊິ່ງລວມເອົາ ການສະໜອງຄໍາແນະນໍາໃຫ້ ຜູ້ຜະລິດ ຮູ້ກ່ຽວກັບ ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງດິນ ແລະ ນໍ້າ, ຊີວະນາໆພັນ ໃນທີ່ດິນກະສິກໍາ ແລະ ການຄໍ້າປະກັນສະບຽງອາຫານ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:**

- ເຊື່ອມສານວິທີການດໍາເນີນງານແບບພູມີທັດ ເຂົ້າໃນການວາງແຜນ ແລະ ການຈັດຕັ້ງປະຕິບັດວຽກສົ່ງເສີມກະສິກໍາ ເພື່ອສົ່ງເສີມຄວາມຫຼາກຫຼາຍ ແລະ ຄວາມກົມກຽວ ພາຍໃນລະບົບກະສິກໍາ ແລະ ລະບົບຜະລິດສະບຽງອາຫານ (ລະອຽດໃຫ້ເບິ່ງ ບົດແນະນໍາ 1)
- ສະໜອງນະໂຍບາຍສົ່ງເສີມ ແລະ ການຝຶກອົບຮົມ ໃຫ້ອາສາສະໝັກບ້ານ ຜູ້ທີ່ສາມາດເຂົ້າເຖິງແມ່ຍິງ, ຊາວໜຸ່ມ ແລະ ປະຊາຊົນຊົນເຜົ່າ ໄດ້ຢ່າງມີປະສິດທິຜົນ ຫຼາຍກວ່າ ພະນັກງານສົ່ງເສີມກະສິກໍາຂອງລັດ.
- ສ້າງສູນແຫ່ງຄວາມເປັນເລີດ ໃນລະດັບຊາດ ແລະ ພາກພື້ນ ເພື່ອເປັນສູນກາງ ຄວາມຮູ້ ກ່ຽວກັບດ້ານສະເພາະຕ່າງໆ ຂອງ ການຫັນປ່ຽນລະບົບການຜະລິດສະບຽງອາຫານ ແລະ ລະບົບການຜະລິດກະສິກໍາແບບເກົ່າ ໄປສູ່ ການຜະລິດແບບນິເວດກະສິກໍາ ແລະ ເຮັດໜ້າທີ່ ເຊື່ອມໂຍງວຽກສົ່ງເສີມກະສິກໍາ, ການຄົ້ນຄວ້າວິໄຈ, ອົງການຈັດຕັ້ງ ຂອງ ຊາວກະສິກອນ ແລະ ພາກເອກະຊົນ (ລະອຽດໃຫ້ເບິ່ງ ບົດແນະນໍາ 6)
- ສ້າງຄວາມເຂັ້ມແຂງ ໃຫ້ພາລະບົດບາດ ຂອງ ໜ່ວຍງານວິຊາການ ວຽກຝຶກອົບຮົມ ແລະ ສົ່ງເສີມກະສິກໍາ ຂອງ ອາຊຽນ ເພື່ອໃຫ້ລວມກອງປະຊຸມ ແລະ ການແລກປ່ຽນ ລະຫວ່າງຂະແໜງການ ເຂົ້າກັບ ໜ່ວຍງານວິຊາການອື່ນໆ ທີ່ເຮັດວຽກກ່ຽວກັບ ການສະໜອງບໍລິການຜະລິດແບບນິເວດກະສິກໍາ.
- ນໍາໃຊ້ ກໍລະນີສຶກສາ ແລະ ເອກະສານຝຶກອົບຮົມ ທີ່ສັງລວມໂດຍ ກອງປະຊຸມຂະແໜງສົ່ງເສີມກະສິກໍາ ໃຫ້ຄໍາປຶກສາວຽກງານພັດທະນາຊົນນະບົດ ສາກົນ (ຫຼື Global Forum for Rural Advisory Services) ແລະ ເຄືອຂ່າຍຍ່ອຍຕ່າງໆ ເຊັ່ນ: ເຄືອຂ່າຍຂະແໜງສົ່ງເສີມກະສິກໍາໃຫ້ຄໍາປຶກສາວຽກງານພັດທະນາຊົນນະບົດ ສໍາລັບປະເທດ ໝູ່ເກາະ ອາຊີ-ປາຊີຟິກ (APIRAS) (ລະອຽດໃຫ້ເບິ່ງຂ້າງລຸ່ມນີ້)

► **ເອກະສານອ້າງອີງເພີ່ມເຕີມ:**

- ຊຸດການຮຽນຮູ້: ຊຸດການຮຽນຮູ້ ຂອງ ວິຊາການສົ່ງເສີມກະສິກໍາໃໝ່ ຫຼື Learning kit: New Extensionist Learning Kit

- ບັນທຶກ ແບບວິທີປະຕິບັດທີ່ດີ: ການສົ່ງເສີມ ການຜະລິດກະສິກໍາແບບຍືນຍົງ ຜ່ານການສົ່ງເສີມກະສິກໍາສີຂຽວ ຢູ່ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຫຼື Good practice note: Promoting sustainable agriculture through green extension in Lao People's Democratic Republic
- ແຜ່ນພັບ: ການສົ່ງເສີມກະສິກໍາ ແລະ ການສະໜອງຄໍາແນະນໍາ ທີ່ເອື້ອອໍານວຍ ເພື່ອສົ່ງເສີມ ການຜະລິດແບບນິເວດກະສິກໍາ ຫຼື Brochure: Enabling extension and advisory services to promote agroecology
- ສູນລວມຫຼັກສູດຝຶກອົບຮົມການຜະລິດແບບນິເວດກະສິກໍາ ຂອງ ເຄືອຂ່າຍ APIRAS ຫຼື APIRAS Repository of Agroecology Course Curricula

## ບົດແນະນໍາ 4.3 ເຊື່ອມສານ ການຜະລິດແບບນິເວດກະສິກໍາ ເຂົ້າໃນ ການຝຶກອົບຮົມວິຊາຊີບ, ການສຶກສາຊັ້ນສູງ ແລະ ຫຼັກສູດວິຊາການ

✓ ສ້າງການປະສານສົມທົບ ລະຫວ່າງ ສະຖາບັນການສຶກສາຊັ້ນສູງ ແລະ ສະຖາບັນຄົ້ນຄວ້າວິໄຈ ເພື່ອຊ່ວຍເຊື່ອມສານ ຄວາມຮູ້ທາງດ້ານວິທະຍາສາດ ກ່ຽວກັບ ການຜະລິດນິເວດກະສິກໍາ ເຂົ້າໃນ ຫຼັກສູດການຝຶກອົບຮົມວິຊາຊີບ ແລະ ວິຊາການ.

✓ ສ້າງການເປັນຄູ່ຮ່ວມງານ ລະຫວ່າງ ບັນດາອົງການຈັດຕັ້ງ ຂອງ ຊາວກະສິກອນ ແລະ ມະຫາວິທະຍາໄລຕ່າງໆ ເພື່ອຮ່ວມສ້າງ ວາລະການຄົ້ນຄວ້າວິໄຈ ແລະ ການສຶກສາຊັ້ນສູງ ໂດຍດັດປັບໃຫ້ເຂົ້າກັບ ຄວາມຕ້ອງການ ໃນການຂ້າມຜ່ານ ໄປສູ່ ການຜະລິດນິເວດກະສິກໍາ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:

- ສະໜັບສະໜູນຫຼັກສູດຝຶກອົບຮົມໄລຍະສັ້ນ ແລະ ຫຼັກສູດຝຶກອົບຮົມທີ່ບໍ່ແມ່ນລະດັບປະລິນຍາ ເພື່ອສິດສອນ ການຜະລິດແບບນິເວດກະສິກໍາ ໂດຍມີກຸ່ມເປົ້າໝາຍ ແມ່ນໄວໜຸ່ມຢູ່ເຂດຊົນນະບົດທີ່ມີທ່າແຮງກ້າວຂຶ້ນເປັນ ຜູ້ໂຄສະນາສົ່ງເສີມ ແລະ ຜູ້ປະກອບການຜະລິດແບບນິເວດກະສິກໍາ (ລະອຽດໃຫ້ເບິ່ງ ບົດແນະນໍາ 2)
- ໃຫ້ບູລິມະສິດ ຫຼັກສູດການຮຽນ ແລະ ການຝຶກອົບຮົມ ການຜະລິດກະສິກໍາ ທີ່ປະສົບປະສານວິທະຍາສາດເຕັກນິກ ແລະ ສັງຄົມ ເພື່ອສ້າງ ຄູອາຈານ ແລະ ນັກວິທະຍາສາດ ໃນຂະແໜງການຜະລິດແບບນິເວດກະສິກໍາ.
- ນໍາໃຊ້ເຄືອຂ່າຍ ແລະ ເວທີແລກປ່ຽນ ການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກໍາໃນລະດັບພາກພື້ນ ແລະ ສາກົນ ເພື່ອສະໜັບສະໜູນ ການແລກປ່ຽນນັກສຶກສາ ແລະ ການຈັດກອງປະຊຸມວິຊາການ ສົນທະນາແລກປ່ຽນ ກ່ຽວກັບ ການຜະລິດແບບນິເວດກະສິກໍາ ໃນລະດັບຊາດ, ພາກພື້ນ ແລະ ສາກົນ (ລະອຽດໃຫ້ເບິ່ງ ບົດແນະນໍາ 6)
- ເສີມຂະຫຍາຍການລວມເອົາ ເຄື່ອງມືວັດແທກຜົນການຈັດຕັ້ງປະຕິບັດ ຂອງ ການຜະລິດແບບນິເວດກະສິກໍາ ທີ່ວັດແທກຄວາມຫຼາກຫຼາຍ ຂອງ ລະບົບການຜະລິດກະສິກໍາ ແລະ ສະບຽງອາຫານໃນຫຼັກສູດການຮຽນການສອນຂະແໜງກະເສດສາດ (ລະອຽດໃຫ້ເບິ່ງ ບົດແນະນໍາ 6 ແລະ ເອກະສານຊ້ອນທ້າຍ B).
- ໃຫ້ນະໂຍບາຍສົ່ງເສີມ ສະຖາບັນການສຶກສາຊັ້ນສູງ ເພື່ອປະກອບສ່ວນ ເຂົ້າໃນການຮ່ວມມືພັດທະນາ ແພລັດຟອມ ຫຼື ເວັບໄຊ ຄຸ້ມຄອງຄວາມຮູ້ ເພື່ອລະບຸ, ຮວບຮວມ ແລະ ເພີ່ມຄວາມສາມາດໃນການເຂົ້າເຖິງ ເອກະສານຄົ້ນຄວ້າ ແລະ ຊຸດສື່ໃຫ້ຂໍ້ມູນຄວາມຮູ້ຫຼາຍຮູບຫຼາຍສີ ກ່ຽວກັບຄວາມສໍາເລັດ ຂອງ ການຜະລິດແບບນິເວດກະສິກໍາ.

► **ເອກະສານອ້າງອີງເພີ່ມເຕີມ:**

- ບົດສະຫຼຸບຫຍໍ້ນະໂຍບາຍ: ການເຊື່ອມສານ ການຜະລິດແບບນິເວດກະສິກໍາ ເຂົ້າໃນ ການສຶກສາ ສາຂາ ກະເສດສາດ ຫຼື Policy brief: Mainstreaming agroecology in agricultural education
- ສະຫຼຸບຫຍໍ້ນະໂຍບາຍ: ເປັນ "ຊາວໜຸ່ມຕົວແບບ ຂອງ ການຜະລິດແບບນິເວດກະສິກໍາ": ການສະໜັບສະໜູນ ອະນາຄົດ ຂອງ ຊາວໜຸ່ມ ແລະ ນັກຮຽນຊັ້ນສູງ ໃນການຮຽນຮູ້ ແລະ ຫາລ້ຽງຊີບ ໃນ ລະບົບການຜະລິດກະສິກໍາເປັນສະບຽງອາຫານ ແບບຍືນຍົງ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (2021) ຫຼື Policy brief: Being "agricool": Supporting ASEAN youth and tertiary student futures for sustainable agrifood system learning and livelihoods to meet the Sustainable Development Goals (2021)

## ບົດແນະນຳ 4.4 ເພີ່ມທະວີຄວາມຮັບຮູ້ທົ່ວສັງຄົມ ກ່ຽວກັບ ການຜະລິດແບບນິເວດກະສິກຳ

- ✓ ສົ່ງເສີມການຮຽນຮູ້ການຜະລິດແບບນິເວດກະສິກຳ ໃນກຸ່ມ ເດັກນ້ອຍ ແລະ ຊາວໜຸ່ມ
- ✓ ນຳໃຊ້ສື່ສັງຄົມອອນລາຍ ໃຫ້ເກີດປະໂຫຍດສູງສຸດ ເພື່ອສ້າງຄວາມຮັບຮູ້ ກ່ຽວກັບ ຜົນປະໂຫຍດ ທາງດ້ານສິ່ງແວດລ້ອມ, ເສດຖະກິດ, ສຸຂະພາບ ແລະ ໂພຊະນາການ ທີ່ຈະໄດ້ຮັບ ຈາກ ການຂ້າມຜ່ານ ໄປສູ່ການຜະລິດແບບນິເວດກະສິກຳ.
- ✓ ອຳນວຍຄວາມສະດວກ ໃຫ້ແກ່ການສະໜັບສະໜູນ ຂອງ ລັດຖະບານ ໃນການຈັດຕັ້ງປະຕິບັດ ບັ້ນໂຄສະນາປູກຈິດສຳນຶກທົ່ວສັງຄົມ ຜ່ານນະໂຍບາຍ, ການຊ່ວຍເຫຼືອທາງດ້ານການເງິນ ແລະ ການຮ່ວມມືລະຫວ່າງ ພາກລັດ-ເອກະຊົນ.
- ✓ ອຳນວຍຄວາມສະດວກ ໃຫ້ແກ່ການປະສານສົມທົບ ລະຫວ່າງ ພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອສ້າງຄວາມພົ້ນເດັ່ນ ແລະ ການເຂົ້າເຖິງ ບັນດາຂໍ້ລິເລີ່ມການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:**

- ຈັດຕັ້ງປະຕິບັດບັ້ນໂຄສະນາປູກຈິດສຳນຶກ ໃນລະດັບພາກພື້ນ ແລະ ລະດັບຊາດ ໂດຍການປະສານສົມທົບ ກັບ ບັນດາອົງການຕ່າງໆ ຂອງ ລັດຖະບານ, ສະມາຄົມທຸລະກິດ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ບັນດາກຸ່ມຕົວແທນຜູ້ບໍລິໂພກ.
- ເຊື່ອມໂຍງການສອນ ກ່ຽວກັບ ການຜະລິດແບບເວດກະສິກຳ ແລະ ແຜນງານ ຈາກແຫຼ່ງຜະລິດກະສິກຳ ສູ່ ໂຮງຮຽນ ເຂົ້າໃນ ຫຼັກສູດການຮຽນການສອນ ພາຍໃນໂຮງຮຽນ ເພື່ອສົ່ງເສີມຄວາມຮັບຮູ້ ແລະ ເຫັນໄດ້ປະໂຫຍດ ຂອງ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ.
- ປູກຈິດສຳນຶກທົ່ວສັງຄົມ – ທັງໃນເຂດຊົນນະບົດ ແລະ ຕົວເມືອງ - ເພື່ອໃຫ້ທຸກຄົນເຫັນໄດ້ບົດບາດ ຂອງ ຊາວກະສິກອນ ທີ່ເຮັດການຜະລິດແບບນິເວດກະສິກຳ ໃນການປະກອບສ່ວນເຂົ້າໃນວຽກງານສາທາລະນະສຸກ, ການປົກປັກຮັກສາທີ່ດິນ, ການອະນຸລັກ ແລະ ຄຸ້ມຄອງຊີວະນາໆພັນ ແລະ ມູນເຊື້ອຄວາມຫຼາກຫຼາຍທາງພັນທຸກຳ.



ຮູບຖ່າຍ: ໂຄງການ ASSET, 2023

# 5. ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ

*"ນິເວດກະສິກຳ ເປັນພຽງ ຈຸດເລີ່ມຕົ້ນ ... ພວກເຮົາ ເຂົ້າມາເຕົ້າໂຮມກັນ ແລະ ຄົ້ນຄິດໃນລັກສະນະເປັນລະບົບຫຼາຍຂຶ້ນ ດ້ວຍວິທີການດຳເນີນງານ ແບບ ນິເວດກະສິກຳ."*

*"ຢູ່ໃນລະດັບປະເທດ, ພວກເຮົາ ຕ້ອງສ້າງ ບັນດາເວທີແລກປ່ຽນ, ກົນໄກຕ່າງໆເຫຼົ່ານີ້ ບໍ່ແມ່ນພຽງເພື່ອ ຄວາມສາມັກຄີ ແລະ ການແລກປ່ຽນຄວາມຄິດຄວາມເຫັນ ເທົ່ານັ້ນ ແຕ່ຍັງເພື່ອ ການລົງເຮັດຕົວຈິງ ຢູ່ຮາກຖານ ໃຫ້ມີຂະໜາດກວ້າງຂວາງ, ທ້ອນໂຮມປະສົບການຂອງທຸກພາກສ່ວນ ແລ້ວສ້າງເປັນກະບອກສຽງສົ່ງເສີມ ໃຫ້ເຂັ້ມແຂງຍິ່ງຂຶ້ນ."*

*– ຄັດຈາກ ບົດສຳພາດ ຜູ້ສ້າງນະໂຍບາຍ*

ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຕ້ອງໄດ້ຮັບການສະໜັບສະໜູນ ດ້ວຍການສົ່ງເສີມສາຍພົວພັນ ແລະ ການເຊື່ອມຈອດໃໝ່ ລະຫວ່າງ ຜູ້ມີບົດບາດຕ່າງໆ ພາຍໃນ ລະບົບການຜະລິດກະສິກຳ ແລະ ດ້ວຍ ການສ້າງເງື່ອນໄຂ ສຳລັບ ການຫັນປ່ຽນ ແບບແຜນການເຮັດວຽກແບບເກົ່າດັ້ງເດີມ ທີ່ຢັ່ງຮາກຝັງແໜ້ນ. ການລະດົມຄວາມຮູ້, ຊັບພະຍາກອນ ແລະ ພະລັງເຫື່ອແຮງ ຂອງ ທຸກພາກສ່ວນກ່ຽວຂ້ອງ ເພື່ອປັບປຸງ ລະບົບນິເວດກະສິກຳ, ສຸຂະພາບ ຂອງ ຜູ້ບໍລິໂພກ ແລະ ຄວາມອຸດົມພູນສຸກ ຂອງ ຊາວກະສິກອນ ຮຽກຮ້ອງໃຫ້ຕ້ອງມີ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ໃນລັກສະນະທີ່ມີຈຸດປະສົງເປົ້າໝາຍ, ລວມທຸກຄົນເຂົ້າມີສ່ວນຮ່ວມ, ຈູບຈ້າວຫ້າວຫັນ ແລະ ຫັນປ່ຽນ.

ມີ ສີ່ **ບົດແນະນຳ** ເພື່ອສະໜັບສະໜູນ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ:

- <u>ບົດແນະນຳ 5.1 ລະບຸ ແລະ ຮ່ວມສ້າງ ຈຸດປະສົງທີ່ຈະແຈ້ງ ສຳລັບ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ</u>
- <u>ບົດແນະນຳ 5.2 ຈັດຕັ້ງ ການລະບຸ ພາກສ່ວນກ່ຽວຂ້ອງ ແລະ ສ້າງຄວາມເຂົ້າໃຈ ກ່ຽວກັບ ທັດສະນະ ແລະ ຜົນປະໂຫຍດ ຂອງ ເຂົາເຈົ້າ</u>
- <u>ບົດແນະນຳ 5.3 ເຊື່ອມສານກົນໄກການມີສ່ວນຮ່ວມ ເຂົ້າໃນການຈັດຕັ້ງ</u>
- <u>ບົດແນະນຳ 5.4 ຫັນຈາກ ການທາບທາມຂໍຄຳປຶກສາໄປສູ່ ໄປສູ່ ການສະໜັບສະໜູນຊ່ວຍເຫຼືອ ສ້າງເປັນການຈັດຕັ້ງຂອງເຂົາເຈົ້າເອງ</u>

## ບົດແນະນຳ 5.1 ລະບຸ ແລະ ຮ່ວມສ້າງ ຈຸດປະສົງ ທີ່ຈະແຈ້ງ ສຳລັບ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ

✓ ຮັບປະກັນວ່າ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ມີຈຸດປະສົງເປົ້າໝາຍ ແລະ ມີປະສິດທິພາບ.
✓ ຮ່ວມສ້າງຈຸດປະສົງ ກັບ ພາກສ່ວນກ່ຽວຂ້ອງ.
✓ ຮັບປະກັນວ່າ ຈຸດປະສົງ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ສອດຄ່ອງກັບຄາດໝາຍຂອງປະເທດ ແລະ ຄວາມຕ້ອງການເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ນະວັດຕະກຳ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:

- ສ້າງຄວາມເຂົ້າໃຈໃຫ້ດີຍິ່ງຂຶ້ນ ກ່ຽວກັບ ອຸປະສັກກີດຂວາງ ແລະ ໂອກາດ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.
- ລະດົມພາກສ່ວນກ່ຽວຂ້ອງ ໃຫ້ສະໜັບສະໜູນ ການບັນລຸບັນດາຄາດໝາຍ ຂອງ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຕາມທີ່ໄດ້ກຳນົດໄວ້ໃນແຜນການກ່ຽວຂ້ອງ ຂອງ ປະເທດ.
- ສ້າງແຜນງານຮ່ວມ ເພື່ອຈັດຕັ້ງປະຕິບັດ ແຜນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຂອງ ປະເທດ ຕາມທີ່ເຫັນວ່າເໝາະສົມ. ຂົງເຂດຈຸດສຸມ ອາດຈະລວມເອົາ ນະວັດຕະກຳແຕ່ລະດ້ານ ຄື: ດ້ານຄວາມຮູ້, ເຕັກໂນໂລຊີ, ຕະຫຼາດ ແລະ ຕ່ອງໂສ້ມູນຄ່າ, ຫຼື ແຕ່ລະຈຸດຫັນປ່ຽນ ພາຍໃນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.
- ກຳນົດບັນດາຕົວຊີ້ບອກ ທີ່ສາມາດບັນລຸໄດ້ ເພື່ອຊ່ວຍຕິດຕາມຄວາມຄືບໜ້າ ຂອງ ບັນດາເປົ້າໝາຍຕ່າງໆ (ລະອຽດໃຫ້ເບິ່ງ ເອກະສານຊ້ອນທ້າຍ B).

## ບົດແນະນຳ 5.2 ຈັດຕັ້ງ ການລະບຸ ພາກສ່ວນກ່ຽວຂ້ອງ, ແລະ ສ້າງຄວາມເຂົ້າໃຈ ກ່ຽວກັບ ທັດສະນະ ແລະ ຜົນປະໂຫຍດ ຂອງ ເຂົາເຈົ້າ

- ✓ ຮັບປະກັນວ່າ ໄດ້ມີການພິຈາລະນາ ທຸກພາກສ່ວນກ່ຽວຂ້ອງ ໃນລະດັບພຽງພໍ.
- ✓ ສ້າງພື້ນຖານ ທີ່ເຂັ້ມແຂງ ສຳລັບ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ເຊິ່ງສ່ອງແສງໃຫ້ເຫັນ ຄຸນລັກສະນະ ຂອງ ແຕ່ກຸ່ມພາກສ່ວນກ່ຽວຂ້ອງ ໂດຍສອດຄ່ອງກັບ ບັນດາຈຸດປະສົງທີ່ໄດ້ກຳນົດໄວ້.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ລະບຸ ແລະ ສ້າງບັນຊີລາຍຊື່ ຂອງ ພາກສ່ວນກ່ຽວຂ້ອງ ໃນລະດັບທ້ອງຖິ່ນ, ສູນກາງ ແລະ ພາກພື້ນ ເຊິ່ງລວມເອົາ ເວທີ ແລະ ຂໍ້ລິເລີ່ມສະເພາະ ສຳລັບ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ທີ່ອາດຈະສະໜັບສະໜູນ ຫຼື ກີດຂວາງ ການປ່ຽນແປງ.
- ລະບຸ ພາກສ່ວນກ່ຽວຂ້ອງ ທີ່ເປັນກຸ່ມຄົນສ່ວນນ້ອຍ ຫຼື ຜູ້ດ້ອຍໂອກາດ ກໍຄື ຜູ້ມີບົດບາດໃໝ່ໃນການສົ່ງເສີມຄວາມຍືນຍົງ ເຊັ່ນ: ພັນທະມິດຕ່າງໆ ເປັນຕົ້ນ ISEAL, ຂໍ້ລິເລີ່ມການຄ້າຍືນຍົງ (IDH), ມາດຕະຖານຄວາມຍືນຍົງ ຂອງ ຊຸມຊົນຜູ້ຜະລິດກາເຟ (4C), ພັນທະມິດ UTZ/ປ່າເຂດຮ້ອນຊຸ່ມ, ໂກຣ ອາຊີ (Grow Asia), ຫຼື ສະຫະພັນກະສິກຳປອດສານພິດສາກົນ (IFOAM) -- ແລະ ບັນດາທຸລະກິດກະສິກຳ ຕ່າງໆ. ຊອກຫາຂໍ້ມູນເບື້ອງເລິກ ກ່ຽວກັບ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ໃນໄລຍະຜ່ານມາ, ລະດັບຄວາມໄວ້ວາງໃຈ ຂອງ ເຂົາເຈົ້າ ທີ່ມີຕໍ່ ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ.
- ລະບຸອຸປະສັກກີດຂວາງ ການມີສ່ວນຮ່ວມ ທີ່ອາດຈະກີດຂວາງ ການມີສ່ວນຮ່ວມ ຂອງ ບັນດາກຸ່ມຄົນສ່ວນນ້ອຍ (ເຊັ່ນ: ພາສາ, ທັດສະນະຄວາມເຂົ້າໃຈ ກ່ຽວກັບ ຄວາມປອດໄພ, ບົດບາດຍິງ-ຊາຍ , ເຕັກໂນໂລຊີ, ປັດໄຈທາງດ້ານວັດທະນະທຳ-ສັງຄົມ).
- ສ້າງຄວາມເຂົ້າໃຈ ກ່ຽວກັບ ຈຸດຢືນ ຂອງ ພາກສ່ວນກ່ຽວຂ້ອງຕ່າງໆ ທີ່ມີກ່ຽວກັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ (ສະໜັບສະໜູນ, ຕ້ານ, ຫຼື ເປັນກາງ). ອີກຢ່າງໜຶ່ງກໍຄື ບົ່ງຕົວຜູ້ມີບົດສຳຄັນໃນການໂຄສະນາໂນ້ມນ້າວ ພ້ອມທັງເປັນຜູ້ທີ່ໄດ້ຮັບຄວາມເຄົາລົບໃນດ້ານສິນທຳ ເພື່ອເຮັດໜ້າທີ່ຮຽກປະຊຸມ ບັນດາພາກສ່ວນກ່ຽວຂ້ອງ ແລະ ເຕົ້າໂຮມການສະໜັບສະໜູນໃນວົງກວ້າງ ສຳລັບການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ. ສ້າງຍຸດທະສາດສະເພາະ ສຳລັບການມີສ່ວນຮ່ວມ ແລະ ການປະສານສົມທົບ ກັບ ພາກສ່ວນກ່ຽວຂ້ອງທີ່ມີບົດບາດສະເພາະ ເຊິ່ງລວມເອົາ ອຳນາດການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງ ຂອງ ຜູ້ຜະລິດ, ກຸ່ມຊາວກະສິກອນ, ແລະ ຫົວໜ່ວຍທຸລະກິດກະສິກຳຕ່າງໆ ເພື່ອລະດົມຊັບພະຍາກອນ, ແນວຄວາມຄິດ ແລະ ທຶນມະນຸດ.

## ບົດແນະນຳ 5.3 ເຊື່ອມສານກົນໄກການມີສ່ວນຮ່ວມ ເຂົ້າໃນການຈັດຕັ້ງ

- ✓ ຫ້າງຫາກະກຽມຊັບພະຍາກອນທີ່ເໝາະສົມ, ເວລາ ແລະ ຄວາມສາມາດດ້ານຕ່າງໆ ເພື່ອຮັບປະກັນ ໃຫ້ມີການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ຢ່າງຕັ້ງໜ້າ ແລະ ຍືນຍົງ ໂດຍສາມາດຄຸ້ມຄອງບໍລິຫານຄວາມບໍ່ສົມດຸນທາງອຳນາດ ໄດ້ຢ່າງມີປະສິດທິຜົນ.
- ✓ ຮັບປະກັນການສະໜັບສະໜູນຮອບດ້ານ ແລະ ການຮັບຮູ້ ຂອງ ພະນັກງານລັດຂັ້ນນຳ ແລະ ຂັ້ນວິຊາການ ຕໍ່ ບັນດາຄວາມພະຍາຍາມສົ່ງເສີມ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ.
- ✓ ສ້າງຄວາມເຂັ້ມແຂງ ໃຫ້ຜູ້ສົ່ງເສີມນຳພາ ການມີສ່ວນຮ່ວມ ດ້ວຍການມອບໝາຍສິດອຳນາດ, ປະກອບຊັບພະຍາກອນ ແລະ ການສະໜັບສະໜູນຊ່ວຍເຫຼືອດ້ານຕ່າງໆ ຕາມຄວາມເໝາະສົມ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ສ້າງເວທີແລກປ່ຽນທາງການ ສຳລັບ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ໂດຍມີການຕາງໜ້າທາງສັງຄົມ ທີ່ກວມລວມເອົາທຸກພາກສ່ວນ, ມີການສື່ສານຢ່າງເປັນປະຈຳປົກກະຕິ ແລະ ມີພື້ນທີ່ປອດໄພ ສຳລັບ ການສົນທະນາແລກປ່ຽນ, ການເຈລະຈາ, ແລະ ການແບ່ງປັນຄວາມຮູ້. ເວທີເຫຼົ່ານີ້ ຄວນສະໜັບສະໜູນ ການເຊື່ອມສານທາງດ້ານນະໂຍບາຍ.
- ສ້າງສາຍພົວພັນທາງການ ກັບ ບັນດາອົງການຈັດຕັ້ງ ຂອງ ພາກສ່ວນກ່ຽວຂ້ອງສຳຄັນ ໂດຍສະເພາະກຸ່ມຊາວກະສິກອນ ໂດຍຮັບປະກັນວ່າ ມີລາຍລະອຽດຕິດຕໍ່ຈະແຈ້ງ ແລະ ໂອກາດແລກປ່ຽນຂໍ້ມູນຂ່າວສານ.

- ກຳນົດໜ້າທີ່ຮັບຜິດຊອບ ແລະ ພາລະບົດບາດ ທີ່ຈະແຈ້ງພາຍໃນບັນດາອົງການຈັດຕັ້ງຫຼັກແຫຼ່ງຂອງລັດ ເພື່ອສະໜອງ ຊັບພະຍາກອນຕ່າງໆ ແລະ ການຊ່ວຍເຫຼືອທີ່ຈຳເປັນ.
- ສ້າງນະໂຍບາຍການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ໂດຍກຳນົດໜ້າທີ່ຮັບຜິດຊອບລະອຽດ, ຂະບວນການຕັດສິນບັນຫາ, ຫຼັກການພື້ນຖານ ຕະຫຼອດເຖິງ ກົນໄກແກ້ໄຂຄຳຮ້ອງຮຽນ ແລະ ການປະກອບຄຳຄິດເຫັນ.
- ສ້າງນະໂຍບາຍ ແລະ ລະບຽບການ ສ້າງຄວາມເຂັ້ມແຂງ, ຮັບປະກັນ ການຮັບຮູ້ສະຖານະທາງກົດໝາຍ ຕໍ່ກຸ່ມສຳຄັນຕ່າງໆ ເຊັ່ນ: ກຸ່ມຊ່ວຍເຫຼືອຕົນເອງ ຂອງ ແມ່ຍິງ ແລະ ແກ້ໄຂບັນດາສິ່ງກີດຂວາງການມີສ່ວນຮ່ວມ.
- ຮັບປະກັນ ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ ໃນ ຂະບວນການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ເຊິ່ງລວມເອົາ ການນຳໃຊ້ມາດຕະການ ເພື່ອປັບສົມດຸນສາຍພົວພັນອຳນາດ ແລະ ເຮັດໃຫ້ຜົນປະໂຫຍດ ຂອງ ກຸ່ມຕ່າງໆ ສອດຄ່ອງໄປລວງດຽວກັນ.

## ບົດແນະນຳ 5.4 ເລັງເປົ້າໝາຍສ້າງການມີສ່ວນຮ່ວມຫັນປ່ຽນ ບໍ່ແມ່ນເປັນພຽງແຕ່ ການທາບທາມຂໍຄຳປຶກສາ

✓ ສ້າງຄວາມເຂັ້ມແຂງ ໃຫ້ພາກສ່ວນກ່ຽວຂ້ອງ ໂດຍສະເພາະ ຊາວກະສິກອນ, ແມ່ຍິງ ແລະ ໄວໜຸ່ມ ໃນທົ່ວສີ່ມິຕິຄື: ສຽງ ແລະ ການມີສ່ວນຮ່ວມ, ຄວາມສາມາດ ແລະ ຊັບພະຍາກອນ, ສິດທິ ແລະ ການເຂົ້າເຖິງຄວາມຍຸຕິທຳ, ແລະ ສ້າງຄວາມເຂັ້ມແຂງ ໃຫ້ການຮັບຮູ້ທາງສັງຄົມ ແລະ ການສະໜັບສະໜູນຊ່ວຍເຫຼືອ ຜ່ານຂອບນິຕິກຳ (ລະອຽດໃຫ້ເບິ່ງ ບົດແນະນຳ 2).

✓ ກຳນົດວາງລະການປະສານສົມທົບ ເພື່ອ ການປ່ຽນແປງ ໂດຍສ້າງວິໄສທັດຮ່ວມ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ເພື່ອສະໜັບສະໜູນບັນດາຄາດໝາຍແຫ່ງຊາດດ້ານການຜະລິດກະສິກຳແບບຍືນຍົງ. ຈັດຕັ້ງປະຕິບັດ ກິດຈະກຳ "ວາງແຜນກຳນົດບາດກ້າວຖອຍຫຼັງ ບົນພື້ນຖານສິ່ງທີ່ຕ້ອງການບັນລຸ" ແລະ ທິດສະດີການປ່ຽນແປງ (ToC) ເພື່ອຫັນວິໄສທັດການຂ້າມຜ່ານ ໄປສູ່ການຜະລິດແບບນິເວດກະສິກຳ ໃຫ້ກາຍເປັນຈິງ ແລະ ເພື່ອລະດົມພາກສ່ວນກ່ຽວຂ້ອງ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ສ້າງໂຄງລ່າງພື້ນຖານທາງສັງຄົມ ສຳລັບ ການປ່ຽນແປງ ໂດຍສະໜັບສະໜູນ ການເປັນຄູ່ຮ່ວມງານແບບໃໝ່ເພື່ອການຜະລິດ ລະຫວ່າງ ບັນດາພາກສ່ວນກ່ຽວຂ້ອງຕ່າງໆ ເຊິ່ງລວມເອົາ ອົງການຈັດຕັ້ງຂອງຊາວກະສິກອນ, ບໍລິສັດສະຕ໋າດອັບ, ກຸ່ມຕົວແທນຂອງຊາວໜຸ່ມ ແລະ ແມ່ຍິງ, ສະຖາບັນຄົ້ນຄວ້າວິໄຈ, ກຸ່ມປົກປ້ອງຜູ້ບໍລິໂພກ, ສະຖາບັນການສຶກສາ, ອົງການສ້າງມາດຕະຖານ (ເຊັ່ນ: ISO), ບັນດາກຸ່ມຕົວແທນຕ່າງໆຂັ້ນຊຸມຊົນ, ແລະ NGOs.
- ເສີມຂະຫຍາຍ ການແລກປ່ຽນ ແລະ ການສ້າງແຜນງານຮ່ວມ ລະຫວ່າງ ກົມກອງລັດ ແລະ ຄູ່ຮ່ວມງານຂອງເຂົາເຈົ້າ, ສ້າງຄວາມເຂັ້ມແຂງ ໃຫ້ແກ່ບັນດາອົງການ ທີ່ຮັບຜິດຊອບຂະແໜງກະສິກຳ ເພື່ອປະສານສົມທົບ ກັບ ພາກສ່ວນ ທີ່ຮັບຜິດຊອບຂະແໜງການຄ້າ, ການລົງທຶນ, ສາທາລະນະສຸກ, ການຈ້າງງານໄວໜຸ່ມ, ນະວັດຕະກຳ, ສິ່ງແວດລ້ອມ, ຊີວະນາໆພັນ, ການທ່ອງທ່ຽວ, ການພັດທະນາຊົນນະບົດ, ການສຶກສາ ແລະ ການສື່ສານ.
- ສ້າງຄວາມສາມາດ ເພື່ອແກ້ໄຂບັນດາຫົວຂໍ້ຫຼໍ່ແຫຼມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການສົນທະນາແລກປ່ຽນ ແກ້ໄຂຈຸດຢືນທີ່ຂັດແຍ່ງກັນ ເພື່ອເປີດໂອກາດສ້າງການປ່ຽນແປງ.
- ຫຼຸດຜ່ອນຄວາມບໍ່ສົມດຸນທາງອຳນາດ ທີ່ກີດຂວາງ ຄວາມຄືບໜ້າ ແລະ ສ້າງຄວາມເຂັ້ມແຂງໃຫ້ບັນດາກຸ່ມຄົນທີ່ດ້ອຍໂອກາດ.
- ສ້າງຄວາມໄວ້ວາງໃຈ ຜ່ານຄວາມໂປ່ງໃສ, ການສື່ສານທີ່ເຄົາລົບກັນແລະກັນ, ການຕິດຕໍ່ປະສານງານຢ່າງເປັນປະຈຳປົກກະຕິ, ແລະ ການສະແດງບົດບາດທີ່ມີຄວາມໝາຍຄວາມສຳຄັນ ຂອງ ພາກສ່ວນກ່ຽວຂ້ອງ ພາຍໃນ ຂະບວນການຕັດສິນບັນຫາ. ຄວາມໄວ້ວາງໃຈ ລະຫວ່າງ ພາກສ່ວນກ່ຽວຂ້ອງທັງໝົດ ຈະອຳນວຍຄວາມສະດວກໃຫ້ເກີດການປ່ຽນແປງ ແລະ ຊ່ວຍແກ້ໄຂຜ່ານຜ່າຈຸດຢືນທີ່ຂັດແຍ່ງກັນ.

► **ເອກະສານອ້າງອີງເພີ່ມເຕີມ:**

- ຄົ້ນຄິດຄືນໃໝ່ ກ່ຽວກັບ ລະບົບສະບຽງອາຫານ ຂອງ ພວກເຮົາ: ບົດແນະນຳ ການປະສານສົມທົບ ລະຫວ່າງບັນດາພາກສ່ວນກ່ຽວຂ້ອງຕ່າງໆ (Rethinking Our Food Systems: A Guide for Multi-Stakeholder Collaboration)



# 6. ການສ້າງ ວາລະຄົ້ນຄວ້າວິໄຈ ສໍາລັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ

*"ການຊ່ວຍເຫຼືອທາງດ້ານວິຊາການ ເປັນສິ່ງທີ່ເຮັດໄດ້ງ່າຍ; ເປັນໄປໄດ້ ທີ່ຈະຈັດຕັ້ງປະຕິບັດ ການຝຶກອົບຮົມໃນວົງກວ້າງ – ແຕ່ສິ່ງທີ່ຍັງຂາດ ກໍຄື ການດັດປັບ ການຜະລິດແບບນິເວດກະສິກໍາ ໃຫ້ເຂົ້າກັບ ສະພາບເງື່ອນໄຂ ຂອງ ແຕ່ລະທ້ອງຖິ່ນ. ຈຶ່ງຈໍາເປັນຕ້ອງ ມີການຄົ້ນຄວ້າວິໄຈ ຮ່ວມກັບ ຊາວກະສິກອນ ເພື່ອຊອກຫາ ວິທີການຜະລິດແບບນິເວດກະສິກໍາ ທີ່ໃຊ້ໄດ້ຜົນ."*

*"ຈໍາເປັນຕ້ອງ ມີຫຼັກຖານ ຈາກ ພາກສະໜາມ ທີ່ສະແດງໃຫ້ເຫັນວ່າ: ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ ສາມາດ 1) ຂະຫຍາຍ, 2) ຜະລິດໄດ້ພຽງພໍ ແລະ 3) ສົ່ງອອກ ໄດ້ຕາມຄວາມຄວາມຕ້ອງການ"*

*– ຄັດຈາກບົດສໍາພາດ ຜູ້ສ້າງນະໂຍບາຍ*

ການຜະລິດແບບນິເວດກະສິກໍາ ເຊື່ອມສານ ວິທະຍາສາດທັນສະໄໝ ເຂົ້າກັບ ຄວາມຮູ້ດັ້ງເດີມ. ການຄົ້ນຄວ້າວິໄຈ ມີບົດບາດສໍາຄັນໃນການສ້າງຄວາມເຂັ້ມແຂງ ໃຫ້ ຄວາມໜ້າເຊື່ອຖື ຂອງ ຮູບແບບການຜະລິດ ທີ່ພັດທະນາຂຶ້ນໂດຍ ຊຸມຊົນທ້ອງຖິ່ນ ແລະ ປະຊາຊົນພື້ນເມືອງດັ້ງເດີມ. ພ້ອມນັ້ນ, ການຄົ້ນຄວ້າວິໄຈ ຍັງຊ່ວຍ ຜູ້ມີບົດບາດ ສາມາດສ້າງວິໄສທັດ ທີ່ເປັນລະບົບ ແລະ ເບິ່ງກວ້າງມອງໄກໃນລະດັບຟາມ ຫຼື ແຫຼ່ງການຜະລິດກະສິກໍາ, ພູມີທັດ ແລະ ລະດັບລະບົບການຜະລິດສະບຽງອາຫານ, ຕະຫຼອດເຖິງ ຊ່ວຍກໍານົດເສັ້ນທາງ ທີ່ເປັນນະວັດຕະກໍາ ສໍາລັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ.

ໃນທາງກັບກັນ, ເພື່ອຫັນປ່ຽນ ບັນດາສິ່ງຄົ້ນພົບ ທີ່ໄດ້ຈາກ ການຄົ້ນຄວ້າວິໄຈ ໃຫ້ກາຍ ເປັນນະວັດຕະກໍາ ທີ່ນໍາໃຊ້ກັນຢ່າງກວ້າງຂວາງ ແລະ ສ້າງການປ່ຽນແປງ ນັ້ນເຫັນວ່າ ຈໍາເປັນຕ້ອງມີ ຕົວແບບການຮ່ວມມືແບບໃໝ່ ລະຫວ່າງ ລະບົບການຄົ້ນຄວ້າວິໄຈ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ເວົ້າສະເພາະ ລະຫວ່າງ ວຽກງານສົ່ງເສີມກະສິກໍາ ກັບ ຊາວກະສິກອນ. ພາກເອກະຊົນ ກໍເປັນອີກພາກສ່ວນໜຶ່ງ ທີ່ມີບົດບາດສໍາຄັນ ໃນວຽກງານການຄົ້ນຄວ້າວິໄຈ ແຕ່ພົບເລື້ອຍໆວ່າ ຖືກເບິ່ງຂ້າມ.

ມີ 5 **ບົດແນະນໍາ** ເພື່ອຊ່ວຍສະໜັບສະໜູນ ການສ້າງວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ, ລະອຽດມີຄືດັ່ງນີ້:

- ບົດແນະນໍາ 6.1 ປັບປ່ຽນ ທິດທາງ ການຄົ້ນຄວ້າວິໄຈ ຄືນໃໝ່ ເພື່ອສະໜັບສະໜູນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ
- ບົດແນະນໍາ 6.2 ເສີມຂະຫຍາຍ ວິທີການທີ່ເປັນນະວັດຕະກໍາ ໃນການຈັດຕັ້ງປະຕິບັດ ການຄົ້ນຄວ້າວິໄຈ ແລະ ການຮ່ວມສ້າງຄວາມຮູ້ ດ້ວຍການມີສ່ວນຮ່ວມ ຂອງ ຜູ້ມີບົດບາດຕ່າງໆ
- ບົດແນະນໍາ 6.3 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກໍາ ໃນລະດັບຟາມ
- ບົດແນະນໍາ 6.4 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກໍາ ໃນລະດັບພູມີທັດ
- ບົດແນະນໍາ 6.5 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກໍາ ໃນລະດັບລະບົບການຜະລິດສະບຽງອາຫານ (ຂັ້ນທ້ອງຖິ່ນ, ຂັ້ນປະເທດ ແລະ ສາກົນ)

## ບົດແນະນໍາ 6.1 ປັບປ່ຽນ ທິດທາງການຄົ້ນຄວ້າວິໄຈ ຄືນໃໝ່ ເພື່ອສະໜັບສະໜູນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ

- ✓ ສ້າງຄວາມເຂັ້ມແຂງ ໃຫ້ ລະບົບການຄົ້ນຄວ້າວິໄຈ ຂອງ ລັດ ໃນລະດັບຟາມການຜະລິດກະສິກໍາ, ພູມີທັດ ແລະ ລະດັບລະບົບຜະລິດສະບຽງອາຫານ.
- ✓ ໃຫ້ບູລິມະສິດ ແຜນງານຄົ້ນຄວ້າວິໄຈ ທີ່ສາມາດຕີລາຄາ ແລະ ສົມທຽບ ຜົນການຈັດຕັ້ງປະຕິບັດທາງເສດຖະກິດ ຂອງ ລະບົບການຜະລິດກະສິກໍາ ແລະ ສະບຽງອາຫານ ໃນຮູບແບບຕ່າງໆ ພ້ອມທັງປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມໃນວົງກວ້າງ (ເຊິ່ງລວມເອົາທັງ ການເລືອກໄດ້ເລືອກເສຍ) ຂອງ ລະບົບການຜະລິດເຫຼົ່ານັ້ນ. ແຜນງານຄົ້ນຄວ້າວິໄຈ ໃນລັກສະນະດັ່ງກ່າວ ເຮັດໃຫ້ສາມາດເຊື່ອມໂຍງ ວຽກການຄົ້ນຄວ້າວິໄຈລະບົບການຜະລິດ ໃສ່ກັບ ວິທະຍາສາດຄວາມຍືນຍົງ ໄດ້ດີຍິ່ງຂຶ້ນ.
- ✓ ເສີມຂະຫຍາຍການຄົ້ນຄວ້າວິໄຈ ກ່ຽວກັບ ທີ່ດິນເຊິ່ງບໍ່ເໝາະສົມສໍາລັບການປູກຝັງ ແລະ ລະບົບການຜະລິດກະສິກໍາອື່ນໆ ທີ່ຖືເປັນບູລິມະສິດ ສໍາລັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ.
- ✓ ສະໜັບສະໜູນ ແຜນງານຄົ້ນຄວ້າວິໄຈ ກ່ຽວກັບ ການອອກແບບນະວັດຕະກໍາ ແລະ ຂະບວນການໝູນໃຊ້ ແລະ ຂະຫຍາຍ ການຜະລິດແບບນິເວດກະສິກໍາ.
- ✓ ຊຸກຍູ້ ການຄົ້ນຄວ້າວິໄຈ ທີ່ຮັບຮູ້ ແລະ ຮຽນຮູ້ຈາກ ລະບົບຄວາມຮູ້ ຂອງ ຊາວກະສິກອນ ແລະ ປະຊາຊົນພື້ນ ເມືອງດັ້ງເດີມ ພ້ອມທັງ ສຶກສາການປະສົມປະສານ ຄວາມຮູ້ເຫຼົ່ານັ້ນ ເຂົ້າໃສ່ກັບ ວິທີການຜະລິດບົນພື້ນຖານວິທະຍາສາດ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:

- ໃຫ້ບູລິມະສິດ ແຜນງານຄົ້ນຄວ້າວິໄຈກ່ຽວກັບ ການກະຈາຍການຜະລິດກະສິກໍາ, ຊີວິດການເປັນຢູ່ ແລະ ການນໍາໃຊ້ທີ່ດິນ ໃຫ້ຫຼາກຫຼາຍ ເພື່ອເສີມຂະຫຍາຍ ຄວາມທົນທານທາງດ້ານເສດຖະກິດ, ສັງຄົມ ແລະ ນິເວດວິທະຍາ ພ້ອມທັງຜະລິດຕະພາບໃນໄລຍະຍາວ ໃນລະດັບພູມີທັດ.

- ສະໜັບສະໜູນ ຄວາມຄືບໜ້າ ເພື່ອຮັກສາ ແລະ ເສີມຂະຫຍາຍ ຄວາມສົມບູນ ຂອງ ລະບົບນິເວດກະສິກຳ ລວມໄປເຖິງ ການຫັນປ່ຽນຈາກ ການປູກພືດປະຈຳປີ ໄປສູ່ ການປູກພືດທີ່ມີອາຍຸຫຼາຍປີ ໃນພື້ນທີ່ ທີ່ມີຄວາມຄ້ອຍຊັນສູງ, ການປະສົມປະສານ ການປູກ-ການລ້ຽງ, ການຫຼຸດຜ່ອນ ການນຳໃຊ້ ແລະ ການເອື່ອຍອີງ ປັດໃຈການຜະລິດ ຈາກ ພາຍນອກ (ລະອຽດໃຫ້ເບິ່ງ ບົດແນະນຳ 6.3)
- ລົງທຶນໃສ່ ທີມງານຄົ້ນຄວ້າວິໄຈແບບສະຫະວິຊາຊີບ ໂດຍຕໍ່ຍອດ ຈາກ ປະສົບການທີ່ມີ ໃນລະດັບປະເທດ ແລະ ສາກົນ ຕາມທີ່ເຫັນວ່າເໝາະສົມ ເພື່ອສ້າງຂອບການປະເມີນຮອບດ້ານ ສໍາລັບການປະເມີນ ລະບົບການຜະລິດກະສິກໍາ ແລະ ສະບຽງອາຫານ (ເຊັ່ນ: ປະເມີນ ໂດຍທຽບໃສ່ຜົນຜະລິດ , ການສ້າງລາຍໄດ້, ການປັບປຸງຊີວິດການເປັນຢູ່, ການຄໍ້າປະກັນສະບຽງອາຫານ ລວມທັງການປັບປຸງໂພຊະນາການ ແລະ ອາຫານການກິນທີ່ດີຕໍ່ສຸຂະພາບ, ປະສິດທິພາບໃນການນຳໃຊ້ຊັບພະຍາກອນ ແລະ ຄວາມອຸດົມສົມບູນທາງດ້ານນິເວດວິທະຍາ, ຄວາມເທົ່າທຽມກັນ, ການສ້າງຄວາມເຂັ້ມແຂງ ໃຫ້ ແມ່ຍິງ, ຄວາມເໝາະສົມ ແລະ ທຶນທານທາງດ້ານວັດທະນະທໍາ).
- ຮຽນຮູ້ ແລະ ໝູນໃຊ້ ວິທີການວິທະຍາ ແລະ ເຄື່ອງມືຕ່າງໆ ເພື່ອວິເຄາະ ຜົນການຈັດຕັ້ງປະຕິບັດ ການຜະລິດແບບນິເວດກະສິກຳ (ລະອຽດໃຫ້ເບິ່ງ ເອກະສານຊ້ອນທ້າຍ B ແລະ ວິທີການລົງບັນຊີຄ່າໃຊ້ຈ່າຍ ຫຼື ຕົ້ນທຶນຕົວຈິງ).
- ສະໜັບສະໜູນ ແລະ ເຊື່ອມສານ ແຜນງານຄົ້ນຄວ້າວິໄຈ ທີ່ປະເມີນ ຜົນການຈັດຕັ້ງປະຕິບັດ ແລະ ຜົນກະທົບຕົວຈິງ ຂອງ ລະບົບການຜະລິດກະສິກຳ ໃນຮູບການຕ່າງໆ, ລະບົບການນຳໃຊ້ທີ່ດິນ/ພູມິທັດ, ແລະ ລະບົບການຜະລິດສະບຽງອາຫານ ຢູ່ເຂດຊົນນະບົດ/ຕົວເມືອງ ດ້ວຍຂອບການປະເມີນຜົນແບບຮອບດ້ານ ເຂົ້າໃນ ການວາງນະໂຍບາຍ ໃຫ້ດີຍິ່ງຂຶ້ນ.

► **ເອກະສານອ້າງອີງເພີ່ມເຕີມ:**

- ການລົງບັນຊີຕາມຄ່າໃຊ້ຈ່າຍຕົວຈິງ ຫຼື True cost accounting

## ບົດແນະນຳ 6.2 ເສີມຂະຫຍາຍ ວິທີການທີ່ເປັນນະວັດຕະກຳ ໃນການຈັດຕັ້ງປະຕິບັດ ການຄົ້ນຄວ້າວິໄຈ ແລະ ການຮ່ວມສ້າງຄວາມຮູ້ ດ້ວຍການມີສ່ວນຮ່ວມ ຂອງ ຜູ້ມີບົດບາດຕ່າງໆ

- ✓ ສ້າງຄວາມເຂັ້ມແຂງ ໃຫ້ຕໍ່ເນື່ອງ ລະຫວ່າງ ການຄົ້ນຄວ້າວິໄຈ, ການແບ່ງປັນຄວາມຮູ້ ແລະ ການສ້າງຂີດຄວາມສາມາດ (ລະອຽດໃຫ້ເບິ່ງ ບົດແນະນຳ 4).
- ✓ ປະສານງານ ບັນດາຄວາມພະຍາຍາມ ໃນລະດັບປະເທດ ແລະ ອາຊຽນ ເພື່ອລະບຸ ແລະ ລົງທຶນ ໃສ່ສູນແຫ່ງຄວາມເປັນເລີດ ທີ່ປະສົມປະສານ ສິ່ງອຳນວຍຄວາມສະດວກ ແລະ ການໃຫ້ການບໍລິການຕ່າງໆດ້ານການທົດລອງໃນໄລຍະຍາວ ແລະ ການຝຶກອົບຮົມພາກປະຕິບັດຕົວຈິງ.
- ✓ ໃຫ້ບູລິມະສິດວິທີການ ແລະ ເຄື່ອງມື ຄົ້ນຄວ້າວິໄຈ ແບບມີສ່ວນຮ່ວມ ພາຍໃນລະບົບຄົ້ນຄວ້າວິໄຈດ້ານກະສິກຳ ແຫ່ງຊາດ ເພື່ອ: 1) ຮັບປະກັນ ການມີສ່ວນຮ່ວມ ຂອງ ຊາວກະສິກອນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ໃນການອອກແບບ ແລະ ຈັດຕັ້ງປະຕິບັດ ການຄົ້ນຄວ້າວິໄຈ ເຊິ່ງຈະຊ່ວຍປະກອບສ່ວນເສີມຂະຫຍາຍຄວາມສາມາດ ໃນການສ້າງເສັ້ນທາງຂ້າມຜ່ານ ແລະ ວິທີການຜະລິດ ທີ່ສອດຄ່ອງກັບສະພາບເງື່ອນໄຂທ້ອງຖິ່ນ ຂຶ້ນໃນລະດັບຟາມ ຫຼື ແຫຼ່ງຜະລິດກະສິກຳ, ຊຸມຊົນ ແລະ ໃນລະດັບລະບົບການຜະລິດສະບຽງອາຫານ; ແລະ 2) ສະໜັບສະໜູນ ແລະ ເຊື່ອມໂຍງ ການສ້າງຄວາມຮູ້ ຈາກ ອົງການຈັດຕັ້ງ ຂອງ ຊາວກະສິກອນ, NGO ແລະ ພາກສ່ວນອື່ນໆ.
- ✓ ສ້າງຄວາມເຂັ້ມແຂງ ໃຫ້ການເປັນຄູ່ຮ່ວມງານດ້ານນະໂຍບາຍວິທະຍາສາດ ກ່ຽວກັບ ການຜະລິດແບບນິເວດກະສິກຳ ແລະ ລະບົບການຜະລິດສະບຽງອາຫານແບບຍືນຍົງ ໃນລະດັບທ້ອງຖິ່ນ, ລະດັບປະເທດ ແລະ ອາຊຽນ ໂດຍສອດຄ່ອງກັບ ວາລະການຫັນປ່ຽນລະບົບການຜະລິດສະບຽງອາຫານ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:

- ເສີມຂະຫຍາຍ ການປະສານສົມທົບ ລະຫວ່າງ ລະບົບການຄົ້ນຄວ້າວິໄຈດ້ານກະສິກຳ ຂອງ ປະເທດຕົນ ກັບ ເຄືອຂ່າຍ ແລະ ການຮ່ວມມື ໃນລະດັບພາກພື້ນ ແລະ ສາກົນ ທີ່ຄົ້ນຄວ້າວິໄຈ ກ່ຽວກັບການຜະລິດແບບນິເວດກະສິກຳ ແລະ ລະບົບການຜະລິດສະບຽງອາຫານແບບຍືນຍົງ.

- ລົງທຶນໃສ່ການພັດທະນາຂີດຄວາມສາມາດທາງດ້ານການຄົ້ນຄວ້າວິໄຈ ທີ່ປະສົມປະສານຄວາມຊ່ຽວຊານ ດ້ານເຕັກນິກວິຊາການ ແລະ ຫຼັກຖານທາງດ້ານວິທະຍາສາດ ກັບ ເຄື່ອງມືອໍານວຍຄວາມສະດວກ ແລະ ທັກສະການເປັນນາຍໜ້າຊື້ຂາຍຜະລິດຕະພັນການເງິນ (ລວມເຖິງ ການສຶກສາ ກ່ຽວກັບ ຜະລິດຕະພັນການເງິນທີ່ຕົກລົງລາຄາຊື້ຂາຍໃນປະຈຸບັນ ແລ້ວສົ່ງມອບຕາມກໍານົດເວລາໃນອະນາຄົດ (ຫຼື Futures) ແລະ ທິດສະດີການປ່ຽນແປງ ແບບມີສ່ວນຮ່ວມ). ການເຮັດແບບນີ້ ຈະຊ່ວຍສ້າງຄວາມເຂັ້ມແຂງ ໃຫ້ແກ່ການວາງນະໂຍບາຍທີ່ກວມລວມທົ່ວເຖິງທຸກຄົນ ແລະ ການຕິດຕາມຜ່ານຂະບວນການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງຕ່າງໆ ທັງໃນທົ່ວປະເທດ ແລະ ລະດັບພູມີທັດ (ພົວພັນກັບ ບົດແນະນໍາ 1, ບົດແນະນໍາ 5 ແລະ ເອກະສານຊ້ອນທ້າຍ B).
- ສະໜັບສະໜູນ ແລະ ເຊື່ອມສານ ແຜນງານຄົ້ນຄວ້າວິໄຈ ທີ່ປະເມີນຜົນການຈັດຕັ້ງປະຕິບັດ ແລະ ຜົນກະທົບຕົວຈິງ ຂອງ ລະບົບການຜະລິດກະສິກໍາ ໃນຮູບການຕ່າງໆ, ລະບົບການນໍາໃຊ້ທີ່ດິນ/ພູມີທັດ, ແລະ ລະບົບການຜະລິດສະບຽງອາຫານ ຢູ່ເຂດຊົນນະບົດ/ຕົວເມືອງ ດ້ວຍຂອບການປະເມີນຜົນແບບຮອບດ້ານ ເຂົ້າໃນການວາງນະໂຍບາຍ ໃຫ້ດີຍິ່ງຂຶ້ນ.

► **ເອກະສານອ້າງອີງເພີ່ມເຕີມ:**

- ທິດສະດີການປ່ຽນແປງແບບມີສ່ວນຮ່ວມ ແລະ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ ຫຼື Participatory theory of change and the agroecological transition

## ບົດແນະນໍາ 6.3 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກໍາ ໃນລະດັບຟາມ ຫຼື ແຫຼ່ງການຜະລິດກະສິກໍາ

✓ ໃຫ້ບູລິມະສິດ ການຄົ້ນຄວ້າວິໄຈ ແບບມີສ່ວນຮ່ວມ ຂອງ ຄອບຄົວຊາວກະສິກອນ, ຊຸມຊົນຊົນນະບົດ, ປະຊາຊົນພື້ນເມືອງດັ້ງເດີມ, ອົງການຈັດຕັ້ງ ຂອງ ຊາວກະສິກອນ, ກຸ່ມແມ່ຍິງ, ຊາວໜຸ່ມ ຫຼື ນັກສຶກສາ ແລະ ອໍານາດການປົກຄອງ ແລະ ຂະແໜງຕ່າງໆ ຢູ່ຂັ້ນທ້ອງຖິ່ນ.

✓ ຮ່ວມອອກແບບ ວິທີການຜະລິດ ທີ່ເອົາໃຈໃສ່ທັງດ້ານເຕັກນິກວິຊາການ ແລະ ສັງຄົມ ໃນລະດັບຟາມ ຫຼື ແຫຼ່ງການຜະລິດກະສິກໍາ ໂດຍການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນ ໂດຍອີງໃສ່ຫຼັກການ ການຜະລິດແບບນິເວດກະສິກໍາ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:

- ຮ່ວມອອກແບບ ການທົດລອງການຜະລິດແບບນິເວດກະສິກໍາ ໄລຍະຍາວ ໃນລະດັບຟາມ ທີ່ມີຫຼາກຫຼາຍສະພາບເງື່ອນໄຂ ໂດຍການມີສ່ວນຮ່ວມ ຂອງ ຊາວກະສິກອນ, ເຊິ່ງຄວນລວມເອົາບັນດາເສັ້ນທາງການກະຈາຍການຜະລິດໃຫ້ຫຼາກຫຼາຍ ເພື່ອສະໜອງຫຼັກຖານຕົວຈິງ ກ່ຽວກັບ ຜົນປະໂຫຍດທາງດ້ານເຕັກນິກ ແລະ ເສດຖະກິດ-ສັງຄົມ ຂອງ ລະບົບ ແລະ ການຜະລິດແບບນິເວດກະສິກໍາ ໃນຮູບການຕ່າງໆ, ແລະ ຊ່ວຍຮ່ວມອອກແບບ ການກະຈາຍ ລະບົບການປູກ ແລະ ການລ້ຽງ ໃຫ້ມີຄວາມຫຼາກຫຼາຍ.
- ພັດທະນາແຜນງານປັບປຸງພັນສັດລ້ຽງ ໂດຍນັກວິທະຍາສາດ ແລະ ແຜນງານຄັດເລືອກແນວພັນໂດຍການມີສ່ວນຮ່ວມ ຂອງ ຊາວກະສິກອນ ເພື່ອໃຫ້ໄດ້ຄຸນລັກສະນະທີ່ຕ້ອງການ ຂອງ ພັນພືດ (ເຊັ່ນ: ລະບົບຮາກເລິກ, ມີຄວາມທົນທານຕໍ່ໄພແຫ້ງແລ້ງ) ທີ່ຮັບປະກັນຜົນການປູກ (ຜົນຜະລິດ, ຄຸນນະພາບ, ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ) ພາຍໃຕ້ເງື່ອນໄຂການປູກ ແລະ ການຜະລິດນິເວດກະສິກໍາ ໃນລັກສະນະສະເພາະ (ເຊັ່ນ: ການກະຈາຍການຜະລິດໃຫ້ຫຼາກຫຼາຍ, ການຫຼຸດຜ່ອນການນໍາໃຊ້ປັດໄຈການຜະລິດທີ່ເປັນເຄມີ).
- ສະໜັບສະໜູນ ການຄົ້ນຄວ້າວິໄຈ ແບບມີສ່ວນຮ່ວມ ໃນການເຊື່ອມໂຍງ ການປູກ-ການລ້ຽງ ທີ່ປະສົມປະສານ ວິທະຍາສາດການປູກ-ການລ້ຽງ ແລະ ການສານຕໍ່ ຈາກ ຫຼັກການ ເສດຖະກິດຮອບວຽນ ແລະ ການເອົາມານໍາໃຊ້ຄືນໃໝ່.
- ຈັດຕັ້ງປະຕິບັດ ການຄົ້ນຄວ້າວິໄຈແບບມີສ່ວນຮ່ວມ ແລະ ເປັນລະບົບ ກ່ຽວກັບ ການປົກປັກຮັກສາພືດ ຜ່ານການຜະລິດແບບນິເວດກະສິກໍາ ໂດຍມີເປົ້າໝາຍແນໃສ່ ສິ່ງມີຊີວິດທີ່ມີປະໂຫຍດ ໃນການຄວບຄຸມສັດຕູພືດ, ແລະ ໃຫ້ບູລິມະສິດ ມາດຕະການປ້ອງກັນ ແທນມາດຕະການແກ້ໄຂ.

- ສະໜັບສະໜູນ ການຄົ້ນຄວ້າວິໄຈ ກ່ຽວກັບ ພືດທີ່ມີຫຼາຍໜ້າທີ່ການ ເຊິ່ງມີຄວາມສາມາດໃນການຟື້ນຟູລະບົບນິເວດກະສິກຳທີ່ຊຸດໂຊມແລ້ວ, ຊ່ວຍຫຼຸດຜ່ອນການນຳໃຊ້ປັດໄຈການຜະລິດ ຈາກພາຍນອກ ແລະ ປະກອບສ່ວນເຮັດໃຫ້ຜະລິດຕະພາບເພີ່ມສູງຂຶ້ນ.
- ສະໜັບສະໜູນ ການຄົ້ນຄວ້າວິໄຈ ກ່ຽວກັບ ການນຳໃຊ້ເຄື່ອງກົນຈັກ ທີ່ມີຕົ້ນທຶນຕ່ຳ ແລະ ເຕັກໂນໂລຊີບໍ່ສູງຫຼາຍ ເພື່ອຫຼຸດຜ່ອນການໃຊ້ແຮງງານຄົນ (ລະອຽດໃຫ້ເບິ່ງ ບົດແນະນຳ 3).
- ປຶກສາຄົ້ນຄວ້າ ຮ່ວມກັບ ຊຸມຊົນຊາວກະສິກອນ ໃນການໝູນໃຊ້ ອຸປະກອນ ແແລະ ເຄື່ອງກົນຈັກຜະລິດກະສິກຳ, ເຄື່ອງມືວິເຄາະພື້ນທີ່ ແລະ ເຕັກໂນໂລຊີດິຈິຕອນ (ຫຸ່ນຍົນ, ເຊັນເຊີອັດຕະໂນມັດ, ແອັບ ຫຼື ໂປຣແກຣມ ຊ່ວຍການຜະລິດກະສິກຳ) ເພື່ອຕິດຕາມ ແລະ ໝູນໃຊ້ ກັບ ລະບົບການຜະລິດແບບນິເວດກະສິກຳ ໃນລະດັບຟາມ ແລະ ພູມີທັດ (ລະອຽດໃຫ້ເບິ່ງ ບົດແນະນຳ 2.4).

## ບົດແນະນຳ 6.4 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກຳໃນລະດັບ ພູມີທັດ

✓ ໃຫ້ບູລິມະສິດ ການຄົ້ນຄວ້າວິໄຈ ທີ່ແກ້ໄຂມິຕິທາງດ້ານພື້ນທີ່ ແລະ ເວລາ ໃນລະດັບພູມີທັດ: 1) ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບ ສາຍພົວພັນ ແລະ ຜົນກະທົບ ຂອງ ຮູບແບບການກະຈາຍການຜະລິດໃຫ້ຫຼາກຫຼາຍ ແລະ ຮູບແບບການຄຸ້ມຄອງການປູກ-ການລ້ຽງ; ແລະ 2) ເພື່ອກຳນົດຄຸນລັກສະນະໜ້າທີ່ການ ແລະ ການໃຫ້ບໍລິການຕ່າງໆ ຂອງ ລະບົບນິເວດ, ຊີວິດການເປັນຢູ່ໃນຊົນນະບົດ ແລະ ຕົວເມືອງ ແລະ, ແລະ ອົງການຈັດຕັ້ງຕ່າງໆ ຢູ່ຂັ້ນ ຊຸມຊົນ.

**ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:**

- ໃຫ້ບູລິມະສິດ ການຄົ້ນຄວ້າວິໄຈ ແບບມີສ່ວນຮ່ວມ ເພື່ອການສະໜັບສະໜູນການຜະລິດແບບນິເວດກະສິກຳໃນລະດັບພູມີທັດ ເຊັ່ນ: ການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມທີ່ກວມລວມທົ່ວເຖິງທຸກຄົນ (ລະອຽດໃຫ້ເບິ່ງ ບົດແນະນຳ 1.3) ຜ່ານ:
    - ເຄື່ອງມືວິເຄາະພື້ນທີ່ ເຊັ່ນ: ສື່ຕ່າງໆ ເພື່ອສະໜອງຂໍ້ມູນແຈ້ງ ພາກສ່ວນກ່ຽວຂ້ອງ ໃຫ້ຮູ້ ກ່ຽວກັບ ຂັ້ນຄຸ້ມຄອງ (ການແບ່ງເຂດ) ຄຸ້ມຄອງພູມີທັດ ແລະ ເຊື່ອມສານ ບັນດາທັດສະນະຕ່າງໆ ເຊິ່ງລວມທັງ ທັດສະນະ ທີ່ມີກ່ຽວກັບ ການຜະລິດແບບນິເວດກະສິກຳ ໃນລະດັບພູມີທັດ.
    - ເຄື່ອງມືການວາງແຜນ ແລະ ຕິດຕາມ ແບບມີສ່ວນຮ່ວມ ເພື່ອເສີມຂະຫຍາຍ ຄວາມກວມລວມທົ່ວເຖິງທຸກຄົນ ແລະ ຄວາມເປັນເຈົ້າການ ຂອງ ທ້ອງຖິ່ນ ພ້ອມທັງເຊື່ອມສານ ບັນດາທັດສະນະທາງດ້ານສັງຄົມ ແລະ ການເມືອງ.

## ບົດແນະນຳ 6.5 ແກ້ໄຂ ວາລະການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກຳໃນລະດັບ ລະບົບການຜະລິດສະບຽງອາຫານ ຢູ່ຂັ້ນຕ່າງໆ

✓ ເສີມຂະຫຍາຍ ການຄົ້ນຄວ້າວິໄຈ ລະບົບການຜະລິດສະບຽງອາຫານ ຮ່ວມລະຫວ່າງຂະແໜງການ ພາຍໃນລະບົບການຄົ້ນຄວ້າວິໄຈ ລະດັບຊາດ ທີ່ລວມເອົາຂະແໜງກະສິກຳ, ສາທາລະນະສຸກ, ວິທະຍາສາດສັງຄົມ ແລະ ສິ່ງແວດລ້ອມ ເພື່ອຂັບເຄື່ອນ ການເຊື່ອມສານລະຫວ່າງ ວິທະຍາສາດ ແລະ ນະໂຍບາຍ ທີ່ມີກ່ຽວກັບ ກັບຫັນປ່ຽນລະບົບການຜະລິດສະບຽງອາຫານ.

✓ ສະໜັບສະໜູນ ແຜນງານການຄົ້ນຄວ້າວິໄຈ ແບບປະສານສົມທົບ ທີ່ເຊື່ອມສານ ການຜະລິດແບບນິເວດກະສິກຳ ເຂົ້າໃນ ລະບົບການຜະລິດສະບຽງອາຫານ ເພື່ອສະໜັບສະໜູນ ການວາງນະໂຍບາຍ ກ່ຽວກັບລະບົບການຜະລິດສະບຽງອາຫານ ແລະ ການອອກແບບນະວັດຕະກຳ.

✓ ເສີມຂະຫຍາຍ ການເປັນຄູ່ຮ່ວມງານ ກັບ ເຄືອຂ່າຍ ແລະ ສະຖາບັນ ຄົ້ນຄວ້າວິໄຈຕ່າງໆ ເພື່ອສະໜັບສະໜູນການອອກແບບ ແລະ ການຈັດຕັ້ງປະຕິບັດ ແຜນປະຕິບັດງານແຫ່ງຊາດ ກ່ຽວກັບ ການຫັນປ່ຽນລະບົບການຜະລິດສະບຽງອາຫານ ໃນລະດັບປະເທດ ແລະ ທ້ອງຖິ່ນ ໃຫ້ມີປະສິດທິຜົນ, ພ້ອມທັງສ້າງຄວາມເຂັ້ມແຂງ ໃຫ້ແຜນເຫຼົ່ານັ້ນ ພາຍໃນ ອາຊຽນ ສອດຄ່ອງ ກັບ ວາລະການພັດທະນາສາກົນ.

### ເພື່ອບັນລຸໃຫ້ໄດ້ແນວນັ້ນ ບັນດາ AMS ອາດຈະພິຈາລະນາ:

- ໃຫ້ບູລິມະສິດ ແຜນງານການຮ່ວມມື ກ່ຽວກັບ ການດັດປັບ ວິທີການປະເມີນລະບົບການຜະລິດສະບຽງອາຫານ ໃຫ້ໄດ້ຕາມຄວາມຕ້ອງການ ຂອງ ນະໂຍບາຍ ແຫ່ງຊາດ ແລະ ທ້ອງຖິ່ນ. (ລະອຽດໃຫ້ເບິ່ງ ບົດແນະນຳ 1, ບົດແນະນຳ 5 ແລະ ເອກະສານຊ້ອນທ້າຍ B).
- ເສີມຂະຫຍາຍ ການປະສານສົມທົບດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາຂີດຄວາມສາມາດໃນລະດັບທ້ອງຖິ່ນ ກ່ຽວກັບ ລະບົບ ແລະ ເຄື່ອງມືຄຸ້ມຄອງຂໍ້ມູນ ເພື່ອຮັບປະກັນການເກັບກຳຂໍ້ມູນ, ການເຊື່ອມຈອດ ແລະ ການນຳໃຊ້ ຊຸດຂໍ້ມູນເອກະພາບ ທີ່ຈະເຮັດໃຫ້ສາມາດ ຈັດຕັ້ງປະຕິບັດການປະເມີນຜົນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ໃນລະດັບລະບົບການຜະລິດສະບຽງອາຫານ ໄດ້ຢ່າງຄົບຖ້ວນຮອບດ້ານ.
- ສະໜັບສະໜູນການຄົ້ນຄວ້າວິໄຈ ທີ່ສາມາດສົ່ງເສີມ ການພັດທະນາ ລະບົບການຜະລິດສະບຽງອາຫານທ້ອງຖິ່ນ ແບບຍືນຍົງ ແລະ ສ້າງຄວາມເຂັ້ມແຂງ ໃຫ້ ຕ່ອງໂສ້ມູນຄ່າອາຫານໄລຍະສັ້ນ ເຊັ່ນ: ການສ້າງຍີ່ຫໍ້ສິນຄ້າສະເພາະເຂດ (ເຊິ່ງຮູບແບບການຜະລິດ ແລະ ຊັບພະຍາກອນ ສະເພາະເຂດທ້ອງຖິ່ນ ກຳນົດຍີ່ຫໍ້ ຜະລິດຕະພັນ ແລະ ການບໍລິການ - ລວມທັງກິດຈະກຳການທ່ອງທ່ຽວ - ທີ່ຕໍ່ຍອດ ແລະ ຮັກສາຊື່ ຂອງ ສະຖານທີ່ ທີ່ມີຊື່ສຽງ) ແລະ ມາດຕະຖານຄຸນນະພາບ ແລະ ການອອກໃບຢັ້ງຢືນ ທີ່ຖືກອອກແບບມາສະເພາະທ້ອງຖິ່ນ.
- ເສີມຂະຫຍາຍ ເວທີຮ່ວມມື ດ້ານການຄົ້ນຄວ້າວິໄຈ ກ່ຽວກັບ ການຜະລິດແບບນິເວດກະສິກຳ ແລະ ລະບົບການຜະລິດສະບຽງອາຫານ ແບບຍືນຍົງ, ແລະ ການສະໜັບສະໜູນ ການມີສ່ວນຮ່ວມ ຂອງ ສະຖາບັນຄົ້ນຄວ້າວິໄຈແຫ່ງຊາດ ພາຍໃນ ເຄືອຂ່າຍ ຮ່ວມມືແລກປ່ຽນ ລະຫວ່າງພາກສ່ວນກ່ຽວຂ້ອງຕ່າງໆ ໃນວົງກວ້າງ ກ່ຽວກັບ ການຜະລິດແບບນິເວດກະສິກຳ ແລະ ລະບົບການຜະລິດສະບຽງອາຫານ.

### ►ເອກະສານອ້າງອີງເພີ່ມເຕີມ:

- ບົດແນະນຳ ການສ້າງຄວາມເຂັ້ມແຂງ ໃຫ້ ການເຊື່ອມສານລະຫວ່າງວິທະຍາສາດ ແລະ ນະໂຍບາຍ ແຫ່ງຊາດ ສຳລັບ ລະບົບການຜະລິດກະສິກຳເປັນສະບຽງອາຫານ ຫຼື Guidance on strengthening national science-policy interfaces for agrifood systems
- CIRAF, FAO, EU. 2023. ການຫັນປ່ຽນ ລະບົບການຜະລິດສະບຽງອາຫານ: ຈາກ ການປະເມີນຜົນ ສູ່ ນະໂຍບາຍ ຫຼື Transforming food systems: from assessment to policy

# 7. ການສະໜອງທຶນ ໃຫ້ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

*"ຊຸກຍູ້ ໃຫ້ ບັນດາສະຖາບັນການເງິນຕ່າງໆ ສ້າງກົນໄກທາງການເງິນ ແລະ ເຄື່ອງມືປະກັນໄພ ທີ່ເປັນນະວັດຕະກຳ ເພື່ອສະໜັບສະໜູນ ການລົງທຶນ ໃສ່ ຂະແໜງກະສິກຳ ເວົ້າສະເພາະ ວິທີແກ້ໄຂການເຂົ້າເຖິງແຫຼ່ງທຶນ ທີ່ເໝາະສົມ ສຳລັບ ຜູ້ຜະລິດກະສິກຳຂະໜາດນ້ອຍ ເຊິ່ງລວມເອົາ ຊາວກະສິກອນທີ່ເຮັດການຜະລິດແບບຄອບຄົວ ໂດຍເປັນວິທີແກ້ໄຂ ທີ່ພິຈາລະຈາໄປຕາມທິດ ການພັດທະນາໄລຍະຍາວ."*

*– ບົດແນະນຳ ຂອງ ອາຊຽນ ກ່ຽວກັບ ການສົ່ງເສີມການລົງທຶນທີ່ມີຄວາມຮັບຜິດຊອບ ຕໍ່ ຂະແໜງສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (ອາຊຽນ RAI)*

ການຄ້ຳປະກັນ ການເຂົ້າເຖິງແຫຼ່ງທຶນ ຖືເປັນສິ່ງຈຳເປັນ ສຳລັບ ຊາວກະສິກອນ ເພື່ອລົງທຶນເຂົ້າໃນ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ. ນອກຈາກ ການຊ່ວຍເຫຼືອ ແລະ ການສະໜອງທຶນໂດຍກົງແລ້ວ, ຜູ້ສ້າງນະໂຍບາຍ ພາຍໃນ ບັນດາປະເທດສະມາຊິກ ອາຊຽນ ຕ້ອງດັດປັບບັນດານິຕິກຳ ແລະ ເຄື່ອງມືຕ່າງໆ ທາງດ້ານການເງິນ ແລະ ການລົງທຶນ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນອີກດ້ວຍ.

ບົດແນະນຳ ອາຊຽນ RAI ສະໜອງ ທິດນຳສຳຄັນ ເພື່ອຮັບປະກັນວ່າ ການລົງທຶນ ຂອງ ພາກເອກະຊົນ ຈະບໍ່ເຮັດໃຫ້ຄວາມບໍ່ສະເໝີພາບ ເຮັ່ງຮ້າຍຂຶ້ນໄປກວ່າເດີມ, ບໍ່ເປັນອັນຕະລາຍຕໍ່ຊີວິດການເປັນຢູ່ ຂອງ ຜູ້ຜະລິດກະສິກຳຂະໜາດນ້ອຍ, ຫຼື ບໍ່ເຮັດໃຫ້ຊັບພະຍາກອນທຳມະຊາດບົກແຫ້ງ. ບົດແນະນຳດັ່ງກ່າວ ສະໜອງຫຼັກການພື້ນຖານສຳຄັນ ສຳລັບ ບັນດາສະຖາບັນການເງິນ ແລະ ອົງການສະໜອງທຶນ ເພື່ອໃຊ້ເປັນບ່ອນອີງ ໃນເວລາ ສ້າງນະໂຍບາຍເງິນກູ້ ແລະ ເງິນຊ່ວຍເຫຼືອລ້າ, ຂົງເຂດໂຄງການຊ່ວຍເຫຼືອ, ແລະ ການຮ່ວມສະໜອງທຶນ ຂອງ ເຂົາເຈົ້າ ກັບ ຄູ່ຮ່ວມພັດທະນາອື່ນໆ.

ພົບວ່າການເງິນສີຂຽວທີ່ມີຄວາມຮັບຜິດຊອບ ມີການເຕີບໃຫຍ່ຂະຫຍາຍຕົວ ຢ່າງວ່ອງໄວ, ໂດຍມີແຫຼ່ງທຶນ ແລະ ເຄື່ອງມືການສະໜອງທຶນ ທີ່ຫຼາກຫຼາຍ. ຜູ້ສ້າງນະໂຍບາຍ ມີບົດບາດສຳຄັນຍິ່ງ ໃນການຊີ້ນຳ ແລະ ທົດລອງຈັດຕັ້ງປະຕິບັດ ບັນດາວິທີການສະໜອງທຶນທີ່ເປັນນະວັດຕະກຳໃໝ່ເຫຼົ່ານັ້ນ ເພື່ອສ້າງປະໂຫຍດ ຈາກ ທ່າແຮງການເງິນເພື່ອຄວາມຍືນຍົງຈະຊ່ວຍການຂ້າມຜ່ານ ຢູ່ຂັ້ນຮາກຖານ, ປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນ ແລະ ການຫາລ້ຽງຊີບຢູ່ເຂດຊົນນະບົດ, ແລະ ແກ້ໄຂຄວາມຕ້ອງການ ແລະ ຄຳໝາຍໝັ້ນທີ່ພົວພັນກັບ ວຽກງານແກ້ໄຂຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ, ວຽກງານສຸຂະພາບ ແລະ ໂພຊະນາການ, ການປັບປຸງຄຸນນະພາບຂອງດິນ, ວຽກງານການອະນຸລັກລະບົບນິເວດ ແລະ ຊີວະນາໆພັນ.

ມີ ສາມ **ບົດແນະນຳ** ກ່ຽວກັບ ການສະໜອງທຶນ ໃຫ້ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ:

- ບົດແນະນຳ 7.1 ສ້າງຂອບນິຕິກຳ ທີ່ເອື້ອອຳນວຍ ເພື່ອກຳນົດຈຸດປະສົງ ການສະໜອງທຶນ ຂອງ ພາກລັດ ແລະ ພາກເອກະຊົນຄືນໃໝ່ ໃນການຮັບໃຊ້ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ບົດແນະນຳ 7.2 ສ້າງຍຸດທະສາດນິເວດກະສິກຳແຫ່ງຊາດ ທີ່ມີຄວາມສອດຄ່ອງ ແລະ ຂອບແນະນຳ ທີ່ມີຄວາມຮັບຜິດຊອບ ເພື່ອຊີ້ນຳ ການສະໜອງທຶນຈາກສາກົນ ເຂົ້າໃນ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ບົດແນະນຳ 7.3 ສ້າງຕົວແບບທາງດ້ານການສະໜອງທຶນ ທີ່ເປັນນະວັດຕະກຳໃໝ່ ເຊິ່ງສາມາດແກ້ໄຂຄວາມຕ້ອງການ ຂອງຊາວກະສິກອນຜູ້ຜະລິດຂະໜາດນ້ອຍ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ພາຍໃນ ສະພາບເງື່ອນໄຂຕ່າງໆໄດ້ ພ້ອມທັງນຳໃຊ້ປະໂຫຍດ ຈາກ ການເງິນເພື່ອຄວາມຍືນຍົງ ຂອງ ສາກົນ

## ບົດແນະນຳ 7.1 ສ້າງຂອບນິຕິກຳ ທີ່ເອື້ອອຳນວຍ ເພື່ອກຳນົດຈຸດປະສົງການສະໜອງທຶນ ຂອງ ພາກລັດ ແລະ ເອກະຊົນ ຄືນໃໝ່ ໃນການຮັບໃຊ້ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

- ✓ ເສີມຂະຫຍາຍ ການເປັນຄູ່ຮ່ວມງານ ລະຫວ່າງ ພາກລັດ ແລະ ເອກະຊົນ ແລະ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ ຄຳໝາຍໝັ້ນ ແລະ ມາດຕະການຮ່ວມ ໃນການກ້າວ ໄປສູ່ ການສະໜອງທຶນ ໃຫ້ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ (ລະອຽດໃຫ້ເບິ່ງ ບົດແນະນຳ 1.5 ແລະ ບົດແນະນຳ 5).
- ✓ ປະຕິຮູບການໃຫ້ເງິນອຸດໜູນການຜະລິດກະສິກຳ ແລະ ສະບຽງອາຫານ ໄປຄຽງຄູ່ກັບ ລະບົບນຳເຂົ້າ/ສົ່ງອອກ ແລະ ນະໂຍບາຍດ້ານລາຄາ ເພື່ອສ່ອງແສງໃຫ້ເຫັນ ຕົ້ນທຶນທັງໝົດ ແລະ ຜົນປະໂຫຍດ ຂອງ ປັດໄຈການຜະລິດ ແລະ ຜົນຜະລິດ ກະສິກຳເປັນສະບຽງອາຫານ ເຊິ່ງໃນນີ້ລວມເອົາ ການປະເມີນຕົ້ນທຶນຢ່າງລະອຽດຮອບດ້ານ ຂອງ ລະບົບການຜະລິດກະສິກຳຕ່າງໆ ແລະ ຕ່ອງໂສ້ມູນຄ່າ ພ້ອມທັງ ລະບົບການຜະລິດ ແລະ ຕ່ອງໂສ້ມູນຄ່າ ແບບນິເວດກະສິກຳ (ລະອຽດໃຫ້ເບິ່ງ ບົດແນະນຳ 3.6 ແລະ ບົດແນະນຳ 6.1).
- ✓ ສະໜັບສະໜູນຂະແໜງທະນາຄານທຸລະກິດພາຍໃນ ທາງດ້ານຄວາມສາມາດຂອງທະນາຄານ ເພື່ອສ້າງເຄື່ອງມື ແລະ ມາດຕະຖານ ການເງິນເພື່ອຄວາມຍືນຍົງ ທີ່ດັດປັບໃສ່ ການສະໜອງທຶນ ໃຫ້ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ແລະ ການເຂົ້າເຖິງແຫຼ່ງທຶນ ສີຂຽວທີ່ມີຄວາມຮັບຜິດຊອບ
- ✓ ເອົາຂະແໜງທະນາຄານພາຍໃນ ແລະ ການເງິນຈຸລະພາກ ເຂົ້າມີສ່ວນຮ່ວມ ໃນການສະໜອງທຶນໃຫ້ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ (ຕ.ຢ: ເພື່ອຊ່ວຍຫຼຸດຜ່ອນຂະໜາດຂອງທຶນຕ່ຳສຸດ ແລະ ຄວາມສະດວກ ຂອງ ອົງການຈັດຕັ້ງ ແລະ ຊຸມຊົນທ້ອງຖິ່ນ ໃນການເຂົ້າເຖິງ ແຫຼ່ງທຶນ).

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ສົ່ງເສີມເຄື່ອງມືບົນພື້ນຖານຜົນການຈັດຕັ້ງປະຕິບັດ ໃນການປະຕິຮູບນິຕິກຳ ແລະ ການປັບປຸງບັນດານິຕິກຳຂອງຂະແໜງທະນາຄານ (ຕ.ຢ: ນຳໃຊ້ບົດແນະນຳ ເຄື່ອງມືການເງິນສີຂຽວ ຂອງອາຊຽນ).

- ເສີມຂະຫຍາຍການເປັນຄູ່ຮ່ວມງານ ລະຫວ່າງ ຂະແໜງການເງິນພາຍໃນ ແລະ ບັນດາສະຖາບັນການເງິນເພື່ອການພັດທະນາສາກົນ ທີ່ໃຫ້ການຊ່ວຍເຫຼືອຂະແໜງກະສິກຳ ເພື່ອຊ່ວຍສ້າງມາດຕະຖານ ແລະ ແບບວິທີປະຕິບັດທີ່ດີ ແລະ ສ້າງຄວາມສາມາດພາຍໃນປະເທດ ທາງດ້ານການສະໜອງທຶນແບບມີເງື່ອນໄຂ (ສົ່ງເສີມການລົງທຶນໃສ່ທີ່ດິນ ແບບຫັນປ່ຽນໃໝ່).
- ສະໜັບສະໜູນທະນາຄານພາຍໃນ ທີ່ເຮັດໜ້າທີ່ ເປັນຜູ້ສັງລວມ ບັນດາໂຄງການພັດທະນາສີຂຽວ ບົນພື້ນຖານນິເວດກະສິກຳ ແລະ ສ້າງກົນໄກການຄໍ້າປະກັນສີຂຽວ ເພື່ອຊ່ວຍ ວນກ (SMEs) ໃນການເຂົ້າເຖິງຕະຫຼາດທຶນໂດຍທາງອ້ອມ.
- ສ້າງຄວາມເຂັ້ມແຂງ ໃຫ້ ບັນດານິຕິກຳທີ່ພົວພັນ ກັບ ການຊົດເຊີຍທາງດ້ານສິ່ງແວດລ້ອມ ແລະ ນຳໃຊ້ເງິນຊົດເຊີຍ ຈາກ ບໍລິສັດຂະໜາດໃຫຍ່ ທີ່ລົງທຶນຜະລິດກະສິກຳເປັນສະບຽງອາຫານ ເພື່ອສະໜອງແຫຼ່ງທຶນໃຫ້ ບັນດາແຜນງານການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ
- ສານຕໍ່ຈາກ ການປັບປຸງການວາງນະໂຍບາຍໃນລະດັບພູມິພັດ ເພື່ອສົ່ງເສີມ ການແບ່ງຂັ້ນຄຸ້ມຄອງການດຸນດ່ຽງງົບປະມານຂອງຂະແໜງກະສິກຳ ໃຫ້ທ້ອງຖິ່ນ (ລະອຽດໃຫ້ເບິ່ງ ບົດແນະນຳ 1.3).

## ບົດແນະນຳ 7.2 ສ້າງຂອບຮັບຜິດຊອບ ແລະ ຍຸດທະສາດ ນິເວດກະສິກຳແຫ່ງຊາດ ທີ່ມີຄວາມສອດຄ່ອງ ເພື່ອຊີ້ນຳການສະໜອງທຶນໃນລະດັບສາກົນ ເຂົ້າໃສ່ ວຽກງານການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

✓ ສ້າງແຜນຍຸດທະສາດແຫ່ງຊາດ ແລະ ຂອບຮັບຜິດຊອບກ່ຽວຂ້ອງ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ໂດຍຮັບປະກັນ ໃຫ້ສອດຄ່ອງ ກັບ ບັນດາບູລິມະສິດຂອງລັດຖະບານ ທີ່ໄດ້ກຳນົດໄວ້ໃນ ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂການປ່ຽນແປງດິນຟ້າອາກາດ (NDCs), ຍຸດທະສາດຊີວະນາໆພັນແຫ່ງຊາດ ແລະ ແຜນດຳເນີນງານກ່ຽວຂ້ອງ - ເຊິ່ງຈະຊ່ວຍປັບປຸງ ຄວາມສາມາດໃນການດຶງດູດ ແລະ ຈັດສັນແຫຼ່ງທຶນແບບຍືນຍົງ ແລະ ການລົງທຶນ ທີ່ສ້າງຜົນປະໂຫຍດ (ລະອຽດໃຫ້ເບິ່ງ ເອກະສານຊ້ອນທ້າຍ O) - ຈາກ ບັນດານິຕິບຸກຄົນຫຼາກຫຼາຍ ທັງພາກລັດ ແລະ ເອກະຊົນ - ສູ່ ການເປັນຜູ້ສົ່ງເສີມ ແລະ ນະວັດຕະກອນ ທີ່ສະໜັບສະໜູນ ນິເວດກະສິກຳ ແລະ ການລົງທຶນພາຍໃນ ໃສ່ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.

✓ ລະບຸ ຫຼື ສ້າງ ຄະນະກຳມະການສະເພາະກິດລະດັບສູງ ທີ່ມີຕົວແທນ ຈາກ ຫຼາກຫຼາຍພາກສ່ວນກ່ຽວຂ້ອງ (ຕ.ຢ: ພະນັກງານລັດ, ຕົວແທນຈາກບັນດາອົງການ ສປຊ, NGOs, ແລະ ຜູ້ໃຫ້ທຶນ) ເຮັດໜ້າທີ່ຮັບຜິດຊອບການສ້າງຍຸດທະສາດສະໜອງທຶນ ໃຫ້ການຈັດຕັ້ງປະຕິບັດແຜນຍຸດທະສາດຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ແລະ ລະບຸເຄື່ອງມືການເງິນ ທີ່ເໝາະສົມ.

✓ ເຈລະຈາການສະໜອງທຶນ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳຂັ້ນທ້ອງຖິ່ນ ດ້ວຍ ກອງທຶນ ແລະ ຜູ້ລົງທຶນແບບຍືນຍົງ ເຊັ່ນ: ຜ່ານການເງິນແກ້ໄຂການປ່ຽນແປງດິນຟ້າອາກາດ ເຊິ່ງກວມເອົາເປົ້າໝາຍຫຼຸດ ຜ່ອນຜົນກະທົບ ແລະ ການປັບຕົວ ກໍຄື ສິນເຊື່ອຊີວະນາໆພັນ.

**ເພື່ອໃຫ້ບັນລຸໄດ້ເຊັ່ນນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ກຳນົດ ບັນດາຄາດໝາຍ ແລະ ຕົວຊີ້ບອກ ທີ່ຈະແຈ້ງ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຜ່ານການວາງນະໂຍບາຍທີ່ລວມເອົາທຸກຄົນ ແລະ ການຕິດຕາມ ແລະ ປະເມີນຜົນ (M&E) (ລະອຽດໃຫ້ເບິ່ງ ບົດແນະນຳ 1 ແລະ ເອກະສານຊ້ອນທ້າຍ B) ເພື່ອສ້າງຂອບຮັບຜິດຊອບ ແລະ ແຜນຍຸດທະສາດການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ທີ່ສອດຄ່ອງ ໂດຍພິຈາລະນາເອົາຄາດໝາຍ 10 ຂອງ ຂອບຊີວະນາໆພັນສາກົນ ຄຸນມິງ-ມອນທຣີອໍອນ ແລະ ບັນດາຜົນໄດ້ຮັບ ທີ່ສາມາດວັດ ແທກໄດ້ ທັງສຳລັບ ກິດຈະກຳຫຼຸດຜ່ອນຜົນກະທົບ ແລະ ປັບຕົວ.
- ລວມເອົາ ບັນດາຄາດໝາຍນິເວດກະສິກຳ ເຂົ້າໃນ ບັນດາແຜນການຕ່າງໆ ຂອງ ປະເທດ ຕ.ຢ: ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂການປ່ຽນແປງດິນຟ້າອາກາດ (NDCs), ຍຸດທະສາດ ແລະ ແຜນດຳເນີນງານ ຊີວະນາໆພັນ ແຫ່ງຊາດ ຕະຫຼອດເຖິງ ບັນດາຕົວຊີ້ບອກ ແລະ ຄາດໝາຍອື່ນໆ ທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ສາທາລະນະສຸກ ເຊິ່ງລວມທັງຄາດໝາຍ ແລະ ຕົວຊີ້ບອກ ທີ່ພົວພັນກັບ ລະບົບສະບຽງອາຫານ; ຮັບປະກັນຄວາມສອດຄ່ອງກັບ ເຄື່ອງມື ການກຳນົດເຂດ ແລະ ການວາງແຜນພັດທະນາຂະແໜງກະສິກຳ ແຫ່ງຊາດ.
- ນຳສະເໜີບັນດາຄາດໝາຍນິເວດກະສິກຳ (ແລະ ຄວາມຕ້ອງການງົບປະມານ ເພື່ອບັນລຸຄາດໝາຍກ່ຽວຂ້ອງ) ໃນຖານະເປັນ ຄວາມຕ້ອງການຍຸດທະສາດ ທີ່ມີບູລິມະສິດສູງ ໃນວາລະການເຈລະຈາ

ຮ່ວມມືສອງຝ່າຍ (ຕ.ຢ: ສັນຍາການຄ້າເສລີ, ສັນຍາການຄ້າຕ່າງໆ, ການເຈລະຈາແຜນງານຂໍຄວາມຊ່ວຍເຫຼືອ) ແລະ ວາລະການເຈລະຈາຮ່ວມມືສາກົນ (ຕ.ຢ: ກອງປະຊຸມລັດພາຄີ) ຕາມຄວາມເໝາະສົມ.

- ເສີມຂະຫຍາຍການນຳໃຊ້ ຂັ້ນຕອນການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ເພື່ອຕັດສິນໃຈຄັດເລືອກ ການລົງທຶນຂອງພາກລັດ ແລະ ເອກະຊົນ ໃສ່ຂະແໜງການຜະລິດກະສິກຳ ເປັນສະບຽງອາຫານ, ພ້ອມທັງ ລວມເອົາ ມາດຖານ/ຕົວຊີ້ບອກທາງດ້ານນິເວດກະສິກຳ ເຂົ້າໃນຂັ້ນຕອນການປະເມີນທີ່ກ່າວເຖິງນັ້ນ.

**►ເອກະສານອ້າງອີງເພີ່ມເຕີມ:**

- ບົດແນະນຳ ອາຊຽນ ກ່ຽວກັບ ການສົ່ງເສີມ ການລົງທຶນທີ່ມີຄວາມຮັບຜິດຊອບ ໃນຂະແໜງສະບຽງອາຫານ, ກະສິກຳ ແລະ ປ່າໄມ້
- ບົດແນະນຳ ເຄື່ອງມືການເງິນສີຂຽວ ອາຊຽນ
- ການລົງທຶນໃສ່ທີ່ດິນ ແບບທັນປ່ຽນ
- ກອງທຶນ ນິເວດກະສິກຳ

### ບົດແນະນຳ 7.3 ສ້າງຕົວແບບການເງິນນະວັດຕະກຳໃໝ່ ທີ່ແກ້ໄຂຄວາມຕ້ອງການ ຂອງ ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ເພື່ອຂ້າມຜ່ານ (ພາຍໃນຫຼາກຫຼາຍສະພາບເງື່ອນໄຂ) ໃນຂະນະທີ່ນຳໃຊ້ປະໂຫຍດ ຈາກ ການເງິນເພື່ອຄວາມຍືນຍົງສາກົນ

- ✓ ລະບຸບັນດາແຫຼ່ງທຶນ ແລະ ຕົວແບບການສະໜອງທຶນ ໃນຮູບການທີ່ຫຼາກຫຼາຍ, ປະເມີນຄວາມສາມາດ ຂອງ ແຫຼ່ງທຶນ ແລະ ຕົວແບບການສະໜອງທຶນ ເຫຼົ່ານັ້ນ ໃນການສະໜອງ ບັນດາຜະລິດຕະພັນການເງິນ ທີ່ສາມາດປັບປ່ຽນ ຕາມຄວາມຕ້ອງການ ຂອງ ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ.
- ✓ ເສີມຂະຫຍາຍການທົດລອງ ເຄື່ອງມື ແລະ ຕົວແບບການສະໜອງທຶນ ສຳລັບ ການຂ້າມຜ່ານໄປສູ່ການ ຜະລິດແບບ ນິເວດກະສິກຳ ໂດຍປັບ ຕົວແບບສະໜອງທຶນຂອງສາກົນ ໃຫ້ເຂົ້າກັບ ສະພາບເງື່ອນໄຂ ຂອງ ທ້ອງຖິ່ນ ເພື່ອສະໜັບສະໜູນ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ, ໝູນໃຊ້ວິທີ ການດຳເນີນງານແບບຮອບດ້ານ ທີ່ຕອບສະໜອງ ຄວາມຕ້ອງການ ຂອງ ຊາວກະສິກອນ ແລະ ພາກສ່ວນ ກ່ຽວຂ້ອງຂັ້ນທ້ອງຖິ່ນ ໃນການຂ້າມຜ່ານ ທາງດ້ານນິເວດກະສິກຳ ໃນຂະນະດຽວກັນກໍ່ຕອບສະໜອງ ການຕິດຕາມເບິ່ງໝາກຜົນ, ຄວາມຕ້ອງການ ຂໍການຢັ້ງຢືນ ແລະ ການບັນລຸຄາດໝາຍດ້ານຄວາມຍືນຍົງ ໃນລະດັບສາກົນ.
- ✓ ມອບໝາຍ ແລະ ສ້າງຄວາມສາມາດ ໃຫ້ອົງການລັດໃດໜຶ່ງ ເພື່ອຊີ້ນຳ ແລະ ຄຸ້ມຄອງ ການທົດລອງນຳໃຊ້ ເຄື່ອງມືການເງິນທີ່ເປັນນະວັດຕະກຳໃໝ່ ສຳລັບ ການສະໜອງທຶນ ໃຫ້ ການຂ້າມຜ່ານໄປສູ່ການຜະລິດ ແບບ ນິເວດກະສິກຳ (ຄືດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງ) ໂດຍຮັບປະກັນ ຄວາມສອດຄ່ອງ ກັບ ບັນດາ ຄາດໝາຍ ແຫ່ງຊາດ ແລະ ເຊື່ອມສານເຂົ້າໃນ ຍຸດທະສາດການສະໜອງທຶນບົນພື້ນຖານນິເວດກະສິກຳ (ລະອຽດໃຫ້ເບິ່ງ ບົດແນະນຳ 7.2)

**ເພື່ອບັນລຸໃຫ້ໄດ້ແນວນັ້ນ, ບັນດາ AMS ອາດຈະພິຈາລະນາ:**

- ຈັດຕັ້ງບັນດາຄວາມພະຍາຍາມ ແລະ ຄວາມຮູ້ຊຳນິຊຳນານ ຂອງ ບັນດາພາກສ່ວນກ່ຽວຂ້ອງຕ່າງໆ ເຊິ່ງລວມເອົາ ບັນດາສະຖາບັນການພັດທະນາ, ພາກສ່ວນເຮັດການຄົ້ນຄວ້າວິໄຈ, ແລະ NGOs ເພື່ອອອກແບບ, ທົດສອບ ແລະ ດັດປັບ ບັນດາເຄື່ອງມືການເງິນ ແບບຕໍ່ເນື່ອງ ເຊິ່ງສາມາດເຮັດໄດ້ ດ້ວຍການປະສົມປະສານ: 1) ການຊ່ວຍເຫຼືອທີ່ອອກແບບສະເພາະ ສຳລັບ ຊາວນາ ຜູ້ຜະລິດຂະໜາດນ້ອຍ ໃນການຂ້າມຜ່ານ ພາຍໃຕ້ສະພາບເງື່ອນໄຂຂອງທ້ອງຖິ່ນຕ່າງໆ; 2) ການຕິດຕາມທີ່ໜ້າເຊື່ອຖື ແລະ ການວັດແທກຜົນໄດ້ຮັບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ໃນທາງດ້ານປະລິມານ; ແລະ 3) ການປະສານງານລະຫວ່າງຂະແໜງການຕ່າງໆ ເພື່ອຕອບສະໜອງຄວາມຕ້ອງການ ຕົວແບບສະໜອງທຶນ ໃນຮູບແບບຕ່າງໆ; ແລະ 4) ການສະໜອງນະໂຍບາຍສົ່ງເສີມຊາວກະສິກອນ ທີ່ຈັດຕັ້ງປະຕິບັດການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ເຊິ່ງລວມເອົາ ບັນດາຍຸດທະສາດ ທີ່ເປັນນະວັດຕະກຳໃໝ່ ໃນການຫຼຸດຜ່ອນຄວາມສ່ຽງ (ລະອຽດໃຫ້ເບິ່ງ ຕົວຢ່າງ ໂຄງການລິເລີ່ມການເງິນເພື່ອບຸກເບີກຄວາມຍືນຍົງ ເດ ມີນ (Dei Meas) ຢູ່ ປະເທດກຳປູເຈຍ.
- ອອກແບບ ແລະ ທົດສອບ ເຄື່ອງມືການເງິນ ບົນພື້ນຖານ ການສະໜັບສະໜູນຊ່ວຍເຫຼືອຕາມຄວາມເໝາະສົມ, ຕອບສະໜອງຄວາມຕ້ອງການທີ່ຫຼາກຫຼາຍ ຂອງ ຊາວກະສິກອນ ແລະ ພາກສ່ວນກ່ຽວຂ້ອງຂັ້ນທ້ອງຖິ່ນ ໃນການຂ້າມຜ່ານ.
- ສະໜັບສະໜູນ ແຜນງານ ແລະ ໂຄງການ ໄລຍະຍາວ ທີ່ຊຸມຊົນທ້ອງຖິ່ນເປັນເຈົ້າການ ເຊິ່ງເຂົາເຈົ້າເປັນຜູ້ໃກ້ຊິດຕິດແທດສຸດ ກັບ ຊີວິດປະຈຳວັນ ຂອງ ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ, ຮັບປະກັນວ່າ ບັນດາຂໍ້ລິເລີ່ມກ່ຽວຂ້ອງ ຈະແກ້ໄຂຄວາມຕ້ອງການຂອງທ້ອງຖິ່ນໂດຍກົງ. ນຳໃຊ້ຜົນປະໂຫຍດຈາກ ການຄົ້ນຄວ້າວິໄຈ ແລະ ເຕັກໂນໂລຊີທີ່ເປັນນະວັດຕະກຳໃໝ່ ເພື່ອກຳນົດຫົວໜ່ວຍວັດແທກ ທີ່ເໝາະສົມ ສາມາດວັດແທກທາງດ້ານປະລິມານຕໍ່ຜົນໄດ້ຮັບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງ ບັນດາເສັ້ນທາງການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ (ລະອຽດໃຫ້ເບິ່ງ ບົດແນະນຳ 6.1) ເຊິ່ງຈະເປັນການຂັບເຄື່ອນ ການອອກແບບ ລະບົບການວັດແທກ, ລາຍງານ ແລະ ຢັ້ງຢືນ ທີ່ເປັນນະວັດຕະກຳໃໝ່. ນີ້ບໍ່ພຽງແຕ່ຈະຕອບສະໜອງຕໍ່ຄວາມຕ້ອງການທີ່ເພີ່ມສູງຂຶ້ນ ຈາກ ຂະແໜງການເງິນເພື່ອຄວາມຍືນຍົງ ທີ່ຢາກໃຫ້ເຫັນການຕິດຕາມ ແລະ ການລາຍງານໝາກຜົນເທົ່ານັ້ນ ແຕ່ຍັງດັດປັບສິ່ງເຫຼົ່ານັ້ນ ເພື່ອສະໜອງທຶນຢ່າງມີປະສິດທິຜົນ ໃຫ້ ເສັ້ນທາງການຂ້າມຜ່ານຂັ້ນທ້ອງຖິ່ນອີກດ້ວຍ.

### ►ເອກະສານອ້າງອີງເພີ່ມເຕີມ:

- ການສະໜອງທຶນໃຫ້ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ (ເດ ມີນ - Dei Meas)



# ການຈັດຕັ້ງປະຕິບັດ: ສ້າງຄວາມເຂັ້ມແຂງ ໃຫ້ຂະບວນການສ້າງນະໂຍບາຍ ໃນລະດັບຊາດ ແລະ ອາຊຽນ

ໜ່ວຍງານສິນທະນາຂະແໜງປູກຝັງ ອາຊຽນ (ASWGC) ແລະ ແຜນງານລາວດ້ານນິເວດກະສິກຳເພື່ອອາຊຽນ (LICA) ໃນຖານະເປັນກຸ່ມອ້າງອີງ ຂອງ ອາຊຽນ ຈະເຮັດບົດບາດຫຼັກແຫຼ່ງ ໃນການສົ່ງເສີມ ການຮັບຮອງ ແລະ ຈັດຕັ້ງປະຕິບັດ ບົດແນະນຳ ນະໂຍບາຍ ສະບັບນີ້:

- ຈຸດປະສານງານແຫ່ງຊາດ ຂອງ ASWGC, ຄະນະອື່ນໆ ພາຍໃຕ້ AMAF, LICA ແລະ ອື່ນໆ ມີບົດບາດສຳຄັນ ໃນການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ທັງຢູ່ໃນລະດັບພາກພື້ນ ແລະ ລະດັບຊາດ.
- ມາດຕະການຈັດຕັ້ງປະຕິບັດ ແລະ ຂອບເວລາ ທີ່ກຳນົດໄວ້ຂ້າງລຸ່ມນີ້ ມີເປົ້າໝາຍແນໃສ່ເພື່ອສ້າງຄວາມເຂັ້ມແຂງໃຫ້ ຂະບວນການສ້າງນະໂຍບາຍ ໃນລະດັບພາກພື້ນ ແລະ ການຕິດຕາມຊຸກຍູ້ໃນລະດັບປະເທດ ບົນພື້ນຖານຄວາມສະໝັກໃຈ.
- ການມີສ່ວນຮ່ວມທີ່ໜັກແໜ້ນຂຶ້ນ ທົ່ວບັນດາຂະແໜງການຕ່າງໆ ແລະ ຂະບວນການສ້າງນະໂຍບາຍ ຖືເປັນ ວິທີການດຳເນີນງານສຳຄັນ ໃນການຈັດຕັ້ງປະຕິບັດ.
- ການທົບທວນ ແລະ ປັບປຸງ ບົດແນະນຳ ສະບັບດັ່ງກ່າວ ເປັນແຕ່ລະໄລຍະ ແມ່ນຈະຢູ່ພາຍໃຕ້ການຊີ້ນຳນຳພາຂອງ LICA ໂດຍມີການສະໜັບສະໜູນຊ່ວຍເຫຼືອຈາກກອງເລຂາອາຊຽນ. ການທົບທວນ ແລະ ດັດແກ້ ບົດແນະນຳ ສະບັບດັ່ງກ່າວ ຈະຊ່ວຍເຜີຍແຜ່ ບົດແນະນຳ ສະບັບດັ່ງກ່າວ ໃຫ້ທົ່ວສັງຄົມຮັບຮູ້ ແລະ ຮັບປະກັນ ຄວາມຕໍ່ເນື່ອງດ້ານຄວາມສອດຄ່ອງ ແລະ ປະສິດທິຜົນ ຂອງ ບົດແນະນຳສະບັບດັ່ງກ່າວ.

**ຕາຕະລາງ 2. ມາດຕະການຈັດຕັ້ງປະຕິບັດ ໃນລະດັບຊາດ ແລະ ພາກພື້ນ, ພ້ອມຂອບເວລາ**

| ລະດັບຂອງມາດຕະການ ແລະ ພາກສ່ວນຮັບຜິດຊອບ | ຂອບເວລາ<br>ໄລຍະສັ້ນ | ໄລຍະກາງ ແລະ ຍາວ |
|---|---|---|
| *ການຈັດຕັ້ງປະຕິບັດໃນລະດັບພາກພື້ນ:*<br><br>ຄະນະອື່ນໆ ພາຍໃຕ້ AMAF, LICA | • ເຜີຍແຜ່ ບົດແນະນຳ ສະບັບນີ້ ແລະ ບົດແນະນຳກ່ຽວຂ້ອງອື່ນໆ ກ່ຽວກັບ ການຜະລິດກະສິກຳ ແບບຍືນຍົງ ໃນຖານະເປັນ “ຊຸດເອກະສານ”.<br>• ລະດົມຊັບພະຍາກອນ ສຳລັບ ການປັບປຸງການສົນທະນາແລກປ່ຽນ ແລະ ການເຄື່ອນໄຫວ ຂອງ LICA ດ້ວຍການສະໜັບສະໜູນຊ່ວຍເຫຼືອ ຂອງ ຄູ່ຮ່ວມພັດທະນາ.<br>• ເຜີຍແຜ່ ບົດແນະນຳ ສະບັບນີ້ ຮ່ວມກັບຄະນະຂະແໜງການອື່ນໆ ຂອງ ອາຊຽນຜ່ານກອງປະຊຸມສຳມະນາ.<br>• ສ້າງຄຳແນະນຳ ສຳລັບ ກິດຈະກຳຕິດຕາມຊຸກຍູ້ ໂດຍຄະນະຂະແໜງການກ່ຽວຂ້ອງຂອງ ອາຊຽນ.<br>• ສ້າງ ແລະ ເຜີຍແຜ່ ສື່ໂຄສະນາ ແລະເອກະສານອ້າງອີງທາງວິຊາການ ທີ່ເໝາະສົມ | • ຈະກຳນົດ ພາຍຫຼັງທາບທາມຂໍຄຳປຶກສາເພີ່ມເຕີມ. |
| **ການຈັດຕັ້ງປະຕິບັດລະດັບຊາດແບບສະໝັກໃຈ**<br><br>LICA ລະດັບຊາດ ແລະ ຈຸດປະສານງານ ASWGC, ຄະນະອື່ນໆ ພາຍໃຕ້ AMAF | • ທົບທວນ ແລະ ເຜີຍແຜ່ ບົດແນະນຳ ສະບັບນີ້ ໃນລະດັບຊາດ.<br>• ແຕ່ງຕັ້ງ ອົງການປະສານງານແຫ່ງຊາດ ສຳລັບ ການຊ່ວຍເຫຼືອທາງວິຊາການ ຕາມເຫັນວ່າ: ເໝາະສົມ. | • ຈະກຳນົດ ພາຍຫຼັງທາບທາມຂໍຄຳປຶກສາເພີ່ມເຕີມ. |

# ເອກະສານຊ້ອນທ້າຍ

## ເອກະສານອ້າງອີງສຳຄັນ

### ເອກະສານຊ້ອນທ້າຍ A. ທິດສະດີການປ່ຽນແປງ

ທິດສະດີການປ່ຽນແປງ ດັ່ງຕໍ່ໄປນີ້ ໄດ້ຮັບການສ້າງຂຶ້ນ ໂດຍໄດ້ຮັບການຊ່ວຍເຫຼືອ ຈາກ ໂຄງການປັບປຸງລະບົບນິເວດກະສິກຳ ແລະ ຄວາມປອດໄພຂອງອາຫານ(ASSET) ພ້ອມດ້ວຍ ພາກ ສ່ວນກ່ຽວສຳຄັນ ເຊິ່ງໃນນັ້ນລວມທັງ LICA, ພັນທະມິດການຮຽນຮູ້ນິເວດກະສິກຳ ໃນອາຊີຕາເວັນອອກສຽງໃຕ້ (ALiSEA), ອົງການ ກະສິກຳ ອະນຸລັກ ແລະ ເຂັ້ມຂຸ້ນແບບ ຍືນຍົງ (CASIC) ແລະ ອົງການຄູ່ຮ່ວມງານອາຊີ ສຳລັບ ການພັດທະນາຊັບພະຍາກອນມະນຸດຢູ່ເຂດຊົນນະບົດ (AsiaDHRRA) – ບົນພື້ນຖານ ຊຸດກອງປະຊຸມຂໍຄຳປຶກສາ ແລະ ກອງປະຊຸມສຳມະນາ ກັບ ພາກສ່ວນກ່ຽວຂ້ອງຕ່າງໆ, ແລະ ການສຳພາດ ບັນດາຜູ້ມີບົດບາດທາງດ້ານນະໂຍບາຍ ໂດຍນຳໃຊ້ ວິທີການຄິດອອກແບບ ໂດຍເອົາຄົນເປັນໃຈກາງ ແລະ ທິດສະດີການປ່ຽນແປງ ແບບມີສ່ວນຮ່ວມ. ທິດສະດີການປ່ຽນແປງ ໄດ້ກຳນົດຄຸນລັກສະນະ ຂອງ ສະພາບການປະຈຸບັນ, ເສັ້ນທາງການຂ້າມຜ່ານ, ຜົນດຳເນີນ ແລະ ຜົນກະທົບ ທີ່ສະແດງໃຫ້ເຫັນໂດຍ ບັນດາພາກສ່ວນກ່ຽວຂ້ອງຕ່າງໆ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຢູ່ພາກພື້ນອາຊຽນ.

**ຮູບສະແດງ A1. ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຢູ່ ອາຊຽນ – ທິດສະດີການປ່ຽນແປງ**



# ເອກະສານຊ້ອນທ້າຍ B. ການຕິດຕາມ ແລະ ການປະເມີນຜົນ (M&E) ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

ລະບົບວັດແທກຜົນການຈັດຕັ້ງປະຕິບັດ ທີ່ພຽງພໍ ແລະ ຂອບຕິດຕາມ ທີ່ເປັນເອກະພາບກັນ ຖືເປັນສິ່ງຈຳເປັນໃນການຕິດຕາມ ຄວາມຄືບໜ້າ ຂອງ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ, ປະເມີນປະສິດທິຜົນຄ່າໃຊ້ຈ່າຍ ຂອງ ເຄື່ອງມືທາງດ້ານນະໂຍບາຍ ທີ່ເລືອກນຳໃຊ້, ຮັບປະກັນ ການຮຽນຮູ້ ຈາກປະສົບການຕົວຈິງ, ແລະ ທ້າຍສຸດ ດຳເນີນການດັດປັບ ບັນດານະໂຍບາຍທີ່ກ່ຽວຂ້ອງ. ນອກຈາກນັ້ນ, ຍັງມີຄວາມຈຳເປັນ ທີ່ຕ້ອງລະບຸຄວາມຮັບຜິດຊອບ ໃຫ້ອີງການທີ່ເໝາະສົມ, ປະກອບສິດອຳນາດ ແລະ ຊັບພະຍາກອນ ເພື່ອຊີ້ນຳວຽກງານຕິດຕາມ ແລະ ປະເມີນຜົນ (M&E) ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ໃນລະດັບຊາດ. ດີແທ້, ຂອບ ແລະ ລະບົບ M&E ຄວນສະໜອງປັດໄຈສິ້ນເຂົ້າໂດຍກົງ ໃຫ້ ຂະບວນການສ້າງນະໂຍບາຍ ແລະ ການກຳນົດວາລະ, ວາລະການຄົ້ນຄວ້າວິໄຈ ໃນໄລຍະຍາວ, ການທົບທວນ ແລະ ຕິດຕາມຊຸກຍູ້ ແບບໂປ່ງໃສ ແລະ ລວມເອົາທຸກພາກສ່ວນ ຕາມທີ່ເຫັນວ່າ ສອດຄ່ອງ ແລະ ເໝາະສົມ ກັບ ສະພາບເງື່ອນໄຂ ຂອງ ແຕ່ລະປະເທດ.

## ຕິດຕາມ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ໃນລະດັບຕ່າງໆ

ຂອບວັດແທກການພັດທະນາຂະແໜງກະສິກຳ ທີ່ມີຢູ່ປະຈຸບັນ ມີທ່າອ່ຽງສຸມໃສ່ ຜົນຜະລິດ, ບໍລິມາດ ແລະ ລາຍໄດ້, ບໍ່ໄດ້ໃຫ້ຄວາມສຳຄັນ ພາລະບົດບາດທີ່ຫຼາກຫຼາຍ ຂອງ ຂະແໜງກະສິກຳ (ເຄຣອນ ແລະ ຜູ້ອື່ນໆ - *Caron et al.*, 2008). ການຕິດຕາມ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຈຳເປັນຕ້ອງມີການປະເມີນ ມາດຖານໃນຂອບເຂດກວ້າງ ໃນສາມລະດັບຕ່າງກັນ ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງຂ້າງລຸ່ມນີ້.

| ລະດັບລະບົບ | ຕົວຢ່າງ ຕົວຊີ້ບອກ |
| --- | --- |
| ເສດຖະກິດ-ສັງຄົມມະຫາພາກ | ການຄ້ຳປະກັນ ແລະ ຄວາມປອດໄພ ສະບຽງອາຫານ, ການລົງທຶນໃສ່ນິເວດກະສິກຳ, ການຄ້າ ແລະ ການຈ້າງງານ, ຄວາມສາມາດດ້ານການຄົ້ນຄວ້າວິໄຈ ແລະ ການສົ່ງເສີມກະສິກຳ |
| ພູມມິທັດ ແລະ ເຂດ | ຊີວະນາໆພັນ, ການຄ້ຳປະກັນສິດນຳໃຊ້ທີ່ດິນ, ການນຳໃຊ້ຊັບພະຍາກອນໝູນວຽນ, ການປະຕິບັດຕາມນິຕິກຳ, ການບໍລິໂພກອາຫານທີ່ຫຼາກຫຼາຍ |
| ທົ່ງນາ ແລະ ຟາມຜະລິດກະສິກຳ | ຜະລິດຕະພາບ, ຄວາມອຸດົມສົມບູນຂອງດິນ, ຄວາມສ່ຽງຖືກກະທົບຈາກຢາປາບສັດຕູພືດ, ປະສິດທິພາບໃນການນຳໃຊ້ນ້ຳ, ການປ່ອຍທາດອາຍພິດເຮືອນແກ້ວ (GHG) |

## ຫັນ ຂະບວນການ M&E ເຂົ້າກັບສະພາບເງື່ອນໄຂທ້ອງຖິ່ນ

ການມີ ສັນຍາໃນລະດັບພາກພື້ນ ກ່ຽວກັບ ຕົວຊີ້ບອກໃຈກາງ ອາດຈະຊ່ວຍສະໜັບສະໜູນ ລະບົບ M&E ແບບສະມັກໃຈ ໃນລະດັບປະເທດ. ຢ່າງໃດກໍດີ, ແຕ່ລະປະເທດ ຄວນສາມາດດັດປັບ ໃຫ້ເຂົ້າກັບສະພາບເງື່ອນໄຂທ້ອງຖິ່ນ ພາຍໃນປະເທດຂອງຕົນ. ຈຸດສຸມ ຄວນເນັ້ນໃສ່ ຕົວຊີ້ບອກທີ່ສາມາດເຂົ້າໃຈໄດ້ງ່າຍ ແລະ ຕິດຕາມໄດ້ໃນຕົວຈິງ ເຊິ່ງສາມາດເກັບ, ຮັກສາ ແລະ ສື່ສານ ຂໍ້ມູນ ສຳລັບ ຕົວຊີ້ບອກຕ່າງໆ ໃຫ້ ພາກສ່ວນກ່ຽວຂ້ອງ ຮັບຮູ້ໄດ້ ຕາມໄລຍະເວລາ. ທາງເລືອກ, ໜ້າທີ່ຮັບຜິດຊອບ, ຂະບວນການ ແລະ ເຄື່ອງມື ທີ່ພົວພັນກັບ ຕົວຊີ້ບອກ ຄວນພິຈາລະນາເບິ່ງ ຄາດໝາຍຜົນດຳເນີນງານ ໃນດ້ານ ເນື້ອໃນ, ຮູບແບບ, ກຳນົດເວລາ ແລະ ຄວາມສາມາດເຂົ້າເຖິງ ໄດ້ ໂດຍບັນດາພາກສ່ວນກ່ຽວຂ້ອງຕົ້ນຕໍ.

## ເອົາ ພາກສ່ວນກ່ຽວຂ້ອງ ເຂົ້າມາມີສ່ວນຮ່ວມ

ວິທີການເຮັດວຽກ ແບບຮ່ວມສ້າງ ແລະ ມີສ່ວນຮ່ວມ ຈະສະໜັບສະໜູນທຸກໄລຍະ ຂອງ ການຕິດຕາມ ແລະ ປະເມີນຜົນ (M&E). ຄອບຄົວຊາວກະສິກອນ, ບໍລິສັດຜະລິດກະສິກຳເປັນສະບຽງອາຫານ, ອົງການລັດ, NGOs ແລະ ຜູ້ໃຫ້ທຶນ ຖືເປັນສ່ວນໜຶ່ງ ຂອງ ພາກສ່ວນກ່ຽວຂ້ອງ ທີ່ສາມາດເຂົ້າມີສ່ວນຮ່ວມ ໃນການລະບຸຕົວຊີ້ບອກ, ການເກັບກຳ ແລະ ວິເຄາະຂໍ້ມູນ ແລະ ຍັງສາມາດ ໄດ້ຮັບປະໂຫຍດ ຈາກ ຄວາມຮູ້ ທີ່ຖືກສ້າງຂຶ້ນຜ່ານລະບົບ M&E. ເປັນໄປໄດ້ສູງ ທີ່ແຕ່ລະກຸ່ມ ຈະນຳໃຊ້ ຜົນໄດ້ຮັບ M&E ເພື່ອປັບປຸງຜົນການຈັດຕັ້ງປະຕິບັດຂອງຕົນ ໂດຍສົມທຽບໃສ່ ຕົວຊີ້ບອກດ້ານນິເວດກະສິກຳ ຖ້າເຂົາເຈົ້າ ຫາກມີສ່ວນຮ່ວມຕະຫຼອດຂະບວນການ M&E. ການປ່ຽນແປງຮູບແບບການນຳໃຊ້ທີ່ດິນ, ທ່າອ່ຽງໃນວິທີການຜະລິດ, ລະດັບການປ່ອຍທາດອາຍພິດເຮືອນແກ້ວ ແລະ ສິ່ງຕົກຄ້າງ, ການປະຕິບັດຕາມນິຕິກຳ ແລະ ພຶດຕິກຳ ຂອງຕະຫຼາດ ເປັນສ່ວນໜຶ່ງ ຂອງ ກຸ່ມ

ຕົວຊີ້ບອກ ທີ່ສາມາດຕິດຕາມໄດ້ ຜ່ານເຕັກໂນໂລຊີດີຈິຕອນ ເຊິ່ງລວມທັງ ເຊັນເຊີແບບມືຖື, ແອັບໃນໂທລະສັບມືຖືທີ່ທັນສະໄໝ, ການຖ່າຍພາບທາງໄກ, ເຄື່ອງບິນແບບບັງຄັບ, ເຕັກໂນໂລຊີໂຮບອດຕິກສ໌ ແລະ ເຄືອຂ່າຍຂໍ້ມູນຜູກພັນ (ບລ໋ອກເຊນ), ແລະ ອື່ນໆ.

ເຄື່ອງມືດັ່ງຕໍ່ໄປນີ້ ແມ່ນໄດ້ຮັບການທົດສອບແລ້ວ ຢູ່ຫຼາຍປະເທດ ທີ່ລວມເອົາການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງໃນວົງກວ້າງ. ເຄື່ອງມືແຕ່ລະຢ່າງ ຖືກອອກແບບມາເພື່ອ ປະເມີນດ້ານຕ່າງໆ ຂອງ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ.

| ເຄື່ອງມື M&E | ຜູ້ນຳໃຊ້ຫຼັກ | ເອກະສານອ້າງອີງອອນລາຍ |
|---|---|---|
| ເຄື່ອງມື ສຳລັບ ການປະເມີນຜົນຈັດຕັ້ງປະຕິບັດທາງດ້ານນິເວດກະສິກຳ | ຜູ້ຜະລິດ (ຊາວກະສິກອນ, ກຸ່ມປູກຝັງ, ຜູ້ໃຫ້ຄຳປຶກສາທາງດ້ານເຕັກນິກວິຊາການ), ຜູ້ສ້າງນະໂຍບາຍ ແລະ ພາກສ່ວນກ່ຽວຂ້ອງໃນວຽກງານການພັດທະນາ | ► ເອກະສານອ້າງອີງອອນລາຍ<br>► ບົດແນະນຳ |
| ໜ່ວຍງານສົນທະນາ ກ່ຽວກັບວິທີການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ | ພາກສ່ວນກ່ຽວຂ້ອງໃນວຽກງານການພັດທະນາ | ► ຄູ່ມື |
| ເຄື່ອງມືມາດຖານນິເວດກະສິກຳ ສຳລັບ ພາກທຸລະກິດ | ພາກເອກະຊົນ: ຜູ້ລົງທຶນ, ຜູ້ປະກອບການ ແລະ ບໍລິສັດຕ່າງໆ | ► ເອກະສານອ້າງອີງອອນລາຍ<br>► ຊຸດເຄື່ອງມື |
| ຊຸດເຄື່ອງມືວິເຄາະການສະໜອງທຶນ ໃຫ້ການຂ້າມຜ່ານທາງ ດ້ານນິເວດກະສິກຳ: | ພາກລັດ: ກະຊວງແຜນການ ແລະ ອົງການພັດທະນາ | ► ເອກະສານອ້າງອີງອອນລາຍ<br>► ຊຸດເຄື່ອງມື |

## ເອກະສານຊ້ອນທ້າຍ C. ຊັບພະຍາກອນ ຂອງ ອົງການ ທີ່ໃຫ້ການຊ່ວຍເຫຼືອ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ

ຕາຕະລາງຂ້າງລຸ່ມ ສະໜອງລາຍລະອຽດ ຂອງ ອົງການຈັດຕັ້ງສາກົນ ທີ່ໃຫ້ການຊ່ວຍເຫຼືອ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ ຢູ່ອາຊີຕາເວັນອອກສຽງໃຕ້. ໃນນີ້ ລວມເອົາ ບັນດາອົງການຈັດຕັ້ງ ທີ່ມີຫ້ອງການຢູ່ ພາຍໃນພາກພື້ນ ຫຼື ເປັນຄູ່ຮ່ວມງານ ກັບ ຫຼາຍກວ່າໜຶ່ງປະເທດສະມາຊິກອາຊຽນ ແຕ່ບໍ່ໄດ້ລວມເອົາ ອົງການຈັດຕັ້ງໃນລະດັບປະເທດ ແລະ ໂຄງການພັດທະນາໃນລະດັບປະເທດ.

| ຊື່ | ເວັບໄຊ໋ | ຂົງເຂດຈຸດສຸມ |
|---|---|---|
| ພັນທະມິດການຮ່ວມມືນິເວດກະສິກຳ | Agroecology Coalition | ການຮ່ວມມືສາກົນ ເພື່ອຫັນປ່ຽນລະບົບສະບຽງອາຫານ ຜ່ານນິເວດກະສິກຳ |
| ພັນທະມິດການຮຽນຮູ້ນິເວດກະສິກຳໃນອາຊີຕາວັນອອກສຽງໃຕ້ | ALiSEA | ການແລກປ່ຽນຄວາມຮູ້ ລະຫວ່າງ ຜູ້ຈັດຕັ້ງປະຕິບັດນິເວດກະສິກຳຕົວຈິງ ເວົ້າສະເພາະ ລະຫວ່າງ NGOS ແລະ CSOs |
| ອົງການ ນິເວດກະສິກຳ ຢູ່ອາຊີຕາເວັນອອກສຽງໃຕ້ | ASEA | ການເປັນຄູ່ຮ່ວມງານ ດ້ານການຄົ້ນຄວ້າວິໄຈ ແລະ ການຝຶກອົບຮົມ ລະຫວ່າງ 13 ສະຖາບັນສຶກສາ ແລະ ຄົ້ນຄວ້າວິໄຈ |
| ເວທີການເປັນຄູ່ຮ່ວມງານຫັນປ່ຽນນິເວດກະສິກຳ | Agroecology TPP | ຊຸດຊົມການຈັດຕັ້ງປະບັດ ເພື່ອປັບປຸງຊີວິດການເປັນຢູ່ ແລະ ພູມີທັດ ທີ່ມີຄວາມທົນທານ |
| ເຄືອຂ່າຍ ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ອາຊຽນ | ASEAN-CRN | ສົ່ງເສີມ ຂະແໜງກະສິກຳ ອັດສະລິຍະ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ລະຫວ່າງບັນດາປະເທດສະມາຊິກອາຊຽນ |
| ເຄືອຂ່າຍ ບໍລິການໃຫ້ຄຳປຶກສາ ການພັດທະນາຊົນນະບົດ ຢູ່ອາຊີ ແລະ ເກາະປາຊີຟິກ | APIRAS | ສ້າງເຄືອຂ່າຍ ສົ່ງເສີມກະສິກຳ ທີ່ເຂັ້ມແຂງກວ່າເກົ່າ ພາຍໃນພາກພື້ນ ຊຶ່ງລວມທັງ ບັນດາເຄືອຂ່າຍຍ່ອຍ ສຳລັບ ອາຊີຕາເວັນອອກສຽງໃຕ້ |
| ສະມາຄົມຊາວກະສິກອນອາຊີ ເພື່ອການພັດທະນາຊົນນະບົດແບບຍືນຍົງ | AFA | ພັນທະມິດ ຂອງ ບັນດາອົງການຈັດຕັ້ງຊາວກະສິກອນ ໃນລະດັບຊາດ ໂດຍເປັນອົງການທີ່ປະກອບດ້ວຍຄອບຄົວຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ |
| ການເປັນຄູ່ຮ່ວມງານອາຊີ ເພື່ອການພັດທະນາຊັບພະຍາກອນມະນຸດ ຢູ່ເຂດຊົນນະບົດ | AsiaDHRAA | ການເປັນຄູ່ຮ່ວມງານລະດັບພາກພື້ນ ຂອງ ເຄືອຂ່າຍ ແລະ ອົງການຈັດຕັ້ງ ການພັດທະນາສັງຄົມ |

| ຊື່ | ເວັບໄຊ໋ | ຂົງເຂດຈຸດສຸມ |
|---|---|---|
| ສູນ ວິທະຍາສາດຊີວະ ແລະ ກະສິກຳ ສາກົນ - ອາຊີຕາເວັນອອກສຽງໃຕ້ | CABI-SEA | ການໃຫ້ບໍລິການທາງດ້ານວິທະຍາສາດ ເພື່ອ ກະສິກຳຍືນຍົງ ຊຶ່ງລວມທັງ ມາດຕະຖານທາງດ້ານອະນາໄມ ພືດ ແລະ ສັດ, ແລະ ການຄວບຄຸມຊີວະ |
| ສູນຄວາມຮູ້ນິເວດກະສິກຳ ຂອງ FAO (AKH) | AKH | ສູນລວມເອກະສານ, ນະໂຍບາຍ, ແບບວິທີປະຕິບັດ ແລະ ຄວາມກ້າວໜ້າທາງດ້ານວິທະຍາສາດ ໃນສາຂາ ນິເວດກະສິກຳ |
| ໂກຣ ອາຊີ | Grow Asia | ສົ່ງເສີມ ການເປັນຄູ່ຮ່ວມງານລະຫວ່າງ ພາກລັດ ແລະ ເອກະຊົນ ສຳລັບ ລະບົບສະບຽງອາຫານຍືນຍົງ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ |
| ການສຶກສາຂັ້ນສູງ ສາຂາ ກະສິກຳຍືນຍົງ (HESA) ຢູ່ອາຊີຕາເວັນອອກສຽງໃຕ້ | HESA | ແລກປ່ຽນຄວາມຮູ້ ຂະແໜງ HESA, ແລະ ຄົ້ນຄວ້າ ການປະຕິຮູບຫຼັກສູດການຮຽນການສອນ ແບບຫຼາຍສາຂາວິຊາ |
| ການເຊື່ອມໂຍງ ຕະຫຼາດ ແລະ ກະສິກຳ ເພື່ອລະບົບສະບຽງອາຫານຍືນຍົງ ຢູ່ອາຊີ | Malica | ການເປັນຄູ່ຮ່ວມງານ ດ້ານການຄວ້າວິໄຈ ກ່ຽວກັບ ການວິເຄາະຕະຫຼາດອາຫານ ແລະ ການເຊື່ອມໂຍງຕົວເມືອງ/ຊົນນະບົດ ຢູ່ຫວຽດນາມ ແລະ ສປປ ລາວ |

| | | |
|---|---|---|
| ເຄືອຂ່າຍຊາວກະສິກອນໄວໜຸ່ມແມ່ຂອງ | Y-Farm | ເປັນຄູ່ຮ່ວມງານ ກັບ ຊາວກະສິກອນໄວໜຸ່ມ ແລະ ກຸ່ມໄວໜຸ່ມ ໃນຫ້າປະເທດລຸ່ມແມ່ນ້ຳຂອງ |
| ເຄືອຂ່າຍແກ້ໄຂຢາປາບສັດຕູພືດອາຊີ-ປາຊີຟິກ | PAN-AP | ໂຄສະນະສົ່ງເສີມ ການປ່ຽນແທນ ການຜະລິດກະສິກຳ ແບບໃຊ້ເຄມີເຂັ້ມຂຸ້ນ ດ້ວຍນິເວດກະສິກຳ |
| ສູນຄວາມຮູ້ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂະແໜງກະສິກຳ ແລະ NRM ຂອງ SEARCA | SEARCA KC3 | A one-stop-shop of information on climate change adaptation and mitigation in Southeast Asia |
| ເວທີສິນທະນາແລກປ່ຽນ ການຜະລິດເຂົ້າແບບຍືນຍົງ | SRP | ພັນທະມິດຫຼາກຫຼາຍພາກສ່ວນກ່ຽວຂ້ອງ ເພື່ອຫຼຸດຜ່ອນຜົນກະທົບທາງດ້ານສັງຄົມແລະສິ່ງແວດລ້ອມ ໃນການຜະລິດເຂົ້າ |

## ເອກະສານຊ້ອນທ້າຍ D. ຖາມ-ຕອບ ກ່ຽວກັບ ນິເວດກະສິກຳ

### ຖ1: ຫຼັກໆແລ້ວ ລະບົບນິເວດກະສິກຳ ແມ່ນ ສຳລັບ ໄຮ່-ນາ ຫຼື ຟາມ ຂະໜາດນ້ອຍ ບໍ?

**ຕ:** ທັງລະບົບການຜະລິດແບບດັ້ງເດີມຂະໜາດນ້ອຍ ແລະ ລະບົບນິເວດກະສິກຳ ທີ່ເຮັດການຜະລິດຂະໜາດໃຫຍ່ ສາມາດເປັນຈຸດເລີ່ມຕົ້ນ ຂອງ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ (ຮູບສະແດງ A1). ໃນຂະນະທີ່ ຕົວຢ່າງຄວາມສຳເລັດການເຊື່ອມສານນິເວດກະສິກຳ ທີ່ມີໃນປະຈຸບັນ ສ່ວນຫຼາຍ ພົບເຫັນ ຢູ່ ຟາມທີ່ເຮັດການຜະລິດແບບຄອບຄົວ ແລະ ເປັນຜູ້ຜະລິດຂະໜາດນ້ອຍ ແຕ່ນັບມື້ນັບມີການຮຽກຮ້ອງໃຫ້ ຟາມຂະໜາດໃຫຍ່ ເຂົ້າຮ່ວມການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ. ຟາມເຫຼົ່ານັ້ນ ອາດຈະໃຊ້ປະໂຫຍດຈາກໂອກາດເຕັກໂນໂລຊີໃໝ່ (ເຊັ່ນ: ການຫັນເປັນດີຈີຕອນ ແລະ ການປະສົມພັນ) ເພື່ອເຊື່ອມສານ ນິເວດກະສິກຳ ແລະ ມີບົດບາດສຳຄັນໃນການປະກອບ ສ່ວນສ້າງແວດລ້ອມທີ່ເອື້ອອຳນວຍ ສຳລັບ ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ. (ອີເວີດ ແລະ ຜູ້ອື່ນໆ- Ewert *et al.*, 2023)

**ຮູບສະແດງ D1. ການຂ້າມຜ່ານໄປສູ່ການຜະລິດແບບນິເວດກະສິກຳ**



ແຫຼ່ງຂໍ້ມູນ: ຜູ້ຂຽນ, ດັດປັບ ຈາກ ການພັນທະມິດນິເວດກະສິກຳ (Agroecology coalition), 2019

### ຖ2: ນິເວດກະສິກຳ ເຮັດໃຫ້ຜະລິດຕະພາບການຜະລິດຫຼຸດລົງ ບໍ?

**ຕ:** ຫຼາກຫຼາຍການສຶກສາ ຄ້ານແນວຄວາມຄິດທີ່ວ່າ: ລະບົບນິເວດກະສິກຳ ມີຜະລິດຕະພາບ ຕ່ຳກວ່າ ຮູບແບບການຜະລິດກະສິກຳ "ແບບທົ່ວໄປ" ຫຼື "ແບບອຸດສາຫະກຳ" ຊຶ່ງເປັນການຜະລິດ ແບບເຂັ້ມຂຸ້ນ ແລະ ລົງເລິກ. ການຄົ້ນຄວ້າວິໄຈ ຕະຫຼອດ ສອງທົດສະວັດຜ່ານມາ (ຕ.ຢ: ພຣິດຕີ ແລະ ຜູ້ອື່ນໆ - *Pretty et al.*, 2003; ເດີ ຊັດເຕີ - *De Shutter*, 2010, 2012; ພອນນີຊີໂອ ແລະ ຜູ້ອື່ນໆ - *Ponisio et al.* 2015; ເຣຈີໂນ ແລະ ແວັກເທີມ - *Reginold and Wachterm*, 2016) ໄດ້ເນັ້ນໜັກໃຫ້ເຫັນຕົວຢ່າງ ເປັນຈຳນວນຫຼາຍ ໂດຍສະເພາະ ຈາກ ບັນດາພາກພື້ນຮ້ອນຊຸ່ມ ແລະ ພາກພື້ນຮ້ອນຊຸ່ມຕອນລຸ່ມ ໂດຍສະແດງໃຫ້ເຫັນ ການເພີ່ມຂຶ້ນຂອງຜົນຜະລິດ ທີ່ສາມາດສັງເກດເຫັນໄດ້ແຈ້ງ ຈາກການຜະລິດແບບນິເວດກະສິກຳ ຫຼື ແບບປອດສານພິດ. ພຣິດຕີ ແລະ ຜູ້ອື່ນໆ - *Pretty et al.* (2003) ລາຍງານ ຕົວເລກເພີ່ມຂຶ້ນສະເລ່ຍແບບໃສ່ນ້ຳໜັກ ໃນລະດັບ 37 ສ່ວນຮ້ອຍ ຕໍ່ ຟາມ ແລະ 48 ສ່ວນຮ້ອຍ ຕໍ່ ເຮັກຕາ. ນອກຈາກນີ້, ດີແອນໂນໂຟ ແລະ ຜູ້ອື່ນໆ - *d'Annolfo et al.* (2017) ໄດ້ເຮັດການວິເຄາະເມຕາ ໂດຍຜົນການວິເຄາະສະແດງໃຫ້ເຫັນວ່າ: ຜົນການຜະລິດ ເພີ່ມຂຶ້ນ ໃນ 61 ສ່ວນຮ້ອຍ ຂອງ ບັນດາກໍລະນີການຜະລິດ ທີ່ນຳໃຊ້ການຜະລິດແບບນິເວດກະສິກຳ ເຖິງວ່າ: ອີກ 20 ສ່ວນຮ້ອຍ ພົບວ່າ: ມີການຫຼຸດລົງ, ພ້ອມນັ້ນ ຍັງພົບວ່າ: ຜົນກຳໄລຂອງຟາມ ເພີ່ມຂຶ້ນ ໃນ 66 ສ່ວນຮ້ອຍ ຂອງ ບັນດາກໍລະນີ ທີ່ນຳໃຊ້ການຜະລິດແບບນິເວດກະສິກຳ. ຢ່າງໃດກໍດີ, ຍ້ອນວ່າ: ຍັງມີການລົງທຶນຕ່ຳ ໃສ່ການຄົ້ນຄວ້າວິໄຈ ກ່ຽວກັບ ນິເວດກະສິກຳ, ຄວາມເປັນຕົວແທນ ຂອງ ກໍລະນີ ທີ່ມີການສຶກສາ ແລະ ບາງດ້ານສະເພາະ ຂອງ ວິທີການຜະລິດແບບນິເວດກະສິກຳ ທີ່ນຳໄປສູ່ ການປັບປຸງຜົນຜະລິດ ແລະ ກຳໄລ ຍັງຄົງບໍ່ຈະແຈ້ງ (CFS-HLPE, 2019).

### ຄຖ3: ນິເວດກະສິກຳ ສະມາດສະໜອງສະບຽງອາຫານລ້ຽງຄົນ ໄດ້ທົ່ວໂລກ ບໍ?

**ຕ:** ບາງການປະເມີນ ບອກໃຫ້ຮູ້ວ່າ: ການຜະລິດສະບຽງອາຫານໃນປະຈຸບັນ ມີທ່າແຮງລ້ຽງຄົນໄດ້ 9 ຕື້ ຄົນ. ການຖົກຖຽງ ກ່ຽວກັບວ່າ: ນິເວດກະສິກຳ ສາມາດສະໜອງສະບຽງອາຫານລ້ຽງຄົນ ໄດ້ທົ່ວໂລກບໍ ແມ່ນອາດຈະມາຈາກ ຂໍ້ສົມມຸດຖານທີ່ຜິດ ຍ້ອນ ບັນຫາການຂາດໂພຊະນາການ ແລະ ການຂາດການຄ້ຳປະກັນສະບຽງອາຫານ ຍັງຄົງມີຢູ່ ເຖິງແມ່ນວ່າ ການຜະລິດສະບຽງອາຫານຈະຢູ່ລະດັບສູງກໍຕາມ, ແມ່ນແຕ່ໃນບັນດາປະເທດ

ທີ່ສົ່ງອອກສະບຽງອາຫານ ເຊັ່ນ: ເບຣຊິນ ແລະ ອາຟຣິກາໃຕ້. ດັ່ງນັ້ນ, ພຽງແຕ່ເພີ່ມການຜະລິດ ອາດຈະບໍ່ພຽງພໍ ທີ່ຈະບັນລຸ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໃນທຸກມິຕິ: ການມີສະໜອງໃຫ້, ການເຂົ້າເຖິງ, ການນໍາໃຊ້ປະໂຫຍດ, ສະຖຽນລະພາບ, ອໍານາດໃນການຕັດສິນໃຈຂອງຜູ້ບໍລິໂພກ, ແລະ ຄວາມຍືນຍົງ.ນອກຈາກນັ້ນ, ຍັງມີການຮັບຮູ້ທີ່ເພີ່ມຂຶ້ນວ່າ: ໄພອຶດຫິວ ແລະ ບັນຫາການຂາດໂພຊະນາການ ອາດຈະເກີດຈາກ ບັນຫາສິດທີ່ຄວນໄດ້ຮັບ ແລະ ການເຂົ້າເຖິງ ສະບຽງອາຫານ, ຊັບພະຍາກອນທໍາມະຊາດ (ທີ່ດິນ, ນໍ້າ, ຊັບພະຍາກອນພັນທຸກໍາ), ປັດໄຈການຜະລິດ, ຕະຫຼາດ ແລະ ບໍລິການ ໃນລັກສະນະບໍ່ສະເໝີພາບ ແບບນັ້ນຫຼາຍກວ່າ. ດ້ວຍເຫດນັ້ນ, ວິທີການຜະລິດແບບນິເວດກະສິກໍາ ຈຶ່ງຖືກເບິ່ງວ່າ: ມີຄວາມເປັນໄປໄດ້ ທີ່ຈະເຮັດໃຫ້ບັນລຸ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ຍ້ອນວິທີການດັ່ງກ່າວ ບໍ່ພຽງແຕ່ ແກ້ໄຂບັນຫາດ້ານຜະລິດຕະພາບ ແຕ່ຍັງ ແກ້ໄຂບັນຫາຄວາມບໍ່ສະເໝີພາບ ທາງສັງຄົມ ແລະ ຄວາມບໍ່ສົມດຸນທາງອໍານາດ ເຊິ່ງລວມທັງ ຄວາມບໍ່ສະເໝີພາບ ດ້ານບົດບາດຍິງ-ຊາຍ ແລະ ຄວາມບໍ່ສະເໝີພາບລະຫວ່າງຊົນເຜົ່າ (CFS-HLPE, 2019).

## ຖ4: ຂ້າພະເຈົ້າ ຈະຮູ້ໄດ້ແນວໃດວ່າ: ສິ່ງໃດ ແມ່ນ ນິເວດກະສິກໍາ ແລະ ສິ່ງໃດ ບໍ່ແມ່ນ?

**ຕ:** ບໍ່ມີເສັ້ນແບ່ງ ຫຼື ຊຸດ ຂອງແບບວິທີການຜະລິດ ຢ່າງຈະແຈ້ງ ທີ່ກໍານົດຄວາມໝາຍ ນິເວດກະສິກໍາ. ຄືດັ່ງທີ່ໄດ້ອະທິບາຍໄວ້ໃນ ຂໍ້ B1, ການປຶກສາຫາລືທີ່ວສາກົນ ໄດ້ນໍາໄປສູ່ ການເຫັນດີເປັນເອກະພາບ ກັບ 10 ອົງປະກອບ ແລະ 13 ຫຼັກການ (ຮູບສະແດງ A2) ທີ່ປະກອບເປັນ ນິເວດກະສິກໍາ. ບາງແບບແຜນການຜະລິດແນ່ນອນ ຖືເປັນການຜະລິດແບບນິເວດກະສິກໍາຫຼາຍກວ່າ ຖ້າ ແບບແຜນການຜະລິດດັ່ງກ່າວ 1) ອາໄສເອື່ອຍອີງ ຂະບວນການທາງນິເວດສາດ ແທນປັດໄຈການຜະລິດທີ່ຕ້ອງຊື້; 2) ມີລັກສະນະສະເໝີພາບ, ເປັນມິດກັບສິ່ງແວດລ້ອມ, ມີການດັດປັບເຂົ້າກັບສະພາບເງື່ອນໄຂທ້ອງຖິ່ນ ແລະ ມີການຄວບຄຸມ; ແລະ 3) ໝູນໃຊ້ວິທີການດໍາເນີນງານທີ່ເປັນລະບົບ ທີ່ລວມເອົາການຄຸ້ມຄອງ ການກະທົບເຊິ່ງກັນແລະກັນ ລະຫວ່າງ ອົງປະກອບຕ່າງໆ, ແທນທີ່ຈະສຸມໃສ່ເຕັກໂນໂລຊີສະເພາະ (CFS-HLPE, 2019).

ແບບວິທີການຜະລິດກະສິກໍາ ທີ່ຍືນຍົງ ໃນຮູບແບບຕ່າງໆ (ເຊັ່ນ: ກະສິກໍາທັນສະໄໝ, ກະສິກໍາອະນຸລັກ, ກະສິກໍາປອດສານພິດ, ກະສິກໍາຟື້ນຟູ ຫຼື ກະສິກໍາປ່າໄມ້) ແມ່ນພົວພັນກັບ ນິເວດກະສິກໍາ ໃນລະດັບທີ່ແຕກຕ່າງກັນບົນພື້ນຖານ ການນໍາໃຊ້ ແລະ/ຫຼື ການເນັ້ນໃສ່ ຫຼັກການຂອງນິເວດກະສິກໍາ. ຜົນຕາມມາກໍຄື: ນິເວດກະສິກໍາ (ທີ່ຢູ່ບົນພື້ນຖານຫຼັກການ) ຖືກເບິ່ງວ່າ ເປັນ ຄໍາສັບທີ່ມີຄວາມໝາຍກວາມລວມ, ມີການເຕົ້າໂຮມບັນດາພາກສ່ວນກ່ຽວຂ້ອງ ຈາກ ລະບົບ ແລະ ແບບວິທີການຜະລິດກະສິກໍາ ທີ່ຫຼາກຫຼາຍ ເຂົ້າມາຢູ່ນໍາກັນ.

**ຮູບສະແດງ D2. 13 ຫຼັກການ ຂອງ ນິເວດກະສິກໍາ**




ແຫຼ່ງຂໍ້ມູນ: ໄບໂອວິຊັນ ບົນພື້ນຖານ HLPE, 2019

## ເອກະສານຊ້ອນທ້າຍ E. ການປະກອບສ່ວນ ຂອງ ນິເວດກະສິກຳ ໃສ່ ປພຍ

ນິເວດກະສິກຳ ສະໜັບສະໜູນ 17 ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ), ໂດຍປະກອບສ່ວນ ໃສ່ ປພຍ ຕ່າງໆ ຕາມຕາຕະລາງຂ້າງລຸ່ມນີ້.

1 NO POVERTY

ປພຍ 1: ລຶບລ້າງຄວາມທຸກຍາກ

ການປູກຝັງ, ລ້ຽງສັດ ແບບຄອບຄົວ, ການປະມົງແບບດັ້ງເດີມ ແລະ ການລ້ຽງສັດນ້ຳ ສະໜອງ ສະໜອງການຫາລ້ຽງຊີບ ໃຫ້ຜູ້ທຸກຍາກໃນເຂດຊົນນະບົດ ທົ່ວໂລກ ເປັນຈຳນວນຫຼວງຫຼາຍ. ວິທີການຜະລິດແບບນິເວດກະສິກຳ ສະໜັບສະໜັບ ຜູ້ຜະລິດສະບຽງອາຫານ ໃນການຫຼຸດຜ່ອນຕົ້ນທຶນການຜະລິດ, ສ້າງລາຍໄດ້ເພີ່ມຫຼາຍຂຶ້ນກວ່າເກົ່າ, ມີຄວາມທົນທານ ແລະ ສະຖຽນລະພາບທາງເສດຖະກິດ.

2 ZERO HUNGER

ປພຍ 2: ລຶບລ້າງຄວາມອຶດຫິວ

ລະບົບການຜະລິດແບບນິເວດກະສິກຳ ເຮັດໃຫ້ການນຳໃຊ້ ຄວາມຮູ້ແລະຊັບພະຍາກອນທົດແທນ ພາຍໃນທ້ອງຖິ່ນ ໃຫ້ເກີດປະໂຫຍດສູງສຸດ. ສິ່ງນີ້ ເຮັດໃຫ້ ລະບົບການຜະລິດກະສິກຳ ສາມາດນຳໃຊ້ ຜົນປະໂຫຍດຈາກລະບົບນິເວດ ເຊັ່ນ: ການຄວບຄຸມສັດຕູພືດ, ການປະສົມເກສອນ, ສຸຂະພາບຂອງດິນ ແລະ ການຄວບຄຸມການເຊາະເຈື່ອນ ໃນຂະນະດຽວກັນ ກໍຮັບປະກັນ ຜະລິດຕະພາບ.

3 GOOD HEALTH AND WELL-BEING

ປພຍ 3: ການມີສຸຂະພາບ ແລະ ຊີວິດການເປັນຢູ່ທີ່ດີ

ດ້ວຍການຈຳກັດການນຳໃຊ້ ເຄມີກະສິກຳທີ່ເປັນອັນຕະລາຍ, ການຜະລິດແບບນິເວດກະສິກຳ ຫຼຸດຜ່ອນຜົນກະທົບທາງລົບ ຂອງ ຂະແໜງກະສິກຳ ທີ່ມີຕໍ່ ສຸຂະພາບ ຂອງ ຄົນ ແລະ ສິ່ງແວດລ້ອມ. ດ້ວຍການຫັນກັບຄືນສູ່ ອາຫານການກິນ ທີ່ຜະລິດພາຍໃນທ້ອງຖິ່ນ, ການຜະລິດແບບນິເວດກະສິກຳ ສາມາດຊ່ວຍສະໜອງຂໍ້ມູນ ກ່ຽວກັບ ການບໍລິໂພກອາຫານແບບຍືນຍົງ ແລະ ມີສຸຂະພາບດີ.

5 GENDER EQUALITY

ປພຍ 5: ມີຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ

ແມ່ຍິງ ມີບົດບາດເປັນສູນກາງ ໃນການຜະລິດແບບນິເວດກະສິກຳ. ພົບເຫັນເລື້ອຍໆວ່າ: ເຂົາເຈົ້າ ເປັນຜູ້ເບິ່ງແຍງ ອາຫານການກິນທ້ອງຖິ່ນທີ່ດີຕໍ່ສຸຂະພາບ ແລະ ຍັງເປັນຜູ້ມີບົດບາດສຳຄັນ ໃນລະບົບການຜະລິດສະບຽງອາຫານ ແບບຍືນຍົງ, ຈາກເຮືອນ ສູ່ ທົ່ງໄຮ່ທົ່ງນາ, ສູ່ຕະຫຼາດ ແລະ ອອກສູ່ພາຍນອກ. ການຜະລິດແບບນິເວດກະສິກຳ ມີທ່າແຮງສ້າງຄວາມກ້າວໜ້າ ໃຫ້ ສິດທິຂອງແມ່ຍິງ, ຄວາມມຸ່ງໝັ້ນຕັ້ງໃຈ ແລະ ຄວາມເປັນເອກະລາດເປັນເຈົ້າຕອນເອງ ຂອງເຂົາເຈົ້າ.

10 REDUCED INEQUALITIES

ປພຍ 10: ຫຼຸດຜ່ອນຄວາມບໍ່ສະເໝີພາບ

ການຜະລິດແບບນິເວດກະສິກຳ ໃຫ້ບູລິມະສິດ ຕໍ່ ກຸ່ມຄົນທີ່ບໍ່ສາມາດປົກປ້ອງຕົນເອງໄດ້ ແລະ ດ້ອຍໂອກາດທີ່ສຸດ ໃນສັງຄົມ: ແມ່ຍິງໃນເຂດຊົນນະບົດ, ໄວໜຸ່ມ, ຊາວກະສິກອນທີ່ເຮັດການຜະລິດແບບຄອບຄົວ ແລະ ປະຊາຊົນພື້ນເມືອງດັ້ງເດີມ. ການຜະລິດແບບນິເວດກະສິກຳ ມີທ່າແຮງໃນການແກ້ໄຂ ຄວາມບໍ່ສະເໝີພາບ ຂອງ ລະບົບຜະລິດສະບຽງອາຫານ ດ້ວຍການ ດ້ວຍການສະໜອງວິທີແກ້ໄຂຕາມສະພາບເງື່ອນໄຂ ແລະ ເຂດແຄ້ວນສະເພາະທ້ອງຖິ່ນ.

12 RESPONSIBLE CONSUMPTION AND PRODUCTION

ປພຍ 12: ສົ່ງເສີມການອຸປະໂພກ/ບໍລິໂພກ ແລະ ການຜະລິດຢ່າງມີຄວາມຮັບຜິດຊອບ

ການຜະລິດແບບນິເວດກະສິກຳ ປັບປຸງຄວາມຫຼາກຫຼາຍ ເພື່ອບັນລຸ ການມີອາຫານການກິນທີ່ດີຕໍ່ສຸຂະພາບ ແລະ ຍືນຍົງ ແລະ ມີການຄ້ຳປະກັນສະບຽງອາຫານ. ພາຍໃຕ້ສະພາບເງື່ອນໄຂ ຂອງຫຼາຍທ້ອງຖິ່ນ, ລະບົບການຜະລິດອາຫານແບບນິເວດກະສິກຳ ໄດ້ພິສູດແລ້ວວ່າ: ສາມາດເປັນແບບຢ່າງ ໃນການສະໜອງ ອາຫານ ທີ່ພຽງພໍ, ດີຕໍ່ສູຂະພາບ ແລະ ມີໂພຊະນາການສູງ, ອະນຸລັກ ແລະ ສົ່ງເສີມປະເພນີອາຫານທ້ອງຖິ່ນ ແລະ ຄວາມຮູ້ພື້ນເມືອງ.

13 CLIMATE ACTION

ປພຍ 13: ມີແຜນຮັບມືກັບການປ່ຽນແປງດິນຟ້າອາກາດ

ການຜະລິດແບບນິເວດກະສິກຳ ຊ່ວຍຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບທີ່ເກີດຈາກການປ່ຽນແປງດິນຟ້າອາກາດ. ການຜະລິດແບບນິເວດກະສິກຳ ຫຼຸດຜ່ອນ ການປ່ອຍທາດອາຍພິດເຮືອນແກ້ວ ດ້ວຍການສົ່ງເສີມ ລະບົບການຜະລິດແບບປະສົມປະສານ ທີ່ຫຼຸດຜ່ອນການເອື່ອຍອີງພະລັງງານ ຈາກ ນ້ຳມັນເຊື້ອໄຟ ເຊິ່ງຊ່ວຍການດູດຊັບກາກບອນ ແລະ ແກ້ໄຂບັນຫາ ການປ່ອຍກາກບອນ. ດ້ວຍການສົ່ງເສີມ ລະບົບ

| | |
|---|---|
| | ການຜະລິດແບບປະສົມປະສານ ແລະ ຫຼາກຫຼາຍ, ການຜະລິດແບບນິເວດກະສິກໍາ ສ້າງຄວາມທົນທານ ແລະ ການປັບຕົວ ເຂົ້າກັບ ສະພາບດິນຟ້າອາກາດທີ່ມີການປ່ຽນແປງ. |
| 15 LIFE ON LAND | SDG 15: ອະນຸລັກ ແລະ ນໍາໃຊ້ ສິ່ງທີ່ມີຊີວິດເທິງໜ້າດິນ ແບບຍືນຍົງ. ການຜະລິດແບບນິເວດກະສິກໍາ ເປັນການເຮັດວຽກຮ່ວມກັບຊຸມຊົນທ້ອງຖິ່ນ, ຜູ້ຜະລິດສະບຽງອາຫານ, ແລະ ຜູ້ມີບົດບາດອື່ນໆ ເພື່ອຕ້ານ ສະກັດກັ້ນ ການເຊື່ອມໂຊມຂອງດິນ ແລະ ຟື້ນຟູເຂດທີ່ເຊື່ອມໂຊມ. ການຜະລິດແບບນິເວດກະສິກໍາ ຊ່ວຍອະນຸລັກ, ນໍາໃຊ້ ແລະ ໃຫ້ຄວາມສໍາຄັນ ຕໍ່ຊີວະນາໆພັນ ແລະ ບໍລິການລະບົບນິເວດ ຢ່າງຍືນຍົງ ຊຶ່ງເປັນສິ່ງຄໍ້າຢັນ ການຜະລິດສະບຽງອາຫານ. |

- ບັນຊີລາຍການປະກອບສ່ວນ ຂອງ ການຜະລິດແບບນິເວດກະສິກໍາ ຕໍ່ ທຸກ ປພຍ ສະບັບຄົບຖ້ວນ ແມ່ນສາມາດເບິ່ງໄດ້ທີ່ FAO Agroecology Knowledge Hub

## ເອກະສານຊ້ອນທ້າຍ F. ຫຼັກຖານ ແລະ ຕົວຢ່າງການຜະລິດແບບນິເວດກະສິກຳ ຈາກ ບັນດາປະເທດອາຊຽນ

ບັນດາປະເທດອາຊຽນ ມີປະສົບການໃນຂອບເຂດກວ້າງຂວາງ ກ່ຽວກັບການນຳໃຊ້ ຫຼັກການນິເວດກະສິກຳ ໃນທຸກລະດັບ ຂອງ ລະບົບການຜະລິດສະບຽງອາຫານ ບົນພື້ນຖານ ສະພາບເງື່ອນໄຂທ້ອງຖິ່ນ ຊຶ່ງສະໜອງພື້ນຖານທີ່ເຂັ້ມແຂງ ສຳລັບ ການຫັນປ່ຽນລະບົບການຜະລິດສະບຽງອາຫານ ໃນວົງກວ້າງ. ປະສົບການເຫຼົ່ານີ້ ບອກຫຍັງແດ່ ໃຫ້ພວກເຮົາຮັບຮູ້?

### ປັບປຸງ ປະສິດທິພາບ ຢູ່ ຟາມ ຫຼື ແຫຼ່ງຜະລິດກະສິກຳ

ປະສົບການ ການຜະລິດແບບນິເວດກະສິກຳ ຢູ່ ອາຊຽນ ໄດ້ສະແດງໃຫ້ເຫັນ ທ່າແຮງ ສຳລັບຊາວກະສິກອນ ໃນການເພີ່ມ ແລະ ຮັກສາ ລະດັບການຜະລິດ ໃນຂະນະດຽວກັນ ກໍຫຼຸດຜ່ອນຕົ້ນທຶນ ຂອງປັດໄຈການຜະລິດ ໂດຍສະເພາະ ຢາປາບສັດຕູພືດ ແລະ ຝຸ່ນເຄມີ. ໃນບາງກໍລະນີ, ການຜະລິດແບບນິເວດກະສິກຳ ເຊັ່ນ: ການຜະລິດກະສິກຳປອດສານພິດ ຕ້ອງໃຊ້ແຮງງານຫຼາຍ ແຕ່ລວມຍອດສ່ວນຕ່າງ ເຫັນວ່າ ຄືກັນ ເມື່ອພິຈາລະນາເບິ່ງ ການປະຢັດຄ່າໃຊ້ຈ່າຍໃສ່ເຄມີກະສິກຳ ແລະ ອາດມີກຳໄລສູງກວ່າ ຖ້າຊາວກະສິກອນ ໄດ້ຮັບລາຄາສູງ ສຳລັບ ການຜະລິດສະບຽງອາຫານ ທີ່ປອດໄພກວ່າ ແລະ ມີສຸຂະພາບດີກວ່າ ສຳລັບ ຜູ້ບໍລິໂພກ.

**ກຳປູເຈຍ**

ການຜະລິດກະສິກຳແບບອະນຸລັກ ໄດ້ມີການຈັດຕັ້ງປະຕິບັດກັນຫຼາຍ ຢູ່ກຳປູເຈຍ ນັບແຕ່ ທີ່ຖືກນຳສະເໜີເປັນຄັ້ງທຳອິດ ເມື່ອສິບປີກ່ອນ[1]. ຊາວນາຫຼາຍພັນຄົນ ເຫັນ ຜົນການຜະລິດເພີ່ມຂຶ້ນ, ປະຢັດເງິນຈາກຄ່າໃຊ້ຈ່າຍຊື້ຝຸ່ນເຄມີ, ແລະ ມີບັນຫາສັດຕູພືດໜ້ອຍລົງ ຍ້ອນສຸຂະພາບຂອງດິນ ມີການປັບປຸງດີຂຶ້ນ[2].ມີການສະໜັບສະໜູນຊ່ວຍເຫຼືອທີ່ແຂງຂັນຈາກກະຊວງກະສິກຳ, ມະຫາວິທະຍາໄລ ແລະ ພາກເອກະຊົນ, ທຸກພາກສ່ວນສະໜອງບໍລິການຊ່ວຍເຫຼືອ ຜູ້ຜະລິດ ເພື່ອສະໜັບສະໜູນສິ່ງ ເສີມການຜະລິດກະສິກຳແບບອະນຸລັກ[3]. ປະຈຸບັນນີ້, ກຸ່ມເພີ່ມຄວາມຍືນຍົງໃຫ້ການຜະລິດກະສິກຳແບບອະນຸລັກ ແຫ່ງ ກຳປູເຈຍ (CASIC) ເປັນຜູ້ນຳໃນລະດັບພາກພື້ນ ຂອງ ສາຂາຄວາມຮູ້ດັ່ງກ່າວ, ເຂົາເຈົ້າ ເປັນເຈົ້າພາບຈັດ ກອງປະຊຸມແລກປ່ຽນ ທີ່ມີຜູ້ຕາງໜ້າລັດຖະບານ, ຄູ່ຮ່ວມພັດທະນາ , ນັກຄົ້ນຄວ້າວິໄຈ ແລະ ບໍລິສັດເອກະຊົນ ຈາກ ທົ່ວອາຊຽນ ແລະ ພາກພື້ນອື່ນໆ ເຂົ້າຮ່ວມ.[4]

### ປັບປຸງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ສ້າງຄວາມເຂັ້ມແຂງໃຫ້ຜູ້ຜະລິດ

ຄວາມທົນທານ ເປັນອົງປະກອບໃຈກາງ ຂອງ ການຜະລິດແບບນິເວດກະສິກຳ. ອີງການ FAO ໄດ້ກ່າວໄວ້ຢ່າງຈະແຈ້ງວ່າ: "ຫຼັກຖານທີ່ໜັກແໜ້ນ ສະແດງໃຫ້ເຫັນວ່າ: ການຜະລິດແບບນິເວດກະສິກຳ ເພີ່ມຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ"[5]. ພ້ອມນັ້ນ ຍັງກ່າວຕື່ມອີກວ່າ: ການປະກອບສ່ວນ ສ້າງຄວາມທົນທານ ບັນລຸໄດ້ສູງສຸດ ເມື່ອ ປະສົມປະສານ ການຜະລິດແບບນິເວດກະສິກຳ ໃສ່ໃນວຽກງານສ້າງຄວາມເຂັ້ມແຂງ ໃຫ້ ຜູ້ຜະລິດທີ່ດ້ອຍໂອກາດ ເຮັດໃຫ້ເຂົາເຈົ້າເພີ່ມຄວາມສາມາດ ໃນການ ປັບຕົວ. IPCC ຍັງລາຍງານວ່າ: "ການຮັບຮອງເອົາ ຫຼັກການ ແລະ ການຜະລິດ ແບບນິເວດກະສິກຳ ຈະມີຜົນປະໂຫຍດສູງ ຕໍ່ ການຮັກສາລະບົບຜະລິດສະບຽງອາຫານ ທີ່ມີສຸຂະພາບດີ ແລະ ມີຜະລິດຕະພາບ ພາຍໃຕ້ ສະພາບການປ່ຽນແປງດິນຟ້າອາກາດ".[6]

**ຟີລິບປິນ**

ບົດລາຍງານ ການປ່ຽນແປງດິນຟ້າອາກາດ ຂອງ ຊາດສະມາຊິກອາຊຽນ (2021) ໄດ້ໃຫ້ຂໍ້ສັງເກດວ່າ: ພາກພື້ນອາຊຽນ ມີຄວາມບອບບາງສູງ ຕໍ່ຜົນກະທົບ ຈາກ ການປ່ຽນແປງ ດິນຟ້າອາກາດ ສ່ວນປະເທດ ຟີລິບປິນ ແມ່ນຖືກຈັດໃຫ້ເປັນ ອັນດັບທີໜຶ່ງ ໃນດ້ານ ປະຊາກອນ ຖືກກະທົບ ຈາກ ໄພພິບັດທຳມະຊາດ ໃນຮູບແບບຕ່າງໆ.[7] ເວົ້າສະເພາະ, ຂະແໜງກະສິກຳ ຂອງ ຟີລິບປິນ ມີຄວາມບອບບາງຖືກກະທົບສູງ[8] ແຕ່ຄືດັ່ງທີ່ມີການລາຍງານ ຜ່ານສື່ແຫ່ງຊາດ "'ການຜະລິດແບບນິເວດກະສິກຳ' ຊ່ວຍໃຫ້ ຊາວກະສິກອນ ສາມາດຫຼຸດຜ່ອນ ຜົນກະທົບ ຈາກ ການປ່ຽນແປງດິນຟ້າອາກາດ".[9] ທົ່ວປະເທດ, ອົງການຈັດຕັ້ງຊາວກະສິກອນ ຫຼາຍຮ້ອຍຫົວໜ່ວຍ ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອ ສະມາຊິກ ຂອງເຂົາເຈົ້າ ໃນການນຳໃຊ້ ແບບວິທີການຜະລິດ ທີ່ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ – ທັງໃນຮູບການຜະລິດແບບດັ້ງເດີມ ແລະ ທັນສະໄໝ – ເຊັ່ນ: ການປະຢັດເມັດພັນ, ການປູກໝູນວຽນ, ການຜະລິດອາຫານສັດ, ຄວາມເປັນຜູ້ປະ ກອບການທຸລະກິດເພື່ອສັງຄົມ, ແລະ ການປະສານສົມທົບ ກັບ ບັນດາ ໜ່ວຍງານລັດຢູ່ຂັ້ນທ້ອງຖິ່ນ.[10] ໃນຖານະເປັນ ສະຖານທີ່ຕັ້ງ ຂອງ ສະມາຄົມຊາວກະສິກອນອາຊີ (ເຊິ່ງເປັນເຄືອຂ່າຍອົງການຈັດຕັ້ງຊາວກະສິກອນ ຈາກ 17 ປະ ເທດ), ຟີລິບປິນ ມີບົດບາດສຳຄັນ ໃນການ ແລກປ່ຽນ ວິທີການຜະລິດແບບນິເວດກະສິ

ກຳ ທີ່ມີຄວາມທົນທານ ຕໍ່ ຜົນກະທົບ ຈາກ ການປ່ຽນແປງດິນຟ້າອາກາດ.[11]

## ປັບປຸງ ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ

ຖະແຫຼງການ ຜູ້ນຳອາຊຽນ 2023 ວ່າດ້ວຍ ການສ້າງຄວາມເຂັ້ມແຂງ ໃຫ້ ວຽກງານ ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ໄດ້ຮັບຮູ້ ຄວາມຈຳເປັນ "ທີ່ຕ້ອງເລັ່ງລັດ ການຫັນປ່ຽນ ເພື່ອກ້າວໄປສູ່ ລະບົບການຜະລິດກະສິກຳສ້າງສະບຽງອາຫານ ແບບຍືນຍົງ, ມີສ່ວນຮ່ວມ ແລະ ມີຄວາມທົບທານຫຼາຍຂຶ້ນ"[12]. ໃນຖານະເປັນເຄື່ອງມື ເພື່ອບັນລຸ ຈຸດປະສົງ, ຖະແຫຼງການດັ່ງກ່າວກ່າວເຖິງ ຄວາມສຳຄັນ ຂອງ ກະສິກຳຍືນຍົງ, ແຫຼ່ງສະບຽງອາຫານພາຍໃນທ້ອງຖິ່ນ ແລະ ການຜະລິດສະບຽງອາຫານໃຫ້ມີຄວາມຫຼາກຫຼາຍ ເຊິ່ງສອດຄ່ອງ ກັບ ບັນດາອົງປະກອບ ແລະ ຫຼັກການຂອງ ການຜະລິດແບບນິເວດກະສິກຳ.

### ອິນໂດເນເຊຍ

ໃນປີ 2021, ການຜະລິດແບບນິເວດກະສິກຳ ໄດ້ຮັບການຍົກສູງບົດບາດຄວາມສຳຄັນ ໃນ ຍຸດທະສາດການຫັນປ່ຽນລະບົບຜະລິດສະບຽງອາຫານ ແຫ່ງຊາດ ຂອງ ອິນໂດເນເຊຍ ເຊິ່ງສະໜັບສະໜູນ ຈຸດປະສົງອື່ນໆ ທີ່ລັດຖະບານໄດ້ກຳນົດໄວ້, ໂດຍສະເພາະ ການສົ່ງເສີມການກະຈາຍອາຫານການກິນໃຫ້ມີຄວາມຫຼາກຫຼາຍ ແລະ ການຮັກສາ ພູມປັນຍາຄວາມຮູ້ທ້ອງຖິ່ນກ່ຽວກັບ ຊັບພະຍາກອນສະບຽງອາຫານ.[13] ໄດ້ມີການກຳນົດແຈ້ງ ກ່ຽວກັບ ບົດບາດ ຂອງການຜະລິດແບບນິເວດກະສິກຳໃນການປັບປຸງ ໂພຊະນາການ ຜ່ານ ຄວາມຫຼາກຫຼາຍທາງດ້ານອາຫານການກິນ ໃນລະດັບສູງຂຶ້ນກວ່າເກົ່າ.[14] ການຄົ້ນຄວ້າວິໄຈ ຢູ່ອິນໂດເນເຊຍ ໄດ້ເນັ້ນໜັກ ບົດບາດສຳຄັນ ຂອງ ແມ່ຍິງໃນຂົງເຂດວຽກງານດັ່ງກ່າວ[15], ຍ້ອນວ່າ: ໃນປະຈຸບັນນີ້ ເຂົາເຈົ້າສາມາດປະສົມປະສານ ພູມປັນຍາຄວາມຮູ້ດັ້ງເດີມ ໃສ່ກັບເຕັກໂນໂລຊີໃໝ່ ເຊັ່ນ: ການຄ້າທາງເອເລັກໂຕຣນິກ ເພື່ອຮັກສາ ລະບົບການຜະລິດສະບຽງອາຫານທ້ອງຖິ່ນ ໃຫ້ມີຄວາມຍືນຍົງ.

## ເສີມຂະຫຍາຍ ຜົນປະໂຫຍດຮ່ວມ ສຳລັບ ສິ່ງແວດລ້ອມ ແລະ ເສດຖະກິດ

ການຜະລິດແບບນິເວດກະສິກຳ ພົວພັນ ກັບ ຫຼາຍຜົນປະໂຫຍດທາງດ້ານການເງິນ ແລະ ເສດຖະກິດ ຕາມ ຕ່ອງໂສ້ມູນຄ່າຜະລິດຕະພັນກະສິກຳ ຊຶ່ງລວມທັງ ການເພີ່ມປະສິດທິພາບ ແລະ ການປະຢັດຄ່າໃຊ້ຈ່າຍ ຈາກ ປັດໄຈການຜະລິດ ເຊັ່ນ: ເຄມີກະສິກຳ ແລະ ນ້ຳ; ຫຼຸດການສູນເສຍ ທີ່ເກີດຈາກສັດຕູພືດ, ພະຍາດ ແລະ ອາກາດທີ່ບໍ່ເອື້ອອຳນວຍ; ການເຂົ້າເຖິງລະບົບການຢັ້ງຢືນຄຸນນະພາບ ແລະ ຕະຫຼາດສົ່ງອອກ ທີ່ໃຫ້ລາຄາດີ.

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ຜ່ານມາຫຼາຍສັດຕະວັດ ທີ່ປະຊາຊົນລາວ ເກັບຫຼາກຫຼາຍຜະລິດພັນ ຈາກ ປ່າ ປະກອບໃສ່ ອາຫານການກິນ ຂອງ ເຂົາເຈົ້າ. ໃນຫຼາຍທົດສະວັດບໍ່ດົນມານີ້ ພົບວ່າ: ມີເລື່ອງເລົ່າຄວາມສຳເລັດຫຼາຍເລື່ອງ ກ່ຽວກັບ ການຜະລິດເປັນສິນຄ້າ ຈາກ ຜະລິດຕະພັນ ທີ່ເກີດຂຶ້ນຕາມທຳມະຊາດໃນປ່າ ເຊັ່ນ: ໄມ້ໄຜ່[16] ແລະ ຊາປ່າ.[17] ກາເຟ ບໍ່ແມ່ນພືດດັ້ງເດີມພື້ນເມືອງ ຢູ່ລາວ ແຕ່ ເມື່ອປູກຕາມເຂດປ່າໄມ້ທຳມະຊາດ ພົບວ່າ: ໃຫ້ເມັດກາເຟ ທີ່ມີຄຸນນະພາບສູງ ( 'ການເຟພິເສດ') ຊຶ່ງປະຈຸບັນນີ້ ໄດ້ຮັບລາງວັນຕ່າງໆ ແລະ ສົ່ງອອກໄປ ເອີຣົບ, ສະຫະລັດອາເມລິກາ (USA), ຍີ່ປຸ່ນ , ແລະ ຈີນ.[18] ທ່າແຮງການປູກກາເຟໃສ່ເຂດພື້ນທີ່ປ່າໄມ້ ໄດ້ຮັບການເນັ້ນໜັກໄວ້ໃນ ແຜນພັດທະນາກະສິກຳ-ປ່າໄມ້ ຂອງປະເທດ ແລະ ອາຊຽນ (2021).[19]

## ມີທ່າແຮງ ການນຳໃຊ້ ໂດຍທຸລະກິດຜະລິດກະສິກຳ ຂະໜາດໃຫຍ່

ເຖິງວ່າ ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ໄດ້ຮັບຜົນປະໂຫຍດສ່ວນໃຫຍ່ ຂອງ ການຜະລິດ ແລະ ວິທີການແບບນິເວດກະສິກຳ ແຕ່ຟາມ ຫຼື ແຫຼ່ງການຜະລິດກະສິກຳເປັນສິນຄ້າ

ແລະ ສວນປູກ ຍັງສະແດງໃຫ້ເຫັນໄດ້ເຖິງ ຜົນປະໂຫຍດ ຂອງ ການຜະລິດແບບນິເວດກະສິກຳ.

**ມາເລເຊຍ**

ສວນປູກຢາງ ແລະ ນ້ຳມັນປາມ ເປັນຂະແໜງການຕົ້ນຕໍທີ່ປະກອບສ່ວນ ຕໍ່ກັບ ເສດຖະກິດ ຂອງ ມາເລເຊຍ ແຕ່ເນື່ອງຈາກເປັນການປູກພືດດ່ຽວ ສວນປູກເຫຼົ່ານັ້ນ ມີຄວາມບອບບາງ ຖືກກະທົບ ຈາກ ສັດຕູພືດ ແລະ ພະຍາດຕ່າງໆ[20]. ການຜະລິດແບບນິເວດກະສິກຳ ເຊັ່ນ: ການຄຸ້ມຄອງສັດຕູພືດແບບປະສົມປະ ສານ (IPM) ໄດ້ສະແດງໃຫ້ເຫັນ ທ່າແຮງສູງ ດ້ານການຫຼຸດຜ່ອນ ບັນຫາສັດຕູພືດ ແລະ ສະໜອງມາດຖານສຳຄັນ ສຳລັບລະບົບການອອກແບບໃບຢັ້ງຢືນ ແບບຍືນຍົງ ທີ່ປະກອບສ່ວນສ້າງລາຍຮັບ ຈາກ ການສົ່ງອອກ.[21] ພ້ອມນີ້, ນັກວິທະຍາສາດມາເລເຊຍ ຍັງຄົ້ນຄວ້າ ຊອກຫາວິທີເພື່ອຟື້ນຟູ ຊີວະນາໆພັນ ຢູ່ສວນປູກ[22] ເຊິ່ງຄາດວ່າ: ຈະສົ່ງຜົນກະທົບທາງບວກ ຕໍ່ ຮອບວຽນ ສານອາຫານ, ນ້ຳ ແລະ ກາກບອນ ກໍຄື ເພີ່ມ ຈຸລະຊີບ ໃນດິນ ແລະ ແມງໄມ້ທີ່ເຮັດໜ້າທີ່ປະສົມເກສອນ, ທັງໝົດເຫຼົ່ານີ້ຈະປະກອບສ່ວນສ້າງຄວາມຍືນຍົງ. [23]

## ສະໜອງ ຜົນປະໂຫຍດ ໃຫ້ທັງ ຜູ້ຜະລິດ ແລະ ຜູ້ບໍລິໂພກ

ຜູ້ບໍລິໂພກ ຄື ຜູ້ໄດ້ຮັບຜົນປະໂຫຍດຫຼັກ ຂອງ ການຜະລິດແບບນິເວດກະສິກຳ. ບໍ່ວ່າ ເຂົາເຈົ້າ ຊື້ອາຫານການກິນດັ້ງເດີມ ທີ່ວາງຂາຍໃນຕະຫຼາດທ້ອງຖິ່ນ ຫຼື ຜະລິດຕະພັນປອດສານພິດ ທີ່ໄດ້ຮັບການຜະລິດເປັນສິນຄ້າ ຈາກ ຮ້ານຂາຍຍົກສິນຄ້າ, ຜູ້ບໍລິໂພກ ທົ່ວອາຊີຕາເວັນອອກສຽງໃຕ້ ສາມາດເຂົ້າເຖິງ ອາຫານ ທີ່ປອດໄພ ແລະ ມີໂພຊະນາການ ເຊິ່ງໄດ້ຮັບການຜະລິດ ໂດຍນຳໃຊ້ຫຼັກການ ຂອງ ການຜະລິດແບບນິເວດກະສິກຳ.

**ມຽນມາ**

ການຜະລິດ ແລະ ການຂາຍ ຜົນຜະລິດກະສິກຳປອດສານພິດ ຍັງສືບຕໍ່ ຢູ່ ມຽນມາ ເຖິງແມ່ນວ່າ ຫຼາຍຜູ້ໃຫ້ທຶນສາກົນ ແລະ NGOs ໄດ້ຍຸຕິການເຄື່ອນໄຫວ ໃນຊຸມປີທີ່ບໍ່ດົນມານີ້, ເປັນການ ສະແດງໃຫ້ເຫັນຄຳໝາຍໝັ້ນໃນລະດັບທ້ອງຖິ່ນ ແລະ ລະດັບຊາດ ທີ່ມີຕໍ່ ການສະໜອງສະບຽງອາຫານ ເພື່ອສຸຂະພາບ. ບັນດາຕ່ອງໂສ້ມູນຄ່າ ປົ່ນອ້ອມ ຍັງສືບຕໍ່ເຄື່ອນໄຫວ ເຊິ່ງລວມທັງ ບັນດາວິສາຫະກິດ ທີ່ຜະລິດກະສິກຳ ເປັນສິນຄ້າ[24], ຕະຫຼາດຊາວກະສິກອນ[25] ແລະ ການທ່ອງທ່ຽວກະສິກຳ[26]. ນັບແຕ່ປີ 2009, ສະມາຄົມຜູ້ປູກ ແລະ ຜູ້ຜະລິດກະສິກຳປອດສານພິດ ແຫ່ງ ມຽນມາ ໄດ້ມີບົດບາດສຳຄັນ, ຊຶ່ງໃນປະຈຸບັນນີ້ ເຂົາເຈົ້າ ສະ ໜັບສະໜູນ ການອອກໃບຢັ້ງຢືນຜ່ານ ລະບົບຄ້ຳປະກັນແບບມີສ່ວນຮ່ວມ (PGS)[27] ໂດຍເປັນວິທີການອອກໃບຢັ້ງຢືນ ທີ່ຫຼາຍປະເທດພາຍໃນພາກພື້ນ ໄດ້ມີການໝູນໃຊ້, ໃນນັ້ນ ລວມມີ ລາວ, ຟີລິບປິນ, ໄທ ແລະ ຫວຽດນາມ.

## ລວມເອົາ ການຜະລິດກະສິກຳແບບດັ້ງເດີມ ແລະ ແບບທັນສະໄໝ ເຂົ້າກັນ

ບາງຮູບການຜະລິດແບບນິເວດກະສິກຳ ມີຮາກຖານ ຈາກ ລະບົບການຜະລິດແບບທຳມະຊາດ ແລະ ການຜະລິດກະສິກຳແບບດັ້ງເດີມ ແຕ່ ການຜະລິດແບບນິເວດກະສິກຳ ທີ່ມີລັກສະນະວິທະຍາສາດ ຍັງເໝາະສົມ ກັບ ລະບົບການຜະລິດກະສິກຳແບບທັນສະໄໝ. ການໝູນໃຊ້ແບບໃໝ່ໆ ສືບຕໍ່ໄດ້ຮັບການພັດທະນາຂຶ້ນ ຢູ່ອາຊີຕາເວັນອອກສຽງໃຕ້ ເຊິ່ງລວມທັງ ການນຳໃຊ້ເຕັກໂນໂລຊີດີຈີຕອນ.

**ສິງກະໂປ**

ສິງກະໂປ ເປັນສູນກາງເຕັກໂນໂລຊີກະສິກຳ, ໂດຍລັດຖະບານກຳລັງລົງທຶນຫຼາຍກວ່າ 300ລ້ານໂດລາສະຫະລັດ ໃນວຽກງານການຄົ້ນຄວ້າ ແລະ ການພັດທະນາ(R&D)ຂອງຂະແໜງຜະ

ລິດກະສິກຳເປັນສະບຽງອາຫານ, ນອກຈາກນັ້ນ, ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ແລະ ສູນເຕັກໂນໂລຊີ, ນະວັດຕະກຳ ແລະ ການພັດທະນາແບບຍືນຍົງສາກົນກຳລັງຈັດຕັ້ງປະຕິບັດແຜນງານທີ່ມີຊື່ວ່າ: Cultiv@te ເຊິ່ງໃຫ້ການສະໜັບສະໜູນ ນະວັດຕະກຳ ໃນຂະແໜງການຜະລິດກະສິກຳ ເປັນສະບຽງອາຫານ. ຂໍ້ລິເລີ່ມເຫຼົ່ານີ້ ສະແດງໃຫ້ເຫັນວ່າ: ເຕັກໂນໂລຊີ ດີຈີຕອນ ເຊິ່ງລວມທັງ ເຊັນເຊີວັດແທກສິ່ງແວດລ້ອມ, ອຸປະກອນຕິດຕາມ, ເຄື່ອງມື ການຄຸ້ມຄອງຂໍ້ມູນ ແລະ ການຕະຫຼາດອອກລາຍ ສາມາດຖືກນຳໃຊ້ ສະໜັບສະໜູນ ຫຼັກການ ການຜະລິດແບບນິເວດກະສິກຳ ເຊັ່ນ: ສຸຂະພາບຂອງພືດທັນຍາອາຫານ, ການເອົາມານຳໃຊ້ຄືນໃໝ່ ແລະ ການເຊື່ອມຕໍ່. ສະນັ້ນ ຈຶ່ງເປັນການກະຕຸ້ນ ການຜະລິດ ແລະ ຜົນກຳໄລ ໃນຂະນະທີ່ເຮັດໃຫ້ ການຜະລິດກະສິກຳ ສະອາດຂຶ້ນ ແລະ ປອດໄພຍິ່ງຂຶ້ນ.

### ການສະໜັບສະໜູນ ການຜະລິດແບບນິເວດກະສິກຳ ໄດ້ແຜ່ຂະຫຍາຍ ຈາກພາກລັດ ສູ່ ພາກເອກະຊົນ

ຕາມປົກກະຕິແລ້ວ ການພັດທະນາ ແລະ ການສົ່ງເສີມ ການຜະລິດແບບນິເວດກະສິກຳ ເບື້ອງຕົ້ນ ຢູ່ບັນດາຊາດສະມາຊິກອາຊຽນ ແມ່ນນຳພາ ໂດຍອົງການຈັດຕັ້ງຂອງລັດ ໂດຍພົບເລື້ອຍໆວ່າ: ມີການສະໜັບສະໜູນຊ່ວຍເຫຼືອຈາກ ບັນດາອົງການຊ່ວຍເຫຼືອເພື່ອການພັດທະນາສາກົນ ແລະ NGOs. ເມື່ອການຜະລິດແບບນິເວດກະສິກຳ ໄດ້ຮັບການຢັ້ງຢືນແລ້ວວ່າໄດ້ຜົນ ທັງໃນດ້ານເຕັກນິກ ແລະ ເສດຖະກິດ, ພາກເອກະຊົນ ມີບົດບາດສຳຄັນ ໃນການຂະຫຍາຍການນຳໃຊ້.

**ໄທ**

ປະມານປີ 1995, ລັດຖະບານໄທ ໄດ້ສ້າງຕັ້ງເຄືອຂ່າຍ ສູນຄວບຄຸມສັດຕູພືດ ທີ່ຜະລິດ ທາດຄວບຄຸມຊີວະພາບ ເພື່ອເປັນຜະລິດຕະພັນທາງເລືອກ ໃຫ້ ຊາວກະສິກອນ ແທນເຄມີປາບສັດຕູພືດ.[28] ຈາກນັ້ນ, ຜະລິດຕະພັນຄວບຄຸມສັດຕູພືດ ທີ່ເກີດຕາມທຳມະຊາດ ໄດ້ຖືກຜະລິດເປັນສິນຄ້າ, ແລະ ມີຫຼາຍບໍລິສັດພາຍໃນ ໄດ້ສະໜອງທາດຄວບຄຸມຊີວະພາບ ໃຫ້ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ, ເຮືອນຮົ່ມທີ່ເຮັດການຜະລິດເປັນສິນຄ້າ, ແລະ ສວນປູກຂະໜາດໃຫຍ່ ເປັນເວລາຫຼາຍກວ່າ 25 ປີ[29]. ໃນປີ 2014, ອາຊຽນ ໄດ້ອອກນິຕິກຳກ່ຽວກັບ ການນຳໃຊ້ ແລະ ການຊື້ຂາຍ ທາດຄວບຄຸມຊີວະພາບ ໂດຍມີຜະລິດຕະພັນຄວບຄຸມສັດຕູພືດແບບຊີວະພາບ ຫຼາຍກວ່າ 400 ຜະລິດຕະພັນ ທີ່ຈຳໜ່າຍພາຍໃນຊາດສະມາຊິກອາຊຽນ.[30]

### ມີຄວາມຊຳນິຊຳນານພ້ອມສະໜັບສະໜູນ ການຂະຫຍາຍການຜະລິດແບບນິເວດກະສິກຳ

ການຜະລິດແບບນິເວດກະສິກຳ ມີຂໍ້ມູນຫຼັກຖານຢັ້ງຢືນ ຈາກການຄົ້ນຄວ້າວິໄຈໃນຂອບເຂດກວ້າງຂວາງ ແລະ ຫຼາຍທົດສະວັດແຫ່ງບົດຮຽນການຜະລິດແບບນິເວດກະສິກຳ ທົ່ວພາກພື້ນອາຊຽນ. ອາຊີຕາເວັນອອກສຽງໃຕ້ ເປັນສະຖານທີ່ຕັ້ງ ຂອງ ອົງການຈັດຕັ້ງຄົ້ນຄວ້າວິໄຈ, ມະຫາວິທະຍາໄລ, ແລະ ກົມປູກຝັງ ທີ່ມີຄວາມຊຳນິຊຳນານ ໃນສາຂາດັ່ງກ່າວ ລວມກັນແລ້ວ ມີ ຫຼາຍຮ້ອຍຫົວໜ່ວຍ ໃນຂະນະດຽວກັນ ອົງການຈັດຕັ້ງຜູ້ຜະລິດ ຫຼາຍພັນຫົວໜ່ວຍ ແລະ ຊາວກະສິກອນ ນັບເປັນລ້ານໆຄົນ ກໍມີປະສົບການ ໃນການທົດສອບຫຼັກການ ການຜະລິດແບບນິເວດກະສິກຳ.

**ຫວຽດນາມ**

ລັດຖະບານຫວຽດນາມ ໄດ້ສົ່ງເສີມ ການຜະລິດແບບນິເວດກະສິກຳ ນັບແຕ່ ຊຸມປີ 90 ໃນເວລາ ເລີ່ມຈັດຕັ້ງປະຕິບັດ ແຜນງານໂຮງຮຽນຊາວນາ (FFS) ເຊິ່ງມີຜູ້ຜ່ານການຝຶກອົບຮົມແລ້ວ ປະມານ 1 ລ້ານຄົນ ຕາມຕົວເລກປີ 2005.[31] ໜຶ່ງທົດສະວັດຕໍ່ມາ, ໄດ້ມີການຄົ້ນຄວ້າວິໄຈ ກ່ຽວກັບ ການນຳໃຊ້ ຫຼັກການ ການຜະລິດແບບນິເວດກະສິກຳ ໃນອີກຫຼາຍຂົງເຂດ ເຊິ່ງ

ລວມທັງ ການປູກເຂົ້າ[32], ກະສິກຳ-ປ່າໄມ້, ການຜະລິດປອດສານພິດ ແລະ ການອະນຸລັກດິນ.[33]

## ທຸດຊາດສະມາຊິກອາຊຽນ ສາມາດໄດ້ຮັບຜົນປະໂຫຍດ ແລະ ສາມາດປະກອບສ່ວນ ເຂົ້າໃນ ການຂ້າມຜ່ານ ໄປສູ່ການຜະລິດແບບນິເວດກະສິກຳ

ປະສົບການຈັດຕັ້ງປະຕິບັດ ການຜະລິດແບບນິເວດກະສິກຳ ເຫັນວ່າ: ມີຄວາມແຕກຕ່າງກັນຫຼາຍ ລະຫວ່າງ ຊາດສະມາຊິກອາຊຽນ. ຄວາມແຕກຕ່າງດັ່ງກ່າວ ສະແດງໃຫ້ເຫັນ ໂອກາດດີເລີດໃນການປະສານສົມທົບ. ຄວາມຮູ້ດ້ານການຜະລິດແບບນິເວດກະສິກຳ ໄດ້ມີການແລກປ່ຽນແບ່ງປັນກັນແລ້ວ ຜ່ານ ເຄືອຂ່າຍຜູ້ຜະລິດ ແລະ ນັກຄົ້ນຄວ້າວິໄຈ ໃນລະດັບພາກພື້ນ. ພ້ອມນັ້ນ ຍັງພົບວ່າ: ມີການແລກປ່ຽນໃນລະດັບສອງຝ່າຍ ນັບມື້ນັບເພີ່ມສູງຂຶ້ນ.

### ບຣູໄນ

ໃນປະຈຸບັນ, ບຣູໄນ ເອື່ອຍອີງ ການນຳເຂົ້າສະບຽງອາຫານ ໃນລະດັບສູງ ແຕ່ມີເປົ້າໝາຍແນໃສ່ ຜະລິດ ສະບຽງອາຫານຂອງຕົນເອງ ໃຫ້ກວມສັດສ່ວນຫຼາຍຂຶ້ນ.[34] ໄດ້ມີຄວາມຄືບໜ້າສູງສົມຄວນ ໃນການສົ່ງເສີມການຜະລິດກະສິກຳແບບຍືນຍົງ ພາຍໃນຂອບ ປພຍ[35] ໂດຍມີການຮ່ວມມື ກັບ ບັນດາປະເທດຊາດສະມາຊິກອາຊຽນນຳກັນ.[36] SOM AMAF ໄດ້ຮັບຮອງເອົາຂອບການຮ່ວມມືອາຊຽນ ເພື່ອສະໜັບສະໜູນຊ່ວຍເຫຼືອ ຜູ້ຜະລິດຂະໜາດນ້ອຍ, ສະຫະກອນ ແລະ ຈນກ (MSMEs) ໃນຂະແໜງສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ໃນປີ 2021 ໃນໄລຍະ ທີ່ ບຣູໄນ ເປັນປະທານອາຊຽນ.[37]

ແຫຼ່ງຂໍ້ມູນ:


1. https://assets-global.website-files.com/6126fbe77de2da66ad4ab135/6182c881dd1611d44a8dad7b_CA_SI.pdf
2. https://www.fao.org/3/cc2698en/cc2698en.pdf
3. https://smart-agro.net/, https://www.facebook.com/angkor.green
4. https://www.casiccambodia.net/tarasa
5. https://www.fao.org/3/cb0486en/cb0486en.pdf
6. https://www.ipcc.ch/report/ar6/wg2/downloads/report/IPCC_AR6_WGII_Chapter02.pdf
7. https://asean.org/wp-content/uploads/2021/10/ASCCR-e-publication-Correction_8-June.pdf
8. https://www.adb.org/sites/default/files/publication/722241/climate-risk-country-profile-philippines.pdf
9. https://newsinfo.inquirer.net/1637909/agroecology-helps-farmerscushion-climate-impact
10. https://regenerationinternational.org/2020/08/19/agro-eco-philippines-helps-transition-filipino-farmers-to-agroecological-and-organic-regenerative-practices/, https://www.worldfuturecouncil.org/wp-content/uploads/2019/01/Philippines_Building-Resilient-Farming-Communities-and-Sustainable-Economies-in-the-poorest-provinces-of-the-Philippines-through-Agroecology-2004-Factsheet-OPA-2019.pdf
11. https://asianfarmers.org/category/stories-blogs/agroecology-climate-resilient-agriculture/, https://www.searca.org/umbrella-programs/cchamsea
12. https://asean.org/wp-content/uploads/2023/09/ASEAN-Declaration-on-Strengthening-Food-Security.pdf
13. https://summitdialogues.org/wp-content/uploads/2021/09/Pathway_version_1.0english_Indonesia_15.09.2021.pdf
14. https://www.twn.my/title2/susagri/2018/sa714.htm
15. https://www.wwf.mg/en/?351650/How-Local-WomenStrengthen-Food-Security-and-SovereigntyA-Success-Story-from-the-Heart-of-Borneo
16. https://gret.org/en/publication/village-forests-and-bamboo-value-chains-in-the-mountains-of-northern-laos/
17. https://laotea.org/
18. https://laocoffee.org/, https://saffroncoffee.com/our-people/, https://mergion.la/kafepa/
19. https://asean.org/wp-content/uploads/2021/12/FAFD-50.-AF-status-and-outlook-Final-210809.pdf
20. http://jopr.mpob.gov.my/wp-content/uploads/2019/09/joprv31sept2019-norman.pdf
21. https://www.sustainableagriculture.eco/san-projects/identifying-ipm-and-biodiversity-friendly-agriculture-practices-in-malaysian-oil-palm-production
22. https://theedgemalaysia.com/node/652609
23. https://www.miragenews.com/tree-islands-bring-biodiversity-to-oil-palm-1015077/
24. https://www.futuregloryfarm.com/
25. https://www.lolcmyanmar.com/yangon-farmers-market-nourishing-community
26. https://www.mylocalpassion.com/posts/myanmar-organic-farm-a-healthy-day-trip-from-yangon
27. https://www.facebook.com/groups/477045989082636
28. https://www.fao.org/3/ca8267en/ca8267en.pdf
29. https://www.thai-german-cooperation.info/en_US/what-can-we-do-to-promote-biocontrol-crop-protection-products-in-thailand/
30. https://asean.org/wp-content/uploads/2021/08/ASEAN-Guidelines-on-the-Regulation-Use-and-Trade-of-Biological-Control-Agents-BCA.pdf
31. https://www.tandfonline.com/doi/abs/10.1080/13892240701427706
32. https://vietnamsri.wordpress.com/2017/04/25/the-10-years-journey-of-sri-in-vietnam/
33. https://www.apn-gcr.org/wp-content/uploads/2023/03/Tuyet-et-al_2022_Bioeconomy_DAAD.pdf, https://www.worldagroforestry.org/project/agroecology-resilient-landscapes-poor-northern-uplands-viet-nam, https://ap.fftc.org.tw/article/3234

34. https://www.researchgate.net/publication/356421780_Sustainable_Agriculture_in_Brunei_Darussalam_Towards_Food_Security_Development_and_Achieving_Self-sufficiency
35. https://sustainabledevelopment.un.org/content/documents/26412VNR_2020_Brunei_Report.pdf
36. https://thescoop.co/2018/12/19/brunei-to-take-a-leaf-out-of-thailands-organic-farming-practices/
37. https://bnn.network/breaking-news/agriculture/brunei-takes-center-stage-in-asean-meeting-stresses-on-food-security-and-sustainable-agriculture/



# ເອກະສານຊ້ອນທ້າຍ G. ບົດບາດຂອງ LICA ໃນການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ

ແຜນງານລາວດ້ານນິເວດກະສິກຳເພື່ອອາຊຽນ (LICA) ໄດ້ຖືກສ້າງຂຶ້ນ ເພື່ອສະໜັບສະໜູນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ ຢູ່ ອາຊຽນ. ແຜນງານດັ່ງກ່າວ ຕອບສະໜອງ ຄຳຮ້ອງຂໍ ທີ່ສະເໜີ ຕໍ່ ສປປ ລາວ ໃນໄລຍະ ກອງປະຊຸມ SOM-AMAF: ຄັ້ງທຳອິດ ເມື່ອປີ 2012 ວ່າ: ຢາກໃຫ້ມີ ຂໍ້ລິເລີ່ມໃນລະດັບພາກພື້ນ ກ່ຽວກັບ ການຜະລິດກະສິກຳແບບອະນຸລັກ ເພື່ອສົ່ງເສີມເປັນ “ການເພີ່ມການຜະລິດກະສິກຳເຂັ້ມຂຸ້ນ ທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ພາຍໃນ ພາກພື້ນອາຊຽນ”, ແລະ ຄັ້ງຕໍ່ມາ ເມື່ອປີ 2017 ໂດຍມີຈຸດປະສົງ “ແລກປ່ຽນ, ສົມທຽບ ແລະ ທົບລະບຽບການພາຍໃນ ກ່ຽວກັບ ການຜະລິດແບບນິເວດກະສິກຳ ໃຫ້ເປັນເອກະພາບກັນເທົ່າທີ່ສາມາດເຮັດໄດ້ ເພື່ອ ສ້າງ ຈຸດຢືນຮ່ວມຂອງອາຊຽນ ໃຫ້ມີຄວາມກ້າວໜ້າຢ່າງຕໍ່ເນື່ອງ.”

ໄດ້ມີການສະເໜີໃຫ້ ບັນດາຊາດສະມາຊິກ ລະບຸຈຸດປະສານງານ ຂໍ້ລິເລີ່ມ LICA ຕາມການຕົກລົງເຫັນດີ ໃນກອງປະຊຸມ SOM-AMAF ຄັ້ງທີ 41 ເມື່ອປີ 2019. ຜົນຂອງການສົນທະນາແລກປ່ຽນ ລະຫວ່າງ ຈຸດປະສານງານ ແຜນງານ LICA ໄດ້ນຳໄປສູ່ ການກຳນົດ ສາມຈຸດປະສົງ ສຳລັບ LICA ຊຶ່ງໃນນັ້ນ ແມ່ນລວມເອົາ ການສ້າງເອກະສານສະບັບນີ້ ຄື: ບົດແນະນຳ ອາຊຽນ ເພື່ອສະໜັບສະໜູນຊ່ວຍເຫຼືອ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ, ສ່ວນ ລາຍລະອຽດ ຂອງ ສາມຈຸດປະສົງ ມີດັ່ງຂ້າງລຸ່ມນີ້:

ການແລກປ່ຽນ *ປະສົບການຜົນສຳເລັດ ແລະ ບົດຮຽນ* ຂອງບັນດາປະເທດອາຊຽນ ກ່ຽວກັບ ນະໂຍບາຍ ແລະ ກົນໄກຂອງອົງການຕ່າງໆ ທີ່ສະໜັບສະໜູນການຫັນປ່ຽນລະບົບນິເວດກະສິກຳຢ່າງມີປະສິດທິພາບ.

ການອຳນວຍຄວາມສະດວກໃນການວິເຄາະລະຫວ່າງປະເທດກ່ຽວກັບປະສົບການເຫຼົ່ານີ້, ໂດຍຜ່ານການເປັນຄູ່ຮ່ວມມືກັບ*ໜ່ວຍງານຂະແໜງການຍ່ອຍດ້ານພືດພັນຂອງອາຊຽນ* (ASWGC) SPA 2021-2025.

ການອຳນວຍຄວາມສະດວກໃນການອອກແບບ ບົດແນະນຳຂອງອາຊຽນ ສຳລັບ *ນະໂຍບາຍຕ່າງໆທີ່ສະໜັບສະໜູນການຫັນປ່ຽນ ລະບົບນິເວດກະສິກຳ.*

ກອງປະຊຸມ SOM-AMAF ຄັ້ງທີ 42 ໄດ້ສະເໜີ ຄະນະກຳມາທິການເສດຖະກິດສັງຄົມ ສະຫະປະຊາຊາດປະຈຳພາກພື້ນ ອາຊີ-ປາຊີຟິກ (ESCAP) ໃຫ້ເຮັດວຽກກັບ ກອງເລຂາອາຊຽນ, LICA ແລະ ໜ່ວຍງານສົນທະນາຂະແໜງການກ່ຽວຂ້ອງ ກ່ຽວກັບ ການຈັດຕັ້ງປະຕິບັດ ບົດສະເໜີໂຄງການຕ່າງໆ ເຊິ່ງລວມທັງ ການສ້າງຕັ້ງ LICA ໃນຖານະເປັນ ກຸ່ມອ້າງອີງ ວຽກງານການຜະລິດແບບນິເວດກະສິກຳ ສຳລັບ ອາຊຽນ.

ໃນຖານະເປັນກຸ່ມອ້າງອີງ ວຽກງານການຜະລິດແບບນິເວດກະສິກຳ, LICA ມີພາລະບົດບາດເພີ່ມເຕີມ ພາຍໃນອາຊຽນ ດັ່ງນີ້:

ເຊື່ອມໂຍງເວທີການສົນທະນາໃນອາຊຽນກ່ຽວກັບ ລະບົບນິເວດກະສິກຳ ໃຫ້ເຂົ້າກັບ ເວທີການສົນທະນາໃນລະດັບໂລກ, ໂດຍສະເພາະກັບກຸ່ມ ກຸ່ມພັນທະມິດລະບົບນິເວດກະສິກຳ.

ການເພີ່ມຄວາມກົມກຽວກັນ ລະຫວ່າງ ນະໂຍບາຍ ແລະ ກິດຈະກຳກ່ຽວກັບກະສິກຳແບບຍືນຍົງ, ນອກເໜືອຈາກຂອບເຂດຂອງ ASWGC.

ການເພີ່ມ ການສື່ສານ ແລະ ການແບ່ງປັນ ກ່ຽວກັບ ຄວາມກ້າວໜ້າຂອງນິເວດກະສິກຳ ໃນຊາດສະມາຊິກອາຊຽນ

**ຂອບໄລຍະເວລາ ຂອງ ຂໍ້ລິເລີ່ມ ການຜະລິດແບບນິເວດກະສິກຳ ອາຊຽນ (LICA)**

**2012 2013**: ໄດ້ຮັບຮອງເອົາຂໍ້ລິເລີ່ມ LICA ໃນ ກອງປະຊຸມ AMAF ຄັ້ງທີ 34 (ທີ່ນະຄອນຫຼວງວຽງຈັນ)

**2015 2016**: ກອງປະຊຸມ S-SOM AMAF ຄັ້ງທີ 36 ໄດ້ສະໜັບສະໜູນການສືບຕໍ່ ການລິເລີ່ມຂອງ ສປປ ລາວ ແລະ ຮຽກຮ້ອງໃຫ້ມີການເຂົ້າຮ່ວມ. ກອງປະຊຸມ LICA ຄັ້ງທີ 1 (ທີ່ນະຄອນຫຼວງວຽງຈັນ) ມີຜູ້ເຂົ້າຮ່ວມຈາກ ກຳປູເຈຍ, ສປປ ລາວ, ມະເລເຊຍ, ມຽນມາ, ແລະ ສິງກະໂປ.

**2017**: ກອງປະຊຸມເຈົ້າໜ້າທີ່ອາວຸໂສ ພິເສດ (SOM) ຄັ້ງທີ 38 ໄດ້ຂະຫຍາຍຂອບເຂດວຽກງານຈາກການອະນຸລັກກະສິກຳ ໄປສູ່ ລະບົບນິເວດກະສິກຳ ເພື່ອແລກປ່ຽນ, ປຽບທຽບ ແລະ ສົມທົບກັນ ຂອງລະບຽບການຂອງແຕ່ລະປະເທດ ກ່ຽວກັບ AE ເພື່ອສ້າງໃຫ້ກາຍເປັນຈຸດຢືນຮ່ວມກັນຂອງອາຊຽນ.

**2021**: ກອງປະຊຸມ SOM AMAF ຄັ້ງທີ 41. ບັນດາປະເທດສະມາຊິກໄດ້ຮັບການຮຽກຮ້ອງໃຫ້ແຕ່ງຕັ້ງຈຸດປະສານງານຂອງ LICA ແລະ ປັບປຸງແຜນແມ່ບົດ (road map) ຂອງ LICA.

**2022**: ກອງປະຊຸມ ASWGC ຮັບຊາບການກະກຽມຂໍ້ສະເໜີແນະແນວທາງຂອງອາຊຽນສຳລັບກົນໄກນະໂຍບາຍທີ່ສະໜັບສະໜູນການປ່ຽນຜ່ານ ລະບົບນິເວດກະສິກຳ. ກອງປະຊຸມ S-SOM AMAF ຄັ້ງທີ 43 ຍິນດີຮັບຂໍ້ສະເໜີ ກ່ຽວກັບ ການສ້າງຄວາມເຂັ້ມແຂງໃຫ້ LICA ໃນຖານະທີ່ເປັນກຸ່ມອ້າງອີງລັບອາຊຽນ.

**2023**: ກອງປະຊຸມ ASWGC ໄດ້ຮັບຊາບແຜນການເຮັດວຽກຂອງ LICA ສຳລັບປີ 2023-2024, ເຊິ່ງເນັ້ນໃສ່ຂະບວນການຄົ້ນຄວ້າ ແລະ ສ້າງນະວັດຕະກຳ ເພື່ອພັດທະນາໂຄງສ້າງ ແລະ ເນື້ອໃນຕົ້ນຕໍສຳລັບຂໍ້ແນະນຳນະໂຍບາຍກ່ຽວກັບການຫັນປ່ຽນ ລະບົບນິເວດກະສິກຳ, ໂດຍຈະສົ່ງຢ່າງເປັນທາງການໃຫ້ ASWGC ແລະ ຂຶ້ນກັບການອະນຸມັດຂອງ SOM-AMAF ແລະ AMAF.

▶ ສົນໃຈຂໍ້ມູນຂ່າວສານເພີ່ມເຕີມກ່ຽວກັບ LICA, ສາມາດເຂົ້າເບິ່ງໄດ້ທີ່: www.aseanaetguidelines.org

## ເອກະສານຊ້ອນທ້າຍ H. ຄວາມສອດຄ່ອງດ້ານນະໂຍບາຍ ແລະ ການຄຸ້ມຄອງບໍລິຫານໃນລະດັບຕ່າງໆ ສໍາລັບ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ

ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກໍາ ທີ່ມີປະສິດທິຜົນ ຈໍາເປັນຕ້ອງມີ ການເຊື່ອມສານທາງສາຍຕັ້ງ ເພື່ອຮັບປະກັນວ່າ: ນະໂຍບາຍ ແລະ ກິດຈະກໍາຕ່າງໆ ໃນລະດັບທ້ອງຖິ່ນ, ລະດັບປະເທດ ແລະ ລະດັບພາກພື້ນ/ສາກົນ ມີຄວາມສອດຄ່ອງກັນ ແລະ ຄໍ້າຊູ ເຊິ່ງກັນແລະກັນ ກໍຄື ການເຊື່ອມສານທາງສາຍຂວາງ ຫຼື ວິທີການດໍາເນີນແບບທົ່ວຂະແໜງການ ເພື່ອແກ້ໄຂ ຄວາມສະຫຼັບຊັບຊ້ອນ ແລະ ສິ່ງທ້າທາຍທີ່ພົວພັນ ເຊິ່ງກັນແລະກັນ ຂອງ ການຂ້າມຜ່ານ. ໃຫ້ເບິ່ງຮູບສະແດງແນວຄວາມຄິດ ໃນໜ້ານີ້ ທີ່ສະແດງໃຫ້ເຫັນ ການຄຸ້ມຄອງບໍລິຫານໃນລະດັບຕ່າງໆ.



## ເອກະສານຊ້ອນທ້າຍ I. ການວາງແຜນ ການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມ

ການວາງແຜນ ການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມ (PLUP) ເປັນຂະບວນການວາງແຜນຂັ້ນບ້ານ ທີ່ລວມເອົາຊາວບ້ານ ເຂົ້າມີສ່ວນຮ່ວມຢ່າງຕັ້ງໜ້າ ໃນທຸກໄລຍະ ຂອງ ຂະບວນການວາງແຜນ ການນຳໃຊ້ທີ່ດິນ ເຊິ່ງລວມເອົາທັງ ການເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ການກຳນົດເຂດແດນ, ການກຳນົດເຂດນຳໃຊ້ທີ່ດິນ, ການວາງແຜນການຄຸ້ມຄອງທີ່ດິນ, ການຈົດທະບຽນທີ່ດິນ, ການສ້າງເຄືອຂ່າຍບ້ານ, ການຕິດຕາມ ແລະ ການປະເມີນຜົນ. ພົວພັນ ກັບ ການວາງແຜນ ການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມ, ການຄຸ້ມຄອງທີ່ດິນກະສິກຳແບບມີສ່ວນຮ່ວມ (PALM) ຊ່ວຍສະໜອງແຜນສະເພາະ ສຳລັບ ທີ່ດິນກະສິກຳ ເຊິ່ງເປັນການເພີ່ມລາຍລະອຽດໃຫ້ PLUP.

ໂດຍທົ່ວໄປແລ້ວ, ການວິເຄາະການມີສ່ວນຮ່ວມເບື້ອງຕົ້ນ ລວມເອົາ ການສັງລວມ ແລະ ຈັດບູລິມະສິດ ບັນຫາຕ່າງໆໃນຂັ້ນບ້ານ, ອະທິບາຍປະຫວັດຄວາມເປັນມາ ຂອງ ບ້ານ ແລະ ພູມສາດປະຊາກອນ, ລະບຸແບບວິທີການຜະລິດກະສິກຳທີ່ມີ ແລະ ຂໍ້ຈຳກັດ, ແລະ ເນັ້ນໜັກໃຫ້ເຫັນ ການປັບປຸງທາງດ້ານເຕັກນິກວິຊາການ ແລະ ການຈັດຕັ້ງ. PLUP ເສີມຂະຫຍາຍ ການເພີ່ມການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການ ຂອງຊຸມຊົນ ໃນຂະບວນການ ນະວັດຕະກຳ ແລະ ການວາງແຜນ ສຳລັບ ລະບົບການຜະລິດສະບຽງອາຫານ ແລະ ກະສິກຳ ແບບຍືນຍົງ. ປັດໄຈຕັດສິນຄວາມສຳເລັດ ຂອງ PLUP/PALM ເພື່ອໃຫ້ບັນລຸຜົນກະທົບທາງບວກ ລວມມີຄື:

**> ສ້າງຄວາມສາມາດ ໃຫ້ບັນດາອົງການລັດ:** ຮັບປະກັນວ່າ: ອົງການລັດທີ່ຮັບຜິດຊອບ ມີຊັບພະຍາກອນການເງິນ, ອຸປະກອນ ແລະ ການຝຶກອົບຮົມ ພຽງພໍ ໃນການຈັດຕັ້ງປະຕິບັດ ຂັ້ນຕອນການມີສ່ວນຮ່ວມ ແລະ ການນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ (ຕຢ: ເຄື່ອງມື GIS, ໂດຣນ UAV).

**> ເຊື່ອມສານ ອົງການທີ່ມີຄວາມສາມາດ:** ລວມເອົາຂະແໜງການຕ່າງໆ ເຂົ້າຮ່ວມໃນຂະບວນການວາງແຜນ, ສະໜອງຂໍ້ມູນພື້ນທີ່ ສຳລັບ ການພັດທະນາເສດຖະກິດ-ສັງຄົມ, ແລະ ຮັບປະກັນວ່າ: ອຳນາດການປົກຄອງຂັ້ນແຂວງ ສະໜັບສະໜູນ ຂັ້ນເມືອງ ດ້ວຍການຊ່ວຍເຫຼືອທາງດ້ານວິຊາການ ແລະ ຕິດຕາມ ການຈັດ ຕັ້ງປະຕິບັດແຜນນຳໃຊ້ທີ່ດິນ ຢ່າງຕໍ່ເນື່ອງ.

**> ຮັບປະກັນ ການມີສ່ວນຮ່ວມ ຂອງ ຊຸມຊົນ:** ເອົາຊາວບ້ານ ເຂົ້າມີສ່ວນຮ່ວມ ໃນຂະບວນການວາງແຜນ, ແຈ້ງໃຫ້ເຂົາເຈົ້າ ຮັບຮູ້ ສິດທິຕ່າງໆ ຂອງ ເຂົາເຈົ້າ ແລະ ລວມເຂົາເຈົ້າ ເຂົ້າມີສ່ວນຮ່ວມ ໃນຂະບວນການຕັດສິນບັນຫາ ໂດຍໃຫ້ຄວາມເອົາໃຈໃສ່ເປັນພິເສດ ຕໍ່ ແມ່ຍິງ ແລະ ກຸ່ມຄົນຜູ້ດ້ອຍໂອກາດ. ສ້າງຄວາມເຂັ້ມແຂງ ໃຫ້ສິດເປັນເຈົ້າການ ຂອງ ທ້ອງຖິ່ນ ສຳລັບ ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຕາມ ແຜນການນຳໃຊ້ທີ່ດິນ ຢ່າງຕໍ່ເນື່ອງ.

**> ເຊື່ອມໂຍງ ແຜນການ ໃສ່ ກິດຈະກຳຕິດຕາມຊຸກຍູ້:** ເຊື່ອມຕໍ່ ແຜນການນຳໃຊ້ທີ່ດິນ ໃສ່ ມາດຕະການຕ່າງໆ ເຊັ່ນ: ການຈົດທະບຽນທີ່ດິນ, ການອະນຸລັກປ່າໄມ້, ວຽກງານສົ່ງເສີມກະສິກຳ ແລະ ການຈັດສັນການລົງທຶນ ເພື່ອຮັບປະກັນ ຜົນກະທົບແບບຍືນຍົງ ຕໍ່ ການສ້າງລາຍໄດ້ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນລະດັບທ້ອງຖິ່ນ.

►ເອກະສານອ້າງອີງ:

- GIZ. 2023. Participatory Land Use Planning in Lao PDR. How it contributes to Sustainable Rural Development
- EFICAS. 2020. Community-based agricultural development planning: Engaging farming communities into participatory land use planning.

## ເອກະສານຊ້ອນທ້າຍ J. ບາງເຂດສຳຄັນ ສຳລັບການຈັດບູລິມະສິດ ການຂ້າມຜ່ານ ໄປສູ່ການຜະລິດແບບນິເວດກະສິກຳ

ຕໍ່ໄປນີ້ ເປັນບາງເຂດຍຸທະສາດ ທີ່ອາດຈະພິຈາລະນາເບິ່ງ ໃນເວລາຈັດບູລິມະສິດ ການລົງທຶນ ໃສ່ ການຜະລິດແບບນິເວດກະສິກຳ ເພື່ອນຳໄປສູ່ ລະບົບ ການຜະລິດແບບນິເວດກະສິກຳ ແລະ ຊີວິດການເປັນຢູ່ແບບຍືນຍົງ ແລະ ມີຄວາມທົນທານ ຕໍ່ ການປ່ຽນແປງດິນຟ້າອາກາດ:

| | |
|---|---|
| ເຂດສ່ຽງສູນເສຍຊີວະນາໆພັນ | • ສະໜັບສະໜູນ ຄວາມພະຍາຍາມອະນຸລັກ ແລະ ການຜະລິດແບບຍືນຍົງ ທີ່ປົກປັກຮັກສາ ລະບົບນິເວດ.<br>• ສົ່ງເສີມ ລະບົບກະສິກຳ-ປ່າໄມ້ ທີ່ເຊື່ອມສານ ຕົ້ນໄມ້ ແລະ ພືດທັນຍາຫານ ເພື່ອເສີມຂະຫຍາຍຊີວະນາໆພັນ ໃນເຂດຂອບປ່າ. |
| ເຂດຫຼໍ່ແຫຼມ ຫຼື ບອບບາງທາງລະບົບນິເວດ | • ເຂດພູດອຍ, ເຂດຄຸ້ມຄອງອ່າງໂຕ່ງ ຫຼື ເຂດບອບບາງ ຕໍ່ ການປ່ຽນແປງດິນຟ້າອາກາດ. |
| ຊຸມຊົນຜະລິດກະສິກຳ ຂະໜາດນ້ອຍ ແບບເອື່ອຍອີງທຳມະຊາດ | • ສ້າງຄວາມເຂັ້ມແຂງ ໃຫ້ ລະບົບການຜະລິດສະບຽງອາຫານທ້ອງຖິ່ນ ແລະ ປັບປຸງ ຊີວິດການເປັນຢູ່ ຂອງ ຊາວກະສິກອນ. |
| ຊຸມຊົນ ຊົນເຜົ່າ ແລະ ພື້ນເມືອງດັ້ງເດີມ | • ສ້າງຄວາມເຂັ້ມແຂງ ໃຫ້ ຊຸມຊົນ ແລະ ລວມເອົາ ແບບການຜະລິດດັ້ງເດີມ ແລະ ພູມປັນຍາຄວາມຮູ້ພື້ນເມືອງ ທີ່ສອດຄ່ອງກັບ ຫຼັກການ ການຜະລິດແບບນິເວດກະສິກຳ. |
| ເຂດແຄ້ວນ ທີ່ມີທ່າແຮງ ສຳລັບຜະລິດຕະພັນເພີ່ມມູນຄ່າ | • ເສີມຂະຫຍາຍຄຸນນະພາບຜະລິດຕະພັນ ຂອງ ພືດທັນຍາຫານ ທີ່ມີມູນຄ່າສູງ<br>• ສະໜັບສະໜູນຊ່ວຍເຫຼືອ ຜະລິດຕະພັນ ຈາກ ການຜະລິດແບບນິເວດກະສິກຳ ໃນດ້ານການເຂົ້າເຖິງຕະຫຼາດ, ການຄ້າເປັນທຳ ແລະ ລະບົບການອອກໃບຢັ້ງຢືນ. |
| ທີ່ດິນເສື່ອມໂຊມ | • ຟື້ນຟູ ສຸຂະພາບ ຂອງ ດິນ ຜ່ານ ການຜະລິດແບບນິເວດກະສິກຳ. |
| ເຂດແຄ້ວນ ທີ່ມີເຄືອຂ່າຍອົງການຈັດຕັ້ງສັງຄົມເຂັ້ມແຂວງ ແລະ/ຫຼື ມີ ນະໂຍບາຍສົ່ງເສີມການຜະລິດແບບນິເວດກະສິກຳ | • ປະສານສົມທົບກັບ NGOs, ສະຫະກອນ, ສະຖາບັນຄົ້ນຄວ້າວິໄຈ ເພື່ອສ້າງຮັບຜົນກະທົບສູງຍິ່ງຂຶ້ນ.<br>• ນຳໃຊ້ປະໂຫຍດຈາກ ຂອບນະໂຍບາຍທີ່ມີຢູ່ ເພື່ອຂະຫຍາຍ ການຜະລິດແບບຍືນຍົງ. |
| ສູນກາງ ການສຶກສາ ແລະ ການຄົ້ນຄວ້າວິໄຈ | • ປະສານສົມທົບກັບ ມະຫາວິທະຍາໄລ ແລະ ສູນຄົ້ນຄວ້າວິໄຈຕ່າງໆ ເພື່ອລົງທຶນ ໃສ່ ການຄົ້ນຄວ້າ ກ່ຽວກັບ ການຜະລິດແບບນິເວດກະສິກຳ, ການເຜີຍແຜ່ຄວາມຮູ້ ແລະ ແຜນງານຝຶກອົບຮົມຊາວກະສິກອນ. |
| ເຂດຕົວເມືອງ ແລະ ເຂດຊານເມືອງ | • ສົ່ງເສີມ ການຜະລິດສະບຽງອາຫານທ້ອງຖິ່ນ, ຫຼຸດຜ່ອນໄລຍະທາງການຂົນສົ່ງສະບຽງອາຫານ, ແລະ ເສີມຂະຫຍາຍຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ຂອງ ເຂດຕົວເມືອງ.<br>• ເຊື່ອມສານ ການຄຸ້ມຄອງສິ່ງເສດເຫຼືອ ເຂົ້າໃນ ການຜະລິດກະສິກຳ ເພື່ອ ຜົນປະໂຫຍດ ຂອງ ເສດຖະກິດໝູນວຽນ. |

## ເອກະສານຊ້ອນທ້າຍ K. ສິດທິ ຂອງ ຊາວກະສິກອນຕາມທີ່ໄດ້ກໍານົດໄວ້ໃນ ສົນທິສັນຍາສາກົນ ວ່າດ້ວຍ ຊັບພະຍາກອນພັນທຸກໍາພືດ

ສົນທິສັນຍາສາກົນ ວ່າດ້ວຍ ຊັບພະຍາກອນພັນທຸກໍາພືດ ສໍາລັບ ການຜະລິດ ກະສິກໍາ ແລະ ສະບຽງອາຫານ ໂດຍສອດຄ່ອງກັບ ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ ມີເປົ້າໝາຍ ເພື່ອຮັບປະກັນ ການຄໍ້າປະກັນສະບຽງອາຫານ ດ້ວຍການອະນຸລັກ, ແລກປ່ຽນ ແລະ ນໍາໃຊ້ ຊັບພະຍາກອນພັນທຸກໍາພືດ ແບບຍືນຍົງ ສໍາລັບ ການຜະລິດກະສິກໍາ ແລະ ສະບຽງອາຫານ, ຮັບປະກັນ ການແບ່ງປັນຜົນປະໂຫຍດ ຢ່າງເປັນທໍາ ແລະ ຮັບຮູ້ ສິດທິຕ່າງໆ ຂອງ ຊາວກະສິກອນ ທີ່ສອດຄ່ອງກັບ ການຜະລິດແບບນິເວດກະສິກໍາ. ສົນທິສັນຍາດັ່ງກ່າວ ຖືກຮັບຮອງໂດຍ ອົງການ FAO ໃນເດືອນພະຈິກ 2001, ແລະ ມີຜົນສັກສິດ ໃນເດືອນມິຖຸນາ 2004 ໂດຍມີ 150 ລັດຮ່ວມສັນຍາ (149 ລັດສະມາຊິກ ແລະ ສະຫະພາບເອີຣົບ) ອີງຕາມຂໍ້ມູນ ເດືອນກຸມພາ 2024.

ມາດຕາ 9 ເນັ້ນໜັກ ສິດທິຕ່າງໆ ຂອງ ຊາວກະສິກອນ. ເຖິງວ່າ ຖະແຫຼງການ ສປຊ ວ່າດ້ວຍ ສິດທິ ຂອງ ຊາວກະສິກອນ ສະບັບປີ 2019 ໄດ້ຢືນຢັນຄືນ ບັນດາສິດທິຕ່າງໆເຫຼົ່ານັ້ນ ແຕ່ ຖະແຫຼງການດັ່ງກ່າວ ບໍ່ມີຂໍ້ຜູກມັດທາງກົດໝາຍ ຄືກັນ ກັບ ສົນທິສັນຍາ.

ການບັນລຸ ສິດທິຕ່າງໆ ຂອງ ກະສິກອນ ຖືເປັນສິ່ງຈໍາເປັນ ຍ້ອນວ່າ:

1) ຊາວກະສິກອນ ປະກອບສ່ວນ ໃສ່ ຊັບພະຍາກອນພັນທຸກໍາພືດ ຢູ່ແຫຼ່ງການຜະລິດ ແລະ ຢູ່ທ້ອງຖິ່ນ ເພື່ອການອະນຸລັກສະບຽງອາຫານ ແລະ ການຜະລິດກະສິກໍາ.

2) ຄວາມຫຼາກຫຼາຍຂອງພືດທັນຍາຫານທ້ອງຖິ່ນ ແມ່ນຖືກຮັກສາໄວ້ ຢູ່ທົ່ງໄຮ່ທົ່ງນາ ຂອງ ຊາວກະສິກອນ.

3) ການຄຸ້ມຄອງຢູ່ແຫຼ່ງການຜະລິດ ສະໜັບສະໜູນ ການປັບຕົວຕໍ່ເນື່ອງຂອງແນວພັນຕ່າງໆ ຢູ່ທ້ອງຖິ່ນ.

4) ຊັບພະຍາກອນພັນທຸກໍາພືດ ຢູ່ແຫຼ່ງການຜະລິດ ສໍາລັບ ສະບຽງອາຫານ ແລະ ການຜະລິດກະສິກໍາ ເຮັດໜ້າທີ່ເປັນ ສູນຮັບຝາກຊັບພະຍາກອນພັນທຸລະກໍາພືດທີ່ມີຊີວິດ ແລະ ເປັນແຫຼ່ງສໍາຮອງ ສໍາລັບ ການເກັບກໍານອກແຫຼ່ງການຜະລິດ.

5) ເປັນການສົ່ງເສີມ ແລະ ເຮັດໃຫ້ ຊາວກະສິກອນ ສືບຕໍ່ເຮັດໜ້າທີ່ເປັນ ຜູ້ປົກປ້ອງຊີວະນາໆພັນ.

6) ເປັນການສະໜັບສະໜູນ ອະທິປະໄຕ ດ້ານສະບຽງອາຫານ ແລະ ຄວາມຫຼາກຫຼາຍທາງດ້ານວັດທະນະທໍາ.

**The International Treaty on Plant Genetic Resources - Article 9 on Farmers Rights**



## ເອກະສານຊ້ອນທ້າຍ L. ການຜະລິດກະສິກຳ ໂດຍມີການສະໜັບສະໜູນຂອງຊຸມຊົນ (CSA)

ການຜະລິດກະສິກຳ ໂດຍມີການສະໜັບສະໜູນ ຂອງ ຊຸມຊົນ ໝາຍເຖິງ ການເປັນຄູ່ຮ່ວມງານ ບົນພື້ນຖານສາຍພົວພັນມະນຸດ ລະຫວ່າງ ຜູ້ບໍລິໂພກ ກັບ ຜູ້ຜະລິດ ໜຶ່ງ ຫຼື ຫຼາຍເຈົ້າ ໂດຍມີສາມຫຼັກການພື້ນຖານຄືດັ່ງນີ້:

1) ການສ້າງຊຸມຊົນ ຜ່ານສາຍພົວພັນທາງກົງ ແລະ ໄລຍະຍາວ ໂດຍມີການແບ່ງປັນ ຄວາມຮັບຜິດຊອບ, ຄວາມສ່ຽງ ແລະ ຜົນຕອບແທນ;
2) ການມີສ່ວນຮ່ວມຢ່າງຕັ້ງໜ້າ ບົນພື້ນຖານ ຄວາມໄວ້ວາງໃຈ, ຄວາມເຂົ້າໃຈ, ຄວາມເຄົາລົບ, ຄວາມໂປ່ງໃສ ແລະ ການຮ່ວມມື; ແລະ
3) ການຊ່ວຍເຫຼືອເຊິ່ງກັນແລະກັນ ແລະ ຄວາມສາມັກຄີ ສູ່ ພາຍນອກຊຸມຊົນ.

ການຜະລິດແບບນີ້ ລວມເອົາ ຜູ້ບໍລິໂພກ ທີ່ສະໜັບສະໜູນຊາວກະສິກອນ ທາງດ້ານການເງິນ ດ້ວຍການຊື້ ຜົນເກັບກ່ຽວບາງສ່ວນ ລ່ວງໜ້າ ຈາກ ຊາວກະສິກອນ.

►ເອກະສານອ້າງອີງ: https://urgenci.net/

## ເອກະສານຊ້ອນທ້າຍ M. ລະບົບການຄ້ຳປະກັນ ແບບມີສ່ວນຮ່ວມ (PGS)

ລະບົບການຄ້ຳປະກັນ ແບບມີສ່ວນຮ່ວມ ແມ່ນກົນໄກຮັບປະກັນຄຸນນະພາບ ທີ່ດັດປັບເຂົ້າກັບສະພາບເງື່ອນໄຂຂອງທ້ອງຖິ່ນ ທີ່ອອກໃບຢັ້ງຢືນໃຫ້ ຜູ້ຜະລິດ ຜ່ານ ການມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ, ຄວາມໄວ້ວາງໃຈ ແລະ ການແລກປ່ຽນຄວາມຮູ້ (IFOAM, 2013). ຕ່າງຈາກ ການອອກໃບຢັ້ງຢືນ ໂດຍບຸກຄົນທີສາມ ຊຶ່ງອາໄສ ການປະເມີນຈາກພາຍນອກ, PGS ເສີມຂະຫຍາຍການພົວພັນເຊິ່ງກັນແລະກັນ ລະຫວ່າງ ຊາວກະສິກອນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອ ສ້າງຄວາມໜ້າເຊື່ອຖື. ວິທີການດຳເນີນງານແບບປະສານສົມທົບດັ່ງກ່າວ ລວມເອົາ ຜູ້ຜະລິດ, ຜູ້ປຸງແຕ່ງ, ຜູ້ຂາຍຍ່ອຍ ແລະ ຜູ້ບໍລິໂພກ ເຂົ້າມາແບ່ງປັນໜ້າທີ່ຮັບຜິດຊອບ ຕໍ່ ຄຸນນະພາບຂອງ ຜະລິດຕະພັນ. ຜົນປະໂຫຍດ ຂອງ PGS ລວມເອົາ ການສະໜັບສະໜູນ ການຕະຫຼາດທ້ອງຖິ່ນ ແລະ ປັບປຸງການເຂົ້າເຖິງຕະຫຼາດ, ປັບປຸງການແນະນຳ ແບບເພື່ອນສອນເພື່ອນ ແລະ ການແບ່ງປັນຄວາມຮູ້, ເພີ່ມຄວາມຮັບຮູ້ ຂອງ ຜູ້ບໍລິໂພກ, ແລະ ການສ້າງຄວາມເຂັ້ມແຂງ ໃຫ້ ຊາວກະສິກອນ ແລະ ຜູ້ບໍລິໂພກ ຜ່ານຄວາມເປັນເຈົ້າການ ຂອງ ຂະບວນການປະເມີນ. PGS ບໍ່ພຽງແຕ່ສ້າງຄວາມເຂັ້ມແຂງ ໃຫ້ ຊາວກະສິກອນເທົ່ານັ້ນ ແຕ່ຍັງ ສົ່ງເສີມ ຄວາມສາມະຄີ ແລະ ຄວາມໂປ່ງໃສ ໃນການຄຸ້ມຄອງບໍລິຫານ.

## ເອກະສານຊ້ອນທ້າຍ N. ໂຮງຮຽນຊາວນາ (FFS)

ເລີ່ມຈັດຕັ້ງປະຕິບັດໃນທ້າຍຊຸມປີ 80 ໂດຍລັດຖະບານອິນໂດເນເຊຍ ຊຶ່ງໄດ້ຮັບການຊ່ວຍເຫຼືອຈາກ ອົງການ FAO, ໃນເບື້ອງຕົ້ນ ໂຮງຮຽນຊາວນາ ຖືກສ້າງເປັນ ວິທີການດຳເນີນງານ ທີ່ເນັ້ນໃສ່ພາກປະຕິບັດຕົວຈິງ ເພື່ອໃຫ້ ຊາວກະສິກອນ ຮຽນຮູ້ ກ່ຽວກັບ ການຜະລິດແບບນິເວດກະສິກຳ ແລະ IPM, ເສີມຂະຫຍາຍຈາກ ລະບົບການຜະລິດ ຕາມພູມປັນຍາຄວາມຮູ້ທ້ອງຖິ່ນ, ຮຽນຮູ້ ເປັນໝູ່ຄະນະ ແລະ ນຳໃຊ້ ການຮຽນຮູ້ດ້ວຍການລົງມືຕົວຈິງ ຢູ່ກັບທົ່ງນາ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ ຊາວກະສິກອນ. ພາຍໃນທ້າຍຊຸມປີ 90, ມີຊາວກະສິກອນຫຼາຍກວ່າ 1 ລ້ານຄົນ ຜ່ານການຝຶກອົບຮົມ ຈາກ ໂຮງຮຽນຊາວນາ (FFS).

ຕົວແບບທີ່ປະສົບຜົນສຳເລັດດັ່ງກ່າວ ໄດ້ຖືກຜັນຂະຫຍາຍໄປທົ່ວອາຊີ ນຳໄປສູ່ການລິເລີ່ມ ແຜນງານໂຮງຮຽນຊາວນາ ຢູ່ບັນດາປະເທດອື່ນໆ ໃນອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້.

**FFS ສົ່ງເສີມ ຮູບແບບການກະເສດ ໂດຍອີງໃສ່:**




►ເອກະສານອ້າງອີງ:

- Farmers taking the lead - Thirty years of farmer field schools
- Global Farmer Field School Platform

## ເອກະສານຊ້ອນທ້າຍ O. ຕົວແບບການສະໜອງທຶນ ເພື່ອຄວາມຍືນຍົງ ທີ່ມີທ່າແຮງ ສະໜັບສະໜູນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ

| ຕົວແບບການສະໜອງທຶນ ແລະ ແຫຼ່ງທຶນ | ເປົ້າໝາຍ ຂອງ ການຊ່ວຍເຫຼືອທາງດ້ານການເງິນ ແລະ ກົນໄກ ຢູ່ຮາກຖານ<br><br>(ການຊ່ວຍເຫຼືອທາງດ້ານການເງິນ ທີ່ອາດຈະຍູ້ດັນ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດກະສິກຳ) |
|---|---|
| **ການຊຳລະ ສຳລັບ ບໍລິການລະບົບນິເວດ** | ເວົ້າລວມ, ໝາຍເຖິງ ເງິນອຸດໜູນ ບົນພື້ນຖານແບບແຜນການຜະລິດ ທີ່ສະໜອງໃຫ້ ເຈົ້າຂອງທີ່ດິນ ຫຼື ຊາວກະສິກອນ ໃນຖານະເປັນ ນະໂຍບາຍສົ່ງເສີມ ສຳລັບ ການສ້າງຜົນປະໂຫຍດ ຈາກ ການຜະລິດແບບນິເວດກະສິກຳ ເຊັ່ນ: ການດູດຊັບກາກບອນ, ການກັ່ນຕອງນໍ້າ, ຫຼື ການປົກປັກຮັກສາຊີວະນາໆພັນ. ພົບວ່າ: ມີການສະໜອງໃຫ້ໃນຫຼາຍຮູບການ. |
| **ຕະຫຼາດກາກບ໋ອນ ແບບ ສະມັກໃຈ, ຕະຫຼາດ ຊີວະນາໆພັນ ແບບ ສະມັກໃຈ, ສິນເຊື່ອ ການປ່ຽນແປງດິນຟ້າ ອາກາດ** | ຕະຫຼາດກາກບອນ ແບບສະໝັກໃຈ: ຊ່ວຍໃຫ້ ສ່ວນບຸກຄົນ, ອົງການຈັດຕັ້ງ, ຫຼື ລັດຖະບານ ສາມາດຊື້ ສິນເຊື່ອກາກບອນ ຫຼື ຫັກລົບ ຈາກ ໂຄງການ ທີ່ ຫຼຸດຜ່ອນ ການປ່ອຍທາດອາຍພິດເຮືອນແກ້ວ (GHG). ກົນໄກແບບດຽວກັນນີ້ ຍັງພົບວ່າ: ມີສຳລັບ ຊີວະນາໆພັນ.<br>ສິນເຊື່ອການປ່ຽນແປງດິນຟ້າອາກາດ ບົນພື້ນຖານຜົນໄດ້ຮັບ: ກາກບອນ ສຳລັບ GHG. ບົນພື້ນຖານ ການເອົາ ກາກບ໋ອນ ອອກຈາກຊັ້ນບັນຍາກາດ (ການດູດຊັບກາກບອນອິນຊີ ຂອງ ດິນ, ກະສິກຳ-ປ່າໄມ້) ຫຼື ການຫຼີກເວັ້ນ: ສະກັດກັ້ນ ຫຼື ຫຼຸດ ການປ່ອຍ GHG ຫຼື ກາກບ໋ອນຢູ່ແຫຼ່ງກຳເນີດ ໂດຍສົມທຽບໃສ່ກໍລະນີຖານ. |
| **ການລົງທຶນເພື່ອຄວາມ ຍືນຍົງ ໂດຍ ວິສາຫະ ກິດ** | ໝາຍເຖິງ ການລົງທຶນ ໃສ່ ການຫຼຸດຜ່ອນ ການປ່ອຍທາດອາຍພິດເຮືອນແກ້ວ ພາຍໃນ ຕ່ອງໂສ້ມູນຄ່າ ຂອງ ບໍລິສັດໃດໜຶ່ງ ເຊິ່ງກຳເນີດຈາກແຫຼ່ງ ທີ່ຢູ່ນອກ ການຄວບຄຸມໂດຍກົງ ຂອງ ບໍລິສັດທີ່ລົງທຶນ. |
| **ພັນທະບັດສີຂຽວ, ສີຟ້າ ແລະ ພັນທະບັດສ້າງຜົນ ກະທົບທາງບວກຕໍ່ ສັງຄົມ** | ໝາຍເຖິງ ເຄື່ອງມື ທາງດ້ານການເງິນ ບົນພື້ນຖານຜົນໄດ້ຮັບ ເຊິ່ງເຊື່ອມໂຍງ ຜູ້ລົງທຶນ ທີ່ມີຈິດສຳນຶກທາງດ້ານສັງຄົມແລະສິ່ງແວດລ້ອມ (ຜູ້ສະໜອງທຶນເພື່ອສ້າງຜົນໄດ້ຮັບ) ກັບ ວິສາຫະກິດຕ່າງໆ ທີ່ຈັດຕັ້ງປະຕິບັດ ບໍລິການ ຫຼື ແຜນງານທາງດ້ານສັງຄົມ (ຕ.ຢ: [ພັນທະບັດ ສີຂຽວ ແລະ ສີຟ້າ ຂອງ ADB](#) ). |
| **ການເງິນປະສານ** | ໝາຍເຖິງ ວິທີການດຳເນີນງານແບບປັບໂຄງສ້າງ ໂດຍທີ່ ບັນດາອົງການຈັດຕັ້ງ ທີ່ມີຈຸດປະສົງຕ່າງກັນ ລົງທຶນຄຽງບ່າຄຽງໄຫຼ່ກັນ ເພື່ອບັນລຸ ຈຸດປະສົງສະເພາະ ຂອງ ອົງການຈັດຕັ້ງຕົນເອງ (ອາດຈະເປັນ ຜົນຕອບແທນທາງການເງິນ, ຜົນກະທົບທາງບວກດ້ານສັງຄົມ ຫຼື ສິ່ງແວດລ້ອມ, ຫຼື ປະສົມກັນທັງສອງຢ່າງ) ໂດຍນຳໃຊ້ ການເງິນ ຫຼື ການສະໜອງທຶນ ເພື່ອ ການພັດທະນາ (ຕ.ຢ: ກົນໄກ ການສະໜອງທຶນພູມມີທັດເຂດຮ້ອນຊຸ່ມ ຂອງ ອິນໂດເນເຊຍ). |
| **ສະຖາບັນການເງິນຈຸລະ ພາກ ແລະ ທະນາຄານ ທຸລະກິດ** | ເງິນກູ້ຈຸລະພາກ ທີ່ມີຄວາມຫົດຢືດ ສ້າງຄວາມເຂັ້ມແຂງ ໃຫ້ ສ່ວນບຸກຄົນທົ່ວ ຕ່ອງໂສ້ມູນຄ່າ ໃຫ້ສາມາດລົງທຶນ ໃສ່ ກິດຈະກຳຫາລ້ຽງຊີບ ທີ່ມີຄວາມທົນທານ ຕໍ່ ການປ່ຽນແປງດິນຟ້າອາກາດ ແລະ ກິດຈະກຳສ້າງລາຍໄດ້ ທີ່ມິດກັບສິ່ງແວດລ້ອມ (ຕ.ຢ. Cການເງິນຈຸລະພາກ ຈຳເຣີນ - *Chamroeun* ຢູ່ກຳປູເຈຍ : ມີຫຼາຍຜະລິດຕະພັນການເງິນ ທີ່ອອກແບບມາສະເພາະ ໂດຍປະສົມກັບ ປະກັນໄພຈຸລະພາກ). |

| | |
|---|---|
| **ການສະໜອງທຶນ ໃຫ້ ການຂ້າມຜ່ານ ໄປສູ່ ການຜະລິດແບບນິເວດ ກະສິກຳ ໃນລັກສະນະ ລວມທັງໝົດ** | ໝາຍເຖິງ ລະບົບໃຫ້ນະໂຍບາຍສົ່ງເສີມ ບົນພື້ນຖານພາກປະຕິບັດຕົວຈິງ ທີ່ປ ສົບປະສານກັບ ການພິສູດ ແລະ ຢັ້ງຢືນ ຜົນໄດ້ຮັບ ທີ່ສາມາດວັດແທກໄດ້ (ຕ.ຢ: ໂຄງການທົດລອງ ເດ ມົນ - *Dei Meas*). |

ແຫຼ່ງຂໍ້ມູນ: ຜູ້ຂຽນ ແລະ ເດ ມົນ ຂອງ ສະວິດສ໌ຄອນແທັກ *(SwissContact)*, ເວັບໄຊ໋ ຕະຫຼາດ ລະບົບນິເວດ-*Ecosystem Marketplace website*, 2023

# ເອກະສານອ້າງອີງ


**ASEAN.** 2015. Vision and Strategic Plan for ASEAN Cooperation in Food, Agriculture and Forestry (2016-2015)

**ASEAN.** 2022. ASEAN Regional Guidelines for Sustainable Agriculture in ASEAN

**Caron, P., Reig, E., Roep, D., Hediger, W., Le Cotty, T., Barthélémy, D., Hadynska, A., Hadynski, J.,Oostindie, H. & Sabourin, E.** 2008. Multifunctionality: refocusing a spreading, loose and fashionable concept for looking at sustainability? International Journal of Agricultural Resources, Governance and Ecology, 7(4): 301–318.

**D'Annolfo, R., Gemmill-Herren, B., Graeub, B. & Garibaldi, L.A.** 2017. A review of social and economic performance of agroecology. *International Journal of Agricultural Sustainability*, 15 (6): 632–644.

**De Schutter, O.** 2010. Agro-ecology and the right to food. Report presented to the Human Rights Council A/HRC/16/49, Sixteenth Session. New York, USA, United Nations.

**De Schutter, O.** 2012. Agroecology, a tool for the realization of the right to food. *In*: E. Lichtfouse, ed. Agroecology and strategies for climate change. Sustainable Agriculture Reviews, 8. Dordrecht, Netherlands, Springer.

**Ewert, F., Baatz, R. & Finger, R.** 2023. Agroecology for a sustainable agriculture and food system: from local solutions to large-scale adoption. *Annual Review of Resource Economics*, 15: 351–381.

**FAO.** 2018. The 10 Elements of agroecology: Guiding the transition to sustainable food and agricultural systems. Rome. https://openknowledge.fao.org/server/api/core/bitstreams/3C7778b3-8fba-4a32-8C13-f21dC5ef31cf/content

**FAO**. 2024. Scaling up agroecology to achieve the SDGs. Rome. https://www.fao.org/agroecology/overview/agroecology-and-the-sustainable-development-goals/en/

**Gliessman, S**. 2016. Transforming food systems with agroecology. *Agroecology and Sustainable Food Systems*, 40(3): 187–189.

**HLPE**. 2019. Agroecological and other innovative approaches for sustainable agriculture and food systems that enhance food security and nutrition. A report by the High Level Panel of Experts on Food Security and Nutrition of the Committee on World Food Security. Rome. http://www.fao.org/cfs/cfs-hlpe/en/

**Leippert, F., Darmaun, M., Bernoux, M. & Mpheshea, M.** 2020. The potential of agroecology to build climate-resilient livelihoods and food systems. Rome. FAO and Biovision. https://doi.org/10.4060/cb0438e

**Parmesan, C., M.D. Morecroft, Y. Trisurat, R. Adrian, G.Z. Anshari, A. Arneth, Q. Gao, P. Gonzalez, R. Harris, J. Price, N. Stevens, and G.H. Talukdarr.** 2022: Terrestrial and Freshwater Ecosystems and Their Services. In: Climate Change 2022: Impacts, Adaptation and Vulnerability. Contribution of Working Group II to the Sixth Assessment Report of the Intergovernmental Panel on Climate Change [H.-O. Pörtner, D.C. Roberts, M. Tignor, E.S. Poloczanska, K. Mintenbeck, A. Alegría, M. Craig, S. Langsdorf, S. Löschke, V. Möller, A. Okem, B. Rama (eds.)]. Cambridge University Press, Cambridge, UK and New York, NY, USA, pp. 197–377, doi:10.1017/9781009325844.004

**Ponisio, L.C., M'Gonigle, L.K., Mace, K. C., Palomino, J., de Valpine, P. & Kremen, C.** 2015. Diversification practices reduce organic to conventional yield gap*. Proceedings of the Royal Society*, B, 282. 20141396. https://doi:10.1098/rspb.2014.1396

**Pretty, J.N., Morison, J.I.L. & Hine, R.E.** 2003. Reducing food poverty by increasing agricultural sustainability in developing countries. *Agriculture Ecosystems and Environment*, 95: 217–234. doi: 10.1016/S0167- 8809(02)00087-7

**Tittonell, P.** 2020. Assessing resilience and adaptability in agroecological transitions. *Agricultural Systems*, 184:102862

**Tittonell, P**. 2023. A Systems Approach to Agroecology. Berlin, Springer Nature.

**Wezel, A., Herren, B.G., Kerr, R.B., Barrios, E., Gonçalves, A.L. R. & Sinclair, F.** 2020. Agroecological principles and elements and their implications for transitioning to sustainable food systems. A review. *Agronomy for Sustainable Development*, 40: 1–13